# السِّيرَةُ النَّبَوِيَّةُ المُصْطَفَى ﷺ



# ຊີວະປະຫວັດທ່ານສາດສະດາ ມູຮຳມັດ ﷺ


ໂດຍ ດຣ. ອັບດຸລລໍຫ໌ ອິບນຸ ອັບດີຣເຣາະຫ໌ມານ ອັລຖ໊ອຣອານ

ແປ ແລະ ຮຽບຮຽງ  ມູຮຳມັດ ນູຣ ບິນ ຊໍແລະຫ໌

ກວດທານ  ອຸສມານ ບິນ ອັບດຸລລໍຫ໌

# السيرة النّبوية المصطفى ﷺ

## ຊີວະປະຫວັດ ທ່ານສາດສະດາ ມູຮໍາມັດ ﷺ

**تأليف : الشيخ عبدالله بن عبدالرحمن الخرعان**

ດຣ. ອັບດຸລລໍຫ໌ ອິບນຸອັບດຶຣເຣາະຫ໌ມານ ອັລຄ໊ອຣອານ

**ترجمة : محمد نور بن صالح**

ແປ ແລະ ຮຽບຮຽງ : ມູຮໍາມັດນູຣ ບິນ ຊໍແລະຫ໌

**مراجعة: فريق اللغة لاو بموقع دار الإسلام**

ຜູ້ກວດກາ: ທີມງານພາສາລາວ ເວັບໄຊດ໌ ອິສລາມມິກເຮົາສ໌

www.islamhouse.com

2022 – 1444

بسم الله الرحمن الرحيم

ດ້ວຍພຣະນາມຂອງອັລລໍຫ໌

ຜູ້ຊົງເມດຕາ ຜູ້ຊົງກະລຸນາປານີສະເໝີ

**ສາລະບັນ**


| ເນື້ອຫາ | ເລກໜ້າ |
|---|---|
| ຄຳນຳຜູ້ແປ | 9 |
| ບົດຄັດຫຍໍ້ | 11 |
| ຄວາມສຳຄັນຂອງຊີວະປະຫວັດ ທ່ານສາດສະດາ ມູຮຳມັດﷺ | 14 |
| 1. ການສືບເຊື້ອສາຍຂອງທ່ານນະບີມູຮຳມັດ ﷺ | 14 |
| 2. ການເກີດ ແລະ ໄວເດັກຂອງທ່ານນະບີມູຮຳມັດ ﷺ | 16 |
| 3. ການໃຫ້ນ້ຳນົມ ແລະ ການຜ່າໜ້າເອິກ | 16 |
| 3.1 ການຜ່າໜ້າເອິກຄັ້ງທຳອິດ | 17 |
| 3.2 ການເສຍຊີວິດຂອງແມ່ ແລະ ພໍ່ຕູ້ | 18 |
| 3.3 ການລ້ຽງແບ້ ແລະ ລ້ຽງແກະ | 19 |
| 4. ອຸປະນິໄສ ແລະ ຖານະຂອງທ່ານນະບີ ﷺ ກ່ອນທີ່ຈະໄດ້ຮັບການແຕ່ງຕັ້ງ | 20 |
| 4.1 ການແຕ່ງງານກັບທ່ານນາງຄໍດີຈະຫ໌ ຣໍດີຍັລລໍຮຸ ອັນຮາ | 21 |
| 5. ສະພາບຂອງຊາວອາຣັບກ່ອນການແຕ່ງຕັ້ງເປັນສາດສະດາ | 23 |
| 5.1 ສາສະໜາຂອງຊາວອາຣັບ | 23 |
| 5.2 ສະພາບທາງການເມືອງ ແລະ ການປົກຄອງ | 24 |
| 5.3 ສະພາບສັງຄົມ | 24 |
| 6. ການເລີ່ມປະທານອັລກຸຣອານ | 25 |
| 7. ການເຜີຍແຜ່ທີ່ ນະຄອນມັກກະຫ໌ ຂອງທ່ານສາດສະດາມູຮຳມັດ ﷺ ແລະ ການຖືກທົດສອບ | 28 |
| 7.1 ການເຜີຍແຜ່ສາດສະໜາແບບລັບໆ | 28 |
| 7.2 ການເຜີຍແຜ່ແບບເປີດເຜີຍ ແລະ ຖືກທົດສອບ | 28 |
| 7.3 ວິທີການຕ່າງໆ ໃນການຕໍ່ຕ້ານການແຜ່ຂະຫຍາຍຂອງອິດສະລາມ | 30 |
| 7.3.1 ການດູຖູກ ເຍາະເຍີ້ຍ | 30 |

7.3.2 ການທຳຮ້າຍທ່ານສາດສະດາ ﷺ ______ 31

7.3.3 ການກົດຂີ່ຂົ່ມເຫັງ ສ້າງຄວາມປັ່ນປ່ວນວຸ່ນວາຍ ແກ່ຜູ້ທີ່ປະຕິບັດຕາມທ່ານນະບີ ﷺ _ 32

7.3.4 ການເຈລະຈາຕໍ່ລອງ ______ 34

7.3.5 ພະຍາຍາມຂໍເບິ່ງປະຕິຫານ ______ 35

7.3.6 ເຜົ່າກຸເຣຊ ຕັດຄວາມສຳພັນກັບຕະກູນບະນີ ຮາຊິມ ______ 36

8. ການເສຍຊີວິດຂອງຜູ້ເປັນລຸງ ແລະ ພັນລະຍາຂອງທ່ານນະບີມູຮຳມັດ ﷺ ______ 37

8.1 ຈຸດຢືນຂອງທ່ານສາດສະດາ ມຸຮຳມັດຕໍ່ການທົດສອບຕ່າງໆ ______ 38

8.2 ການເຂົ້າຮັບອິດສະລາມຂອງຊາວອັນຊໍຣ ______ 41

8.3 ການເຮັດສົນທິສັນຍາຄັ້ງທີ່ ໜຶ່ງ ______ 44

8.4 ການເຮັດສົນທິສັນຍາຄັ້ງທີ່ ສອງ ______ 45

9. ການອົບພະຍົບຂອງບັນດາມຸດສະລິມ ______ 47

9.1 ການອົບພະຍົບຂອງທ່ານນະບີມູຮຳມັດ ﷺ ______ 49

10. ສະພາບສັງຄົມຂອງມຸດສະລິມໃນເມືອງມາດີນະຫ໌ ______ 54

10.1 ການສ້າງມັສຍິດ ______ 54

10.2 ການຈັບມືເປັນພີ່ນ້ອງກັນ ______ 55

10.3 ຂໍ້ຕົກລົງກັບຊາວຢິວໃນມາດີນະຫ໌ ______ 57

11. ການເຜີຍແຜ່ສາສະໜາໃນນະຄອນມາດີນະຫ໌ ______ 58

11.1 ສົງຄາມບະດັຣ ______ 59

- ການສູ້ຮົບໃນສົງຄາມບະດັຣ ______ 62
- ໄຊຊະນະໃນສົງຄາມບະດັຣ ______ 62

11.2 ສົງຄາມອຸຮູດ ______ 65

- ທ່ານຣໍຊູລລຸລລໍຫ໌ ﷺ ຂໍຄຳປຶກສາຈາກບັນດາຊໍຮາບະຫ໌ ______ 65
- ການວາງແຜນສຳລັບການສູ້ຮົບ ______ 66

- ເຫດການທີ່ເກີດຂຶ້ນໃນສົງຄາມອູຮຸດ ______ 66
- ບົດຮຽນ ແລະ ຂໍ້ຄິດຈາກສົງຄາມອູຮຸດ ______ 68

11.3 ສົງຄາມ ອັລ-ອະຫ໌ຊາບ ______ 70

- ສາເຫດຂອງການສູ້ຮົບ ອັລ-ອະຫ໌ຊາບ ______ 70
- ຊາວມຸດສະລິມ ແລະ ການຂຸດສະນາມເພາະ ______ 70

11.4 ການປະນິປະນອມທີ່ ອັລ-ຮູໄດບິຍະຫ໌ ______ 73

- ການເຮັດສົນທິສັນຍາ ອັຣຣິດວານ ______ 74

11.5 ຜົນຂອງການປະນິປະນອມ ອັລ-ຮຸໄດບິຍະຫ໌ ______ 75

11.6 ການພິຊິດມັກກະຫ໌ ______ 77

11.6 ຜົນສຳເລັດຂອງການພິຊິດເມືອງມັກກະຫ໌ ______ 79

11.7 ຊົນເຜົ່າຊະກິຟ ຊອກຫາຜູ້ນຳໃນການເຮັດຊີຣິກ "ການຕັ້ງພາຄີສະມາຄົມກັບ ອັລລໍຫ໌ ﷻ" ______ 79

12. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກອະຫ໌ລິລກິຕາບ (ຊາວຄຳພີ) ______ 81

12.1 ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກຢິວທີ່ຜິດຄຳສັນຍາ ______ 81

12.2 ເຜົ່າໜຶ່ງຈາກພວກຢິວ "ກອຍນຸກໍ່ອູ" ______ 82

12.3 ບະນີ "ກອຍນຸກໍ່" ຖອນຕົວອອກໄປ ______ 83

12.4 ບະນີ "ອັນນະຕີ້ຣ" ລະເມີດຂໍ້ສັນຍາ ______ 84

12.5 ຍະຮູດ ບະນີ "ກູຣອຍເຊາະຫ໌" ລະເມີດຜິດສັນຍາ ______ 86

13. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກຍະຮູດ ທີ່ ຄອຍບັຣ ______ 89

14. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກ ນະຊໍຣໍ (ຄຣິສຕຽນ) ______ 92

14.1 ຄຣິສຕຽນ ເມືອງນັຈຣອນ ______ 93

14.2 ຄຣິສຕຽນທາງຕອນພາກເໜືອ ______ 94

15. ທ່າທີຂອງພວກມຸນາຟິກີນ ໜ້າຊື່ໃຈຄົດ ______ 95

- ອັນນິຟ້າກ (ການກັບກອກ ການບິດພີ້ວ) ______ 95

- ວິທີການຕ່າງໆຂອງພວກມຸນາຟິກີນ ໃນການຕໍ່ຕ້ານອິດສະລາມ________________________96

16. ທ່າທີຂອງທ່ານຣໍຊູລຕໍ່ ﷺ ພວກມຸນາຟິກີນ________________________ 101

17. ເຫດການຊ່ວງສຸດທ້າຍຂອງທ່ານຣໍຊູລ ລຸລລໍຫ໌ ຊໍລັລລໍຮຸ ອະໄລຮີ ວະຊັລລໍາ ______________ 104

17.1 ຮັດຈ໌ອໍາລາ________________________105

17.2 ຄໍາສັ່ງເສຍຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ ________________________105

18. ການເຈັບປ່ວຍ ແລະ ການເສຍຊີວິດຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ________________________ 107

18.1 ການຈັດການສົບ ແລະ ການຝັງສົບ ________________________109

18.2 ຜົນຈາກການເສຍຊີວິດຂອງທ່ານຣໍຊູລ ລຸລລໍຫ໌ ﷺ ________________________109

19. ສ່ວນໜຶ່ງຈາກມາລະຍາດຂອງທ່ານນະບີ ﷺ ________________________ 111

19.1 ມາລະຍາດຂອງທ່ານນະບີ ﷺ ຕໍ່ພຣະຜູ້ເປັນເຈົ້າ________________________111

19.2 ການປະຕິບັດຂອງທ່ານຣໍຊູລﷺ ຕໍ່ຄອບຄົວຂອງທ່ານ ________________________113

19.3 ການປະຕິບັດຂອງທ່ານສາດສະດາ ﷺ ຕໍ່ບັນດາຊໍຮາບະຫ໌ ________________________117

19.4 ການປະພຶດຂອງ ທ່ານຣໍຊູລລຸລລໍຫ໌ ﷺຕໍ່ບັນດາສັດຕູ ________________________120

20. ຫຼັກຖານການເປັນນະບີ ແລະ ປະຕິຫານ________________________ 126

20.1 ມູຊິຈິຍາດທີ່ດໍາລົງຢູ່ຖາວອນ ________________________126

21. ມຸຊິຈິຊາດ (ປະຕິຫານ) ຂອງທ່ານນະບີມູຮໍາມັດ ﷺ ________________________ 132

1. ອັລອິສຣໍ່ຊ ແລະ ອັລມຽະຣ໊ອຈ ________________________132

2. ການແຍກຂອງດວງຈັນ (ເປັນສອງສ້ຽວ)________________________133

3. ການບອກເລົ່າເລື່ອງຕ່າງໆ ທີ່ຈະເກີດຂຶ້ນໃນອະນາຄົດ ________________________133

4. ການເພີ່ມຂຶ້ນຂອງອາຫານແລະເຄື່ອງດື່ມ________________________135

5. ການເວົ້າຂອງສິ່ງທີ່ບໍ່ມີຊີວິດກັບ ທ່ານຣໍຊູລ ﷺ ________________________135

22. ບົດສະຫຼຸບຈາກການສຶກສາຊີວະປະຫວັດຂອງທ່ານນະບີມູຮໍາມັດ ﷺ________________________ 137

ແຫຼ່ງທີ່ມາຂໍ້ມູນ ແລະ ໜັງສືຕ່າງໆ________________________ 142

## ຄຳນຳຜູ້ແປ

ບິສມິລລະຫ໌ ອັລຮຳດຸລິລະຫ໌ ມວນການສັນລະເສີນສະດຸດີ ແລະ ການເຄົາລົບກາບໄຫວ້ເປັນຂອງພຣະອົງອັລລໍຫ໌ພຽງຜູ້ດຽວຢ່າງແທ້ຈິງ. ຂໍຄວາມສັນລະເສີນສັນຕິສຸກຈາກອັລລໍຫ໌ ຈົ່ງມີແດ່ທ່ານນະບີມຸຮຳມັດ ﷺ ຕະຫຼອດຈົນຄອບຄົວຂອງທ່ານ, ບັນດາມິດສະຫາຍຂອງທ່ານ ແລະ ຜູ້ທີ່ປະຕິບັດຕາມແນວທາງຂອງທ່ານ ຈົນຮອດວັນສິ້ນໂລກ.

ໜັງສືຊີວະປະຫວັດທ່ານສາດສະດາມູຮຳມັດ ﷺ ເປັນໜັງສືທີ່ບອກເລົ່າຄວາມເປັນມາຂອງວິທີຊີວິດທ່ານນະບີ ຕັ້ງແຕ່ກຳເນີດຈົນຮອດວັນທີ່ທ່ານໄດ້ເສຍຊີວິດ. ຜູ້ອ່ານຈະສາມາດຖອດບົດຮຽນຈາກເລື່ອງລາວຊີວິດຂອງທ່ານນະບີໃນທຸກໆ ສະຖານະການ, ບໍ່ວ່າຈະເປັນຍາມມີຄວາມສຸກສະບາຍ, ຍາມເຈັບໄຂ້ໄດ້ປ່ວຍ ຫຼື ຍາມວິກິດສົງຄວາມ ແລະ ອື່ນໆ ຕ່າງກໍ່ປະສົບກັບທ່ານນະບີໃນທຸກລົດຊາດຂອງຊີວິດ.

ໜັງສືຊີວະປະຫວັດທ່ານສາດສະດາມູຮຳມັດ ﷺ ຈະເຮັດໃຫ້ຜູ້ອ່ານຮູ້ເຖິງຄວາມຍາກລຳບາກຂອງທ່ານນະບີໃນການເຜີຍແຜ່ແບກຮັບພາລະທີ່ຍິ່ງໃຫຍ່ຈາກພຣະເຈົ້າ. ຈາກເຫດການຕ່າງໆໃນຊີວິດຂອງທ່ານການອົດທົນຕໍ່ບັນຫາຕ່າງໆທີ່ໄດ້ພົບ, ຫຼາຍນ້ອຍສຳໃດແລ້ວທີ່ທ່ານຣໍຊູລໄດ້ຮັບຄວາມເດືອດຮ້ອນທັ້ງຄຳເວົ້າ ແລະ ການກະທຳຂອງພວກບັນດາຜູ້ປະຕິເສດ. ທ່ານເຄີຍຖືກກ່າວວ່າ: ເປັນນັກໄສຍະສາດ, ເປັນຈອມໂກຫົກຂີ້ຕົວະ ແລະ ຖືກກ່າວຫາວ່າເປັນຄົນຜີບ້າ ແລະ ຄຳເວົ້າຕ່າງໆ ນານາ. ທີ່ອັລລໍຫ໌ ໄດ້ກ່າວໄວ້ໃນອັລກຸຣອານ ແລະ ພວກເຂົາຍັງສ້າງຄວາມເດືອດຮ້ອນໃຫ້ທ່ານຣໍຊູລຢູ່ຫຼາຍຄັ້ງ ທ່ານຍັງເຄີຍຖືກພວກປະຕິເສດໂຍນກ້ອນຫີນໃສ່ທ່ານ ຈົນກະທັ່ງເລືອດຂອງທ່ານໄຫລຈົນຮອດສົ້ນຕີນຂອງທ່ານ.

ຄັ້ງເມື່ອທ່ານຣໍຊູລໄດ້ຮຽກຮ້ອງເຊີນຊວນພວກປະຕິເສດໄປສູ່ອັລລໍຫ໌ ຜູ້ຊົງກຽງໄກ, ຜູ້ຊົງສູງສົ່ງ ແລະ ພວກເຂົາຍັງເຄີຍໂຍນໄສ້ສັດທີ່ຫາກໍ່ເກີດໃສ່ຫຼັງຂອງທ່ານນະບີ ໃນຂະນະທີ່ທ່ານກຳຫຼັງສຸຈູດທີ່ກະບະຫ໌ ພວກປະຕິເສດຍັງໄດ້ຂົ່ມຂູ່, ທັ້ງຂູ່ເຂັນວ່າຈະຂ້າທ່ານ ແລະ ແມ້ກະທັ່ງໃນສົງຄາມອູຮຸດເອງໄດ້ເກີດບົດທົດສອບກັບທ່ານຣໍຊູລ ແລະ ບັນດາສາວົກຂອງທ່ານ. ພວກເຂົາເຮັດໃຫ້ແຂ້ວໜ້າຂອງທ່ານຫັກໄດ້ເຮັດໃຫ້ຫົວຂອງທ່ານມີບາດແຜໂດຍທ່ານຣໍຊູລຕົກໄປໃນຫລຸມໃນສົງຄາມຄັ້ງນັ້ນ ທັ່ງໆ ທີ່ທ່ານເປັນຣໍຊູລຂອງອັລລໍຫ໌. ທຸກສິ່ງທີ່ກ່າວມານັ້ນລ້ວນເປັນອຸປະສັກບົດທົດສອບໃນການຮຽກຮ້ອງເຊີນຊວນຂອງທ່ານຣໍຊູລໄປສູ່ອັລລໍຫ໌ຜູ້ຊົງກຽງໄກ ຜູ້ຊົງສູງສົ່ງ. ແຕ່ວ່າທ່ານຣໍຊູລ ﷺ ໄດ້ອົດທົນ ແລະ ຍອມແບກຮັບເອົາໄວ້ ແລະ ທ່ານຄືສິ່ງທີ່ຖືກສ້າງທີ່ດີທີ່ສຸດ. ຂໍການສະດຸດີພອນອັນປະເສີດແລະຄວາມສັນຕິຈົ່ງປະສົບແດ່ທ່ານ ສະນັ້ນຈຳເປັນຢ່າງຍິ່ງທີ່ເຮົາຈະຕ້ອງຮຽນຮູ້ປະຫວັດຊີວິດຄວາມເປັນຢູ່ຂອງທ່ານນະບີເພື່ອທີ່ເຮົາຈະໄດ້ເປັນສ່ວນໜຶ່ງໃນການຮຽກຮ້ອງເຊີນຊວນເຜີຍແຜ່ສານອັນເປັນສັດຈະທຳທ່ຽງແທ້ຈາກພຣະອົງອັລລໍຫ໌ ສູ່ມວນມະນຸດໂລດ ເຊິ່ງເປັນການງານທີ່ຍິ່ງໃຫຍ່ ແລະ ມີຜົນລະບຸນມະຫາສານ.

**“ຂໍສາບານດ້ວຍກັບການເວລາ (1) ແທ້ຈິງມະນຸດນັ້ນຢູ່ໃນການຂາດທຶນ (2) ນອກຈາກບັນດາຜູ້ສັດທາ ແລະ ປະຕິບັດຄວາມດີທັ້ງຫຼາຍ ແລະ ຕັກເຕືອນເຊິ່ງກັນ ແລະ ກັນໃນເລື່ອງສັດຈະທຳ ແລະ ຕັກເຕືອນກັນ ແລະ ກັນໃຫ້ມີຄວາມອົດທົນ (3) [ສູເຣາະຫ໌ອັລ-ອັສຣ໌ ອາຍະຫ໌ທີ່ 1-3]**

ນີ້ຄືແນວທາງຂອງທ່ານຣໍຊູລ ﷺ ແລະ ເປັນແນວທາງຂອງບັນດາຜູ້ທີ່ປະຕິບັດຕາມທ່ານ ນັ້ນກໍ່ຄື ມີຄວາມຮູ້ ແລະ ນຳໄປປະຕິບັດ ແລະ ຮຽກຮ້ອງເຊີນຊວນໄປສູ່ອັລລໍຫ໌ ຜູ້ຊົງກຽງໄກຜູ້ຊົງສູງສົ່ງ ແລະ ຕ້ອງມີຄວາມອົດທົນຕໍ່ອຸປະສັກໃນການຮຽກຮ້ອງເຊີນຊວນໄປສູ່ອັລລໍຫ໌.

ຈາກຄຳດຳລັດຂອງພຣະອົງທີ່ວ່າ: “ນອກຈາກບັນດາຜູ້ສັດທາ” ນີ້ແລະຄືແນວທາງຫຼັກຖານ ປະການທຳອິດ. ນັ້ນຄືຄວາມຮູ້ ເພາະວ່າການສັດທາຈະບໍ່ເກີດຂື້ນນອກຈາກຈະຕ້ອງມີຄວາມຮູ້ເທົ່ານັ້ນ ນັ່ນ ຄື ການຮູ້ຈັກອັລລໍຫ໌, ຮູ້ຈັກສາດສະນາທູດຂອງພຣະອົງ ແລະ ຮູ້ຈັກສາສະໜາອິສລາມດ້ວຍກັບຫຼັກຖານ.

ປະການທີ່ສອງ ຈາກຄຳດຳລັດຂອງພຣະອົງທີ່ວ່າ: “ແລະ ບັນດາຜູ້ປະຕິບັດຄວາມດີທັ້ງຫຼາຍ” ນີ ແລະຄື ການປະຕິບັດຕາມຄວາມຮູ້.

ປະການທີ່ສາມ ຈາກຄຳດຳລັດຂອງພຣະອົງທີ່ວ່າ: “ແລະ ຕັກເຕືອນເຊິ່ງກັນ ແລະ ກັນໃນເລື່ອງສັດຈະທຳ” ແລະນີ້ຄືການຮຽກຮ້ອງເຊີນຊວນໄປສູ່ຄວາມຮູ້ ແລະ ການປະຕິບັດ.

ປະການທີ່ສີ່ ຈາກຄຳດຳລັດຂອງພຣະອົງທີ່ວ່າ: “ແລະ ຕັກເຕືອນກັນ ແລະ ກັນໃຫ້ມີຄວາມອົດທົນ” ອົດທົນຕໍ່ອຸປະສັກໃນຫົນທາງແຫ່ງການຮຽກຮ້ອງເຊີນຊວນໄປສູ່ຄວາມຮູ້ ແລະ ການປະຕິບັດ.

ທ່ານອິມ່າມ ອັຊຊາຟິອີ (ຣໍຮີມາຮຸລລໍຫ໌) ກ່າວວ່າ: “ຖ້າຫາກວ່າອັລລໍຫ໌ບໍ່ໄດ້ປະທານຫຼັກຖານໃດ ແກ່ປວງບ່າວນອກຈາກສູເຣາະຫ໌ນີ້ ແນ່ນອນມັນກໍ່ພຽງພໍແລ້ວສຳຫຼັບເຂົາ”

ສຸດທ້າຍກໍ່ຫວັງວ່າຜູ້ອ່ານຈະມີຄວາມຕະນັກໃນເລື່ອງການສຶກສາຫາຄວາມຮູ້ ຫຼັກຖານຂອງສາສະໜາເພື່ອເປັນແນວທາງໃນການດຳລົງຊີວິດຕາມວິທີຂອງອິສລາມ, ສຶກສາ, ປະຕິບັດ, ເຊີນຊວນ, ອົດທົນ ແລະ ປະຕິບັດຕາມແນວທາງຂອງທ່ານນະບີ ມູຮຳມັດ ຊັລລັລລໍຮຸ ອະໄລຮີ ວະຊັລລຳ.

ເຮົາຂໍດຸອາ ສັນລະເສີນຕໍ່ທ່ານນະບີມູຮຳມັດ ຊັລລັລລໍຮຸ ອະໄລຮີ ວະຊັລລຳ ຄອບຄົວຂອງທ່ານ ລູກຫຼານຂອງທ່ານ ແລະ ບັນດາມິດສະຫາຍຂອງທ່ານ ແລະຜູ້ທີ່ປະຕິບັດຕາມແນວທາງຂອງທ່ານ ຈົນຮອດມື້ສຸດທ້າຍ.

ອະບູ ນູຣ ມູຮຳມັດ ບິນ ຊໍແລະຫ໌

01 ຣໍມະດອນ 1444 ຮ.ສ.

## ບົດຄັດຫຍໍ້

**ສະຫຼຸບຊີວະປະຫວັດຂອງທ່ານສາດສະດາມູຮຳມັດ ﷺ (ຊັລລັລລໍຮຸ ອະໄລຮີ ວະຊັລຊັມ)**

ທ່ານສາດສະດານະບີມຸຮຳມັດ (ຊລ) ລູກຊາຍຂອງທ່ານອັບດຸລເລາະຫ໌ ແລະ ທ່ານນາງອາມີນະຫ໌ ເປັນຊາວອາຣັບເກີດທີ່ເມືອງມັກກະຫ໌, ປະເທດຊາອຸດິອາຣາເບຍ ໃນຕະກູນຜູ້ທີ່ມີກຽດ. ສະໄຫມກ່ອນຊາວອາຫຣັບມີການປົກຄອງດ້ວຍລະບົບຊົນເຜົ່າບໍ່ມີຜູ້ນຳກະສັດ ນັບຖືສາສະຫນາຜີບູຊາຮູບປັ້ນ ຫຼື ນັບຖື ຢິວ, ຄຣິດສະຕຽນ. ທ່ານກຳພ້າພໍ່ຕັ້ງແຕ່ເກີດ ຕອນເປັນໄວໜຸ່ມທ່ານມີຊາຍາວ່າ : **"ອະມີນ"** ແປວ່າ ຜູ້ຊື່ສັດ ທ່ານບໍ່ເຄີຍຂີ້ຕົວະ ແລະມັກບໍລິຈາກ ຊ່ວຍເຫຼືອຄົນອ່ອນແອ ຂັດສົນ.

ອາຍຸ 6 ປີ ແມ່ຂອງທ່ານໄດ້ເສຍຊີວິດ ຄັ້ງເມື່ອໄປຢຽມຍາມພີ່ນ້ອງທີ່ເມືອງມະດີນະຫ໌ ແລະ ໄດ້ເສຍຊີວິດຕອນຂາກັບທີ່ສະຖານທີ່ ທີ່ມີຊື່ວ່າ “ອັລ-ອັບວາ” ທາງລະຫວ່າງຈາກເມືອງມາດີນະຫ໌-ມັກກະຫ໌.

ຫຼັງຈາກທີ່ແມ່ຂອງທ່ານໄດ້ເສຍຊີວິດ ທ່ານໄດ້ຮັບການລ້ຽງດູຈາກພໍ່ຕູ້ຂອງທ່ານຄື **ທ່ານອັບດຸລມຸດຕໍລິບ** ອາໄສຢູ່ນຳພໍ່ຕູ້ໄດ້ພຽງ 2 ປີ ພໍ່ຕູ້ຂອງທ່ານກໍ່ໄດ້ເສຍຊີວິດ.

ອາຍຸ 8 ປີ ທ່ານໄດ້ຮັບການລ້ຽງດູຈາກລຸງຂອງທ່ານຄື **ທ່ານອະບູຕໍລິບ** ທ່ານໄດ້ຊ່ວຍວຽກລຸງຂອງທ່ານໂດຍການລ້ຽງແກະ. ອາຍຸໄດ້ 12 ປີໄດ້ອອກໄປຄ້າຂາຍກັບລຸງທີ່ເມືອງ ຊາມ (ຊີເຣຍ).

ອາຍຸ 25 ປີ ແມ່ຍິງຜູ້ຮັ່ງມີຄົນຫນຶ່ງຂໍໃຫ້ທ່ານນຳກອງຂະບວນໄປຄ້າຂາຍທີ່ຊີເຣຍ. ຜົນງານທ່ານເປັນທີ່ປະທັບໃຈຍ້ອນວ່າທ່ານບໍ່ຄິດໂກງຄືກັບພໍ່ຄ້າຄົນອື່ນ ແລະ ເນື່ອງຈາກຊື່ສຽງດ້ານມາລະຍາດ ແລະຄວາມຊື່ສັດ ແມ່ຍິງຈຶ່ງຂໍແຕ່ງງານກັບທ່ານ ກໍ່ຄືທ່ານຍິງຄໍດີຈະຫ໌ ຣໍດິຍັລລໍຮຸ ອັນຮາ ມີລູກນຳກັນ 6 ຄົນ ຊາຍ 2 ຄົນ ແລະ ຍິງ 4 ຄົນ.

ອາຍຸ 40 ປີ ທ່ານມັກຫລີກລ່ຽງການພົບປະຜູ້ຄົນໃນຍຸກນັ້ນທີ່ຫມົກມຸ້ນຢູ່ກັບຄວາມຊົ່ວ ໄປຢູ່ເທິງພູເຂົາ, ຈົນມີເທວະດາ (ມະລາອິກະຫ໌ ຈິບລີລ) ນຳຄຳສັ່ງຈາກພຣະເຈົ້າມາເພື່ອແຕ່ງຕັ້ງທ່ານໃຫ້ເປັນສາດສະດາຫລື ນະບີ. ລະຫວ່າງນີ້ ທ່ານໄດ້ເຜີຍແຜ່ສາສະຫນາກັບຄອບຄົວຄົນໃກ້ຊິດມິດສະຫາຍແບບເປັນຄວາມລັບໆ.

ອາຍຸ 43 ປີ ທ່ານໄດ້ເຜີຍແຜ່ສາສະຫນາຢ່າງເປີດເຜີຍ, ແຕ່ຕ້ອງພົບເຈີການຕໍ່ຕ້ານຢ່າງຮຸ່ນແຮງແມ້ວ່າກ່ອນຫນ້ານີ້ລາວຈະເປັນຜູ້ໄດ້ຮັບຄວາມເຄົາລົບມາຕະຫລອດກໍ່ຕາມ, ຍ້ອນຄົນມີອິດທິພົນບໍ່ຢາກເສຍອຳນາດ. ຜູ້ສັດທາສ່ວນໃຫຍ່ເປັນຄົນຈົນຫລືທາດທີ່ບໍ່ມີອານາດອິດທິພົນ ບໍ່ມີໃຜປົກປ້ອງເຮັດໃຫ້ຖືກທໍ່ລະມານຢ່າງຫນັກ. ໃນລະຫວ່າງນີ້ມີເຫດການສຳຄັນຫຼາຍເຫດການເຊັ່ນ ການອົບພະຍົບໄປຮາບາຊະຫ໌

(ປະເທດອີທິໂອເປຍ) ຄັ້ງທໍາອິດມີຄົນອົບພະຍົບຈໍານວນ 16 ຄົນ, ຄັ້ງທີ່ສອງມີຄົນອົບພະຍົບ 35 ຄົນ. ເຫດການ ການເຂົ້າຮັບອິສລາມຂອງທ່ານຮໍາຊະຫ໌ ແລະ ທ່ານ ອຸມັຣ ອິນນຸ ຄອດຕ໋ອບ.

ອາຍຸ 47 ປີ ຖືກຕັດຂາດຈາກຜູ້ຄົນໃນມັກກະຫ໌ (ກຸເຣຊ) ເປັນປີທີ່ທໍລະມານທີ່ສຸດສໍາຫຼັບທ່ານນະບີ ແລະ ຄອບຄົວ ລວມເຖິງມຸສລິມທີ່ເຂົ້າຮັບອິສລາມໃນຂະນະນັ້ນ. ເນື່ອງຈາກຖືກຕັດຂາດຈາກການຊ່ວຍເຫຼືອຄ້າຂາຍ ແລະ ຫ້າມພົບປະຫາສະມາຄົມນໍາຜູ້ທີ່ນັບຖືອິສລາມເຮັດໃຫ້ເກີດຄວາມຂາດແຂນອາຫານຢ່າງໜັກຈົນຕ້ອງກິນໃບ້ໄມ້ແທນ.

ອາຍຸ 50 ປີ ເມຍ ແລະ ລຸງທີ່ຮັກ ຜູ້ປົກປ້ອງທ່ານມາຕະຫລອດໄດ້ເສຍຊີວິດ. ເປັນປີແຫ່ງຄວາມໂສກເສົ້າກໍ່ວ່າໄດ້ ເມື່ອພວກກູເຣຊມັກກະຫ໌ບໍ່ຍອມຮັບການເຊີນຊວນຂອງທ່ານ ທ່ານຈຶ່ງລອງໄປເຜີຍແຜ່ເຊີນຊວນໃຫ້ເຂົ້າສາສະໜາທີ່ເມືອງຕໍອີຟ ແຕ່ຖືກປະຕິເສດ ແລະຖືກທໍາລາຍຈົນທ່ານນະບີເລືອດໄຫລຈາກຫົວຮອດຕີນ, ແລະ ອັລລໍຫ໌ໄດ້ປອບໃຈທ່ານໂດຍການໃຫ້ຂຶ້ນໄປຟາກຟ້າ (ອິສຣໍມຽະຣອດ) ເພື່ອໄປຮັບບົດບັນຍັດການລະມາດ.

ອາຍຸ 51 ປີ ມີຊາວເມືອງມາດິນະຮ໌ມາເຮັດພິທີຮັຈທີ່ເມືອງມັກກະຮ໌ ທ່ານຈຶ່ງໄດ້ເຜີຍແຜ່ສາສະໜາໃຫ້ຟັງ ປະກົດວ່າສ້າງຄວາມປະທັບໃຈໃຫ້ຊາວເມືອງມະດີນະຮ໌ ລະຫວ່າງນີ້ທ່ານໄດ້ສົ່ງທູດໄປເມືອງມະດີນະຮ໌ ຄືທ່ານ ມຸສອັບ ບິນອູໄມຣ ແລະ ທ່ານ ອັມຣູ ບິນອຸມມຸມັກຕູມ ເພື່ອເຜີຍແຜ່ຄໍາສອນທີ່ເມືອງມາດີນະຫ໌ ຈົນເຮັດໃຫ້ປະຊາຊົນໃນເມືອງມາດີນະຫ໌ປ່ຽນມາຮັບອິສລາມເປັນຈໍານວນຫຼາຍ ຈຶ່ງຂໍໃຫ້ທ່ານອົບພະຍົບຍ້າຍໄປຢູ່ເມືອງມາດີນະຮ໌ຍ້ອນເມືອງມະດີນະຮ໌ຮັບອິດສະລາມກັນເກືອບຫມົດແລ້ວ ທ່ານຈຶ່ງສັ່ງໃຫ້ສະຫາຍທັ້ງຫມົດຍ້າຍໄປກ່ອນ.

ອາຍຸ 53 ປີ ທ່ານໄດ້ຮັບຄໍາບັນຊາຈາກອັລລໍຫ໌ໃຫ້ສາມາດອົບພະຍົບຍ້າຍໄປເມືອງມາດີນະຮ໌ໄດ້ ເປັນເຫດການທີ່ສໍາຄັນຫລາຍຂອງສາສະໜາອິດສະລາມ. ທ່ານໄດ້ສ້າງມັດສະຍິດ (ໂບດ) ເພື່ອເປັນສູນຮ່ວມຂອງຊຸມຊົນຊາວມຸສລິມ ແລະ ຊຽນກົດຫມາຍຂຶ້ນມາເພື່ອຄຸ້ມຄອງປະຊາຊົນ, ສ້າງຄວາມເປັນພີ່ນ້ອງພ້ອມເຮັດສົນທິສັນຍາກັບຊາວຢິວ 3 ເຜົ່າໃນເມືອງທີ່ຍັງບໍ່ຮັບອິດສະລາມນໍາ.

ລະຫວ່າງນີ້ຊາວເມືອງມັກກະຮ໌ (ກຸເຣຊ) ສົ່ງທະຫານອອກມາໂຈມຕີເຮັດສົງຄາມກັບອິສລາມຫຼາຍຄັ້ງ ທ່ານສາດສະດາຕ້ອງກຽມຕົວປ້ອງກັນເມືອງຈາກການຮຸກຮານຂອງພວກກຸເຣຊ ແລະ ມັກໄດ້ຮັບໄຊຊະນະສະເໝີ, ເຜົ່າຢິວທັ້ງ 3 ທັກຫລັງ ແລະ ຜິດສົນທິສັນຍາທີ່ໄດ້ເຮັດໄວ້ກັບອິສລາມ ທ່ານຈຶ່ງສັ່ງໃຫ້ປາບປາມຊາວຢິວທີ່ອາໄສຢູ່ໃຫ້ອອກໄປຈາກເມືອງມາດີນະຫຼ, ແຕ່ມີເຜົ່າຫນຶ່ງທີ່ທ່ານສາດສະດາແຕ່ງງານກັບລູກສາວຫົວໜ້າເຜົ່າເຮັດໃຫ້ຄົນທັງເຜົ່າກັບໃຈກັນມາຮັບອິດສະລາມ.

ກິດຈະວັດປະຈຳວັນຂອງທ່ານແມ່ນສອນພຣະດຳລັດຄຳສັ່ງໃຊ້ຈາກພຣະເຈົ້າ(ອັລກຸຣອານ) ມາລະຍາດວິໄນ ແລະ ຫຼັກຄຳສອນຕ່າງໆ ໃນອິສລາມ, ຄຸ້ມຄອງດູແລປະຊາຊົນໃນເມືອງມາດີນະຫ໌, ຢ້ຽມຢາມຄົນເຈັບ, ຢ້ຽມຢາມງານບຸນ, ຢ້ຽມຢາມບ້ານທ່າງໄກ, ລາວເຮັດວຽກພຽງແຕ່ງານນ້ອຍ ໆ ໃນເຮືອນຂອງເມຍລາວ, ທ່ານເປັນຜູ້ຊາຍທີ່ທຸກຍາກ. ສະຫາຍຂອງທ່ານບາງຄົນໄດ້ລາຍງານວ່າທ່ານອາໄສຢູ່ເປັນເດືອນໂດຍບໍ່ໄດ້ຈູດໄຟເພື່ອເຮັດອາຫານໂດຍອາໄສກິນຫມາກໄມ້.

59 ປີ ເຮັດສັນຍາສະຫງົບເສິກກັບເມືອງຊາວມັກກະຣ໌ ກຸເຣຊ ລະຫວ່າງນີ້ທ່ານໄດ້ສົ່ງຄະນະທູດໄປເຜົ່າອາຫຣັບຕ່າງໆ ແລະ ອານາຈັກໃຫຍ່ໆ ເຊັ່ນ ໂຣມັນ, ເປີເຊຍ ເພື່ອເຜີຍແຜ່ສາສະຫນາ ບາງເຜົ່າກໍສົ່ງຄະນະທູດມາເຊື່ອມສຳພັນກັບທ່ານ.

61 ປີ ຊາວກູເຣຊເມືອງມັກກະຣ໌ຫັກຫລັງເຮັດຜິດສົນທິສັນຍາສະຫງົບເສິກ, ເຮັດສົງຄາມບຸກໂຈມຕີຊາວມຸສລິມ ທ່ານຈຶ່ງປຸກລະດົມພົນທະຫານເພື່ອໄປເຮັດສົງຄາມກັບຊາວເມືອງມັກກະຣ໌ ແຕ່ຊາວກຸເຣຊມັກກະຫ໌ ຍອມຈຳນວນໂດຍດີບໍ່ມີການຕໍ່ສູ້ນອງເລືອດໃດໆ. ທ່ານໄດ້ໃຫ້ອະໄພໃຫ້ທຸກຄົນທີ່ເຄີຍທຳຮ້າຍທ່ານ ການໄດ້ຮັບໄຊຊະນະເມືອງມັກກະຣ໌ເທື່ອນີ້ບໍ່ມີໃຜສູນເສຍ, ຈາກນັ້ນສາດສະດາສັ່ງໃຫ້ທຳລາຍຮູບປັ້ນທັ້ງຫມົດ ລະຫວ່າງນີ້ຊາວອາຫຣັບທັ້ງຫມົດຫັນມານັບຖືສາສະຫນາອິດສະລາມ.

62 ປີ ເຮັດຮັຈອຳລາ ທ່ານໄດ້ອອກເດີນທາງຈາກເມືອງມາດີນະຫ໌ ໃນວັນທີ່ 25 ຂອງເດືອນ 11 ໂດຍມີມຸສລິມຕ່າງພາກັນເຂົ້າຮ່ວມເຖິງ 10.000 ຄົນ. ມາຮອດມັກກະຫ໌ ໃນວັນພຸດ ເດືອນຊູລຮິຈຈະຫ໌ ທ່ານໄດ້ນຳພາມຸສລິມເຮັດຕໍວາຟກະບະຫ໌ ແລະ ເດີນລະຫວ່າງພູເຂົາຊໍຟາ ມັຣມະຫ໌. ໃນການເຮັດພິທີຮັຈຄັ້ງນີ້ທ່ານໄດ້ສັ່ງເສຍມຸສລິມໃນຫຼາຍໆເລື່ອງ. ເມື່ອແລ້ວຈາກພິທີຮັຈກໍ່ໄດ້ເດີນທາງກັບ ເມື່ອຮອດເມືອງມາດີນະຫ໌ ອາການເຈັບປ່ວຍຂອງທ່ານກໍ່ເລີ່ມສະແດງອາການ ແລະ ທ່ານໄດ້ຮັກສາຕົວທີ່ບ້ານທ່ານຍິງອາອິຊະຫ໌.

ອາຍຸໄດ້ 63 ປີ ທ່ານສາດສະດາໄດ້ເສຍຊີວິດທີ່ເມືອງມາດີນະຣ໌, ຢູ່ເທິງຕັກພັນລະນາຂອງທ່ານທ່ານຍິງອາອິຊະຫ໌ ຣໍດີຍັລລໍຮຸ ອັນຮາ. ໃນເວລາກາງເວັນຂອງວັນທີ່ 12 ເດືອນ ຣໍບິອຸລ ເອົາວັລ ປີທີ່ 13 ຂອງການຮິຈເຣາະຫ໌ອົບພະຍົບ, ແລ້ວສາດສະໜາອິດສະລາມກໍ່ໄດ້ແຜ່ຫລາຍໄປທົ່ວທຸກປະເທດ.

## ຄວາມສຳຄັນຂອງຊີວະປະຫວັດ ທ່ານສາດສະດາ ມູຮຳໝັດ ﷺ

ໄດ້ເປັນທີ່ປະຮູ້ຈັກໃນປະຫວັດສາດຕັ້ງແຕ່ສະໄໝກ່ອນ ແລະ ຍັງເປັນພະຍານຕໍ່ມະນຸດຊາດ ເຖິງຮູບແບບສັງຄົມຫຼາກຫຼາຍທີ່ດຳເນີນວິຖີຊີວິດມາ ແລະ ກ່າວເຖິງຊີວະປະຫວັດຂອງຜູ້ຄົນຕ່າງໆເຊັ່ນ ບັນດາກະສັດ ຜູ້ມີຄວາມຍຸຕິທຳ, ຜູ້ນຳ, ວິລະຊົນ, ນັກກະວີ, ນັກປະດິດ, ແລະ ອື່ນໆ ປະຫວັດສາດເຫຼົ່ານັ້ນເປັນທີ່ຮູ້ຈັກຢ່າງກວ້າງຂວາງ ແຕ່ມີຊົນກຸ່ມໜຶ່ງໃນໝູ່ມະນຸດທີ່ມີກຽດ ຊີວະປະຫວັດຂອງເຂົາເຈົ້າມີຄວາມສຳຄັນ ແລະ ມີປະໂຫຍດຢ່າງຫຼາຍ ຊີວະປະຫວັດພວກນັ້ນຄືບັນດາສາດສະດາ ເພາະວ່າຊີວະປະຫວັດຂອງບຸກຄົນອື່ນໆ ໃນສັງຄົມມະນຸດທີ່ປະກົດຢູ່ໃນແງ່ມຸມ ມີປະໂຫຍດສະເພາະໃນວົງຈຳກັດ ແຕ່ໃນເວລາດຽວກັນ, ຊີວະປະຫວັດຂອງບັນດາສາດສະດາ ແລະ ຣໍສູລ ມີປະໂຫຍດຫຼາຍກວ່າ ແລະ ມີຜົນກະທົບຢ່າງກວ້າງຂວາງຕໍ່ຊີວິດຂອງມະນຸດ ໂດຍພຣະອົງອັລລໍຫ໌ ເລືອກເຂົາເຈົ້າເພື່ອຊີ້ນຳຜູ້ຄົນ ຊີວິດຂອງບັນດາສາດສະດາ ແລະ ຣໍສູລ ປຽບຄືກັບແສງໄຟທີ່ສ່ອງແສງທາງໃຫ້ມະນຸດ ແລະ ສ້າງຮູບແບບສຳລັບການປະຕິບັດຮອຍຕາມໃນ ສາດສະໜາ ດັ່ງທີ່ອັລລໍຫ໌ ໄດ້ດຳລັດວ່າ

﴿أُولَٰٓئِكَ ٱلَّذِينَ هَدَى ٱللَّهُ ۖ فَبِهُدَىٰهُمُ ٱقْتَدِهْ ۗ قُل لَّآ أَسْـَٔلُكُمْ عَلَيْهِ أَجْرًا ۖ إِنْ هُوَ إِلَّا ذِكْرَىٰ لِلْعَٰلَمِينَ﴾

ຄວາມໝາຍວ່າ: ພວກເຂົາເຫຼົ່ານັ້ນ ທີ່ອັລລໍຫ໌ໄດ້ຊີ້ນຳທາງພວກເຂົາ ແລະ ດ້ວຍການຊີ້ນຳຂອງເຂົາເຈົ້າເຈົ້າກໍ່ຈົ່ງປະຕິບັດຕາມຮອຍພວກເຂົາ ຈົ່ງກ່າວເຖິດວ່າ ຂ້ອຍບໍ່ໄດ້ຮ້ອງຂໍທ່ານທັ້ງຫຼາຍໃນການນັ້ນ, ເຊິ່ງຜົນລາງວັນນັ້ນແມ່ນ ບໍ່ມີຫຍັງອື່ນນອກຈາກ ການລະນຶກເຖິງຂອງຊາວໂລກທັ້ງຫຼາຍ ເທົ່ານັ້ນ

(ສູເຣາະຫ໌ ອັລ-ອານ : 90)

ແນ່ນອນ, ຊີວະປະຫວັດຂອງບັນດາສາດສະດາ ມັນເປັນຊີວະປະວັດທີ່ສົມບູນແບບ ແລະ ຊີວະປະຫວັດຂອງສາດສະດາ ມູຮຳໝັດ ໄດ້ກາຍເປັນຊີວະປະວັດທີ່ຄົບຖ້ວນ, ຍິ່ງໃຫຍ່, ມີກຽດ ແລະ ສະຫງ່າລາສີ ຈະມີຜູ້ປະຕິບັດຕາມຈົນຮອດວັນສິ້ນໂລກ ຄວາມແຕກຕ່າງໃນຊີວະປະຫວັດຂອງທ່ານນະບີໄດ້ປະກົດຊັດເຈນໃນຫຼາຍດ້ານຮ່ວມກັນ ພວກເຮົາຈະຍົກເອົາດ້ານທີ່ສຳຄັນ ມາເລົ່າສູ່ຟັງນຳກັນ;

### 1. ການສືບເຊື້ອສາຍຂອງທ່ານນະບີມູຮຳມັດ ﷺ

ທ່ານຊື່ ມຸຮຳມັດ ລູກຂອງທ່ານອັບດິລລາຫ໌ ບິນອັບດິລມຸດຕໍລິບ ບິນຮາຊິມ ບິນອັບດິລມະນາຟ ບິນກຸຊ໊ອຍ ບິນກິລາບ ບິນມູຣເຣາະຫ໌ ເຊື້ອສາຍຂອງທ່ານໄປຈົບທີ່ທ່ານອັດນານ ເຊິ່ງເປັນລູກຂອງທ່ານອິສມາອີລ ລູກຂອງທ່ານນະບີອິບຣໍຫີມ ອະໄລຮິສສະລາມ ມານດາຂອງທ່ານນະບີ ﷺ ຊື່ທ່ານນາງອາມີນະຫ໌ ລູກຂອງວະຫ໌ບີ ບິນຕິ ອັບດິບຸຣຊູຫຼເຣາະຫ໌ ບິນຕິກິລາບ ບິນຕິມູຣເຣາະຫ໌

ເຊື້ອສາຍທາງດ້ານບິດາ ແລະ ມານດາຂອງທ່ານ ຈະສືບສາຍໄປເຖິງທ່ານນະບີອິບຣໍຮີມ ອະໄລຮິສສະລາມ[1] ເຊິ່ງເປັນບິດາຂອງບັນດານະບີຕ່າງໆ ເຊື້ອສາຍຂອງທ່ານນະບີຖືໄດ້ວ່າເປັນເຊື້ອສາຍທີ່ມີກຽດ ແລະ ດັ່ງເດີມ ເຊິ່ງອັລລໍຫ໌ ໄດ້ປະທານໃຫ້ ແລະ ເລືອກທ່ານເປັນນະບີ ທ່ານໄດ້ກ່າວກ່ຽວກັບເຊື້ອສາຍອັນມີກຽດໄວ້ວ່າ:

**عن واثلة بن الأسقع، يقول: سمعت رسول الله صلى الله عليه وسلم يقول: «إن الله اصطفى كنانة من ولد إسماعيل، واصطفى قريشا من كنانة، واصطفى من قريش بني هاشم، واصطفاني من بني هاشم»**

صحيح مسلم | كتاب الفضائل باب فضل نسب النبي صلى الله عليه وسلم، وتسليم الحجر عليه قبل النبوة (حديث رقم: 4129 )

**"ແທ້ຈິ່ງອັລລໍຫ໌ ໄດ້ເລືອກ ກິນານະຫ໌ ມາຈາກລູກຫຼານຂອງອິສມາອີລ ຊົງເລືອກກູເຮຊມາຈາກກິນານະຫ໌ ເລືອກບານີຮາຊີມມາຈາກກຸເຮຊ ແລະ ເລືອກຂ້ອຍມາຈາກບະນີຮາຊີມ"** [2]

ທ່ານນະບີ ﷺ ເປັນຜູ້ບໍລິສຸດ ມາຈາກຕະກູນທີ່ບໍລິສຸດ ເປັນຄົນທີ່ດີມາຈາກຕະກູນທີ່ດີ ການທີ່ທ່ານນະບີ ﷺ ມາຈາກຕະກູນທີ່ສູງສົ່ງ ແນ່ນອນວ່າມີຜົນຫຼາຍປະການ ເຊັ່ນ ເປັນປັດໃຈສຳຄັນທີ່ເຮັດໃຫ້ການເຜີຍແຜ່ອິດສະລາມປະສົບຜົນສຳເລັດຕັ້ງແຕ່ເລີ່ມຕົ້ນ ທັ້ງນີ້ ຍ້ອນແມ່ນວ່າການມີພັກພວກນັ້ນເປັນເລື່ອງສຳຄັນຫຼາຍສຳລັບປະເທດອາຣັບ ສາມາດເຫັນໄດ້ວ່າຜູ້ທີ່ປ່ຽນໃຈເຫລື້ອມໃສໃນອິດສະລາມໃນລຸ້ນທຳອິດທີ່ບໍ່ມີພັນທະມິດພັກພວກ ຈະຖືກທຳຮ້າຍຫຼາຍກວ່າຜູ້ອື່ນ ແລະ ທ່ານນະບີມູຮຳໝັດ ﷺ ກໍ່ຖືກທຳຮ້າຍຢ່າງຮຸນແຮງຈາກພີ່ນ້ອງໃກ້ຊິດ ຄືອະບູລະຮັບ ແຕ່ທ່ານໄດ້ຮັບການປົກປ້ອງເບິ່ງແຍງຢ່າງດີຈາກອະບູຕໍລິບລຸງຂອງທ່ານນະບີ ຈຶ່ງເຮັດໃຫ້ສາມາດຜ່ານອຸປະສັກໃນການເຜີຍແຜ່ອິດສະລາມໄປໄດ້ ແລະ ການທີ່ທ່ານມາຈາກຕະກູນທີ່ສູງສົ່ງ ຖືວ່າເປັນການຕອບໂຕ້ຕໍ່ຜູ້ທີ່ກ່າວຫາການເຜີຍແຜ່ຄຳສອນຂອງສາດສະດາ ເປັນການສະທ້ອນເຖິງສະພາບສັງຄົມທີ່ແທ້ຈິງ ຄືກັນກັບວັດຖຸນິຍົມອື່ນໆ ການຮຽກຮ້ອງເປັນສະແດງເຖິງສິ່ງທີ່ຕ້ອງທົນທຸກທໍລະມານໃນຊີວິດ ຖ້າຫາກທ່ານນະບີມາຈາກຕະກູນທີ່ຕ່ຳຕ້ອຍແລ້ວ ສັດຕູຂອງອິດສະລາມຈະອ້າງທັນທີວ່າ ການເຜີຍແຜ່ອິດສະລາມຂອງທ່ານແມ່ນຄວາມພະຍາຍາມທີ່ຈະອ້າງເອົາສິ່ງທີ່ທ່ານບໍ່ມີ ແລະ ພວກເຂົາຍັງຈະອ້າງວ່າ ຄວາມສະເໝີພາບທີ່ຮຽກຮ້ອງນັ້ນ ແມ່ນຄວາມພະຍາຍາມທີ່ຈະສ້າງຄວາມໜ້າເຊື່ອຖືກັບທ່ານ ແລະ ພັກພວກຂອງທ່ານເທົ່ານັ້ນ

---

1.ຊີເຣາະຫ໌ຕູບນິຣິຊາມ ໂດຍ ມູຮຳໝັດ ມຸຮັຍຍິດດີນ ອັບດຸລຮະມີດ 1/1 ອັກຣອມດີຍາ ອຸມາຣີຍ໌ ອັຊຊີເຣາະຫ໌ອັນນະບາວີຍະຫ໌ ອັຊຊໍຮີຫະຫ໌ 1/90 ອິບຣໍຫີມ ອະລີ 19/20

2.ເບິ່ງທີ່ໜັງສືສໍຮີຫ໌ ມຸສລິມ ບາບ ຟະດໍອີ້ລນະຊັບ ອັລນະບີ ﷺ

## 2. ການເກີດ ແລະ ໄວເດັກຂອງທ່ານນະບີມູຮຳມັດ ﷺ

ສາດສະດາມູຮຳມັດ ﷺ **ເກີດໃນວັນຈັນ ເດືອນ 12 ເດືອນ ຣໍບີອຸລ ເອົາວັລ** (ເດືອນ 3 ຕາມປະຕິທິນອິສລາມ) ໃນປີຊ້າງ[1] ກົງກັບປີ ຄ.ສ. 571 ພຣະອົງອັລລໍຫ໌ໄດ້ກຳໜົດໃຫ້ເດັກນ້ອຍທີ່ເກີດໃໝ່ຈະບໍ່ໄດ້ເຫັນຫນ້າພໍ່ຂອງຕົນເອງ ເພາະພໍ່ຂອງທ່ານໄດ້ເສຍຊີວິດກ່ອນທີ່ທ່ານຈະເກີດ ໃນຂະນະທີ່ເດີນທາງໄປເຮັດວຽກນຳພໍ່ຕູ້ຂອງເພິ່ນໃນນະຄອນເມືອງມະດີນະຫ໌ ເຊິ່ງພໍ່ຕູ້ເອງກໍ່ໄດ້ຊ່ວຍອາມີນະຫ໌ ຜູ້ເປັນແມ່ ແລະເດັກເກີດໃຫມ່ດ້ວຍດີ ອັບດຸລມຸດຕໍລິບພໍ່ຕູ້ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຕັ້ງຊື່ໃຫ້ເດັກນ້ອຍຜູ້ນັ້ນວ່າ ມູຮຳມັດ (ແປວ່າ ຜູ້ທີ່ໄດ້ຮັບການສັນລະເສີນ)

## 3. ການໃຫ້ນໍ້ານົມ ແລະ ການຜ່າໜ້າເອິກ

ມັນເປັນປະເພນີຂອງຊາວອາຣັບ ທີ່ຈະສົ່ງເດັກນ້ອຍເກີດໃຫມ່ໄປລ້ຽງຢູ່ໃນຊົນນະບົດ ເພື່ອດຳລົງຊີວິດຢູ່ໃນທ່າມກາງທຳມະຊາດ ອາກາດສົດໄສ ແລະ ອາຫານທີ່ດີ ແລະ ຈະເຮັດໃຫ້ເດັກນ້ອຍມີຮ່າງກາຍທີ່ແຂງແຮງ ມີຈິດໃຈທີ່ເຂັ້ມແຂງ ເດັດດ່ຽວ ເຊິ່ງຖືວ່າເປັນໜ້າທີ່ທີ່ສຳຄັນໃນຊີວິດຂອງຊາວອາຣັບທີ່ເຕັມໄປດ້ວຍການຕໍ່ສູ້ອັນເປັນສັນຍາລັກຂອງຊາດອາຣັບ ແລະ ກໍໄດ້ພົບວ່າທຸກໆປີຈະມີແມ່ນົມຈາກຊົນນະບົດໄດ້ເດີນທາງເຂົ້າມາໃນເມືອງເພື່ອ ຮັບຈ້າງດູແລເດັກທີ່ເກີດໃໝ່ ເພື່ອຈະໄດ້ຮັບຄ່າຕອບແທນ

ໃນປີທີ່ທ່ານນະບີ ﷺ ເກີດມີແມ່ນົມຈຳນວນຫນຶ່ງທີ່ໄປຮັບຈ້າງລ້ຽງເດັກນ້ອຍ ແຕ່ໃນເວລາທີ່ຖືກສະເຫນີໃຫ້ຮັບລ້ຽງເອົາ ມຸຮຳຫມັດ ພວກເຂົາທັງຫມົດກໍ່ປະຕິເສດ ຍ້ອນວ່າທ່ານເປັນເດັກກຳພ້າ ດັ່ງທີ່ ຮາລີມະຫ໌[2] ໄດ້ ເວົ້າວ່າ: "ແມ່ຫຼືລຸງຫຼືພໍ່ຕູ້ຂອງເດັກນ້ອຍຄົງຈະບໍ່ໃຫ້ອີຫຍັງແກ່ພວກເຮົາໄດ້ຫຼາຍດອກ" ແລະ ຮາລີມະຫ໌ຊະດີຍະຫ໌ ເປັນແມ່ນົມທີ່ໄປຊ້າກວ່າຜູ້ອື່ນ ເພາະວ່າຍານພາຫະນະ (ອູດ) ທີ່ນາງຂີ່ນັ້ນຈ່ອຍ ແລະ ອ່ອນແອ ຈຶ່ງເຮັດໃຫ້ມັນຍ່າງຊ້າ ເມື່ອນາງໄປຮອດໃນໂຕເມືອງ ນາງໄດ້ພົບເຫັນແມ່ນົມທີ່ທັງໝົດໄດ້ຮັບເອົາເດັກນ້ອຍໄປໝົດແລ້ວ ເຫຼືອພຽງແຕ່ ມຸຮຳຫມັດ ໄດ້ຖືກປະໄວ້ໂດຍບໍ່ມີຜູ້ໃດທີ່ຈະຮັບເອົາໄປລ້ຽງທຳອິດນາງບໍ່ຕ້ອງການທີ່ຈະຮັບເອົາມຸຮຳຫມັດໄປລ້ຽງ ແຕ່ເມື່ອນາງໄດ້ປຶກສາຫາລືກັບຜົວຂອງນາງ ສະນັ້ນນາງຈຶ່ງບອກຜົວວ່າ ນາງບໍ່ຢາກກັບໄປມືເປົ່າ ໂດຍບໍ່ມີເດັກກັບໄປລ້ຽງ ສະນັ້ນນາງສາບານກັບອັລລໍຫ໌ວ່າຕ້ອງຮັບເອົາ ມຸຮຳຫມັດໄປລ້ຽງ

---

1. ປີທີ່ກະສັດອົບຣໍຫະຫ໌ ຮັບຊີ ຈາກເຍເມນ ຍົກທັບໄປເພື່ອທຳລາຍກະບະຫ໌ ນຳທັບໂດຍກອງທັບຊ້າງ ອັລລໍຫ໌ ໄດ້ສົ່ງນົກຫຼາຍຝູງນຳຫີນຈາກໄຟນະຣົກມາໂຍນໃສ່ພວກເຂົາເຫຼົ່ານັ້ນ

2. ຄື ຮາລີມະຫ໌ ບຸດສາວຂອງ ຫາຣິສ ຈາກເຜົ່າບະນີ ສະດີ

ທັນທີ ທີ່ນາງໃຫ້ນົມແກ່ມຸຮໍາຫມັດດູດ ຄວາມປະເສີດໄດ້ປະກົດຂື້ນກັບຮາລີມະຫ໌ ນາງມີນໍ້ານົມຢ່າງຫຼາຍຂື້ນ ຈາກທີ່ເຄີຍແຫ້ງ ຫຼື ເກືອບຈະບໍ່ມີເລີຍ ເຊັ່ນດຽວກັບແບ້ຂອງນາງທີ່ຮັງນົມຂອງມັນແຫ້ງເພາະຄວາມຈ່ອຍກໍ່ກັບມາມີນໍ້ານົມຢ່າງຫຼວງຫຼາຍ ຈື່ງສາມາດໃຫ້ນາງ ແລະ ສາມີໄດ້ດື່ມນໍ້ານົມແບ້ ແລະ ນອນຫຼັບຢ່າງສະບາຍໃນຄືນນັ້ນ ສາມີຂອງນາງຈື່ງເຂົ້າໃຈທັນທີວ່າເດັກນ້ອຍຄົນນີ້ຄືງບໍ່ແມ່ນເດັກນ້ອຍທໍາມະດາແທ້ ຈື່ງເວົ້າກັບພັນລະຍາຂອງລາວວ່າ **ຮາລີມະຫ໌ຂ້ອຍຂໍສາບານຕໍ່ອັລລໍຫ໌ ວ່າ ເຮົາໄດ້ເດັກທີ່ມີຄວາມປະເສີດໄວ້ລ້ຽງດູແລ້ວ** ເຊັ່ນດຽວກັນພາຫານະຂອງນາງທີ່ຈ່ອຍອ່ອນແອ ກັບມາແຂງແຮງສາມາດຍ່າງນໍາຫນ້າແມ່ນົມຄົນອື່ນໆ ຈົນສ້າງຄວາມປະລາດໃຈໃຫ້ກັບພວກນາງເຫຼົ່ານັ້ນ ເຮັດໃຫ້ພວກນາງຖາມຂື້ນມາວ່າ **"ຮາລີມະຫ໌ເກີດອີຫຍັງຂື້ນກັບພາຫານະຂອງເຈົ້າ?"** ນາງຕອບວ່າ **"ຂໍສາບານຕໍ່ອັລລໍຫ໌ ວ່າຂ້ອຍໄດ້ເດັກທີ່ມີສີລິມົງຄົນຂີ່ເຖິງຫລັງຂອງມັນ"**

ຄວາມເປັນສີລິມົງຄົນຂອງມູຮໍາຫມັດ ໄດ້ເກີດຂື້ນກັບຄອບຄົວຂອງຮາລີມະຫ໌ຢ່າງຕໍ່ເນື່ອງ ເມື່ອນາງກັບມາຮອດເຮືອນ ໝູ່ບ້ານຂອງນາງໃນປີນັ້ນເປັນປີທີ່ມີຄວາມແຫ້ງແລ້ງ ຝູງແກະຝູງແບ້ທີ່ອອກໄປຫາຫຍ້າກິນຢ່າງຫິວໂຫຍກໍ່ຕ້ອງກັບມາຢ່າງຫິວໂຫຍຄືເກົ່າ ເພາະທົ່ງຫຍ້າມີນ້ອຍ ແຕ່ວ່າຝູງແກະຂອງຮາລີມະຫ໌ອອກໄປຢ່າງຫິວໂຫຍແຕ່ກັບມາຢ່າງອີ່ມເອມ ແລະ ສາມາດໃຫ້ນໍ້ານົມຢ່າງຫລວງຫຼາຍ

ໂດຍທໍານຽມການປະຕິບັດແລ້ວ ເມື່ອຄົບຮອດ ສອງ ປີ ແມ່ນົມສິນໍາເດັກນ້ອຍທີ່ຮັບມາລ້ຽງ ໄປສົ່ງຄືນໃຫ້ແກ່ມານດາຂອງເຂົາ ແຕ່ຮາລີມະຫຼ ແລະ ສາມີຂອງນາງໄດ້ນໍາມຸຮໍາຫມັດໄປຫາມານດາຂອງເຂົາບໍ່ແມ່ນເພື່ອສົ່ງຄືນ ແຕ່ຕ້ອງການທີ່ຈະໄປຂໍຮ້ອງໃຫ້ອະນຸຍາດໃຫ້ລ້ຽງມຸຮໍາຫມັດຕໍ່ໄປ ເພື່ອທີ່ເຂົາທັງສອງຈະໄດ້ຮັບຄວາມສີລິມົງຄົນຈາກມຸຮໍາຫມັດ ອະມີນະຫ໌ ມານດາຂອງທ່ານນະບີມຸຮໍາຫມັດກໍ່ບໍ່ໄດ້ຂັດຂ້ອງທັງສອງໂດຍປະການໃດ ແລະ ຮັບລ້ຽງມຸຮໍາຫມັດຕໍ່ໄປ ຫຼັງຈາກນັ້ນອີກ 4-5 ເດືອນ ໄດ້ເກີດເຫດການຜ່າຫນ້າອົກຂອງທ່ານນະບີ ﷺ ຂື້ນ[1]

### 3.1 ການຜ່າຫນ້າເອິກຄັ້ງທໍາອິດ

ເມື່ອ ມູຮໍາມັດ ມີອາຍຸໄດ້ 3 ປີ[2] ການຜ່າຕັດຫນ້າເອິກຈື່ງເກີດຂື້ນ ທ່ານອີມ່າມມຸສລິມໄດ້ລາຍງານເຫດການຜ່າຫນ້ງເອິກໄວ້ດັ່ງນີ້ ລາຍງານມາຈາກອານັສ ຣໍດີຍັລລໍ ຮຸອັນ ວ່າ: ທ່ານຈິບຣີລໄດ້ມາຫາທ່ານນະບີ ໃນຂະນະທີ່ຫຼີ້ນ ກັບຫມູ່ເພື່ອນ ຈິບຣີລໄດ້ຈັບທ່ານໃຫ້ນອນລົງ ແລະ ຜ່າຫນ້າເອິກຂອງທ່ານ

1.ກ່ຽວກັບການໃຫ້ນົມຂອງ ຮາລີມະຫ໌ ຫນັງສື ຊີເຣາະຕຸບຣີນິຊາມ ຫນ້າ 1/172-177 ມະວາຮິດ ອັລຊອມອານ ລິບນີຮິບບານ 512-513 ມຸຈັມອັລກະບີຣ ອັດຕອບຣໍນີ 24/212 - 213, ດະລາອິລນຸບວະຫ໌ ຂອງ ອາບູນະອີມ 1/19 193 ຕັກຣີດ ຄໍບັຣ ເບິ່ງບ່ອນ ອັລອໍາຣີ ອັຊຊີເຣາະອັນນະບະວີຍພຫ໌ ອັຊຊໍຮີຫ໌ 1/102-103 ຊໍຮີຫ໌ຊີເຣາະນະບີ ຂອງອິບຣໍຮີມ ອະລີ 39

2.ຊີເຣາະຕຸບຣີນິຊາມ ຫນ້າ 1/175-176

ແລະເອົາເລືອດກ້ອນຫນຶ່ງອອກຈາກຫົວໃຈ ແລ້ວເວົ້າວ່າ "ນີ້ແມ່ນສ່ວນຫນຶ່ງຂອງໄຊຕອນ ຫຼັງຈາກນັ້ນ ຈິບຣີລ ລ້າງຫົວໃຈຂອງລາວດ້ວຍນໍ້າ ຊຳຊຳ Zamzam ໃນພາສະນະທີ່ເຮັດດ້ວຍທອງຄຳຫຼັງຈາກນັ້ນ ຈິບຣີລໄດ້ປະສານຫົວໃຈ ແລ້ວເອົາມັນກັບຄືນສູ່ບ່ອນເກົ່າ ບັນດາເດັກນ້ອຍທີ່ຫຼີ້ນນຳກັນ ຮີບພາກັນກັບໄປຫາແມ່ນົມຂອງທ່ານນະບີ ແລະ ກ່າວວ່າ ມຸຮຳໜັດ ໄດ້ຖືກຂ້າຕາຍແລ້ວ ດັ່ງນັ້ນລາວຈຶ່ງຟ້າວອອກໄປ ລາວຈຶ່ງພົບວ່າໃບໜ້າຂອງທ່ານຈືດໆ

ອານັສ ຣໍດີຍັລລໍ ຮຸອັນ ໄດ້ເລົ່າວ່າ: ຂ້ອຍເຄີຍເຫັນຮອຍຫຍິບທີ່ຫນ້າເອິກຂອງທ່ານນະບີ ﷺ [1] ສາດາຈານ Akram al-Umari ໄດ້ວິເຄາະເຫດການຜ່າຕັດໜ້າເອິກດັ່ງນີ້: ການກຳຈັດສ່ວນທີ່ເປັນໄຊຕອນອອກ ຖືວ່າເປັນຄວາມມະຫັດສະຈັນຢ່າງໜຶ່ງສຳລັບການໄດ້ຮັບການແຕ່ງຕັ້ງເປັນສາດສະດາ ແລະ ມັນເປັນການປົກປ້ອງຈາກຄວາມຊົ່ວຮ້າຍ ແລະ ການເຄົາລົບສິ່ງອື່ນນອກຈາກ ອັລລໍຫ໌ ເພື່ອບໍ່ໃຫ້ມີສິ່ງແປກປອມໃດໆ ເຂົ້າໄປໃນໃຈ ຍົກເວັ້ນສຳລັບການໃຫ້ເອກະພາບຕໍ່ພຣະອົງອັລລໍຫ໌ເທົ່ານັ້ນ ແລະ ເຫດການນັ້ນເຫັນຜົນໄດ້ຢ່າງຊັດເຈນ ໂດຍສາດສະດາບໍ່ເຄີຍເຮັດບາບ, ບໍ່ເຄີຍເຄົາລົບກາບໄຫວ້ຈະເວັດ (ຮູບປັ້ນ), ເຖິງແມ່ນວ່າການເຄົາລົບຮູບປັ້ນໄດ້ແຜ່ຂະຫຍາຍຢູ່ໃນໝູ່ຊົນຂອງທ່ານ[2] ແລະ ເຫດການຜ່າຕັດຫນ້າເອິກກໍ່ເກີດຂຶ້ນອີກໃນຄືນຂອງ ອິສຣໍ ແລະ ມຽະຣອດ ຈາກ ຈາກມັກກະຫ໌ ໄປ ໄບຕຸລມັກດິສ ແລະ ຂຶ້ນສູ່ທ້ອງຟ້າ

### 3.2 ການເສຍຊີວິດຂອງແມ່ ແລະ ພໍ່ຕູ້

ມູຮຳມັດ ໄດ້ຮັບການລ້ຽງດູໂດຍ ຮາລີມະຫ໌ (ແມ່ນົມ) 4-5 ຈຶ່ງໄດ້ຖືກສົ່ງກັບຄືນໄປຫາແມ່ຂອງຕົນເພື່ອຈະໄດ້ຮັບຄວາມຮັກ ແລະ ຄວາມອົບອຸ່ນ ແຕ່ ອັລລໍຫ໌ບໍ່ປາດຖະຫນາໃຫ້ທ່ານຢູ່ກັບແມ່ເປັນເວລາດົນນານ ແລ້ວແມ່ຂອງທ່ານກໍເສຍຊີວິດໃນລະຫວ່າງທາງຈາກເມືອງມັກກາໄປເມືອງມາດີນາ ຫຼັງຈາກທີ່ກັບຄືນມາຈາກການຢ້ຽມຢາມປ້າຂອງ ທ່ານນະບີ ເຊິ່ງໃນເວລານັ້ນ ມຸຮຳຫມັດ ມີອາຍຸໄດ້ 6 ປີ ການລ້ຽງດູຕ້ອງກັບຄືນໄປຫາ ອັບດູລມຸດຕໍລິບ ພໍ່ຕູ້ຈຶ່ງຮັບໜ້າທີ່ລ້ຽງດູຢ່າງເຕັມທີ່ ມຸຮຳຫມັດເປັນເດັກນ້ອຍກຳພ້າເຕັມໂຕ ແລະ ເພິ່ນໄດ້ໃຫ້ສິດທິພິເສດທີ່ບໍ່ໄດ້ມອບໃຫ້ແກ່ລູກຫລານຄົນໃດກ່ອນ ມຸຮຳຫມັດໄດ້ຮັບການລ້ຽງດູໂດຍພໍ່ເຖົ້າຂອງລາວບໍ່ດົນປານໃດ ພໍ່ຕູ້ກໍ່ໄດ້ເສຍຊີວິດ 2 ປີຫຼັງຈາກແມ່ຂອງທ່ານເສຍຊີວິດ, ໃນເວລານັ້ນ ມຸຮຳຫມັດ ມີອາຍຸໄດ້ 8 ປີ ເມື່ອແມ່ ແລະ ພໍ່ຕູ້ຕ້ອງຈາກໄປ ລຸງຂອງທ່ານ ອາບູຕໍລິບຈຶ່ງໄດ້ຮັບອຸປະກາລະລ້ຽງດູມຸຮຳມັດຢ່າງດີ ບໍ່ຫນ້ອຍຫນ້າໄປກວ່າແມ່ ແລະ ພໍ່ຕູ້ຂອງທ່ານເລີຍ

---

1.ເບິ່ງ ຊໍຮີຫ໌ມຸສລິມ ກິຕາບ ອັລ ອີມານ ບາບ ອັລ ອິຊຣໍ ບີຣຣໍສູລ ຫນ້າ 1/166

2. 205/7173/2: اجتهاد العلماء في استجلاء الحكمة من الحادثة الروض الأنف للسهيلي

104/1 ອັຊຊີເຣາະຫ໌ອັນນະບາວີຍະຫ໌ ອັຊຊໍຮີຫະຫ໌

ແນ່ນອນເຫຼືອເກີນການທີ່ທ່ານສາດສະດາ ﷺ ບໍ່ເຫັນພໍ່ ເພາະວ່າກຳພ້າພໍ່ມາຕັ້ງແຕ່ເກີດ ແລະ ພາຍໃຕ້ການດູແລຂອງແມ່ພຽງແຕ່ 2 ປີເທົ່ານັ້ນກໍ່ຕ້ອງສູນເສຍແມ່ໄປ ແລະ ເມື່ອສູນເສຍແມ່ບໍ່ດົນ ທ່ານຕ້ອງສູນເສຍພໍ່ຕູ້ຂອງທ່ານໄປອີກ ທັງໝົດນີ້ເກີດຂຶ້ນໃນເວລາພຽງ 8 ປີ ຊ່ວງເວລາດັ່ງກ່າວເປັນໄປຕາມພຣະປະຊົງຂອງພຣະອົງອັລລໍຫ໌ ທີ່ຕ້ອງການດູແລ ມຸຮຳຫມັດ ດ້ວຍພຣະອົງເອງ ແລະ ເພື່ອໃຫ້ທ່ານໄດ້ຍຶດໝັ້ນຢູ່ກັບອັລລໍຫ໌ ອົງດຽວຕັ້ງແຕ່ໃນຕອນເລີ່ມຕົ້ນຂອງຊີວິດ ບໍ່ຕ້ອງໄປພຶ່ງພາຜູ້ອື່ນໃດ ຫຼື ຜູ້ໃດທີ່ຍຶດໝັ້ນກັບອັລລໍຫ໌ ອັລລໍຫ໌ຈະເບິ່ງແຍງລາວ ຄວາມດີ ແລະ ຄວາມສຳເລັດຕ່າງໆຈະເປັນຂອງເຂົາທຸກຢ່າງ ເປັນທີ່ຍອມຮັບກັນວ່າ ເດັກນ້ອຍກຳພ້າຈຳນວນຫຼາຍ ທີ່ຕ້ອງສູນເສຍພໍ່ໄປ ຫຼືການສູນເສຍພໍ່ແມ່ທັງສອງໄປ ເຮັດໃຫ້ຄົນໃກ້ຊິດໂສກເສົ້າ ແລະ ເປັນຫ່ວງເປັນໃຍ ຢ້ານວ່າຊີວິດຂອງລາວຈະບໍ່ດີ ແຕ່ເມື່ອລາວຍຶດຫມັ້ນຢ່າງແທ້ຈິງຕໍ່ ອັລລໍຫ໌ ພຣະອົງຈະດູແລ ແລະ ເຮັດໃຫ້ຊີວິດຂອງພວກເຂົາມີຄວາມສຸກ ເຊິ່ງດີກວ່າບາງຄົນທີ່ໄດ້ຮັບການລ້ຽງດູຈາກພໍ່ແມ່ອີກ

### 3.3 ການລ້ຽງແບ້ ລ້ຽງແກະ

ຫຼັງຈາກທີ່ພໍ່ຕູ້ເສຍຊີວິດ ມຸຮຳຫມັດ ໄດ້ຢູ່ພາຍໃຕ້ການດູແລຂອງ ລຸງ ອາບູຕໍລິບເຊິ່ງມີລູກຫຼາຍຄົນຖານະແມ່ນທຸກຍາກ ເຖິງແມ່ນວ່າຈະເປັນແບບນັ້ນກໍ່ຕາມ ທ່ານກໍ່ຍິນດີຮັບຮັບເອົາ ມຸຮຳຫມັດ ມາລ້ຽງ ແລະ ໃຫ້ການລ້ຽງດູທີ່ດີແກ່ມຸຮຳຫມັດ ທ່ານນະບີມຸຮຳຫມັດ ຈຶ່ງບໍ່ຕ້ອງການທີ່ຈະສ້າງພາລະຫນັກໃສ່ລຸງຂອງຕົນ ສະນັ້ນ ທ່ານຈຶ່ງແບ່ງເບົາພາລະຂອງລຸງ ໂດຍການໄປຮັບຈ້າງ ລ້ຽງແບ້ ແກະໃຫ້ຊາວເມືອງມັກກະຫ໌ ການລ້ຽງແບ້ເປັນອາຊີບໜຶ່ງໃນຊີວິດຂອງສາດສະດາ ດັ່ງລາຍງານມາຈາກຫະດີຊ[1]

**[مَابَعَثَ اللهُ نَبِيًّا إِلاَّ رَعَى الغَنَمَ]**

ຄວາມໝາຍວ່າ : ອັລລໍຫ໌ ບໍ່ໄດ້ສົ່ງນະບີທ່ານໃດມາ ເວັ້ນແຕ່ເຂົາຈະມີອາຊີບລ້ຽງແບ້ລ້ຽງແກະ

---

1. ເບິ່ງ ຊໍຮີຫ໌ອັລບຸກໍຣີ ກິຕາບ ອັລອິຈາເຣາະ ເລື່ອງກ່ຽວກັບການລ້ຽງແບ້, ອິບນຸ ຮາຈັຣ ຣໍຮີມະຮຸລລໍຫ໌ ນັກວິຊາການກ່າວວ່າ ຄວາມລັບຂອງການດົນບັນດານໃຈສາດສະດາຕ່າງໆ ໃຫ້ດຳລົງຊີວິດເປັນຜູ້ລ້ຽງແກະ ກ່ອນທີ່ຈະໄດ້ຮັບການແຕ່ງຕັ້ງກໍ່ຄື ເຮັດໃຫ້ເຂົາເຫລົ່ານັ້ນຮູ້ຈັກຄຸ້ນເຄີຍກັບການດູແລຝູງແກະເຫຼົ່ານັ້ນ ເພື່ອນຳໃຊ້ເຂົ້າໃນການດູແລປະຊາຊາດ ຂອງພວກເຂົາ ເພາະການຄຸກຄີກັບສັດລ້ຽງເຫຼົ່ານັ້ນ ຕ້ອງອາໃສຄວາມອົດທົນ ແລະ ຄວາມສົງສານ ເມື່ອເຂົາເຈົ້າຕ້ອງອົດທົນກັບການລ້ຽງດູ ໃນການລວບລວມພວກມັນ ເມື່ອມັນແຜ່ລາມໄປທົ່ວທົ່ງນາ ແລະສືບຕໍ່ໄລ່ພວກມັນໃຫ້ເຂົ້າຄອກ ຄຽງຄູ່ກັບການປົກປ້ອງດູແລສັດລ້ຽງຈາກສັດເດລະສານຕ່າງໆທີ່ຈະລັກກັດກິນ ເຮັດໃຫ້ພວກທ່ານ ຮຽນຮູ້ນິໄສທີ່ແຕກຕ່າງກັນ ແລະ ຄວາມແຕກຕ່າງຂອງພວກມັນ ເຊິ່ງມັນຕ້ອງໃຊ້ຄວາມຄຸ້ນເຄີຍ ການຮຽນຮູ້ດັ່ງກ່າວ ເຮັດໃຫ້ ສາດສະດາ ເຫຼົ່າ ນັ້ນມີຄວາມອົດທົນ ກັບ ປະຊາຊາດຂອງເຂົາເຈົ້າ ແລະ ຮູ້ຈັກນິໄສທີ່ແຕກຕ່າງກັນ ສະຕິປັນຍາທີ່ບໍ່ເທົ່າທຽມກັນ ລາວໄດ້ຫຼຸດຄວາມແຂງລົງ ແລະສະແດງຄວາມເມດຕາສົງສານຕໍ່ຜູ້ທີ່ອ່ອນແອ ເຮັດໃຫ້ເຂົາເຈົ້າເຂົ້າກັນໄດ້ ແລະ ຢູ່ຮ່ວມກັນໄດ້ດີ ດັ່ງນັ້ນ, ພາລະທີ່ຫນັກ ຂອງບັນດາສາດສະດາເຫຼົ່ານັ້ນຈຶ່ງງ່າຍກວ່າການທີ່ຢູ່ໆແລ້ວຖືກແຕ່ງຕັ້ງຢ່າງກະທັນຫັນ ເພາະລາວໄດ້ຮຽນຮູ້ຂັ້ນຕອນຂອງການລ້ຽງແບ້ຂອງເຂົາເຈົ້າ

### 4. ອຸປະນິໄສ ແລະ ຖານະຂອງທ່ານນະບີ ﷺ ກ່ອນທີ່ຈະໄດ້ຮັບການແຕ່ງຕັ້ງ

**ທ່ານນະບີມູຮຳມັດ** ﷺ ໄດ້ອາໄສຢູ່ໃນສັງຄົມທີ່ເຕັມໄປດ້ວຍມາລະຍາດທີ່ດີ ເຖິງແມ່ນວ່າມັນບໍ່ດີ ອັລລໍຫ໌ ກໍ່ປົກປ້ອງທ່ານຈາກການປະພຶດທີ່ບໍ່ດີບໍ່ງາມຕ່າງໆ ແລະ ເລືອກມາລະຍາດທີ່ດີສຳລັບທ່ານ ດັ່ງນັ້ນຈຶ່ງເຮັດໃຫ້ທ່ານມີຕຳແໜ່ງກຽດສັກສີໃນຈິດໃຈຂອງປະຊາຊົນທົ່ວໄປ ບໍ່ວ່າຈະເປັນເດັກນ້ອຍ ຫຼືຜູ້ໃຫຍ່

ທ່ານນະບີມູຮຳຫມັດ ﷺ ບໍ່ເຄີຍເຄົາລົບຮູບປັ້ນ ທ່ານບໍ່ກິນສິ່ງທີ່ຖືກຂ້າແກ່ການຖະວາຍຈະເວັດ ແລະ ທ່ານຍັງກຽດຊັງມັນຢ່າງຮຸນແຮງ ໃຜກໍ່ຕາມທີ່ຖາມທ່ານດ້ວຍນາມຂອງຈະເວັດ ເຊັ່ນ ອັລລ໊າດ ຫຼື ອຸຊຊາ ຫຼັງຈາກນັ້ນທ່ານຈະເວົ້າວ່າ: **"ຢ່າຖາມຂ້ອຍກ່ຽງກັບຈະເວັດຮູບປັ້ນທັ້ງສອງນັ້ນເລີຍ ຂ້ອຍບໍ່ເຄີຍຊັງອີ່ຫຍັງໄປຫລາຍກວ່າທັ້ງສອງ"**

ທ່ານມີຊື່ສຽງໃນດ້ານຄວາມຊື່ສັດທັ້ງຄຳເວົ້າ ແລະ ການກະທຳ ແລະ ເປັນຜູ້ທີ່ຮັກສາຂອງຝາກ (ອະມານະຫ໌) ຢ່າງດີສຸດ ຈົນໄດ້ຮັບສາຍາວ່າ **ອັລອາມີນ** (ຜູ້ຊື່ສັດ) ເຊັ່ນດຽວກັນ ທ່ານບໍ່ເຄີຍຍຸ່ງກ່ຽວກັບອະບາຍະມຸກ ການລະຫຼີ້ນ ການຮ້ອງລຳທຳເພງຄືກັບຄົນຫນຸ່ມທົ່ວໄປ ມີຢູ່ຄັ້ງໜຶ່ງທ່ານຕ້ອງການຈະໄປທ່ຽວ ທ່ານຈຶ່ງຝາກແກະໄວ້ກັບໝູ່ ແລະ ເຂົ້າໄປໃນເມືອງ ເພື່ອຈະເບິ່ງການລະຫຼີ້ນຂອງຊາວເມືອງນັ້ນ ເມື່ອທ່ານເຂົ້າໄປໃກ້ເມືອງມັກກະຫ໌ ທ່ານຮູ້ສຶກງ່ວງນອນ ແລະ ໄດ້ນອນຫລັບໄປ ເມື່ອທ່ານຕື່ນຂຶ້ນ ມັນສະຫວ່າງແລ້ວ ໃນຄືນຕໍ່ມາທ່ານໄດ້ເຂົ້າໄປໃນອີກເທື່ອຫນຶ່ງ ແລະ ອັລລໍຫ໌ເຮັດໃຫ້ທ່ານນອນຫຼັບຄືກັບຄືນທຳອິດ ສະນັ້ນ ທ່ານຈຶ່ງເວົ້າວ່າ: ຕັ້ງແຕ່ນັ້ນມາ, ຂ້ອຍບໍ່ມີເຈດຕະນາທີ່ຈະເຮັດຫຍັງທີ່ບໍ່ດີ ດັ່ງທີ່ຢາຮີລີຢາ(ຄົນໃນຍຸກຂອງທ່ານ)ໄດ້ເຮັດ ຈົນໄດ້ຮັບການແຕ່ງຕັ້ງເປັນນະບີ[1]

ແລະ ຍັງໄດ້ຊ່ວຍໃຫ້ກຸ່ມຊົນຂອງທ່ານເຮັດວຽກງານທີ່ຍິ່ງໃຫຍ່ ເຊັ່ນ: ການຊ່ວຍເຫຼືອໃນສົງຄາມ (الفجار) ໂດຍການເອົາລູກທະນູໃຫ້ກັບລຸງ[2] ເຂົ້າຮ່ວມໃນການໃຫ້ສັດຕະຍາບັນຂອງ ຊາວກຸເຣຊ ໃນການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ທີ່ຖືກຂົ່ມເຫັງ ແລະ ຮຽກຮ້ອງສິດກັບຄົນເຫຼົ່ານັ້ນ[3] ເມື່ອອາຍຸໄດ້ 35 ປີ, ພວກກຸເຣຊ ໄດ້ຟື້ນຟູ ກະບະຫ໌ ທ່ານສາດສະດາໄດ້ເຂົ້າຮ່ວມກັບພວກເຂົາໃນການແບກກ້ອນຫີນສຳລັບການຟື້ນຟູ ແຕ່ສິ່ງທີ່ບົ່ງບອກເຖິງສະຖານະພາບກຽດຕິຍົດ ແລະ ສະຕິປັນຍາອັນແຫຼມຄົມ ແມ່ນເຫດການທີ່ຫີນດຳຖືກວາງໄວ້ຢູ່ແຈຂອງ ກະບະຫ໌ ເຊິ່ງໄດ້ເກີດຄວາມຂັດແຍ້ງລະຫວ່າງບັນດາເຜົ່າ

---

1. ອີມ່ານຮາກີມ ໄດ້ລາຍງານໃນ ໜັງສື ອັລມຸຊຕັດຣອດ, ຫນ້າ 4/245, ເຂົາເວົ້າວ່າມັນເປັນ ຫະດີຊ ສໍຮີຫ໌ ຕາມເງື່ອນໄຂຂອງ ອີມ່າມມຸສລິມ ແລະ ທ່ານຊະຮາບີ ເຫັນດີນຳ, ສໍຮີຫ໌ ອັຊຊີເຣາະຫ໌ ອັລນະບະວີຍະຫ໌ ໜ້າ 43

2.ຊີເຣາະຫ໌ອັລນະບະວີຍະຫ໌ ຂອງ ອິບນິຮິຊາມ ຫນ້າ 1/201 ອັກຣອມດີ ຍາ ອຸມາຣີ ແລະສົງຄາມ الفجار ແມ່ນສົງຄາມທີ່ເກີດຂຶ້ນລະຫວ່າງ ພວກກຸເຣຊ ໄດ້ ແລະເຜົ່າກີນານະຫ໌ ຄົນທີ່ຢູ່ກັບພວກກຸເຣຊ ກັບ ກອຍ ອັຍລານ ເອີ້ນວ່າສົງຄາມຂອງ الفجار ເນື່ອງຈາກວ່າມັນເກີດຂຶ້ນ ໃນເດືອນທີ່ການສູ້ຮົບຖືກຫ້າມ

ແຕ່ລະຊົນເຜົ່າຕ້ອງການຈະນຳຫີນດຳໄປປະທັບຢູ່ທີ່ ໄບຕຸລເລາະຫ໌ ການໂຕ້ຖຽງໄດ້ຈົບລົງດ້ວຍ ໃຫ້ຜູ້ໃດກໍ່ຕາມທີ່ຍ່າງເຂົ້າມາທາງປະຕູບະນີໄຊບະຫ໌ເປັນຄົນທຳອິດຈະໄດ້ເປັນຜູ້ຕັດສິນ ປະກົດວ່າ ເປັນທ່ານນະບີມຸຮຳຫມັດ ພວກເຂົາເຈົ້າທັງຫມົດສະແດງຄວາມຍິນດີ ພ້ອມກັບເວົ້າ ຄົນສັດຊື່ໄດ້ມາຫາພວກທ່ານແລ້ວ ເມື່ອເວລາທີ່ທ່ານນະບີ ໄດ້ຮູ້ເຖິງບັນຫາ ສະນັ້ນ ລາວຈຶ່ງໃຊ້ໃຫ້ໄປເອົາຜ້າຜືນໜຶ່ງມາວາງເທິງພື້ນ ແລ້ວທ່ານໄດ້ຍົກຫີນດຳດ້ວຍມືຂອງທ່ານ ແລະ ວາງໄວ້ເທິງກາງຂອງຜ້າຜືນນັ້ນ ແລະ ໃຫ້ທຸກເຜົ່າສົ່ງຕົວແທນມາຍົກຜ້າຜືນນັ້ນ ຫຼັງຈາກນັ້ນ ທ່ານໄດ້ຍົກຫີນດຳ ແລະ ວາງໄວ້ທີ່ ໄບຕຸລເລາະຫ໌ ການຕັດສິນໃຈເປັນທີ່ພໍໃຈຂອງທຸກຝ່າຍ[1] ເນື່ອງຈາກການມີມາລະຍາດທີ່ດີ ແລະ ການແກ້ໄຂບັນຫາທີ່ສະຫຼາດ ດັ່ງນັ້ນຈຶ່ງເຮັດໃຫ້ທ່ານກາຍເປັນຄົນທີ່ມີກຽດໃນສັງຄົມ ໃຜກໍ່ໃຫ້ການຍົກຍ່ອງເຄົາລົບນັບຖື

### 4.1 ການແຕ່ງງານກັບທ່ານນາງຄໍດີຈະຫ໌ ຣໍດີຍັລລໍຮຸ ອັນຮາ

ໃນສັງຄົມອາຣັບມີແມ່ຍິງຫຼາຍຄົນທີ່ມີຄວາມຮູ້ ຄວາມສາມາດ ສະຫຼາດ ບາງຄົນມີຄວາມສາມາດໃນການຄ້າ ມີຄວາມຮັ່ງມີຫຼາຍ ແລະ ທ່ານຍິງຄໍດີຈະຫ໌ ລູກສາວຂອງ ຄໍວັຍລິດ ເປັນແມ່ຍິງທີ່ມີຄຸນນະສົມບັດຄົບຖ້ວນ ນາງໄດ້ຈ້າງຜູ້ຊາຍໄປຄ້າຂາຍໃຫ້ນາງຢູ່ໃນຕະຫຼາດຂອງແຫຼມອາຣັບ ເມື່ອນາງໄດ້ຍິນຂ່າວແຫ່ງຄວາມດີ ຄວາມຊື່ສັດຂອງ ມຸຮຳຫມັດ ສະນັ້ນ ນາງຈຶ່ງໄດ້ສະເໜີໃຫ້ໄປຄ້າຂາຍກັບນາງທີ່ປະເທດຂອງຊາມ (ເຍເມນ) ໂດຍການໃຫ້ຄ່າຕອບແທນຫຼາຍກວ່າທີ່ເຄີຍມີໃຫ້ກັບພໍ່ຄ້າອື່ນໆ ທ່ານນະບີຈຶ່ງຍອມຮັບຂໍ້ສະເໜີນັ້ນ ແລະ ເດີນທາງໄປປະເທດຊາມ ກັບໄມຊາເຣາະຫ໌ ຄົນຮັບໃຊ້ຂອງ ທ່ານນາງຄໍດີຈະຫ໌ ການຄ້ານີ້ໄດ້ຮັບຜົນສຳເລັດຫຼາຍ ແລະ ມີກຳໄລຫຼາຍ ໄມຊາເຣາະຫ໌ ໄດ້ນຳເອົາເລື່ອງລາວທີ່ໄດ້ພົບເຫັນ ຄວາມຊື່ສັດ ຄວາມຮັບຜິດຊອບໃນດ້ານການຄ້າ ມາບອກເລົ່າໃຫ້ທ່ານນາງຄໍດີຈະຫ໌ຟັງ ຈຶ່ງສ້າງຄວາມພໍໃຈອັນໃຫຍ່ຫຼວງ ແລະມີຄວາມປາຖະຫນາທີ່ຈະຢູ່ໃກ້ຊິດກັບທ່ານ ເພາະນາງປະທັບໃຈກັບອຸປະນິໄສໃຈຄໍ ຄວາມດີຂອງທ່ານ ທ່ານນາງຄໍດີຈະຫ໌ ຈຶ່ງຕ້ອງການໃຫ້ ທ່ານມຸຮຳຫມັດ ມາເປັນຜູ້ທີ່ຄ່ອຍດູແລຊ່ວຍເຫຼືອ ເພື່ອໃຫ້ຊີວິດຄູ່ດຳເນີນໄປດ້ວຍດີ ແລະ ຄວາມຜາສຸກ

---

3. ທ່ານສາດສະດາ: ຂ້າພະເຈົ້າໄດ້ເຂົ້າຮ່ວມໃນການໃຫ້ສັດຕະຍາບັນຂອງ ອັລມຸຕອຍຍິບີນ ກັບລຸງຂອງຂ້ອຍ ຂະນະນັ້ນ ຂ້ອຍມີອາຍຸສາມສິບຫ້າ ເຖິງແມ່ນວ່າຂ້ອຍມີອູດສີແດງຂ້ອຍຈະບໍ່ທຳລາຍຄຳສັນຍານັ້ນ ອິມາມອະຫມັດ ໄດ້ລາຍງານໄວ້ໃນເລັ່ມ 1, ຫນ້າ 190-193 ແລະ ທ່ານອິມາມຮາກິມ ໄດ້ລາຍງານໄວ້ໃນໜັງສື ອັລມຸຊຕັດຣ໊ອກ ເລັ່ມ 2, ຫນ້າ 219-220. ທ່ານກ່າວວ່າ ສໍຮີຫ໌ອັລອິຊນາດ ເຖິງແມ່ນວ່າ ບຸກຄໍຣີ ແລະ ມຸສລິມ ບໍ່ໄດ້ລາຍງານມັນໄວ້ກໍ່ຕາມ ອັລບານີ ໄດ້ຕັຊຮີຫ໌ໄວ້ໃນໜັງສື ຊິລຊີລະຫ໌ ອອັຊສໍຮີຫ໌ ເລັ່ມທີ່ 4. , ຫນ້າ 524, ອີກລາຍງານໜຶ່ງ ທ່ານນະບີໄດ້ກ່າວວ່າ ولودعيت به في الإسلام لأجبت ຈາກໜັງສື ອັລບິດາຍະຫ໌ ຂອງ ອິບນູກາສີຣ ເລັ່ມທີ 2, ຫນ້າ 92

1. ເບິ່ງໃນຫນັງສືຊໍຮີຫ໌ອັລບຸກຄໍຣີ ກິຕາບ ອັຊຊໍລາຫ໌ ບາບ ກະຣໍຮີຍະຫ໌ ຕະອັຣຣີ ຟີສໍລາຫ໌ ແລະ ກິຕາບ ອັລຮັດບາບ ຟັດລຸມັກກະຫ໌ ວະບຸນຍານີຮາ ມັສນັດ ອິມ່າມອະຫມັດ ເລັ່ມທີ່ 3 ໜ້າທີ່ 425 ແລະມຸສຕັດຣ໊ອກ ອັລຮາກິມ ເລັ່ມ 3 ໜ້າ 458 ເບິ່ງ ຕັດຣີນ ທະດິຊ ຟີອັລອໍາຣີ ອັຊຊິເຣາະຫ໌ອັນນະບາວີຍະຫ໌ ອັຊຊໍຣີທະຫ໌ ເລັ່ມ1 ໜ້າ116 ເບິ່ງ ນະຊັບ ກຸເຣຊ ຂອງ ສຸໄບຣີ ໜ້າ 231ແລະ ອິບນຸໄຮມີ ຈະວາມຽະຊີເຣາະຫ໌ 38 39

ກ່ອນໜ້ານັ້ນ, ມີຜູ້ຊາຍຫຼາຍຄົນມາສູ່ຂໍ ແຕ່ນາງປະຕິເສດໄປ ນາງຈຶ່ງຂໍແຕ່ງງານກັບທ່ານນະບີ ﷺ ແລະ ທ່ານໄດ້ຕົກລົງເຫັນດີ ແຕ່ບໍ່ແມ່ນຍ້ອນວ່າຕ້ອງການຊັບສິນ ແລະ ທ່ານນາງຄໍດີຈະຫ໌ມີອາຍຸຫຼາຍກວ່າທ່ານນະບີ ແລະ ທ່ານນະບີກໍ່ພຶງພໍໃຈໃນມາລະຍາດອັນດີງາມ ສະຕິປັນຍາສະຫຼາດລັກແຫຼມ ສ່ວນທ່ານນາງຄໍດີຈະຫ໌ ນາງນ່າຈະເຂົ້າໃຈຕຳແໜ່ງທີ່ແທ້ຈິງຂອງນາງ ທັ້ງນີ້ຖືວ່າເປັນການເລືອກຈາກ ອັລລໍຫ໌ ເພື່ອຈະເປັນກຳລັງທີ່ສຳຄັນໃນການຊ່ວຍເຫຼືອ ແລະ ແບ່ງເບົາພາລະໃນການເຜີຍແຜ່ສາສະໜາຂອງສາດສະດາ ຊຶ່ງໃນເວລານັ້ນສາດສະດາມີອາຍຸພຽງແຕ່ 25 ປີ ທ່ານນາງຄໍດີຈະຫ໌ ມີອາຍຸໄດ້ 40 ປີ ແລະ ເປັນພັນລະຍາດຽວທີ່ອາໄສຢູ່ກັບທ່ານຈົນກະທັ່ງເສຍຊີວິດ ນາງມີລູກກັບທ່ານນະບີ ເປັນຜູ້ຍິງ 4 ຄົນ ແລະ ຜູ້ຊາຍ 2 ຄົນ[1] ທ່ານນາງຄໍດີຈະຫ໌ ມີບົດບາດສຳຄັນໃນການເຜີຍແຜ່ອິດສະລາມ ແລະ ມີຕຳແໜ່ງທີ່ຍິ່ງໃຫຍ່ຢູ່ໃນທີ່ປະທັບຂອງ ອັລລໍຫ໌ຈາກການທີ່ໄດ້ຢືນຢູ່ຄຽງຂ້າງທ່ານສາດສະດາ ຕັ້ງແຕ່ເລີ່ມຕົ້ນການແຕ່ງຕັ້ງເປັນນະບີ ການປອບໂຍນ ແລະ ໃຫ້ກຳລັງໃຈເມື່ອເກີດຄວາມຢ້ານກົວ ແລະ ຕົກໃຈ ການຊ່ວຍເຫຼືອ ແລະ ສະໜັບສະໜູນທ່ານໃນເວລາທີ່ຄົນອື່ນໄດ້ປະຖິ້ມທ່ານ ຊ່ວຍບັນເທົາຄວາມລຳບາກໃນການເຜີຍແຜ່ ດ້ວຍເຫດນີ້ທ່ານນາງຄໍດີຈະຫ໌ ຈຶ່ງໄດ້ຮັບກຽດ ໄດ້ຮັບການຍົກຍ່ອງຈາກພຣະອົງອັລລໍຫ໌

ມີລາຍງານຈາກອະບູຮູຣອຍເຣາະຫ໌ ຣໍດີຍັລລໍຮຸອັນຮູ ແຈ້ງວ່າ:

عن أبي هريرة رضي الله عنه قال : أتي جَبْرِيْلُ عَلَيْهِ السَّلامِ النَّبِيَّ فَقَالَ : يَارَسُوْلَ اللهِ هَذِهِ خَدِيْجَةُ قَدْ أَتَتْ مَعَهَا إِنَاءٌ فِيْهِ إِدَامٌ أَوْطَعَامٌ أَوْشَرَابٌ ، فَإِذَا هِيَ أَتَتْكَ فَاقْرَأْ عَلَيْهَا السَّلاَمَ مِنْ رَبِّهَا وَمِنِّيَ وَبَشِّرْهَا بِبَيتٍ فِي الْجَنَّةِ مِنْ قَصَبٍ لاَ صَخَبَ فِيْهِ ، وَلاَنَصَبَ رواه البخاري

**“ຈິບຣີລ ອະໄລຮີສສະລາມ ໄດ້ມາຫາສາດສະດາ ແລະ ກ່າວວ່າ: ທ່ານຣໍສູລລຸລລໍຫ໌ ນາງຄໍດີຈະຫ໌ ກຳລັງນຳເອົາອາຫານ ຫຼື ແກງ ຫຼື ນ້ຳດື່ມ ມາມອບໃຫ້ແກ່ທ່ານ ສະນັ້ນເມື່ອນາງມາຮອດ ທ່ານຈົ່ງກ່າວສະລາມຈາກພຣະເຈົ້າ ແລະ ຈາກຂ້ອຍ ແລະ ຈົ່ງບອກຂ່າວດີແກ່ນາງວ່າ ນາງຈະໄດ້ຮັບເຮືອນຢູ່ໃນສະຫວັນ ທີ່ເຮັດຈາກໄຂ່ມຸກ ໂດຍຈະບໍ່ມີສຽງດັງລົບກວນ ແລະ ຄວາມເຫນື່ອຍລ້າໃນເຮືອນນັ້ນແຕ່ຢ່າງໃດ”**

ທ່ານນາງຄໍດີຈະຫ໌ໄດ້ຮັບຄວາມຮັກ ແລະ ໄດ້ຮັບການຊົມເຊີຍຈາກທ່ານນະບີ ຕະຫຼອດມາ ແມ້ວ່ານາງຈະເສຍຊີວິດໄປແລ້ວກໍ່ຕາມ

1. ມັສນັດ ອິມ່າມອະຫມັດ ເລັ່ມທີ່ 3 ໜ້າທີ່ 425 ແລະ ມຸສຕັດຣ໊ອກ ອັລຮາກິມ ເລັ່ມ 3 ໜ໊າ 458 ດູ ຕັດຣີບ ຕັດຣີບ ທະດິຊ ຟີອັລອຳຣີ ອັຊຊີເຣາະຫ໌ອັນນະບາວີຍະຫ໌ ອັຊຊໍຣີຫະຫ໌ ເລັ່ມ1 ໜ້າ116 ນະຊັບ ກຸເຣຊ ຂອງ ສຸໄບຣີ ໜ້າ 231ແລະ ອິບນຸໄຮມີ ຈະວາມຽະ ຊີເຣາະຫ໌ 38 39

## 5. ສະພາບຂອງຊາວອາຣັບກ່ອນການແຕ່ງຕັ້ງເປັນສາດສະດາ

### 5.1 ສາສະໜາຂອງຊາວອາຣັບ

ກ່ອນ ທ່ານນະບີມູຮຳມັດ ﷺ ຈະໄດ້ຖືກແຕ່ງຕັ້ງເປັນສາດສະດາ ຊາວອາຣັບສ່ວນໃຫຍ່ບູຊາຈະເວັດ (ຮູບປັ້ນ) ເຊື່ອວ່າມີພະເຈົ້າຜູ້ສ້າງໂລກ ແລະ ເປັນຜູ້ບໍລິການຈັດການ

﴿وَلَئِن سَأَلْتَهُم مَّنْ خَلَقَ ٱلسَّمَٰوَٰتِ وَٱلْأَرْضَ وَسَخَّرَ ٱلشَّمْسَ وَٱلْقَمَرَ لَيَقُولُنَّ ٱللَّهُ ۖ فَأَنَّىٰ يُؤْفَكُونَ﴾

**"ແລະຖ້າທ່ານຖາມພວກເຂົາວ່າ ໃຜຄືຜູ້ທີ່ສ້າງບັນດາຊັ້ນຟ້າ ແລະ ແຜ່ນດິນ ແລະ ເຮັດໃຫ້ດວງອາທິດ ແລະ ດວງຈັນ ເປັນປະໂຫຍດ ແນ່ນອນພວກເຂົາຈະເວົ້າວ່າ ອັລລໍຫ໌ ແລ້ວເປັນຫຍັງພວກເຂົາຈຶ່ງຫັນເຫໄປທາງອື່ນ?"** (ອັລ-ອັນກະບູດ : 61)

ແຕ່ການເຄົາລົບພວກຈະເວັດຂອງເຂົາເຈົ້າ ເຮັດໃຫ້ເກີດການປະຕິເສດທີ່ຈະເຄົາລົບ ອັລລໍຫ໌ ເຂົາເຈົ້າເອົາຮູບປັ້ນເປັນຫຸ້ນສ່ວນໃນການບູຊາ ອິບາດະຫ໌ ສະນັ້ນໃນສັງຄົມອາຣັບ ແຕ່ລະເຜົ່າລ້ວນແຕ່ມີຮູບປັ້ນໄວ້ເຄົາລົບນັບກາບໄຫວ້ເປັນສະເພາະຂອງເຜົ່າໃຜມັນ ແລະ ພວກເຂົາປະຕິເສດການຟື້ນຄືນຊີບ ຫຼັງຈາກຕາຍໄປແລ້ວ ດັ່ງທີ່ອັລລໍຫ໌ໄດ້ ດຳລັດໄວ້ໃນອັລກຸຣອານ

﴿إِنْ هِىَ إِلَّا حَيَاتُنَا ٱلدُّنْيَا نَمُوتُ وَنَحْيَا وَمَا نَحْنُ بِمَبْعُوثِينَ﴾

**"ບໍ່ມີຊີວິດອີກຕໍ່ໄປ ຍົກເວັ້ນການມີຢູ່ຂອງພວກເຮົາໃນໂລກນີ້ເທົ່ານັ້ນ ພວກເຮົາຈະຕາຍ ແລະ (ພວກເຮົາບາງຄົນ) ຈະມີຊີວິດຢູ່ ແລະ ພວກເຮົາຈະບໍ່ຖືກປຸກຂຶ້ນມາອີກ"** (ສູເຣາະຫ໌ມຸມີນູນ ອາຍະຫ໌ 37)

ຄວາມເຊື່ອເຫຼົ່ານີ້ໄດ້ຕົກທອດຕໍ່ກັນມາຫຼາຍຍຸກຫຼາຍສະໄໝ ໂດຍພວກເຂົາເຈົ້າບໍ່ໄດ້ໃຊ້ສະຕິປັນຍາເພື່ອຄິດເຖິງຄວາມຖືກຕ້ອງຂອງເລື່ອງນັ້ນ ພຽງແຕ່ເວົ້າວ່າ :

﴿بَلْ قَالُوٓا۟ إِنَّا وَجَدْنَآ ءَابَآءَنَا عَلَىٰٓ أُمَّةٍ وَإِنَّا عَلَىٰٓ ءَاثَٰرِهِم مُّهْتَدُونَ﴾

**"ບໍ່ເລີຍ ພວກເຂົາເວົ້າວ່າ: ແທ້ຈິງແລ້ວ ພວກເຮົາເຫັນບັນພະບຸລຸດຂອງພວກເຮົາໃນທາງນີ້ ດັ່ງນັ້ນພວກເຮົາພຽງແຕ່ປະຕິບັດຕາມວິທີການຂອງພວກເຂົາ"** (ສູເຣາະຫ໌ຊຸກຣຸຟ ອາຍະຫ໌ 22)

ນອກຈາກພວກອາຣັບທີ່ເຄົາລົບແລ້ວ ຍັງມີກຸ່ມຊົນຕ່າງໆ ຄືພວກຍະຮູດີ (ຍິວ) ເມືອງຍັສຣິບ ແລະ ເມືອງຄອຍບັຣສ່ວນທາງເມືອງນັຈຈະຣອນ ມີພວກນະຊໍຣໍ(ຄຣິສຕຽນ) ແຕ່ມີພຽງຈຳນວນເລັກນ້ອຍທີ່ເຂົ້າໃຈເຖິງຄວາມບໍ່ຖືກຕ້ອງໃນການຕັ້ງພາຄີຂອງຊາວອາຣັບ ຊົນກຸ່ມນ້ອຍເຫຼົ່ານັ້ນຈຶ່ງເຄົາລົບພຣະເຈົ້າຕາມສາສະໜາຂອງທ່ານອິບຣໍຮີມທີ່ເອີ້ນວ່າ **المتحنثون** (ອັລ-ມຸຕະຮັນນິສູນ)

### 5.2 ສະພາບທາງການເມືອງ ແລະ ການປົກຄອງ

ກ່ອນການແຕ່ງຕັ້ງໃຫ້ເປັນສາດສະດາ ມີຫຼາຍປະເທດເກີດຂຶ້ນໃນຄາບສະມຸດອາຣັບ ເຊັ່ນ ເຍເມນ ຊາມ ແລະ ອີຣັກ ແຕ່ປະເທດຕ່າງໆເຫຼົ່ານີ້ໄດ້ລົ່ມສະລາຍໄປກ່ອນທີ່ທ່ານນະບີ ﷺ ຈະໄດ້ຮັບການແຕ່ງຕັ້ງໃຫ້ເປັນສາດສະດາ ຈຶ່ງເຮັດໃຫ້ຄາບສະມຸດອາຣັບມີລະບົບການປົກຄອງທີ່ບໍ່ເປັນອັນໜຶ່ງອັນດຽວກັນ ການປົກຄອງຈຶ່ງເປັນຮູບແບບຂອງແຕ່ລະເຜົ່າແຕ່ລະຕະກູນ ປົກຄອງສະມາຊິກຕາມຂະນົບທຳນຽມ ແລະ ການກົດລະບຽບຂອງແຕ່ລະເຜົ່າ ໂດຍທີ່ພວກເຂົາພ້ອມທີ່ຈະຕໍ່ສູ້ ແລະ ປົກປ້ອງກຽດຕິຍົດ ແລະ ສັກສີຂອງເຜົ່າຕົນ ຊຶ່ງແຕ່ລະເຜົ່າຕ້ອງຮັບຜິດຊອບໃນດ້ານການປົກຄອງສະມາຊິກ ແລະ ຢືນຄຽງຂ້າງເຜົ່າຂອງພວກເຂົາເຈົ້າບໍ່ວ່າຈະຖືກຫຼືຜິດກໍ່ຕາມ ຈາກຜົນລັບດັ່ງກ່າວ ຈຶ່ງໄດ້ເກີດສົງຄາມລະຫວ່າງເຜົ່າພັນຕ່າງໆຢ່າງຕໍ່ເນື່ອງ ບາງສົງຄາມກໍ່ໃຊ້ເວລາສູ້ຮົບກັນເປັນເວລາຫຼາຍປີ ອັນເນື່ອງມາຈາກການຂັດແຍ້ງຂອງສະມາຊິກ ເຊັ່ນ ໃນສົງຄາມ (البسوس , داحس ، غبراء) ອັລບັສວັສ ດາຮິສ ກອບຣໍ ຈາກເຫດການທີ່ເກີດຂຶ້ນຈຶ່ງຖືວ່າເປັນການປູທາງເພື່ອຮັບເອົາສາສະນາອິສລາມ ເພາະພວກເຂົາໄດ້ສູນເສຍຍາດຕິພີ່ນ້ອງໄປເປັນຈຳນວນຫຼາຍ ແລະ ເຮັດໃຫ້ສະພາບການຕ່າງໆ ຊຸດໂສມລົງ ຈຶ່ງມີການຖາມຫາທາງອອກທີ່ຊ່ວຍໃຫ້ຫຼຸດພົ້ນຈາກສະພາບດັ່ງກ່າວ ແລະແລ້ວສາສະນາອິສລາມຈຶ່ງເປັນທາງອອກໃຫ້ກັບພວກເຂົາ

### 5.3 ສະພາບສັງຄົມ

ກ່ອນການແຕ່ງຕັ້ງໃຫ້ເປັນສາດສະດາ ສະພາບສັງຄົມອາຣັບມີຈະລິຍະທຳ ແລະ ປະເພນີທີ່ດີງາມ ແລະ ບໍ່ດີປະປົນກັນໄປ ຄວາມປະພຶດ ແລະ ຮີດຄອງປະເພນີທີ່ບໍ່ດີ ແມ່ນ ມີການດື່ມເຫຼົ້າ, ການພະນັນ ການຝັງສົບເດັກນ້ອຍທີ່ເປັນຜູ້ຍິງເກີດໃຫມ່ໃນບາງຕະກູນ ອິດສະລາມ ໄດ້ຫ້າມສິ່ງຕ່າງໆຢ່າງແທ້ຈິງ ແລະ ໃຫ້ປະຖິ້ມທຸກສິ່ງທີ່ບໍ່ດີໄປໃຫ້ຫມົດ ແລະ ນຳສິ່ງທີ່ດີກວ່າໃຫ້ເຂົາເຈົ້າ ຫນຶ່ງໃນເຫດວ່າເປັນຫຍັງຊາວອາຫລັບຈຶ່ງຕ້ອງໄປດື່ມ ເຫຼົ້າ ກໍ່ເພື່ອກຳຈັດຄວາມຢ້ານກົວ ຄວາມທຸກທໍລະມານ ການສູນເສຍຍາດຕິພີ່ນ້ອງທີ່ໄດ້ເສຍຊີວິດໃນສົງຄາມລະຫວ່າງເຜົ່າພັນ ແລະ ຊີວິດທີ່ຫຍຸ້ງຍາກ ເມື່ອສາສະໜາອິດສະລາມ ໄດ້ແຜ່ຂະຫຍາຍ ເຫຼົ້າ ເປັນສິ່ງຖືກຫ້າມ ເນື່ອງຈາກວ່າມັນມີຜົນກະທົບທາງລົບຕໍ່ຮ່າງກາຍ ແລະ ສະຕິປັນຍາ ແລະ ອິດສະລາມ ມີທາງອອກໃນການແກ້ໄຂບັນຫາຂອງຄວາມກັງວົນ ດ້ວຍສັດທາຕໍ່ອັລລໍຫ໌ ນຳມາເຊິ່ງຄວາມຫມັ້ນໃຈ ແລະ ຄວາມສະຫງົບກັບຝູງຊົນ

ອິດສະລາມ ຫ້າມການຝັງສົບຂອງເດັກຍິງທີ່ເກີດມາມີຊີວິດຢູ່ທັ້ງເປັນ ເພາະອາຫລັບຢ້ານຄວາມອັບອາຍຂອງຜູ້ຍິງເມື່ອຕົກເປັນຊະເລີຍ ເປັນທີ່ຮູ້ກັນດີວ່າເມື່ອຊາວອາຣັບຖ້າຖືກດູຖູກຫຍາມກຽດ ເຂົາເຈົ້າຈະບໍ່ຍອມ ຫຼືຝັງສົບທັ້ງເປັນເດັກຍິງ ເພາະຢ້ານຄວາມທຸກຍາກ ດ້ວຍເຫດນີ້ ຊາວອາຣັບຫຼາຍຄົນໃນສະ

ໄໝນັ້ນຈິ່ງບໍ່ມັກການມີລູກສາວ ແລະ ມີຄວາມສຸກຫຼາຍກວ່າເມື່ອໄດ້ລູກຊາຍ ອິດສະລາມ ໄດ້ຫ້າມການກະທຳ ດັ່ງກ່າວ ແລະ ຫ້າມຢ່າເບິ່ງຜູ້ຍິງດ້ວຍຄວາມດູຖູກ ຫຍຽດຫຍາມ ໃຫ້ກຽດແກ່ແມ່ຍິງຕາມສະຖານທີ່ທີ່ເໝາະສົມຂອງນາງທີ່ຄວນຈະໄດ້ຮັບ

ຈັນຍາບັນອັນດີງາມຂອງຊາວອາຣັບທີ່ເໜືອກວ່າຊົນຊາດອື່ນໆ ແມ່ນຄວາມກ້າຫານ ຄວາມໃຈບຸນ ການຮັກສາຄຳສັນຍາ ອັດສະລິຍະ ແລະ ມີຄວາມເປັນຢູ່ທີ່ງ່າຍດາຍ ອິດສະລາມ ເນັ້ນໜັກເຖິງການຍຶດໝັ້ນໃນຈັນຍາບັນທີ່ດີງາມ ແລະ ໃຊ້ໃຫ້ເຮັດຕາມຈັນຍາບັນທີ່ດີເຫຼົ່ານີ້ ຊາວອາຣັບຈຶ່ງສົມຄວນໄດ້ຮັບກຽດສັກສີຂອງການອຸ້ມຊູອິດສະລາມ ແລະ ແບກຮັບພາລະຂອງການເຜີຍແຜ່ຕັ້ງແຕ່ຕົ້ນ

**6. ການເລີ່ມປະທານອັລກຸຣອານ**

ກ່ອນທີ່ ອັລກຸຣອານຈະຖືກປະທານລົງມາໃຫ້ສາດສະດາ ມຸຮຳມັດ ﷺ ຕ້ອງໄດ້ຮັບການກະກຽມສຳລັບທ່ານ ການກະກຽມນັ້ນມາໃນຮູບແບບຂອງຄວາມຝັນທີ່ດີ ໃນຕອນເຊົ້າຄວາມຝັນນັ້ນຈະເປັນຈິງຢ່າງຈະແຈ້ງ ເໝືອນດັ່ງແສງຮຸ່ງອະລຸນຍາມເຊົ້າ ຫຼັງຈາກນັ້ນ ທ່ານນະບີ ﷺ ໄດ້ດຳລົງຊີວິດຢູ່ໃນຄວາມສັນໂດດ ຄົນດຽວ ແລະ ພົບເຫັນວ່າຖ້ຳ ຮີລໍ (Hira) ໃກ້ກັບ ເມືອງມັກກະຫ໌ ມັນເປັນສະຖານທີ່ທີ່ເໝາະສົມທີ່ຈະຢູ່ຄົນດຽວ ສະນັ້ນ ທ່ານຈຶ່ງຢູ່ທີ່ນັ້ນເປັນເວລາຫຼາຍວັນຄືນໄຕ່ຕອງເຖິງສິ່ງຕ່າງໆ ເມື່ອອາຫານສະບຽງໝົດ ລາວກໍກັບມາຫາຄາດີຈະຫ໌ ເມຍຂອງທ່ານ ແລະ ເອົາສະບຽງກັບຄືນໄປສູ່ຖ້ຳຮີລໍອີກ ໃນຂະນະທີ່ພັກຜ່ອນຢູ່ໃນຖ້ຳນັ້ນ ອັລລໍຫ໌ ﷻໄດ້ສົ່ງຈິບຣິລ ອະໄລຮີສສະລາມ ໄປຫາທ່ານ ແລ້ວກ່າວແກ່ທ່ານນະບີວ່າ **ຈົ່ງອ່ານ** ທ່ານຈຶ່ງຕອບວ່າ, **ຂ້ອຍອ່ານບໍ່ໄດ້** ຍ້ອນວ່າທ່ານບໍ່ສາມາດອ່ານ ແລະ ຂຽນໄດ້ ຫຼັງຈາກນັ້ນ, ຈິບຣິລໄດ້ກອດລາວແໜ້ນ ແລ້ວປ່ອຍອອກ ແລະ ເວົ້າວ່າ **ຈົ່ງອ່ານ** ທ່ານຈຶ່ງຕອບວ່າ, ຂ້າພະເຈົ້າອ່ານບໍ່ໄດ້ ຫຼັງຈາກນັ້ນ, ຈິບຣິລໄດ້ໂອບກອດທ່ານອີກເທື່ອໜຶ່ງ ໜັກກວ່າເກົ່າ, ແລ້ວປ່ອຍພ້ອມກັບເວົ້າວ່າ:

﴿ اقْرَأْ بِاسْمِ رَبِّكَ الَّذِي خَلَقَ، خَلَقَ الْإِنْسَانَ مِنْ عَلَقٍ، اقْرَأْ وَرَبُّكَ الْأَكْرَمُ، الَّذِي عَلَّمَ بِالْقَلَمِ، عَلَّمَ الْإِنْسَانَ مَا لَمْ يَعْلَمْ ﴾

"سورة العلق: الآيات 1 – 5"

"ຈົ່ງອ່ານດ້ວຍພຣະນາມແຫ່ງ ພຣະຜູ້ອະພິບານຂອງເຈົ້າ ຜູ້ຊົງສ້າງ"

"ຜູ້ຊົງສ້າງມະນຸດຈາກກ້ອນເລືອດ"

"ຈົ່ງອ່ານເຖີດ ແລະ ພຣະເຈົ້າຂອງເຈົ້ານັ້ນຜູ້ຊົງໃຈບຸນຫຼາຍ"

"ຜູ້ຊົງສອນການໃຊ້ປາກກາ"

"ຜູ້ຊົງສອນມະນຸດໃນສິ່ງທີ່ເຂົາບໍ່ຮູ້"

(ສູເຣາະຫ໌ອັລອະລັກ ອາຍະຫ໌ທີ່ 1- 5)

ເມື່ອຈິບຣີລ ຈາກໄປ ທ່ານສາດສະດາໄດ້ກັບໄປຫາ ທ່ານນາງຄໍດີຈະຫ໌ ດ້ວຍຄວາມຢ້ານກົວ ຮ່າງກາຍໄດ້ສັ່ນສະເທືອນຈາກສິ່ງທີ່ເກີດຂຶ້ນ, ທ່ານສາດສະດາໄດ້ກ່າວວ່າ:

**"ເອົາຜ້າຫົ່ມໃຫ້ຂ້ອຍແນ່ ຫົ່ມຜ້າໃຫ້ຂ້ອຍ"**

ຫຼັງຈາກນັ້ນທ່ານນາງຄໍດີຈະຫ໌ ເອົາຜ້າຫົ່ມ ໃຫ້ທ່ານ ຈົນທ່ານສະຫງົບລົງ ເມື່ອເວລາທີ່ຫຼຸດຜ່ອນຄວາມຢ້ານກົວ ແລ້ວ ທ່ານຈຶ່ງໄດ້ເລົ່າເຫດການທີ່ເກີດຂຶ້ນ ພ້ອມກັບເວົ້າວ່າ:

**"ຂ້ອຍຮູ້ສຶກຢ້ານຕົນເອງ"**

ແຕ່ເມຍທີ່ແສນດີ ໄດ້ສ້າງຄວາມໝັ້ນໃຈໃຫ້ວ່າ: "ເຈົ້າບໍ່ຕ້ອງຢ້ານ ຈົ່ງຍິນດີໄດ້ແລ້ວ ຂ້າພະເຈົ້າຂໍສາບານໂດຍ ອັລລໍຫ໌ﷻ ແນ່ນອນວ່າພຣະອົງຈະບໍ່ເຮັດໃຫ້ເຈົ້າອັບອາຍ ເພາະວ່າເຈົ້າເປັນຄົນດີ ມີຄວາມສຳພັນທີ່ດີກັບຍາດຕິພີ່ນ້ອງ ເປັນຄົນເວົ້າຄວາມຈິງ ຊ່ວຍເຫຼືອສົງເຄາະຄົນທຸກຍາກ ປະຕິບັດດີຕໍ່ແຂກທີ່ມາຢ້ຽມ ແລະ ຊ່ວຍເຫຼືອຜູ້ທີ່ປະສົບທຸກໄພ"

ເພື່ອເພີ່ມຄວາມຫມັ້ນໃຈໃຫ້ກັບທ່ານນະບີ ﷺ ແລະ ເຮັດໃຫ້ການເປັນນະບີຜູ້ເຮັດຫນ້າທີ່ເຜີຍແຜ່ສານຈາກພຣະເຈົ້າຊັດເຈນຫຼາຍຂຶ້ນ ທ່ານນາງຄໍດີຈະຫ໌ ຈຶ່ງພາທ່ານໄປຫາລູກຊາຍຂອງລຸງຂອງລາວ ເຊິ່ງເປັນຊາວອາຣັບທີ່ໄດ້ຄົ້ນຫາຄວາມຈິງ ນັບຖືສາດສະໜາຄຣິສຕຽນ ແລະ ຄວາມຮູ້ກ່ຽວກັບພຣະຄຳພີ ອິນຈີລ (ໄບເບີລ) ເມື່ອທ່ານສາດສະດາ ໄດ້ເລົ່າເລື່ອງທີ່ເກີດຂຶ້ນໃຫ້ຟັງ ສະນັ້ນ ລາວຈຶ່ງເວົ້າຂຶ້ນມາວ່າ:

**"ນີ້ແມ່ນຈິບຣີລ (Jibreel), ຜູ້ທີ່ໄດ້ລົງມາຫາສາດສະດາ ມູຊາ (Musa)"**

ແລະ ລາວປາຖະໜາທີ່ຈະດຳລົງຊີວິດ ຈົນກ່ວາມື້ທີ່ອິດສະລາມປະກົດຕົວຢ່າງຊັດເຈນ ເພື່ອປະຕິບັດຕາມສາດສະດາມຸຮຳຫມັດ ແລະ ຈະຊ່ວຍປົກປ້ອງທ່ານຈາກການທຳລາຍໂຈມຕີຂອງສັດຕູ ແຕ່ລາວໄດ້ເສຍຊີວິດກ່ອນ

ຫລັງຈາກໄດ້ເວົ້າກັບ ວາຣໍເກາະຫ໌ ລາວເຊື່ອໝັ້ນວ່າທ່ານໄດ້ຮັບການແຕ່ງຕັ້ງໃຫ້ເປັນສາດສະດາ ຈະເຫັນໄດ້ວ່າ ເມື່ອ ວະຮີ (ໂອການ) ໄດ້ບໍ່ໄດ້ຖືກປະທານລົງມາ ກໍ່ເຮັດທ່ານສາດສະດາທຸກໃຈຫລາຍ

ແຕ່ການຂາດຫາຍຂອງໂອການບໍ່ໄດ້ດົນປານໃດ ເມື່ອ ຈິບຣີລໄດ້ນຳ ວະຮີ ລົງມາໃຫ້ດ້ວຍ ອາຍະຫ໌ ດັ່ງຕໍ່ໄປນີ້:

يَٰٓأَيُّهَا ٱلْمُدَّثِّرُ ۝١ قُمْ فَأَنذِرْ ۝٢

**(1.)ໂອ້, ຜູ້ທີ່ປົກຄຸມກາຍຢູ່ເອີ່ຍ**

**(2.)ຈົ່ງລຸກຂຶ້ນ ແລ້ວປະກາດ ການຕັກເຕືອນເຖີດ** (ອັລມຸດດັຊຊິຣ 1-2)

ຫຼັງຈາກນັ້ນ, ວະຮີ ຄ່ອຍໆລົງມາ[1] ໃນຂະນະທີ່ທ່ານສາດສະດາ ໄດ້ຮັບການແຕ່ງຕັ້ງນັ້ນ ທ່ານມີອາຍຸ 40 ປີ ແລະ ທ່ານໄດ້ເລີ່ມຕົ້ນດຳລົງຊີວິດໃນແບບໃຫມ່ ເຊິ່ງຕ້ອງມີຄວາມຮັບຜິດຊອບສູງ ໃນການຮຽກຮ້ອງເຜີຍແຜ່ ສາດສະຫນາທີ່ຍິ່ງໃຫຍ່ຈາກ ອັລລໍຫ໌ ຕໍ່ມະນຸດທັງປວງ ທ່ານໄດ້ໃຊ້ເວລາ 23 ປີ ໃນການເຜີຍແຜ່ສາດສະຫນາຂອງອັລລໍຫ໌ ແບ່ງອອກເປັນສອງໄລຍະ

**ຊ່ວງທຳອິດ, ເປັນການເຜີຍແຜ່ຢູ່ໃນ ນະຄອນມັກກະຫ໌**

**ໄລຍະຊ່ວງທີສອງ ເປັນການເຜີຍແຜ່ຢູ່ໃນ ນະຄອນມາດີນະຫ໌**

## 7. ການເຜີຍແຜ່ທີ່ ນະຄອນມັກກະຫ໌ ຂອງທ່ານສາດສະດາມູຮຳມັດ ﷺ ແລະ ການຖືກທົດສອບ

ການເຜີຍແຜ່ ທີ່ ນະຄອນມັກກະຫ໌ ສາມາດແບ່ງອອກເປັນສອງໄລຍະ ແມ່ນໄລຍະເວລາຂອງການເຜີຍແຜ່ແບບລັບ ໆ ແລະ ຊ່ວງການເຜີຍແພ່ແບບເປີດເຜີຍຕໍ່ສາທາລະນະ

### 7.1 ການເຜີຍແຜ່ສາດສະໜາແບບລັບ ໆ

ທ່ານນະບີມູຮຳມັດ ﷺ ໄດ້ເຜີຍແຜ່ອິດສະລາມແບບລັບໆ ເປັນເວລາສາມປີ [1] ທ່ານໄດ້ເຊື້ອເຊີນສະເພາະຄົນໃກ້ຊິດ ແລະ ຜູ້ທີ່ມີຄວາມສຳພັນອັນດີ ມີຄວາມຫວັງວ່າເຂົາເຈົ້າຈະຕອບສະໜອງການເຊື້ອເຊີນ ທີ່ເຂົາເຈົ້າຮູ້ດີເຖິງຄວາມຊື່ສັດ ແລະ ມາລະຍາດທີ່ດີງາມ ລວມທັງການແກ້ໄຂບັນຫາອັດສະລິຍະເຖິງແມ່ນວ່າ ບາງຄົນຈະບໍ່ຍອມຮັບການເຊື້ອເຊີນໃຫ້ປ່ຽນເປັນມາເຂົ້າຮັບອິດສະລາມ ແຕ່ກໍ່ບໍ່ໄດ້ເປີດເຜີຍການເຊີນຊວນແບບລັບໆຂອງທ່ານສາດສະດາ ໃນການເປີດເຜີຍຄວາມລັບນີ້ ມີແຕ່ຄົນໃກ້ຊິດທັງຊາຍແລະ ຍິງທີ່ໄດ້ເຂົ້າຮັບນັບຖືອິດສະລາມ ສຳລັບທ່ານຍິງຄົນທຳອິດທີ່ປ່ຽນມາເປັນອິດສະລາມ ຄືທ່ານນາງຄໍດີຈະຫ໌ ຜູ້ເປັນພັນລະຍາຂອງທ່ານ ແລະ ຜູ້ຊາຍທຳອິດແມ່ນ ອະບູບັກກັຣ ເພື່ອນສະນິດຂອງທ່ານ ແລະເດັກນ້ອຍຜູ້ທຳອິດແມ່ນ ອະລີ ລູກຊາຍຂອງ ອະບູຕໍລິບ ໂດຍທ່ານນະບີໄດ້ຮັບທ່ານອະລີມາລ້ຽງຢູ່ນຳກັນຕອນນ້ອຍ ສຳລັບຂ້າຮັບໃຊ້ ທາສ ຄົນທຳອິດທີ່ປ່ຽນໃຈເຫລື້ອມໃສໃນສາດສະນາອິດສະລາມຄື ໄຊດ໌ອິບນຸຫາຣິຊະຫ໌ ຂໍ ອັລລໍຫ໌ ຊຸບຮານະຫຸ ວະຕະອາລາ ຕອບແທນລາງວັນທີ່ດີໃຫ້ເຂົາເຈົ້າ ຕໍ່ມາຜູ້ທີ່ປ່ຽນໃຈເຫລື້ອມໃສມາເປັນອິດສະລາມໄດ້ພະຍາຍາມເຊື້ອເຊີນຄົນອື່ນໃຫ້ປ່ຽນມາເປັນອິດສະລາມຄືກັນ ມີຄົນຈຳນວນໜຶ່ງທີ່ປ່ຽນໃຈເຫລື້ອມໃສເປັນອິດສະລາມ ຕາມຄຳເຊີນຂອງທ່ານ ອະບູບັກກັຣ ຈົນມີຜູ້ເຂົ້າຮັບສາດສະໜາອິດສາມໃນຊ່ວງນັ້ນ ສາມສິບຄົນ ພວກເຂົາທັງໝົດຍອມຮັບອິດສະລາມຢ່າງລັບໆ ບາງຄົນເປັນອິດສະລາມ ໂດຍທີ່ບາງຄົນທີ່ເຂົ້າຮັບອິດສະລາມນຳກັນກໍ່ບໍ່ຮູ້

### 7.2 ການເຜີຍແຜ່ແບບເປີດເຜີຍ ແລະ ຖືກທົດສອບ

ສາດສະໜາອິດສະລາມ ເກີດຂຶ້ນສຳລັບມະນຸດຊາດທັງໝົດ ດັ່ງນັ້ນ ຈຳເປັນຕ້ອງເປີດເຜີຍແຜ່ໃຫ້ທຸກຄົນຮັບຮູ້ ໃນປີທີສີ່ຂອງການແຕ່ງຕັ້ງ ພຣະອົງອັລລໍຫ໌ ﷻ ຈຶ່ງໃຊ້ໃຫ້ສາດສະດາ ﷺ ເຜີຍແຜ່ອິດສະລາມຢ່າງເປີດເຜີຍ ພຣະອົງອັລລໍຫ໌ ﷻ ດຳລັດໄວ້ວ່າ:

﴿فَٱصۡدَعۡ بِمَا تُؤۡمَرُ وَأَعۡرِضۡ عَنِ ٱلۡمُشۡرِكِينَ﴾

**"ສະນັ້ນ ຈົ່ງປະກາດຢ່າງເປີດເຜີຍເຖິງສິ່ງທີ່ເຈົ້າໄດ້ຖືກບັນຊາມາ ແລະ ຫັນໜີຈາກຊາວມຸສຣິກີນ"**

---

1. ເບິ່ງຫົວຂໍ້ຂອງການລົງວະຍູ ໃຫ້ທ່ານຣໍສູລ ໃນໜັງສືຊໍຮີຫ໌ຂອງ ບຸກຄໍຣີ ແລະ ໃນໜັງສືຊໍຮີຫ໌ຂອງ ມຸສລິມ ກ່ຽວກັບເລື່ອງອີມ່ານ ບົດ, ການເລີ່ມຕົ້ນການປະທານວະຍູ ໂອການ ຊີເຣາະຫ໌ອິບນຸຮິຊາມ 1/250 ຊີເຣາະຫ໌ ນະບີ ຂອງ ອິບນຸກາຊີຣ 1/385

ພຣະອົງຊົງໃຊ້ໃຫ້ເລີ່ມເຜີຍແຜ່ໃຫ້ພີ່ນ້ອງໃກ້ຊິດຟັງກ່ອນ ຄວາມວ່າ:

﴿وَأَنذِرۡ عَشِيرَتَكَ ٱلۡأَقۡرَبِينَ﴾

**"ຈົ່ງຕັກເຕືອນວົງຕະກູນພີ່ນ້ອງຂອງເຈົ້າທີ່ໃກ້ຊິດ"** (ອັຊຊຸອະຣໍ 26 : 214)

ເມື່ອທ່ານສາດສະດາ ﷺ ໄດ້ຮັບຄຳບັນຊາຈາກອັລລໍຫ໌ ﷻ ທ່ານຈຶ່ງເຕົ້າໂຮມຍາດພີ່ນ້ອງ ແລະ ເອີ້ນເຂົາເຈົ້າໄປສູ່ສາສະໜາຂອງ ອັລລໍຫ໌ﷻ ພ້ອມກັບການຕັກເຕືອນຜູ້ທີ່ບໍ່ຍອມຮັບເອົາການຮຽກຮ້ອງເຊີນຊວນ ຈະຕ້ອງໄດ້ຮັບການລົງໂທດຈາກພຣະອົງ ອັລລໍຫ໌ ﷻ ທ່ານສາດສະດາໄດ້ຂຶ້ນ ພູເຂົາຊໍຟາ ແລ້ວຮ້ອງໃສ່ລູກຫລານຂອງ ອັບດຸລມຸດຕໍລິບ ແລະ ພວກລູກຊາຍຂອງ ຟິຫ໌ຣ ແລະ ກະອູ ທ່ານໄດ້ຖາມພວກເຂົາວ່າ:

**"ຖ້າຂ້ອຍຈະບອກພວກເຈົ້າວ່າ ຕອນນີ້ມີທະຫານມ້າຢູ່ຫລັງພູເຂົານີ້ ຈະມາທຳຮ້າຍພວກເຈົ້າ ພວກເຈົ້າຈະເຊື່ອຂ້ອຍຫຼືບໍ່?**

ພວກເຂົາເຈົ້າຕອບວ່າ: **"ພວກເຮົາເຊື່ອທ່ານ"**

ທ່ານສາດສະດາຈຶ່ງກ່າວວ່າ:

**"ແທ້ຈິງແລ້ວ, ຂ້າພະເຈົ້າເປັນຜູ້ຕັກເຕືອນກ່ຽວກັບການລົງໂທດທີ່ຮຸນແຮງ"**

ອະບູລະຫັບ ລຸງຂອງທ່ານນະບີ ໄດ້ເວົ້າຂຶ້ນວ່າ:

**"ຄວາມວິບັດຈົ່ງມີແກ່ເຈົ້າໃນມື້ນີ້ ເນື່ອງດ້ວຍເຫດນີ້ຫວາ? ທີ່ເຈົ້າໄດ້ເອີ້ນພວກເຮົາມາຮ່ວມກັນ"?**

**ອັລລໍຫ໌ຕະອາລາ ໄດ້ປະທານສູເຣາະຫ໌ ອັລມະຊັດລົງມາ ຄວາມວ່າ**

بِسۡمِ ٱللَّهِ ٱلرَّحۡمَٰنِ ٱلرَّحِيمِ ﴿تَبَّتۡ يَدَآ أَبِي لَهَبٖ وَتَبَّ﴾

**"ມືທັງສອງຂອງອະບູລະຫັບຈົ່ງພິນາດ ແລະ ມັນກໍ່ໄດ້ພິນາດແລ້ວ"** (ສູເຣາະຫ໌ ມະຊັດ111:1)

ໃນຊ່ວງທຳອິດ ພວກພ້ອງຂອງທ່ານນະບີ ﷺ ບໍ່ເອົາໃຈໃສ່ກັບການເຜີຍແຜ່ຂອງທ່ານນະບີຫຼາຍປານໃດ ພວກເຂົາເຈົ້າບໍ່ໄດ້ຕອບຮັບ ຫຼືຕໍ່ຕ້ານ ແຕ່ເມື່ອຖືກຕຳໜິໃນການກາບໄຫວ້ຮູບປັ້ນ ຈະເວັດ ວ່າມັນບໍ່ສາມາດຈະໃຫ້ຄຸນ ແລະ ໃຫ້ໂທດແກ່ໃຜໄດ້ ເມື່ອເປັນເຊັ່ນນັ້ນ ພວກເຂົາເຈົ້າຈຶ່ງປ່ຽນເປັນການຕໍ່ຕ້ານດ້ວຍຄວາມຮຸນແຮງ ແລະ ພະຍາຍາມຈັດການກັບການເຜີຍແຜ່ຂອງທ່ານສາດສະດາ ແລະ ຢຸດຍັ້ງການປ່ຽນມາເຂົ້າຮັບອິດສະລາມ ພວກເຂົາເຈົ້າໄດ້ນຳໃຊ້ວິທີການຕ່າງໆ ເພື່ອຕໍ່ຕ້ານດັ່ງຕໍ່ໄປນີ້:

### 7.3 ວິທີການຕ່າງໆ ໃນການຕໍ່ຕ້ານການແຜ່ຂະຫຍາຍຂອງອິດສະລາມຂອງສາດສະດາ ມູຮຳມັດ ﷺ

#### 7.3.1 ການດູຖູກ ເຍາະເຍີ້ຍ

ຊາວມຸດຣິກີນ (ຜູ້ປະຕິເສດສັດທາ) ເຍາະເຍີ້ຍທ່ານສາດສະດາ ﷺ ແລະ ຜູ້ທີ່ຕິດຕາມທ່ານ ແລະ ສິ່ງທີ່ໄດ້ຖືກປະທານລົງມາໃຫ້ແກ່ທ່ານ ເຂົາເຈົ້າເວົ້າວ່າ:

**"ພຣະອົງອັລລໍຫ໌ ﷻ ບໍ່ສາມາດຊອກຫາຄົນອື່ນໄດ້ອີກບໍ? ເພື່ອແຕ່ງຕັ້ງໃຫ້ລາວເປັນສາດສະດາ ທັງໆທີ່ ໃນບັນດາ ກູເຣຊ ມີຄົນມີກຽດສັກສີ ແລະ ໃຫຍ່ກວ່າເຈົ້າຫລາຍ"**

ອັລລໍຫ໌ ﷻ ໄດ້ກ່າວກ່ຽວກັບເລື່ອງນີ້ໃນອັລກຸຣອານ ວ່າ

﴿وَقَالُوا لَوْلَا نُزِّلَ هَٰذَا الْقُرْءَانُ عَلَىٰ رَجُلٍ مِّنَ الْقَرْيَتَيْنِ عَظِيمٍ﴾

**"ແລະ ພວກເຂົາເວົ້າວ່າ, ເປັນຫຍັງ ອັລກຸຣອານນີ້ ບໍ່ໄດ້ເປີດເຜີຍປະທານລົງມາໃຫ້ແກ່ຜູ້ຊາຍທີ່ ສຳຄັນທີ່ສຸດຂອງສອງເມືອງນີ້?** (ອັຊຊຸກຣຸຟ 43:31)

ນອກເໜືອໄປຈາກນັ້ນ ພວກເຂົາປະຕິເສດທີ່ຈະເອີ້ນຊື່ຂອງທ່ານສາດສະດາ ﷺ ໂດຍກົງ ແຕ່ຈະ ເອີ້ນທ່ານໂດຍຊາຍາທີ່ສະແດງເຖິງການເຍາະເຍີ້ຍ, ເຊັ່ນ: ການເອີ້ນລາວວ່າ الصابي, ຜູ້ເຄົາລົບດວງດາວ, ຫຼື مذمم, ຜູ້ຖືກຕຳນິ ພວກເຂົາຍັງເຍາະເຍີ້ຍຜູ້ທີ່ປະຕິບັດຕາມທ່ານ ໂດຍກ່າວວ່າ: **"ຈາກພວກຂອງເຮົາ ນັ້ນບໍ່ມີໃຜເຮັດຕາມລາວ ນອກຈາກພວກເຫຼົ່ານີ້ຫວ່າ?"**

ແລະ ໄດ້ເຈລະຈາກັນວ່າ:

**"ມູຮຳມັດ ຖ້າທ່ານຕ້ອງການໃຫ້ພວກເຮົາເຊື່ອ ແລະ ປະຕິບັດຕາມທ່ານ ເຈົ້າຈົ່ງຂັບໄລ່ພວກເຂົາ ເຫຼົ່ານີ້ອອກຈາກເຈົ້າ"**

ພວກເຂົາເຈົ້າໄດ້ກ່າວຫາທ່ານສາດສະດາ ﷺ ຕ່າງໆນາໆ ເຊັ່ນ ກ່າວວ່າທ່ານເປັນ ນັກເວດ ເປັນ ຫມໍຜີ ເປັນ ຄົນບ້າ, ຂີ້ຕົວະ, ແຕ່ ອັລລໍຫ໌ ﷻ ໄດ້ຕອບໂຕ້ໃນທຸກຂໍ້ກ່າວຫາທັງຫມົດທີ່ວ່າທ່ານສາດສະດາ ﷺ ນັ້ນ ແມ່ນບໍລິສຸດຈາກລັກສະນະຕ່າງໆທີ່ ພວກເຂົາເຈົ້າກ່າວຫາ ໂດຍສິ້ນເຊີງ

ການດູຖູກ, ການເຍາະເຍີ້ຍ, ແລະ ຂີ້ຕົວະ ແມ່ນອາວຸດຂອງສັດຕູຂອງອິດສະລາມ ໃຊ້ເພື່ອບິດ ເບືອນພາບລັກຂອງອິດສະລາມ ແລະ ຊາວມຸດສະລິມ ໂດຍການນຳໃຊ້ສື່ມວນຊົນຕ່າງໆ ດັ່ງທີ່ເຫັນໃນ ປັດຈຸບັນນີ້ ຍ້ອນວ່າເຂົາເຈົ້າບໍ່ສາມາດໂຕ້ຖຽງກັບຫຼັກການຂອງອິດສະລາມໄດ້ ແລະ ຫຼັກຖານທີ່ແນ່ນຫນາ ແລະ ຊັດເຈນ

### 7.3.2 ການທຳຮ້າຍທ່ານສາດສະດາ ﷺ

ເມື່ອພວກກຸເຣຊ ໄດ້ເຫັນສາດສະດາ ມູຮຳມັດ ﷺ ຍຶດໝັ້ນໃນການເຜີຍແຜ່ສາສະໜາຢ່າງເຂັ້ມແຂງ ມີປະຊາຊົນເຂົ້າຮັບອິດສະລາມນັບມື້ນັບຫຼາຍຂຶ້ນ ຈຶ່ງບໍ່ພຽງແຕ່ຖືກດູຖູດ ເຍາະເຍີ້ຍ ຢ່າງດຽວ ແຕ່ພວກເຂົາເຈົ້າຍັງໄດ້ໂຈມຕີລາວໂດຍສະເພາະແມ່ນໃນເວລາຫລັງຈາກ ອາບູຕໍລິບ ລຸງຂອງທ່ານຜູ້ທີ່ໃຫ້ການປົກປ້ອງ ແລະ ຄຸ້ມຄອງທ່ານໄດ້ເສຍຊີວິດໄປ

ຄັ້ງໜຶ່ງໃນຂະນະທີ່ສາດສະດາ ກຳລັງຢືນລະຫມາດຢູ່ທາງຫນ້າຂອງ ກະບະຫ໌ ເຊິ່ງມີບັນດາພວກກຸເຣຊຈ້ອງມອງຢູ່ ຄົນໜຶ່ງເວົ້າວ່າ: **"ມີໃຜບໍ? ຜູ້ທີ່ກ້າທີ່ຈະໄປຫາ ຊາກລູກອູດທີ່ຕາຍແລ້ວ ແລະ ເອົາຖົງນ້ຳເລືອດຫຼັງເກີດ ແລະ ເລືອດຂອງມັນໄປວາງໄວ້ເທິ່ງຫຼັງຂອງມຸຮຳຫມັດ ໃນຂະນະທີ່ລາວກຳລັງສຸຈູດ"**

ອຸກບະຫ໌ ລູກຂອງອະບີ ມຸອີດ ຈຶ່ງລຸກຂຶ້ນໄປເອົາສິ່ງສົກກະປົກນັ້ນມາວາງໄວ້ເທິ່ງໂຕຂອງທ່ານຣໍສູລ ﷺ ໃນຂະນະທີ່ທ່ານກຳຫຼັງສຸຈຸດລະຫມາດຢູ່ ພວກກຸເຣຊຕ່າງຫົວຂວັນສະໃຈ ບາງຄົນເຖິງກັບລົ້ມທັບກັນ ເມື່ອລູກສາວຂອງທ່ານ ຟາຕິມະຫ໌ໄດ້ຮູ້ ນາງຈຶ່ງຟ້າວເອົາສິ່ງສົກກະປົກທັງໝົດອອກໄປຈາກພໍ່ຂອງນາງ ກັບ ດ່າພວກກຸເຣຊ ແຕ່ ຣໍສູລຍັງ ສືບຕໍ່ອະທິຖານ(ລະຫມາດ)ຈົນເຖິງທີ່ສຸດ ເມື່ອທ່ານລະຫມາດອະທິຖານຈົບແລ້ວ ທ່ານໄດ້ຫັນໄປຫາ ພວກກຸເຣຊ ແລະ ຂໍດູອາຕໍ່ອັລລໍຫ໌ ﷻ ໃຫ້ລົງໂທດພວກກຸເຣຊວ່າ:

**"ຂ້າແຕ່ອັລລໍຫ໌ﷻ ຂໍພຣະອົງຊົງຈັດການກັບ ພວກກຸເຣຊດ້ວຍເຖີດ ຂ້າແຕ່ອັລລໍຫ໌ ﷻ ຂໍພຣະອົງຊົງຈັດການກັບ ພວກກຸເຣຊດ້ວຍເຖີດ ຂ້າແຕ່ອັລລໍຫ໌ ﷻ ຂໍພຣະອົງຊົງຈັດການກັບ ພວກກຸເຣຊດ້ວຍເຖີດ"** ແລະ ທ່ານໄດ້ກ່າວເຖິງຊື່ຂອງພວກຫົວໂຈກ ທ່ານໄດ້ວິງວອນຕໍ່ພຣະອົງອັລລໍຫ໌ ﷻໃຫ້ຈັດການກັບພວກເຂົາເຫຼົ່ານັ້ນນຳ ສະນັ້ນບໍ່ມີຜູ້ໃດຜູ້ໜຶ່ງໃນຜູ້ທີ່ຖືກລະບຸຊື່ບໍ່ມີຜູ້ລອດຊີວິດ ແລະ ໄດ້ພົບກັບການຄວາມພິນາດໃນສົງຄາມບະດັຣ[1]

ອະບູ ຈະຮັລ ປະຕິຍານວ່າຈະບີບຄໍທ່ານສາດສະດາມຸຮຳຫມັດ ຖ້າລາວເຫັນທ່ານລະຫມາດ ແຕ່ເມື່ອທ່ານສາດສະດາອອກມາລະຫມາດ ອະບຸຈະຮັລ ຈຶ່ງໄດ້ເຂົ້າໄປເພື່ອເຮັດສິ່ງທີ່ລາວໄດ້ເວົ້າ ແຕ່ ອັລລໍຫ໌ ﷻ ຊົງຂັດຂວາງປ້ອງກັນ ໂດຍໃຫ້ມີສິ່ງກີດຂວາງເພື່ອບໍ່ໃຫ້ສາມາດເຮັດອັນຕະລາຍຕໍ່ທ່ານສາດສະດາ ອະບຸຈະຮັລ ໄດ້ເຫັນເດີນທີ່ກວ້າງ ທີ່ມີໄຟລຸກຢ່າງແຮງ ໃນຂະນະທີ່ຜູ້ອື່ນໆເບິ່ງບໍ່ເຫັນ ຫຼັງຈາກນັ້ນລາວໄດ້ຫນີກັບ ດ້ວຍຄວາມຢ້ານກົວ

---

1. ເບິ່ງ ສໍຮີຫ໌ ບຸກຄໍຣີ ກີຕາບບຸຊສໍລາຫ໌ ແລະ ສໍຮີຫ໌ມຸສລິມ ເລັ່ມທີ່ 3 ຫນ້າ 1418 1420

ຢູ່ທີ່ **ອັລກະບະຫ໌** ອຸກບະຫ໌ ບິນ ອະບີມຸອີດ ຕ້ອງຫັນຫຼັງໜີໄປ ໃນຂະນະທີ່ລາວຈັບບ່າຂອງ ຣໍສູລ ລຸລລໍຫ໌ ﷺ ແລ້ວໃຊ້ຜ້າຮັດຄໍທ່ານ ແລະ ລາວຮັດຄໍຢ່າງແຮງ ຈົນກະທັ້ງ ທ່ານອະບູບັກຣ ຣໍດີຍັລລໍຮຸອັນຮຸ ເຂົ້າມາຊ່ວຍ ແລະ ຍູ້ ອຸກບະຫ໌ ອອກໄປ ທ່ານອະບູບັກຣ ຣໍດີຍັລລໍຮຸອັນຮຸ  ເວົ້າວ່າ:

**[أتقتلون رجلا أن يقول ربي الله]**

**ເຈົ້າເຖິງຈະຂ້າຊາຍຄົນໜຶ່ງພຽງເພາະລາວເວົ້າວ່າອັລລໍຫ໌ ຊຸບຫານະຮຸ ຕະອາລາ ເປັນພຣະເຈົ້າຂອງຂ້ອຍ ແນວນັ້ນບໍ?**[1]

ທ່ານສາດສະດາ ເຄີຍຖືກຜູ້ຍິງທຳຮ້າຍ ຕົວຢ່າງເຊັ່ນ: ເມຍຂອງອາບີລະຫັບ ໄດ້ວາງສິ່ງສົກກະປົກ ແລະ ໜາມໃນເສັ້ນທາງທີ່ສາດສະດາໄດ້ໃຊ້ໃນການເດີນທາງສັນຈອນໄປມາດັ່ງນັ້ນ ຈຶ່ງມີດ□າລັດຂອງອັລລໍຫ໌ ວ່າ:

﴿وَٱمْرَأَتُهُۥ حَمَّالَةَ ٱلْحَطَبِ ٤ فِى جِيدِهَا حَبْلٌ مِّن مَّسَدٍۭ﴾

**"ແລະ ພັນລະຍາຂອງເຂົາດ້ວຍ ໂດຍທີ່ນາງເປັນຜູ້ແບກຟືນ"**

**"ຮອບຄໍຂອງນາງແມ່ນມີເຊືອກທີ່ແສ່ວດ້ວຍເສັ້ນໃຍຕົ້ນອິນທາຜະລຳຢູ່ ເພື່ອດຶງໄປສູ່ນະຣົກ ຈະຮັນນຳ"**

(ອັລມະຊັດ 111:4-5)

ນັ້ນຄືບາງສ່ວນທີ່ທ່ານນະບີ ﷺ ໄດ້ຖືກກະທຳພຽງແຕ່ຍ້ອນເຮັດໜ້າທີ່ເຜີຍແຜ່ເຊີນຊວນ ຕາມທີ່ພຣະຜູ້ເປັນເຈົ້າໄດ້ບັນຊາ

### 7.3.3 ການກົດຂີ່ຂົ່ມເຫັງ ສ້າງຄວາມປັ່ນປ່ວນວຸ່ນວາຍ ແກ່ຜູ້ທີ່ປະຕິບັດຕາມທ່ານນະບີ ﷺ

ຜູ້ທີ່ປະຕິບັດຕາມທ່ານສາດສະດາມຸຮຳຫມັດﷺ ພວກເຂົາຕ້ອງປະສົບກັບການຖືກໂຈມຕີທີ່ໂຫດຮ້າຍ ແລະ ທໍລະມານຢ່າງຮຸນແຮງຈາກພວກກຸເຣຊ ເພື່ອຍັບຍັ້ງຜູ້ຄົນ ແລະ ຢຸດເຊົາການດຳເນີນການຂອງສາດສະໜາອິດສະລາມ  ທ່ານອັບດຸລລໍຫ໌ ອິບນິ ອຸມັຣ ຣໍດີຍັລລໍຫຸອັນຮຸ ໄດ້ບັນຍາຍເຖິງສະພາບການຂອງຊາວມຸດສະລິມທີ່ມີຊີວິດຢູ່ໃນສະໄໝເລີ່ມຕົ້ນຂອງອິດສະລາມ ວ່າ: **ໃນເວລານັ້ນ ອິດສະລາມມີຈຳນວນນ້ອຍ ຜູ້ຄົນຖືກທົດສອບໃນສາດສະໜາຂອງເຂົາເຈົ້າ ກ່າວຄື ຖ້າບໍ່ໄດ້ຖືກຂ້າຕາຍ, ກໍ່ຖືກທໍລະມານ**[2]

1. ເບິ່ງ ອັລມຸຊອນນັຟ ຂອງ ອິບນິ ອະບີ ໄຊບະຫ໌ ສະບັບທີ 14 ຫນ້າ 297

2.ເບິ່ງ ສໍຮີຫ໌ ບຸກຄໍຣີ ກິຕາບບຸຕັຟຊີຣ ແລະ ຈົ່ງສູ້ລົບກັບພວກເຂົາ ຈົນກວ່າຟິຕນະຫ໌ຈະໝົດສິ້ນໄປ ໜ້າທີ່ 30

ຄົນອ່ອນແອທີ່ບໍ່ມີພວກພ້ອງ ຫຼືເສັ້ນສາຍໃນຕະກູນໃຫຍ່ພໍທີ່ຈະຊ່ວຍປົກປ້ອງໃຫ້ ຈະຕ້ອງໄດ້ຮັບການທໍລະມານຢ່າງແສນສາຫັດກວ່າຄົນອື່ນໆ ວິທີການທີ່ໃຊ້ແມ່ນ ການຂູ່ນຕີ ຈັບໂຕໄປກັກຂັງ ມັດໄວ້ຢູ່ນອກດາກແດດ ນອນຢູ່ເທິງຊາຍທີ່ແດດຮ້ອນເປັນເວລາດົນນານ ມີກ້ອນຫີນໃຫຍ່ກ້ອນໜຶ່ງວາງໄວ້ເທິງໜ້າເອິກຂອງເຂົາ ຫຼືໃສ່ເກາະເຫຼັກ ແລະ ນອນຢູ່ໃນແສງແດດຮ້ອນເອົາແທ້ເອົາວ່າ ແລະ ຍັງໄດ້ໃຫ້ເດັກນ້ອຍລາກເຂົາເຈົ້າໄປຕາມຖະໜົນຫົນທາງ ແລະ ຮ່ອມບ້ານຕ່າງໆ ເພື່ອເປັນການປະຈານໃຫ້ອັບອາຍຈຶ່ງເຮັດໃຫ້ບາງຄົນຕາບອດຍ້ອນການທໍລະມານ ເນື່ອງຈາກຖືກຂົ່ມເຫັງຢ່າງຮ້າຍແຮງ, ເຊັ່ນ **ທ່ານຍິງຊຸໄນເຣາະຫ໌ ຣໍດີຍັລລໍຮຸອັນຮາ** ແລະ ບາງຄົນໄດ້ເສຍຊີວິດໄປເຊັ່ນ: **ທ່ານຍິງສຸໄມຍະຫ໌ ຣໍດີຍັລລໍຮຸອັນຮາ** ແມ່ຂອງ **ທ່ານອຳມັຣ ບິນຍາຊິຣ** ບາງຄົນໄດ້ຮັບຄວາມທຸກລະທົມອັນເນື່ອງຈາກການຖືກທຳຮ້າຍຢ່າງຮ້າຍແຮງ ເຖິງຕ້ອງເຮັດຕາມເຊື່ອຟັງສິ່ງທີ່ພວກກຸເຣຊຕ້ອງການ ໂດຍການສະແດງຄວາມຄຽດແຄ້ນ ແລະບອກວ່າບໍ່ເຊື່ອຖືສິ່ງທີ່ທ່ານສາດສະດາ ມຸຮຳຫມັດໄດ້ເຊີນຊວນ ເພື່ອຫລຸດພົ້ນຈາກການຖືກທໍລະມານ

ອັລລໍຫ໌ ຊຸບຮານະຫຸ ວາຕະອາລາ ໄດ້ປະທານອັລກຸຣອານລົງມາໃຫ້ພວກເຂົາເຈົ້າເຮັດແນວນັ້ນໄດ້ຕາບໃດທີ່ຫົວໃຈຍັງສະຫງົບ ແລະ ໝັ້ນຄົງດ້ວຍສັດທາ ດັ່ງທີ່ພຣະອົງໄດ້ກ່າວວ່າ:

**"ໃຜທີ່ປະຕິເສດໃນ ອັລລໍຫ໌ ຫຼັງຈາກທີ່ລາວໄດ້ເຊື່ອສັດທາແລ້ວ (ລາວຈະຖືກອັລລໍຫ໌ ໂກດກີ້ວ), ຍົກເວັ້ນຜູ້ທີ່ຖືກກົດຂີ່ຂົ່ມເຫັງໃນຂະນະທີ່ຫົວໃຈຂອງລາວເຕັມໄປດ້ວຍຄວາມເຊື່ອ ແຕ່ທະວ່າຜູ້ໃດທີ່ເຕັມໃຈທີ່ຈະບໍ່ເຊື່ອ ດັ່ງນັ້ນ ຄວາມໂກດກີ້ວຂອງອັລລໍຫ໌ ຈະປະສົບກັບພວກເຂົາ ແລະ ພວກເຂົາຈະໄດ້ຮັບການລົງໂທດຢ່າງຮຸນແຮງ"** (ສຸເຣາະຫ໌ອັນນະຫ໌ລ 16:106)

ຊາວມຸດສະລິມບາງຄົນຖືກຜູ້ປະຕິເສດທີ່ເປັນຍາດຕິພີ່ນ້ອງໃກ້ຊິດບີບຄັ້ນທາງຈິດໃຈຢ່າງຮຸນແຮງ, ຄືກັບແມ່ຂອງ **ສະອັດ ບິນ ອະບີວະກ໊ອສ** ຣໍດີຍັລລໍຮຸອາຮຸ ນາງປະຕິຍານວ່າຈະບໍ່ເວົ້າ, ບໍ່ກິນ, ບໍ່ດື່ມ ຈົນກ່ວາ ສະອັດ ປະຕິເສດອິດສະລາມ, ນາງເວົ້າວ່າ: **ເຈົ້າອ້າງວ່າ ອັລລໍຫ໌ ﷻ ສັ່ງສອນເຈົ້າໃຫ້ເຊື່ອຟັງພໍ່ແມ່ຂອງເຈົ້າ ແລະ ຂ້ອຍເປັນແມ່ຂອງເຈົ້າ ຂ້ອຍສັ່ງເຈົ້າໃຫ້ເລີກນັບຖືສາດສະໜາອິດສະລາມສະ!**

ນາງໄດ້ເປັນລົມສະລົບໄປອັນເນື່ອງຈາກການປະຕິເສດຂອງນາງທີ່ຈະກິນອາຫານ ແລະ ເຄື່ອງດື່ມແຕ່ເມື່ອນາງຖືກບັງຄັບໃຫ້ດື່ມນ້ຳ ນາງຈຶ່ງໄດ້ລຸກອາລະວາດທຳຮ້າຍ ສະອັດ ຈົນເຮັດໃຫ້ລາວຮູ້ສຶກບໍ່ສະບາຍ ອັລລໍຫ໌ ຊຸບຮານະຫຸ ວາຕະອາລາ ຈຶ່ງປະທານອາຍະຫຼນີ້ລົງມາ ຄື:

﴿وَوَصَّيْنَا ٱلْإِنسَٰنَ بِوَٰلِدَيْهِ حُسْنًا ۖ وَإِن جَٰهَدَاكَ لِتُشْرِكَ بِى مَا لَيْسَ لَكَ بِهِۦ عِلْمٌ فَلَا تُطِعْهُمَآ ۚ إِلَىَّ مَرْجِعُكُمْ فَأُنَبِّئُكُم بِمَا كُنتُمْ تَعْمَلُونَ﴾

**"ແລະ ພວກເຮົາ (ອັລລໍຫ໌ ຊຸບຮານະຫຸ ວາຕະອາລາ) ໄດ້ສັ່ງເສຍມະນຸດໃຫ້ເຮັດດີກັບພໍ່ແມ່ຂອງເຂົາ ແລະ ຖ້າຫາກວ່າເຂົາເຈົ້າຂົ່ມເຫັງ ແລະ ກົດດັນໃຫ້ທ່ານຕັ້ງພາຄີຮ່ວມກັບຂ້າ ພຣະເຈົ້າ (ອັລລໍຫ໌ ﷻ) ໃນທີ່ທ່ານບໍ່ມີຄວາມຮູ້ ດັ່ງນັ້ນຢ່າປະຕິບັດຕາມພວກເຂົາທັ້ງສອງ ສຳລັບຂ້ອຍແມ່ນການກັບມາຂອງເຈົ້າ ແລ້ວເຮົາຈະແຈ້ງໃຫ້ພວກເຈົ້າຮູ້ເຖິງ ສິ່ງທີ່ພວກເຈົ້າໄດ້ເຮັດໄວ້"** (ອັລອັນກະບູດ 29:8)

ພວກກຸເຣຊ ຕ້ອງການໃຫ້ອະບູຕໍລິບ ເຊິ່ງເປັນລຸງຂອງທ່ານສາດສະດາ ຍັບຍັ້ງຫ້າມທ່ານໃຫ້ຍຸຕິຈາກການປະຕິເສດພຣະຂອງພວກເຂົາເຈົ້າ ແລະ ຢຸດເຊົາການວິພາກວິຈານປະເພນີທີ່ມີມາດັ່ງເດີມ ຫຼັງຈາກນັ້ນອະບູຕໍລິບ ຈຶ່ງເອີ້ນທ່ານສາດສະດາ ມາຢູ່ຕໍ່ໜ້າຜູ້ຕາງໜ້າຂອງ ພວກກຸເຣຊ ແລະ ໄດ້ຮຽກຮ້ອງໃຫ້ທ່ານສາດສະດາ ຢຸດເຮັດແນວນັ້ນ

ທ່ານນະບີ ﷺ ຈຶ່ງເບິ່ງໄປທີ່ດວງອາທິດ ແລະ ເວົ້າວ່າ: **ພວກເຈົ້າເຫັນດວງຕາເວັນນີ້ບໍ?**

ພວກກຸເຣຊ ເວົ້າວ່າ: **ແມ່ນແລ້ວ, ພວກເຮົາເຫັນ**

ດັ່ງນັ້ນ ສາດສະດາຈຶ່ງກ່າວວ່າ:

**"ເພາະສະນັ້ນ, ຂ້າພະເຈົ້າບໍ່ສາມາດປະຖິ້ມໜ້າທີ່ຂອງຂ້າພະເຈົ້າໄດ້ ດັ່ງທີ່ພວກເຈົ້າບໍ່ສາມາດດັບຄວາມສະຫວ່າງຂອງດວງຕາເວັນນີ້ໄດ້ ຫຼື ໃຫ້ພວກເຈົ້າເອົາແສງ ຄວາມຮ້ອນອອກຈາກດວງຕະເວັນໄດ້ກ່ອນ! (ຊຶ່ງເປັນໄປບໍ່ໄດ້) ເຊິ່ງຍັງຈະງ່າຍກວ່າທີ່ຈະໃຫ້ຂ້ອຍລະຖິ້ມໜ້າທີ່ຂອງຂ້ອຍອີກ[1]"**

### 7.3.4 ການເຈລະຈາຕໍ່ລອງ

ເມື່ອ ພວກກຸເຣຊ ເຫັນວ່າການທໍລະມານນັ້ນບໍ່ສາມາດໃຊ້ໄດ້ກັບທ່ານສາດສະດາ ມູຮຳໝັດﷺ ແລະ ຊໍຮາບະຫ໌ໄດ້ ດັ່ງນັ້ນ ພວກເຂົາຫັນໄປສູ່ການເຈລະຈາ ໂດຍການຂໍໃຫ້ແຕ່ລະຝ່າຍນະມັດສະການພຣະເຈົ້າຂອງກັນ ແລະ ກັນເປັນເວລາໜຶ່ງປີ ສຳລັບເຫດຜົນນີ້ ອັລລໍຫ໌ ﷻ ຈຶ່ງປະທານວະຮີຍ໌ **ສູເຣາະຫ໌ ອັລກາຟີຣູນ** ລົງມາ[2]

ມີລາຍງານວ່າພວກກຸເຣຊ ໄດ້ສົ່ງ ອຸດບະຫ໌ ບິນ ຣໍບີອະຫ໌ ເພື່ອຍື່ນຂໍ້ສະເໜີ ແລະ ຜົນປະໂຫຍດໃນໂລກນີ້ເພື່ອຊັກຊວນທ່ານນະບີ ໂດຍກ່າວວ່າ:

**"ຖ້າທ່ານຕ້ອງການຊັບສິນ ພວກເຮົາຈະເຕົ້າໂຮມນຳມາມອບໃຫ້ ຈົນກວ່າພວກທ່ານຈະຮັ່ງມີທີ່ສຸດໃນບັນດາພວກເຮົາ ຖ້າທ່ານຕ້ອງການເປັນກະສັດ, ມີຊື່ສຽງ, ມີກຽດ, ພວກເຮົາຈະມອບຕຳແໜ່ງໃຫ້ທ່ານເປັນຜູ້ນຳ ....."**

ທ່ານຣໍສູລລຸລລໍຫ໌ ຈຶ່ງປ່ອຍໃຫ້ ອຸດບະຫ໌ ເວົ້າຈົນຈົບ ຫຼັງຈາກນັ້ນ ທ່ານນະບີ ﷺ ຈຶ່ງອ່ານຕອນກາງຂອງສູເຣາະຫ໌ ຟຸຊຊີລັດ ຈົນກະທັ່ງຮອດອາຍະຫ໌ ທີ່ວ່າ:

﴿فَإِنْ أَعْرَضُوا فَقُلْ أَنذَرْتُكُمْ صَٰعِقَةً مِّثْلَ صَٰعِقَةِ عَادٍ وَثَمُودَ﴾

**"ສະນັ້ນ ຖ້າຫາກພວກເຂົາຫັນໜີໃຫ້ເຈົ້າ (ໂອ້ມຸຮຳມັດ) ກໍ່ຈົ່ງເວົ້າວ່າ: ຂ້າພະເຈົ້າເຕືອນທ່ານກ່ຽວກັບໄພພິບັດຂອງຟ້າຜ່າລົງມາ ດັ່ງທີ່ ພວກອ໊າດ ແລະ ສະມູ໊ດ ໄດ້ເຄີຍປະສົບກັນມາແລ້ວ"**

(ອັລຟຸຊຊີລັດ ອາຍະຫ໌ທີ່ 41:13)

ອຸກບະຫ໌ເກີດຄວາມຫວາດກົວ ແລະ ຮີບຟ້າວບອກໃຫ້ທ່ານນະບີ ﷺ ຢຸດອ່ານ ແລ້ວເຂົາຈຶ່ງຮີບຢາງກັບໄປ[3]

### 7.3.5 ພະຍາຍາມຂໍເບິ່ງປະຕິຫານ

ພວກກຸເຣຊ ໄດ້ບີບຄັ້ນທ່ານສາດສະດາ ﷺ ໃຫ້ສະແດງປະຕິຫານດ້ວຍການປ່ຽນພູເຂົາ ໃນມັກກະຫ໌ໃຫ້ກາຍເປັນທອງຄຳ ແລະ ປ່ຽນທະເລຊາຍແຫ້ງແລ້ງກັນດານ ໃຫ້ເປັນສາຍນ້ຳລຳທານ ແລະ ພວກເຂົາໄປຂໍຄວາມຊ່ວຍເຫຼືອຈາກຊາວຢິວ

ໃຫ້ຖາມທ່ານສາດສະດາ ﷺ ກ່ຽວກັບບັນຫາຕ່າງໆ ຈົນກ່ວາມັນຈະເຮັດໃຫ້ທ່ານອຶດອັດບໍ່ສະບາຍໃຈ ແລະ ອັລລໍຫ໌ ﷻ ຊົງຕອບໂຕ້ພວກເຂົາເຈົ້າ ກັບ ອາຍະຫ໌ຕ່າງໆ ດັ່ງທີ່ຖ້ອຍຄຳຂອງພຣະອົງໄດ້ກ່າວວ່າ:

﴿وَمَا مَنَعَنَآ أَن نُّرْسِلَ بِٱلْءَايَٰتِ إِلَّآ أَن كَذَّبَ بِهَا ٱلْأَوَّلُونَ وَءَاتَيْنَا ثَمُودَ ٱلنَّاقَةَ مُبْصِرَةً فَظَلَمُوا بِهَا وَمَا نُرْسِلُ بل ايت إِلَّا تَخْوِيفًا﴾

**"ແລະ ບໍ່ມີສິ່ງໃດຍັບຍັ້ງເຮົາ (ອັລລໍຫ໌ ຊຸບຮານະຫຸ ວະຕາອາລາ) ໃນການທີ່ເຮົາຈະສົ່ງສັນຍານຕ່າງໆ ລົງມາ ເວັ້ນເສຍແຕ່ວ່າບັນດາຄົນໃນອະດີດໄດ້ພາກັນປະຕິເສດ ແລະ ພວກເຮົາໄດ້ເຮັດໃຫ້ອູດໂຕເມຍ ເປັນທີ່ປະຈັກຊັດແຈ້ງທີ່ ສຳລັບ ພວກສະມູ໊ດ ແຕ່ຫຼັງຈາກນັ້ນເຂົາເຈົ້າໄດ້ລ່ວງລະເມີດມັນ(ຂ້າ) ແລະ ພວກເຮົາ (ອັລລໍຫ໌ຊຸບຮານະຫຸ ວະຕາອາລາ) ບໍ່ໄດ້ສົ່ງສັນຍານຕ່າງໆມາ ຍົກເວັ້ນແຕ່ເປັນການເຕືອນສຳທັບເທົ່ານັ້ນ"**

(ອັລອິສຣໍ ອາຍະຫ໌ 17:59)

---

1. ເບິ່ງໜັງສືອິບນຸ ອິສຮາກ ໃນອັສຊີຍັຣອັລກຊີ ແລະທ່ານອັລບານີ ກ່າວວ່າຣີວາຍະຫ໌ນີ້ສໍຮີຫ໌ ອັລອະຮາດີຊູຊ ສໍຮີຫ໌ເລັ່ມທີ່ 1 ໜ້າ 147
2. ເບິ່ງໜັງສື ຕັຟຊີຣ ອິບນູ ກະຊີຣ ເລັ່ມທີ່ 8 ໜ້າທີ່ 527
3. ເບິ່ງ ໃນໜັງສື ອັລມຸຊອນນັຟ ຂອງອິບນີ ອາບີ ໄຊບະຫ໌ ເລັ່ມທີ່ 14 ໜ້າ 295 ມຸສນັດ ຂອງອາບູຍຸລາ ເລັ່ມທີ່ 3 ໜ້າ 349 ອັລມຸສຕັດຣ໊ອກ ຂອງອັລຮາກິມ ເລັ່ມທີ່ 2 ໜ້າ 253 ອັຊຊະຮາບີຍ໌ ຖືວ່າ ສໍຮີຫ໌ ແລະ ອິບນິ ກະຊີ້ຣ ລະບຸໄວ້ໃນ ຕັຟຊີ້ຣ ຂອງທ່ານໃນເລັ່ມ 7 ໜ້າ 151

ໃຫ້ຖາມທ່ານສາດສະດາກ່ຽວກັບບັນຫາຕ່າງໆ ຈົນກ່ວາມັນຈະເຮັດໃຫ້ທ່ານອຶດອັດບໍ່ສະບາຍໃຈ ແລະ ອັລລໍຫ໌ ﷻ ຊົງຕອບໂຕ້ພວກເຂົາເຈົ້າ ກັບ ອາຍະຫ໌ຕ່າງໆ ດັ່ງທີ່ຖ້ອຍຄຳຂອງພຣະອົງໄດ້ກ່າວວ່າ:

﴿وَمَا مَنَعَنَآ أَن نُّرۡسِلَ بِٱلۡءَايَٰتِ إِلَّآ أَن كَذَّبَ بِهَا ٱلۡأَوَّلُونَ وَءَاتَيۡنَا ثَمُودَ ٱلنَّاقَةَ مُبۡصِرَةً فَظَلَمُواْ بِهَا وَمَا نُرۡسِلُ بلايات إِلَّا تَخۡوِيفًا﴾

**“ແລະບໍ່ມີສິ່ງໃດຍັບຍັ້ງເຮົາ (ອັລລໍຫ໌ ຊຸບຮານະຫຸ ວະຕາອາລາ) ໃນການທີ່ເຮົາຈະສົ່ງສັນຍານຕ່າງໆ ລົງມາ ເວັ້ນເສຍແຕ່ວ່າບັນດາຄົນໃນອະດີດໄດ້ພາກັນປະຕິເສດ ແລະພວກເຮົາໄດ້ເຮັດໃຫ້ອູດໂຕເມຍ ເປັນທີ່ປະຈັກຊັດແຈ້ງທີ່ ສຳລັບ ພວກສະມູ໊ດ ແຕ່ຫຼັງຈາກນັ້ນເຂົາເຈົ້າໄດ້ລ່ວງລະເມີດມັນ(ຂ້າ) ແລະພວກເຮົາ (ອັລລໍຫ໌ ຊຸບຮານະຫຸ ວະຕາອາລາ) ບໍ່ໄດ້ສົ່ງສັນຍານຕ່າງໆມາ ຍົກເວັ້ນແຕ່ເປັນການເຕືອນສຳທັບເທົ່ານັ້ນ”** (ອັລອິສຣໍ ອາຍະຫ໌ 17:59)

﴿وَيَسۡـَٔلُونَكَ عَنِ ٱلرُّوحِۖ قُلِ ٱلرُّوحُ مِنۡ أَمۡرِ رَبِّي وَمَآ أُوتِيتُم مِّنَ ٱلۡعِلۡمِ إِلَّا قَلِيلًا﴾

**“ແລະພວກເຂົາຈະຖາມທ່ານກ່ຽວກັບວິນຍານ ຈົ່ງກ່າວວ່າ, ກ່ຽວກັບເລື່ອງວິນຍານນັ້ນ ເປັນໄປຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າຂອງຂ້ອຍ ແລະ ທ່ານຈະບໍ່ໄດ້ຮັບຄວາມຮູ້ໃດໆ ຍົກເວັ້ນພຽງເລັກນ້ອຍ”**

(ອັລອິສຣໍ ອາຍະຫ໌ 85)

### 7.3.6 ເຜົ່າກຸເຣຊ ຕັດຄວາມສຳພັນກັບຕະກູນບະນີ ຮາຊິມ

ເມື່ອພວກກຸເຣຊ ເຫັນວ່າວິທີການທີ່ໃຊ້ຕໍ່ຕ້ານທ່ານສາດສະດາມຸຮຳຫມັດ ﷺ ນັ້ນບໍ່ໄດ້ຜົນ ແລະ ບໍ່ສາມາດຢຸດຍັ້ງການເຮັດຫນ້າທີ່ໃນການເຊື້ອເຊີນປະຊາຊົນໃຫ້ປ່ຽນມາເປັນອິດສະລາມ ແຕ່ກັບມີຄົນເຂົ້າມານັບຖືສາສະໜາອິສລາມນັບມື້ນັບຫຼາຍຂຶ້ນ ໂດຍສະເພາະຫຼັງຈາກ ຮຳຊະຫ໌ ຜູ້ທີ່ເປັນລຸງຂອງສາດສະດາ ແລະ ອຸມັຣ ບິນຄອດຕອບ ຣໍດິຍັລລໍຮູ ອັນຮຸ ປ່ຽນມາເປັນອິດສະລາມ ຍິ່ງເພີ່ມພະລັງ ແລະ ກຽດສັກສີໃຫ້ແກ່ຊາວມຸດສະລິມຫຼາຍຂຶ້ນ

ເມື່ອພວກກຸເຣຊ ເຫັນດັ່ງນັ້ນ ຈຶ່ງຄິດຫາຫົນທາງວິທີທີ່ຮ້າຍແຮງກວ່າເກົ່າ ພວກເຂົາຄິດຈະຂ້າທ່ານສາດສະດາ ແຕ່ວ່າ ອາບູຕໍລິບ ລຸງຂອງທ່ານ ເຊັ່ນດຽວກັນກັບກຸ່ມຊົນຈາກຕະກູນ ບະນີຮາຊິມ ແລະຕະກູນອັບດຸລມຸດຕໍລິບ ຄືງບໍ່ຍອມ ໃຫ້ພວກເຂົາເຮັດແນວນັ້ນ ດັ່ງນັ້ນ ພວກເຂົາຈຶ່ງໄດ້ເຕົ້າໂຮມຊາວກຸເຣຊທັງໝົດໂດຍມີເຜົ່າ ກິນານະຫ໌ຢູ່ນຳ ເພື່ອເຮັດການ ຕັດຄວາມພົວພັນກັບຕະກູນ ບະນີຮາຊິມ ແລະ ຕະກູນອັບດຸລມຸດຕໍລິບ ໂດຍການບໍ່ແຕ່ງງານ, ບໍ່ເຮັດທຸລະກິດ, ແລະ ບໍ່ໄດ້ເວົ້າຈາສື່ສານນຳ ຈົນກ່ວາພວກເຂົາຕົກລົງທີ່ຈະສົ່ງທ່ານສາດສະດາ ມຸຮຳຫມັດໃຫ້ພວກເຂົາຂ້າ ທ່ານອາບູຕໍລິບ ຕະກູນ ບະນີຮາຊິມ ແລະຕະກູນອັບດຸລມຸດຕໍລິບ ທີ່ມີທັງຜູ້ສັດທາ ແລະ ຜູ້ປະຕິເສດສັດທາ ຈຶ່ງຕ້ອງເຂົ້າໄປຢູ່ໃນບໍລິເວນ **شعب عامر** ທີ່ຖືກປິດລ້ອມກັກກັນບໍລິເວນຢູ່ດົນເຖິງ ສອງຫຼື ສາມປີ ສ້າງຄວາມລຳບາກ ທຸກຍາກ ຄວາມອຶດ

ຢາກ ແລະ ບໍ່ສາມາດອອກໄປເຮັດທຸລະ ໄປ ຕໍວາຟ ທີ່ ໄບຕຸລລໍຫ໌ ຫຼືໄປຕະຫຼາດ ເມື່ອມີກອງຄາລາວານ ສິນຄ້າມາຮອດເພື່ອປັນສ່ວນອາຫານ ມາຮອດກໍ່ບໍ່ໄດ້ ຈົນໃນທີ່ສຸດຜູ້ເຖົ້າແກ່ ຊາວກຸເຣຊ ຫ້າຄົນຮູ້ສຶກ ເວດທະນາສົງສານ ຈຶ່ງປະຊຸມກັນ ແລະ ລົງຄະແນນສຽງເພື່ອປະກາດຍົກເລີກພັນທະສັນຍາ ຂໍ້ຕົກລົງທີ່ ກົດຂີ່ຂົ່ມເຫັງ ແລະ ໄດ້ທຳລາຍພັນທະສັນຍາທີ່ໄດ້ລົງນາມກັນໄວ້ ທ່ານສາດສະດາ ແລະ ຕະກູນ ບະນີ ຮາຊິມ ແລະ ຕະກູນອັບດຸລມຸດຕໍລິບ ຈຶ່ງຫຼຸດພົ້ນປົດປ່ອຍຈາກການຖືກປິດລ້ອມດັ່ງກ່າວ ຈາກການປິດ ລ້ອມນັ້ນເຮັດໃຫ້ທ່ານນະບີ ﷺ ຍືນຫຍັດທີ່ຈະເດີນໜ້າຮຽກຮ້ອງສືບຕໍ່ເຜີຍແຜ່ສາດສະໜາອິດສະລາມ[1]

## 8. ການເສຍຊີວິດຂອງຜູ້ເປັນລຸງ ແລະ ພັນລະຍາຂອງທ່ານນະບີມຸຮຳຫມັດ ﷺ

ການຕັດສຳພັນຂອງ ພວກກຸເຣຊ ກັບຕະກູນ ບະນີຮາຊິມ ຍັງບໍ່ທັນສິ້ນສຸດລົງ ທ່ານສາດສະດາ ﷺ ຕ້ອງປະສົບກັບການທົດສອບທີ່ຍິ່ງໃຫຍ່ ກັບການສູນເສຍ ອະບູຕໍລິບ ຜູ້ເປັນລຸງ ແລະ ທ່ານນາງຄໍດີຈະຫ໌ ຜູ້ເປັນພັນລະຍາ ຣໍດີຢັລລໍຮຸອັນຫາ ເຫດການນີ້ເກີດຂຶ້ນໃນປີທີສິບຫຼັງຈາກທ່ານສາດສະດາ ຖືກແຕ່ງຕັ້ງ ເປັນ ຣໍສູລ ແລະ ໃນປີນີ້ໄດ້ຮັບຊື່ເປັນປີແຫ່ງຄວາມໂສກເສົ້າ (ອ່າມມຸລຮາຊນີ) ເນື່ອງຈາກວ່າມັນປະກອບ ໄປດ້ວຍເຫດການຄວາມໂສກເສົ້າ ເສຍໃຈ ແລະ ການຖືກທົດສອບ (ມຸຊີບະຫ໌)

ລຸງຂອງທ່ານນັ້ນເປັນຜູ້ຮັບປະກັນ ໃຫ້ຄວາມຄຸ້ມຄອງປົກປ້ອງທ່ານສາດສະດາ ຈາກໄພຄຸກຄາມ ຂອງ ພວກກຸເຣຊ ແລະ ໄດ້ໃຫ້ສັນຍາກຸ່ມຊົນຂອງທ່ານວ່າຈະຊ່ວຍເຫຼືອ ແລະ ສະຫນັບສະຫນູນທ່ານ ສາດສະດາ ມຸຮຳຫມັດ ຫລານຊາຍ ແລະ ກຸ່ມຊົນກໍ່ສະຫນັບສະຫນູນດ້ວຍ ເຖິງແມ່ນວ່າບາງຄົນບໍ່ໄດ້ ສັດທາ ທັງນີ້ເພື່ອເປັນກຽດແກ່ ອາບີຕໍລິບ ເມື່ອ ອາບູຕໍລິບ ໄດ້ເສຍຊີວິດ ກຸ່ມຊົນຂອງທ່ານຢຸດເຊົາການ ຊ່ວຍເຫຼືອປົກປ້ອງ, ຄຸ້ມກັນທ່ານສາດສະດາ ຈາກການຂົ່ມເຫັງຂອງ ພວກກຸເຣຊຄືກັບແຕ່ກ່ອນ ດ້ວຍເຫດ ນີ້ພວກກຸເຣຊຈຶ່ງທຳລາຍທ່ານນະບີ ຫຼາຍກວ່າຕອນທີ່ອາບີຕໍລິບຍັງມີຊີວິດຢູ່

ສຳລັບ ທ່ານນາງຄໍດີຈະຫ໌ ຣໍດີຢັລລໍຮຸອັນຫາ ຜູ້ເປັນພັນລະຍາຂອງທ່ານສາດສະດາ ມີບົດບາດສຳ ຄັນໃນການເຮັດໜ້າທີ່ເຊື້ອເຊີນປະຊາຊົນໄປສູ່ອິດສະລາມ ທຸກໆຄັ້ງທີ່ທ່ານນະບີ ﷺ ປະສົບການຊຶມເສົ້າ ໂສກເສົ້າເສຍໃຈ ທ່ານຈະກັບຄືນໄປຫາທ່ານຍິງຄໍດີຈະຫ໌ ຊຶ່ງນາງໄດ້ປອບໂຍນ ແລະ ຊຸກຍູ້ທ່ານໃຫ້ສືບຕໍ່ ປະຕິບັດໜ້າທີ່ ດ້ວຍເຫດນີ້ ການຈາກໄປຂອງລຸງ ແລະ ພັນລະຍາຈຶ່ງເປັນຄວາມໂສກເສົ້າທີ່ສຸດຂອງທ່ານ ສາດສະດາເປັນຢ່າງຍິ່ງ ຫຼັງຈາກການເສຍຊີວິດຂອງອະບູຕໍລິບ ຜູ້ເປັນລຸງຂອງທ່ານນະບີ

---

1.ນຳສະເໜີໂດຍ ອິມາມ ອັລບຸກໍຣີ ອິມາມມຸສລິມ ແລະ ຊີເຣາະຫ໌ ອິບນີ ຮິຊາມ ເລັ່ມທີ່ 1 ໜ້າ 371

ທ່ານສາດສະດາໄດ້ພະຍາຍາມຊອກຫາຜູ້ສະໜັບສະໜູນເພື່ອສືບຕໍ່ພາລະກິດຂອງທ່ານໃນການເຊີນຊວນສູ່ອິດສະລາມຕໍ່ໄປ ທ່ານຈຶ່ງເດີນທາງໄປເມືອງ "ຕໍອິຟ" ຫວັງວ່າປະຊາຊົນຂອງເມືອງນັ້ນຈະສະໜັບສະໜູນທ່ານ ແຕ່ທ່ານຕ້ອງພົບກັບຄວາມຜິດຫວັງ ທ່ານຖືກເຍາະເຍີ້ຍໂດຍຊາວເມືອງ ແລະ ໄດ້ຖືກໂຈມຕີໂດຍ ຈາກຊາວຕໍອິຟ ທ່ານສາດສະດາຈຶ່ງໄດ້ກັບຄືນໄປ ມັກກະຫ໌

ຕໍ່ມາໃນລະດູການ ຮັດຈ໌ ທ່ານສາດສະດາ ﷺ ໄດ້ໄປພົບກັບຕະກູນຕ່າງໆ ແຕ່ບໍ່ພົບວ່າຈະມີຜູ້ໃດທີ່ຈະໃຫ້ການສະໜັບສະໜູນທ່ານ ຈົນກະທັ່ງອັລລໍຫ໌ ໃຫ້ຂະນະຂອງຊາວເມືອງຢາສຣິບ (ມາດີນະຫ໌) ຊຶ່ງປະກອບດ້ວຍຊາວເອົາສ໌ ແລະ ຄ໊ອຊຣ໊ອຈ ໄດ້ເຊື່ອສັດທາໃນທ່ານສາດສະດາ ﷺ ແລະເຮັດສົນທິສັນຍາເພື່ອສະໜັບສະໜູນທ່ານ

## 8.1 ຈຸດຢືນຂອງທ່ານສາດສະດາ ມຸຮຳໝັດຕໍ່ການທົດສອບຕ່າງໆ

ທ່ານສາດສະດາມີພຶດຕິກຳທີ່ເຂັ້ມແຂງສົມກັບສານອັນຍິ່ງໃຫຍ່ທີ່ທ່ານໄດ້ຮັບ ໃນຂະນະທີ່ທ່ານ ແລະ ບັນດາຊໍຮາບະຫ໌ ຕ້ອງປະສົບກັບການທົດສອບຕ່າງໆ ຊຶ່ງຖືໄດ້ວ່າເປັນບົດຮຽນອັນລ້ຳຄ່າ ທ່ານໄດ້ຝຶກຝົນການສັດທາຄວາມເຊື່ອທີ່ເຂັ້ມແຂງໃນແກ່ບັນດາຊໍຮາບະຫ໌ ເຮັດໃຫ້ພວກເຂົາມີຄວາມຕັ້ງໃຈຢ່າງໜັກແໜ້ນ ແລະ ຍອມຮັບກັບບົດທົດສອບ ຕ່າງໆ ທ່ານໄດ້ປູກຫຼັກການຂອງສາດສະໜາຢູ່ໃນຫົວໃຈຂອງພວກເຂົາ ທ່ານສາດສະດາໄດ້ໄປພົບກັບພວກເຂົາຢ່າງລັບໆເພື່ອສອນ ອັລກຸຣອານ ແລະ ບົດບັນຍັດທີ່ມາຈາກພຣະເຈົ້າ

ທ່ານສ້າງຄວາມສຳພັນທີ່ເຂັ້ມແຂງກັບພຣະຜູ້ເປັນເຈົ້າໂດຍການຕື່ນຂຶ້ນມາໃນຊ່ວງເຄິ່ງໜຶ່ງຂອງຄ່ຳຄືນເພື່ອ ລະໜມາດກັບພວກເຂົາເຈົ້າ ຊຶ່ງສອດຄ່ອງກັບພຣະບັນຊາແຫ່ງດຳລັດຂອງ ອັລລໍຫ໌ ຊຸບຮານະຮຸ ວະຕາອາລາ ທີ່ວ່າ:

﴿ يَٰٓأَيُّهَا ٱلْمُدَّثِّرُ ۝ قُمْ فَأَنذِرْ ۝ وَرَبَّكَ فَكَبِّرْ ۝ وَثِيَابَكَ فَطَهِّرْ ﴾

1. **ໂອ້ ຜູ້ທີ່ຫົ່ມກາຍຢູ່**
2. **ຈົ່ງລຸກຂຶ້ນ (ລະໜມາດ) ໃນຕອນກາງຄືນ ເວັ້ນແຕ່ພຽງແຕ່ເລັກນ້ອຍເທົ່ານັ້ນ**
3. **ຄືໃນເຄິ່ງໜຶ່ງຂອງຕອນກາງຄືນ ຫຼືໜ້ອຍກວ່ານັ້ນເລັກນ້ອຍ**
4. **ຫຼືຫຼາຍກວ່ານັ້ນ ແລະ ຈົ່ງອ່ານອັລກຸຣອານ ຊ້າໆ ແລະ ຈັງຫວະ (ໂດຍຊັດຖ້ອຍຊັດຄຳ)**

(ອັລມຸດັຊຊີຣ 73:1-4)

ພວກເຂົາເຮັດແບບນັ້ນເປັນເວລາເຖິງໜຶ່ງປີຈົນຕີນຂອງພວກເຂົາບວມ ພຣະອົງອັລລໍຫ໌ ﷻ ຈຶ່ງໃຫ້ເຂົາເຈົ້າບັນເທົາທຸກ ດັ່ງທີ່ພຣະອົງໄດ້ກ່າວວ່າ:

﴿ إِنَّ رَبَّكَ يَعْلَمُ أَنَّكَ تَقُومُ أَدْنَىٰ مِن ثُلُثَيِ ٱلَّيْلِ وَنِصْفَهُۥ وَثُلُثَهُۥ وَطَآئِفَةٌ مِّنَ ٱلَّذِينَ مَعَكَ ۚ وَٱللَّهُ يُقَدِّرُ ٱلَّيْلَ وَٱلنَّهَارَ ۚ عَلِمَ أَن لَّن تُحْصُوهُ فَتَابَ عَلَيْكُمْ ۖ فَٱقْرَءُوا۟ مَا تَيَسَّرَ مِنَ ٱلْقُرْءَانِ ۚ عَلِمَ أَن سَيَكُونُ مِنكُم مَّرْضَىٰ ۙ وَءَاخَرُونَ يَضْرِبُونَ فِى ٱلْأَرْضِ يَبْتَغُونَ مِن فَضْلِ ٱللَّهِ ۙ وَءَاخَرُونَ يُقَٰتِلُونَ فِى سَبِيلِ ٱللَّهِ ۖ فَٱقْرَءُوا۟ مَا تَيَسَّرَ مِنْهُ ۚ وَأَقِيمُوا۟ ٱلصَّلَوٰةَ وَءَاتُوا۟ ٱلزَّكَوٰةَ وَأَقْرِضُوا۟ ٱللَّهَ قَرْضًا حَسَنًا ۚ وَمَا تُقَدِّمُوا۟ لِأَنفُسِكُم مِّنْ خَيْرٍ تَجِدُوهُ عِندَ ٱللَّهِ هُوَ خَيْرًا وَأَعْظَمَ أَجْرًا ۚ وَٱسْتَغْفِرُوا۟ ٱللَّهَ ۖ إِنَّ ٱللَّهَ غَفُورٌ رَّحِيمٌۢ ﴾

**"ແລະ ອັລລໍຫ໌ ໄດ້ຊົງກຳໜົດເວລາຕອນກາງຄືນ ແລະ ກາງເວັນ ພຣະອົງຮູ້ວ່າພວກເຈົ້າບໍ່ສາມາດທີ່ຈະກຳນົດເວລາໄດ້ ດ້ວຍເຫດນີ້ ພຣະອົງຈຶ່ງໄດ້ຊົງຜ່ອນຜັນໃຫ້ແກ່ພວກເຈົ້າ ສະນັ້ນ ພວກເຈົ້າຈົ່ງອ່ານ ອັລກຸຣອານ Qur'an ຕາມແຕ່ສະດວກສຳລັບທ່ານເຖີດ ພຣະອົງຊົງຮູ້ວ່າບາງຄົນໃນພວກເຈົ້າອາດເຈັບປ່ວຍ ແລະ ບາງຄົນອື່ນໆ ຕ້ອງເດີນທາງໄປດິນແດນອື່ນ ເພື່ອສະແຫວງຫາຈາກຄວາມໂປດປານຂອງ ອັລລໍຫ໌ ແລະ ບາງຄົນຕໍ່ສູ້ໃນຫົນທາງຂອງ ອັລລໍຫ໌**

**ດັ່ງນັ້ນພວກເຈົ້າອ່ານຕາມສະດວກຈາກອັລກຸຣອານເຖີດ ແລະ ຮັກສາການ ລະຫມາດ ແລະ ຈົ່ງບໍລິຈາກຊະກາດ ແລະ ຈົ່ງໃຫ້ອັລລໍຫ໌ກູ້ຢືມກັບເຈົ້າດ້ວຍສິ່ງທີ່ດີທີ່ສຸດ ແລະ ຄວາມດີອັນໃດກໍ່ຕາມທີ່ທ່ານເຮັດສຳລັບຕົວທ່ານເອງ ທ່ານຈະພົບເຫັນມັນ ນະທີ່ ອັລລໍຫ໌ ຊຶ່ງເປັນລາງວັນທີ່ດີກວ່າ ແລະ ຍິ່ງໃຫຍ່ກວ່າ ດັ່ງນັ້ນ ພວກເຈົ້າຈົ່ງຂອກຫາການໃຫ້ອະໄພຈາກອັລລໍຫ໌ ແທ້ຈິງແລ້ວອັລລໍຫ໌ ແມ່ນຜູ້ຊົງໃຫ້ອະໄພ ຜູ້ຊົງເມດຕາ"** (ອັລມຸຊຳມິລ 73: 20)

ການຕື່ນຂຶ້ນເພື່ອລະຫມາດໃນຍາມຄໍ່າຄືນ ມີຜົນຢ່າງຍິ່ງໃຫຍ່ຕໍ່ການກະກຽມຄົນ ເພື່ອແບກຫາບພາລະຄວາມສຳຄັນອັນໃຫຍ່ຫລວງໃນອະນາຄົດ ແລະ ນີ້ແມ່ນສິ່ງທີ່ ພຣະອົງອັລລໍຫ໌ ﷻ ຊົງໄດ້ກ່າວເຖິງໃນການໃຫ້ຄຳແນະນຳແກ່ນະບີຂອງພຣະອົງ ວ່າ:

﴿ إِنَّا سَنُلْقِى عَلَيْكَ قَوْلًا ثَقِيلًا ﴾

﴿ إِنَّ نَاشِئَةَ ٱلَّيْلِ هِىَ أَشَدُّ وَطْـًٔا وَأَقْوَمُ قِيلًا ﴾

5. **ແທ້ຈິງ ເຮົາ (ອັລລໍຫ໌ ﷻ) ຈະໃຫ້ວະຮີຍ໌ເປັນຖ້ອຍຄຳອັນໜັກຫນ່ວງແກ່ເຈົ້າ ມຸຮຳຫມັດ**
6. **ແທ້ຈິງ ການຕື່ນຂຶ້ນໃນຍາມຄໍ່າຄືນ ມັນເປັນເວລາທີ່ນ່າປະທັບໃຈຍິ່ງ ແລະ ມັນເປັນການອ່ານທີ່ຊັດເຈນຫຼາຍ** (ອັລມຸຊຳມິລ 73: 5 ແລະ 6)

ດ້ວຍການຝຶກອົບຮົມຢ່າງເຂັ້ມແຂງ ນີ້ແມ່ນສິ່ງຈຳເປັນສຳລັບທຸກຄົນທີ່ພົບກັບຜູ້ທີ່ຕໍ່ຕ້ານຂັດຂວ້າງ ໃນໜ້າທີ່ຂອງການຮຽກຮ້ອງເຊີນຊວນໄປສູ່ ອັລລໍຫ໌ ﷻ ໃນທຸກໆເວລາ ແລະ ທຸກໆສະຖານທີ່ ແລະ ຍັງມີຄວາມຈຳເປັນສຳລັບຊາວມຸດສະລິມທຸກໆ ຄົນທີ່ຕ້ອງການຊອກຫາຕົວເອງເພື່ອຜ່ານການທົດສອບຕ່າງໆ ຂອງໂລກນີ້ ແລະ ຄວາມປາຖະໜາ ອັລລໍຫ໌ ﷻ ໃຊ້ໃຫ້ນະບີ ມີຄວາມອົດທົນກັບສິ່ງທີ່ລາວປະສົບໃນການເຮັດໜ້າທີ່ເຊີນຊວນສູ່ອິດສະລາມ ບໍ່ວ່າຈະເປັນການເຍາະເຍີ້ຍ ແລະຄວາມເຈັບປວດຕ່າງໆ ນາໆ ດັ່ງທີ່ພຣະອົງໄດ້ກ່າວວ່າ:

﴿وَٱصْبِرْ عَلَىٰ مَا يَقُولُونَ وَٱهْجُرْهُمْ هَجْرًا جَمِيلًا﴾

**“ແລະ (ມູຮຳມັດ) ຈົ່ງອົດທົນກັບສິ່ງທີ່ເຂົາເຈົ້າເວົ້າ ແລະ ແຍກຕົວທ່ານອອກຈາກພວກເຂົາໃນລັກສະນະທີ່ດີງາມ, ສຸພາບ ອ່ອນໂຍນ”** (ອັລມຸສຊຳມິລ 73:10)

ທ່ານຣໍສູລ ຂອງ ອັລລໍຫ໌ ﷺ ໄດ້ເຕືອນຊໍຮາບະຫ໌ ໃຫ້ມີຄວາມອົດທົນກັບສິ່ງທີ່ເຂົາເຈົ້າໄດ້ປະສົບ ບໍ່ວ່າຈະເປັນການທໍລະມານ ຫຼືການທົດສອບຕ່າງໆ ແລະ ໄດ້ສັນຍາວ່າຈະໄດ້ຮັບສວນສະຫວັນເປັນການຕອບແທນ ເນື່ອງຈາກຄວາມອົດທົນ ແລະ ຍືນຫຍັດນັ້ນເອງ ທ່ານສາດສະດາ ﷺ ໄດ້ຜ່ານຄອບຄົວຂອງຍາຊີຣ ໃນຂະນະທີ່ຖືກທໍລະມານ, ທ່ານເວົ້າວ່າ:

(اصبروا آل ياسر فإن موعدكم الجنة)

**“ຄອບຄົວຂອງຍາຊີຣເອີ່ຍ ຈົ່ງອົດທົນເຖີດ ເພາະສັນຍາຂອງພວກທ່ານຄືສວນສະຫວັນ”**[1]

ຄ໊ອບບ໊າບ ບິນ ອັລອະຣ໊ອດ ແລະ ຊໍຮາບະຫ໌ໄດ້ມາຫາທ່ານສາດສະດາ ﷺ ຮ້ອງຂໍໃຫ້ທ່ານວິງວອນຂໍຕໍ່ອັລລໍຫ໌ ﷻ ໃຫ້ເຂົາເຈົ້າຜ່ອນຄາຍຈາກການຖືກລົງໂທດດ້ວຍເຖີດ ໃບໜ້າຂອງທ່ານສາດສະດາໄດ້ປ່ຽນສີທັນທີ ແລະ ທ່ານເວົ້າວ່າ:

لقد كان من قبلكم يحفر له حفرة ويجاء بالمنشار، فيوضع على رأسه، فيشق، ما يصرفه عن دينه، ويمشط بأمشاط من الحديد ما دون عظمه من لحم أو عصب، ما يصرفه عن دينه

**ແທ້ຈິງ ຄົນລຸ້ນກ່ອນພວກທ່ານໄດ້ຖືກຂຸດຂຸມຝັງ ແລະ ໄດ້ຖືກເລື່ອຍດ້ວຍເລື່ອຍຈາກເທິງຫົວຂອງພວກເຂົາລົງມາ ແຕ່ມັນຍັງບໍ່ເຮັດໃຫ້ລາວປ່ຽນສາສະໜາຂອງລາວ ແລະ ເຄີຍຖືກຄູດດ້ວຍເຫຼັກກ້າ ຈົນເນື້ອໜັງຕົກຈາກກະດູກ ຫຼື ປະສາດເສຍຫາຍແຕ່ລາວຍັງບໍ່ຍອມເລີກຈາກການນັບຖືສາດສະໜາຂອງຕົນ**[2]

---

1.ເບິ່ງ ອິບຣໍຫິມ ອັລ ອະລີຍະຫ໌ ສໍຮີຫ໌ ອັສຊີເຣາະຫ໌ ອັນນະບະວິຍະຫ໌ 70 ແລະ ອັລໄຮຊະມີ ໄດ້ກ່າວໄວ້ໃນ ອັລມຸຈຳມະອູ ເລັ່ມ 9 ໜ້າ 293 ລາຍງານໂດຍ ຄອບຣໍນີ ແລະ ສາຍງານມັ່ນໃຈໄດ້

ຄັ້ງເມື່ອທ່ານສາດສະດາ ﷺ ເຫັນວ່າຊໍຮາບະຫ໌ໄດ້ຮັບອັນຕະລາຍຫຼາຍຂຶ້ນ ຈົນບາງຄົນເຖິງກັບເສຍຊີວິດ ທ່ານຈຶ່ງໃຫ້ຄົນທີ່ມີຄວາມສາມາດອົບພະຍົບໄປຢູ່ໃນດິນແດນເອທິໂອເປຍ ຫຼືອາບີຊີເນຍ ໂດຍທ່ານເວົ້າວ່າ:

إن بأرض الحبشة ملكا لا يظلم عنده أحد ، فالحقوا ببلاده حتى يجعل الله لكم فرجا ومخرجا مما أنتم فيه

**"ແທ້ຈິງແລ້ວ ໃນແຜ່ນດິນອະບີຊີເນຍ ຍັງມີກະສັດອົງໜຶ່ງ ບໍ່ມີຜູ້ໃດຖືກອະທຳຈາກພຣະອົງນັ້ນ ສະນັ້ນ ພວກເຈົ້າຈົ່ງໄປທີ່ແຜ່ນດິນຂອງເພິ່ນທອນ ເພື່ອວ່າອັລລໍຫ໌ ຈະຊົງໃຫ້ພົ້ນໄພ ແລະ ລອດພົ້ນຈາກສິ່ງທີ່ພວກທ່ານກຳລັງປະສົບຢູ່ນີ້"**

ໄດ້ມີຊໍຮາບາະຫ໌ກຸ່ມໜຶ່ງໄດ້ອົບພະຍົບໄປອາບີຊີເນຍ (ເອທິໂອເປຍ) ເປັນຄັ້ງທຳອິດ, ມີຊາຍ 12 ຄົນ ແລະ ຍິງ 4 ຄົນ, ພວກເຂົາເຈົ້າຢູ່ທີ່ນັ້ນເປັນເວລາຫຼາຍເດືອນ ແລະ ໄດ້ເດີນທາງກັບຄືນໄປເມືອງມັກກະຫ໌ ໂດຍຄິດວ່າຄວາມຮຸນແຮງຈາກຊາວກູເຣຊ ໄດ້ຫຼຸດລົງແລ້ວ ແຕ່ກັບພົບວ່າ ພວກກຸເຣຊ ໄດ້ໃຊ້ກຳລັງເຮັດເລວຮ້າຍ ແລະ ຮຸນແຮງກວ່າເກົ່າ ທ່ານສາດສະດາໄດ້ອະນຸຍາດໃຫ້ພວກເຂົາກັບຄືນໄປ ອາບີຊີເນຍ ອີກເທື່ອໜຶ່ງອີກ ພວກເຂົາເຈົ້າໄດ້ອົບພະຍົບ ແລະ ຈຳນວນຫຼາຍກວ່າຄັ້ງທຳອິດ ໂດຍມີຜູ້ຊາຍ 83 ຄົນ ແລະ ຍິງ 18 ຄົນ, ທັງໝົດໄດ້ພົບເຫັນຄວາມປອດໄພ ແລະ ຄວາມສະບາຍໃຈຢູ່ໃນແຜ່ນດິນນັ້ນ ໂດຍສະເພາະຫຼັງຈາກ ພວກກຸເຣຊ ພະຍາຍາມຊັກຊວນໃຫ້ກະສັດຂອງ ອາບີຊີເນຍ ເພື່ອ ໃຫ້ສົ່ງພວກເຂົາກັບຄືນໄປ ມັກກະຫ໌ ໃນທີ່ສຸດທ້າຍຕ້ອງລົ້ມເຫລວໄປ[3]

*ດ້ວຍການຝຶກອົບຮົມຫລັກການສັດທາ ແລະ ການຊີ້ນຳອັນສູງສົ່ງທີ່ມາຈາກພຣະຜູ້ເປັນເຈົ້າ ເຮັດໃຫ້ທ່ານຣໍສູລ ແລະ ບັນດາຊໍຮາບະຫ໌ ໄດ້ຜ່ານພົ້ນຊ່ວງເວລາທີ່ເລວຮ້າຍທີ່ສຸດຂອງການເຜີຍແຜ່ສາດສະໜາ ຢູ່ ນະຄອນມັກກະຫ໌ໄດ້ຢ່າງໝັ້ນຄົງ ແລະ ເດັດດ່ຽວ ຈົນກ່ະທັ່ງ ອັລລໍຫ໌ (ຊບ) ໄດ້ໃຫ້ທາງອອກ ໂດຍໃຫ້ທ່ານ ນະບີ ຊັລລັລລໍຮຸ ອະໄລຮິວະຊັລລຳ ອົບພະຍົບໄປ ສູ່ນະຄອນມະດີນະຫ໌*

### 8.2 ການເຂົ້າຮັບອິດສະລາມຂອງຊາວອັນຊໍຣ

ສິ່ງທີ່ເຫັນໄດ້ຊັດເຈນໃນການອົບພະຍົບຂອງທ່ານສາດສະດາ ﷺ ນັ້ນເພື່ອໃຫ້ແນ່ໃຈວ່າການຮຽກຮ້ອງແຫ່ງອິດສະລາມເກີດຂຶ້ນຈາກການດຳເນີນການຂອງພຣະຜູ້ເປັນເຈົ້າຜູ້ຊົງຮອບຮູ້ ຜູ້ທີ່ສັງເກດເບິ່ງ

---

2.ຊໍຮີຫ໌ ອັລບຸກຄໍຣີ ກິຕາບ ມະນາກິບູລອັນສອຣ ບາບ "ສິ່ງທີ່ທ່ານນະບີ ແລະ ຊໍຮາບະຫ໌ຂອງທ່ານປະສົບຈາກບັນດາພວກມຸຊຣິກີນ"

3.ເລື່ອງລາວລາຍລະອຽດຂອງການອົບພະຍົບໄປອະບິສຊີເນຍນັ້ນ ເບິ່ງຈາກໜັງສື ຊີເຣາະຫ໌ ຂອງອິບນີ ຮີຊາມ ເລັ່ມ 1 ໜ້າ 344 ແລະ ຊີເຣາະຫ໌ ອັນນະບະວີຍະຫ໌ ຂອງອິບນີ ກະຊີຣ ເລັ່ມ 2 ໜ້າ 3

ຢ່າງໃກ້ຊິດ ເອົາໃຈໃສ່ສະເຫມີ ແລະ ຊົງຄຸ້ມຄອງຢ່າງບໍ່ຄາດສາຍຕາ ພຣະອົງໄດ້ຈັດຕຽມບ່ອນທີ່ເໝາະສົມ ຄືເມືອງຢາດຣິບ (ເປັນຊື່ຂອງເມືອງ ອັລ-ມາດີນະຫ໌ກ່ອນການອົບພະຍົບ)

ເພື່ອເປັນບ່ອນຢູ່ຂອງທ່ານສາດສະດາຂອງພຣະອົງﷺ ໃນການອົບພະຍົບ ແລະ ເປັນການອຸປະຖຳ ສະຫນັບສະຫນູນວຽກງານການເຜີຍແຜ່ ຫຼັງຈາກມັກກະຫ໌ ມີແຕ່ຄວາມຄັບແຄບ ອັລລໍຫ໌ຊົງໃຫ້ເຜົ່າເອົາຊ໌ ແລະ ເຜົ່າຄ໊ອຊຣ໊ອຈ ຊາວເມືອງທີ່ອະໄສຢູ່ **ຢາດຣິບ** ພ້ອມທີ່ຈະໃຫ້ຄວາມຮ່ວມມືໃນການເຜີຍແຜ່ອິດສະລາມ ຕະຫຼອດຈົນການປະເຊີນກັບອຸປະສັກຕ່າງໆ ຫຼັງຈາກຫົວຫນ້າຂອງຊົນເຜົ່າກຸເຣຊ ໃນນະຄອນມັກກະຫ໌ ປະຕິເສດທີ່ບໍ່ຍອມຮັບພັນທະໜ້າທີ່ອັນນີ້

ຊາວຢິວກຸ່ມໜຶ່ງທີ່ອາໄສຢູ່ຄຽງຄູ່ກັບເຜົ່າເອົາຊ໌ ແລະ ເຜົ່າຄ໊ອຊຣ໊ອຈ ພວກເຂົາເຈົ້າໄດ້ຫລົບໜີຈາກການກົດຂີ່ຂອງຊາວຄຣິດສະຕຽນ (ນະສໍຣໍ) ແລະ ພົບເຫັນພວກຕົນເອງນັ້ນມີຈຳນວນນ້ອຍ ແລະ ຢ້ານວ່າມັນຈະສູນພັນ ຖ້າຫາກໄປຮ່ວມໃນການສູ້ຮົບຢູ່ເລື້ອຍໆ ພວກນະສໍຣໍ ໄດ້ອອກອຸບາຍແຊກແຊງໃຫ້ເກີດຄວາມຂຸ່ນຂ້ອງ ຫມອງໃຈໃນຫມູ່ຊາວອາຣັບ ແລະ ບໍ່ຍອມເລີກພຶດຕິກຳກໍ່ກວນ ເຮັດໃຫ້ຊາວອາຣັບຕ້ອງປະຫັດປະຫານກັນເອງຢ່າງຕໍ່ເນື່ອງຢ່າງບໍ່ມີເຫດຜົນ ໃນຂະນະດຽວກັນ ກຸ່ມຍິວທັງຫຼາຍເລີ່ມມີພະລັງ ແລະຈຳນວນຫລາຍຂຶ້ນ ບວກກັບຊັບພະຍາກອນຂອງພວກເຂົາກໍ່ເພີ່ມພູນຍິ່ງຂຶ້ນ[1]

ເນື່ອງຈາກສົງຄາມ ເຮັດໃຫ້ຜູ້ນຳສ່ວນໃຫຍ່ຂອງຊົນເຜົ່າ ເຜົ່າເອົາຊ໌ ແລະ ເຜົ່າຄ໊ອຊຣ໊ອຈ ໄດ້ຮັບຄວາມເດືອດຮ້ອນຕົກຕ່ຳ ແລະ ຄວາມໝັ້ນຄົງ ໂດຍບໍ່ມີຄວາມສະຫງົບ ສະນັ້ນ, ແຕ່ລະເຜົ່າຕ້ອງການຫາທາງອອກເພື່ອໃຫ້ກຸ່ມຄົນທີ່ຍັງເຫຼືອຈາກເຜົ່າຕ່າງໆ ຢູ່ຕໍ່ໄປ ແລະ ພະຍາຍາມຮຽກຮ້ອງສັນຕິພາບ ແລະຄວາມຮັກແພງເຊິ່ງກັນ ແລະ ກັນ ຊາວຢິວໄດ້ບອກຊາວຢາດຣິບ ວ່າ **ທ່ານສາດສະດາຈະມາໃນໄວໆນີ້** ແລະ ໄດ້ຂົ່ມຂູ່ຕໍ່ການມາຂອງທ່ານສາດສະດານັ້ນ ໃນຂະນະທີ່ມີຄວາມຂັດແຍ້ງກັນນັ້ນ ພວກເຂົາເຈົ້າຈະປະຕິບັດຕາມ ແລະ ຮ່ວມມືກັບທ່ານສາດສະດາຜູ້ນັ້ນ ເພື່ອສູ້ຮົບຕໍ່ຊາວອາຣັບ ແລະ ເຮັດການຂ້າສັງຫານຊາວອາຣັບ ດັ່ງເຊັ່ນການສັງຫານຂ້າ ພວກ **ອ໊າດ** ແລະ ພວກ **ອິຣອມ** ດ້ວຍເຫດນີ້ ເຜົ່າເອົາຊ໌ ແລະເຜົ່າຄ໊ອຊຣ໊ອຈ ຈຶ່ງຟ້າວເຂົ້າຮັບອິດສະລາມ ເພື່ອເຮັດໃຫ້ການສູ້ຮົບສິ້ນສຸດລົງ ແລະ ລົບລ້າງຄວາມຫຍາບຄາຍຂອງສົງຄາມທີ່ຊາວຢິວເຄີຍຂົ່ມຂູ່ໄວ້ ອຸມມຸລ ມຸມິນີນ ອາອິຊະຫ໌ ຣໍດິຢັລລໍຫຸ ອັນຮູ ໄດ້ເວົ້າເຖິງເລື່ອງດັ່ງກ່າວວ່າ:

كانَ يَوْمُ بُعَاثٍ يَوْمًا قَدَّمَهُ اللَّهُ لِرَسولِهِ صَلَّى اللهُ عليه وسلَّمَ، فَقَدِمَ رَسولُ اللَّهِ صَلَّى اللهُ عليه وسلَّمَ وقَدِ افْتَرَقَ مَلَؤُهُمْ، وقُتِّلَتْ سَرَوَاتُهُمْ وجُرِّحُوا، قَدَّمَهُ اللَّهُ لِرَسولِهِ صَلَّى اللهُ عليه وسلَّمَ في دُخُولِهِمْ في الإِسْلَامِ

1. ຟີກຮຸສຊີເຣາະຫ໌ ອັລກໍສາລີ 103

**ວັນແຫ່ງ "ບຸອາສ" ແມ່ນວັນທີ່ອັລລໍຫ໌ ﷻໄດ້ຊົງປະທານໃຫ້ແກ່ສາດສະດາຂອງພຣະອົງ ຄືຂະນະທີ່ພວກບັນດາຫົວໜ້າຊົນເຜົ່າຂັດແຍ້ງກັນ ແລະ ການສັງຫານບັນດາສະເລີຍເສິກທີ່ໄດ້ຮັບບາດເຈັບ ອັລລໍຫ໌ ﷻໄດ້ປະທານໃຫ້ ຣໍສູລ ﷺ ກັບການທີ່ພວກເຂົາຍອມເຂົ້າຮັບອິດສະລາມ**[1]

ການອົບພະຍົບໄດ້ດຳເນີນໄປ ແລະ ເຮັດໃຫ້ເຫັນຊັດເຈນວ່າ ອັລລໍຫ໌ ﷻນັ້ນ ຊົງເປັນຫ່ວງເປັນໄຍກັບທ່ານສາດສະດາຂອງພຣະອົງ ﷺ ລວມເຖິງການເຜີຍແຜ່ສາສະໜານຳ ໃນຊ່ວງເທສະການຮັດຈ໌ ທ່ານນະບີ ﷺ ໄດ້ແນະນຳກັບເຜົ່າຕ່າງໆ ແລະ ຂໍຄວາມຮ່ວມມືຈາກພວກເຂົາຈົນກະທັ່ງໄດ້ພົບກັບຊາວຄ໊ອຊຣ໊ອຈ ຈຳນວນຫົກຄົນ ທ່ານໄດ້ຂໍໃຫ້ເຂົາເຈົ້າຢຸດ ແລ້ວທ່ານໄດ້ກ່າວວ່າ: **ພວກທ່ານແມ່ນໃຜ?**

ພວກເຂົາເຈົ້າຕອບວ່າ: **ພວກເຮົາເປັນກຸ່ມໜຶ່ງຈາກເຜົ່າ ຄ໊ອຊຣ໊ອຈ**

ທ່ານນະບີ ຈຶ່ງຖາມວ່າ: **ພວກທ່ານແມ່ນຜູ້ສະວາມິພັກ ຕໍ່ຊາວຢິວ ບໍ່ແມ່ນບໍ?**

ເຂົາເຈົ້າຕອບວ່າ: **ແມ່ນແລ້ວ**

ທ່ານສາດສະດາຍັງໄດ້ກ່າວວ່າ: **ພວກທ່ານຈະຟັງສິ່ງທີ່ຂ້ອຍເວົ້າບໍ?**

ເຂົາເຈົ້າຕອບວ່າ: **ໄດ້**

ພວກເຂົານັ່ງລົງ ແລະ ທ່ານສາດສະດາ ﷺ ໄດ້ເຊື້ອເຊີນພວກເຂົາໃຫ້ເຊື່ອໃນ ອັລລໍຫ໌ ຊຸບຮານະຮູ ວະຕາອາລາ ແລະ ໄດ້ສະເໜີອິດສະລາມໃຫ້ກັບເຂົາເຈົ້າ ແລະ ອ່ານ ອັລກຸຣອານໃຫ້ເຂົາເຈົ້າຟັງ

ພວກເຂົາຈຶ່ງເວົ້າວ່າ: **ທ່ານພີ່ນ້ອງທັ້ງຫຼາຍເອີຍ ພວກທ່ານຮູ້ດີ ຂໍສະບານດ້ວຍພຣະນາມຂອງອັລລໍຫ໌ ﷻວ່າແທ້ຈິງ ເຂົາຄືນະບີ ທີ່ພວກຢິວເຄີຍຂົ່ມຂູ່ພວກທ່ານໄວ້ ໂດຍການອ້າງເຖິງເຂົາຜູ້ນີ້ ຢ່າໃຫ້ພວກຢິວໄດ້ຕິດຕໍ່ກັບທ່ານກ່ອນໜ້າພວກເຈົ້າເລີຍ**

ດັ່ງນັ້ນ ພວກເຂົາຈຶ່ງໄດ້ຮັບເອົາຄຳເຊີນຂອງທ່ານສາດສະດາ ແລະ ເຊື່ອຟັງໂດຍການຮັບເອົາສິ່ງຕ່າງໆຂອງອິດສະລາມ ທີ່ທ່ານໄດ້ສະເໜີໃຫ້

ພວກເຂົາເຈົ້າເວົ້າວ່າ: "**ພວກເຮົາໄດ້ປະຖິ້ມພັກພວກຂອງພວກເຮົາ ແລະ ບໍ່ມີຜູ້ໃດເລີຍທີ່ຈະເປັນສັດຕູ ຫຼື ມີຄວາມຊົ່ວຮ້າຍ ແລະ ຫວັງວ່າ ອັລລໍຫ໌ ຈະລວມພວກເຮົາທັງຫມົດຮ່ວມກັນເພາະດ້ວຍຈາກທ່ານ ພວກເຮົາຈະລ່ວງໜ້າໄປກ່ອນ ແລະ ບອກເລື່ອງລາວການຮຽກຮ້ອງເຊີນຊວນຂອງທ່ານໃຫ້ພັກພວກເຮົາໄດ້ຮັບຮູ້ ຕະຫຼອດຈົນເລື່ອງທີ່ ພວກເຮົາຕອບສະໜອງຕໍ່ທ່ານຈາກສາສະໜານີ້ ຖ້າຫາກອັລລໍຫ໌ (ຊບ) ໄດ້ລວມພວກເຂົາເພື່ອປ່ຽນເປັນອິດສະລາມ ກໍ່ຈະບໍ່ມີຄົນອື່ນທີ່ຈະດີກ່ວາເຈົ້າ**" ແລະ ພວກເຂົາໄດ້ກັບຄືນໄປເມືອງຢາດຣິບ (ມາດີນະຫ໌) ໂດຍການນັບຖືສາສະໜາໃໝ່ຕິດໂຕໄປນຳ ໃນຂະນະທີ່ທ່ານ

ສາດສະດາ ﷺ ລໍຖ້າຜົນທີ່ທ່ານປູກໄວ້ (ຫມາຍເຖິງລໍຖ້າຂ່າວດີຈາກກຸ່ມຄົນ ຫົກຄົນນັ້ນ) ທ່ານຍັງຄົງເຜີຍແຜ່ສາດສະໜາອິດສະລາມຢູ່ຢ່າງຕໍ່ເນື່ອງຢູ່ທີ່ ມັກກະຫ໌[2]

## 8.3 ການເຮັດສົນທິສັນຍາຄັ້ງທີ່ ໜຶ່ງ

ຄວາມເຊື່ອສັດທາໄດ້ມີຢູ່ເຕັມໄປໃນໃຈຂອງຄົນໃນເຜົ່າຄ໊ອດຣ໊ອຈ ທັງຫມົດຫົກຄົນ ສ້າງຄວາມສະຫງົບສຸກ ແລະ ຄວາມພໍໃຈ ເຕັມໄປດ້ວຍຄວາມປິ້ມປິຕິຍິນດີ ເນື່ອງໃນຄວາມຫວັງທີ່ຈະເຮັດໃຫ້ເກີດສັນຕິພາບໃນບັນດາພີ່ນ້ອງຊົນເຜົ່າ **ເອົາສ໌** ຈຶ່ງເຮັດໃຫ້ພວກເຂົາເຈົ້າໄດ້ເວົ້າກ່ຽວກັບອິດສະລາມ ແລະ ເຊື້ອເຊີນປະຊາຊົນຊາວເມືອງ ຢາສຣິບ ໃຫ້ປ່ຽນມາເປັນອິດສະລາມ ຈົນກະທັ້ງໃນວົງການສົນທະນາຂອງຊົນເຜົ່າ **ເອົາສ໌** ແລະ **ຄ໊ອດຣ໊ອຈ** ມີແຕ່ເວົ້າກ່ຽວກັບອິດສະລາມ ແລະ ເວົ້າກ່ຽວກັບອິດສະລາມຢ່າງຕໍ່ເນື່ອງໃນທຸກໆບ້ານ ແລະ ການເຊື້ອເຊີນຊວນຂອງເຂົາເຈົ້າໄດ້ເຮັດໃຫ້ປະຊາຊົນປ່ຽນມານັບຖືອິດສະລາມ

ເມື່ອບຸນ ຮັດຈ໌ Hajj ມາຮອດໃນປີຕໍ່ມາ ຊາວຢາດຣິບ 12 ຄົນຂອງ ໄດ້ມາເຮັດພິທີຮັດຈ໌ 10 ຄົນຈາກເຜົ່າ**ຄ໊ອດຣ໊ອຈ** ແລະ 2 ຄົນ ຈາກເຜົ່າ**ເອົາສ໌** ພວກເຂົາເຈົ້າໄດ້ໄປພົບກັບສາດສະດາທີ່ **ອັລອະກັບະຫ໌** ແມ່ນບ່ອນທີ່ມີນາ ພວກເຂົາເຈົ້າໄດ້ໃຫ້ສັດຕະຍາບັນກັບທ່ານສາດສະດາ ເພື່ອປະຕິບັດຕາມກົດຫມາຍອິດສະລາມ, ຈະລິຍະທຳຈັນຍາບັນ ຕະຫຼອດຈົນການອຸທິດຕົນຕໍ່ ອັລລໍຫ໌ ﷻ ພັກດີສັດຊື່ຕໍ່ ຣໍສູລ ຂອງພຣະອົງ ແຕ່ການໃຫ້ສັດຕະຍາບັນໃນເວລານັ້ນ ບໍ່ໄດ້ລະບຸວ່າຈະຕ້ອງໃຫ້ບ່ອນພັກພິງ ຫຼື ໃຫ້ການອຸປະທຳຄຸ້ມກັນການເຜີຍແຜ່ສາດສະໜາຂອງທ່ານນະບີມູຮຳໝັດ ແຕ່ຢ່າງໃດ ອຸບາດະຫ໌ ບິນ ອັຊສໍມິດ ຣໍດີຢັລລໍຫູອັນຮຸ ໄດ້ກ່າວວ່າ: "**ພວກເຮົາໄດ້ໃຫ້ສັດຕະຍາບັນກັບສາດສະດາ ໃນການທີ່ພວກເຮົາບໍ່ໄດ້ເຊື່ອມໂຍງຕັ້ງພາຕີສິ່ງໃດກັບ ອັລລໍຫ໌ (ຊບ) ພວກເຮົາຈະບໍ່ລັກຂະໂມຍ ພວກເຮົາຈະບໍ່ລ່ວງລະເມີດທາງເພດ (ເຮັດ ຊີນາ), ພວກເຮົາຈະບໍ່ຂ້າເດັກນ້ອຍລູກໆຂອງພວກເຮົາ ພວກເຮົາຈະບໍ່ເວົ້າຄວາມຕວົະເທັດ ແລະ ພວກເຮົາຈະບໍ່ຝ່າຝືນທ່ານສາດສະດາ ໃນເລື່ອງຂອງຄຸນງາມຄວາມດີ**"[3]

ເມື່ອການເຮັດຫັຈໄດ້ສິ້ນສຸດລົງ ທ່ານສາດສະດາໄດ້ຈຶ່ງສົ່ງ **ມຸສອັບ ບິນ ມຸໄມຣ໌** ຣໍດີຢັລລໍຮຸອັນຮູ ເພື່ອໄປເຮັດໜ້າທີ່ບົດບັນຍັດກົດໝາຍ ຂອງອິດສະລາມ ແລະ ສອນອັລກຸຣອານໃຫ້ພວກເຂົາ ເພື່ອສາມາດນຳພາເປັນອິມາມລະໝາດຫມູ່ພວກເຂົາເອງ

---

1.ເບິ່ງ ໜັງສື ສໍຣີຫຸລ ບຸກຄໍຣີ ກິຕາບບຸລມະນາກິບ ບາບ ມະນາກິບຸລ ອັນສອຣ ຫະດີຊທີ່ 3777 ຟັດຮຸລບານີ ເລັ່ມທີ່ 7 ໜ້າ 110

2.ເລື່ອງການເຂົ້າຮັບອິດສະລາມຂອງຄົນກຸ່ມນີ້ ເບິ່ງທີ່ໜັງສື ຊີເຣາະຫ໌ ອິບນີ ຮີຊາມ ເລັ່ມ 2 ໜ້າ 38 ແລະ ໜັງສື ດະລາອີ ລຸລນຸບູວະຫ໌ ຂອງ ອັລໄບຮາກີ ເລັ່ມ 2 ໜ້າທີ່ 433 ແລະ ອັລກຸບຣໍ ຂອງ ອິບນີ ຊະອູດ໌ ເລັ່ມ 1 ໜ້າ 218

3.ເລື່ອງການໃຫ້ສັດຕະຍາບັນ ເບິ່ງໜັງສື ຊໍຣີຫ໌ອັລບຸກຄໍຣີ ມະນາກິບຸລອັນຊໍຣ ບາບບຸ ວຸຟດູ້ລອັນຊໍຣ ວະໄບອະຕຸລ ອະກັບະຫ໌ ແລະຊໍຣີຫ໌ມຸສລິມ ກິຕາບບຸ້ລຮຸດູດ ບາບບຸ້ລຮຸດູດ ກັຟຟາຣອດ ລິອະຫ໌ລິຮາ ຊີເຣາະອິບນຸຊີຣາມ 39-41

**ມຸສອັບ ບິນ ມຸໄມຣ໌** ຣໍດິຍັລລໍຮຸອັນຮູ ໄດ້ຮັບຄວາມສຳເລັດໃນການເຮັດໜ້າທີ່ອັນຍິ່ງໃຫຍ່ ທີ່ໄດ້ຮັບຄັດເລືອກຈາກທ່ານຣໍຊູລ ໃຫ້ໄປເຮັດໜ້າທີ່ນັ້ນ **ມຸສອັບ ບິນ ມຸໄມຣ໌** ຣໍດິຍັລລໍຮຸອັນຮູ ບໍ່ມີສິ່ງມະຫັດສະຈັນໃນການຊັກຊວນ ບໍ່ໄດ້ເວົ້າຫວ່ານລ້ອມເພື່ອຊັກຊວນ ຫຼືຄອບງຳຄົນໂດຍການໃຫ້ສັນຍາ ໃຫ້ຄວາມຫວັງກ່ຽວກັບຊີວິດຢູ່ໃນໂລກນີ້ **ມຸສອັບ** ບໍ່ໄດ້ເອົາເປົາເງິນ ຫຼືຊັບສົມບັດໄປແຈກຢາຍໃຫ້ຄົນທຸກຍາກ ເພື່ອຊັກຊວນໃຫ້ເຂົາເຈົ້າຜ່ານຄວາມທຸກຍາກ ເພາະການເຮັດແບບນັ້ນບໍ່ສາມາດເຂົ້າເຖິງຫົວໃຈ ແລະ ບໍ່ໄດ້ເຂົ້າໄປໃນຄວາມຕ້ອງການຮັບເອົາຢ່າງຈິງໃຈ ແຕ່ **ມຸສອັບ** ແມ່ນເຕັມໄປດ້ວຍສັດທາໃນການເຮັດໜ້າທີ່ອັນສູງສົ່ງຂອງເພິ່ນ ເຊິ່ງຜູ້ໃດທີ່ເຫັນກໍຈະພົບວ່າ ມີແສງສະຫວ່າງຢູ່ເທິງໃບຫນ້າຂອງລາວ ແລະການສະແດງອອກຢ່າງຈິງຈັງໃນຄຳເວົ້າຂອງລາວ ມີຄວາມຕັ້ງໃຈອັນແຮງກ້າທີ່ຈະເຜີຍແຜ່ສາສະຫນາ ແລະ ເສຍສະລະທຸ້ມເທອຸທິດຕົນເພື່ອອິດສະລາມ ມຸສອັບ ໄດ້ຮຽນຮູ້ສິ່ງຕ່າງໆມາຈາກນະຄອນມັກກະຫ໌ ພາຍໃຕ້ການກົດຂີ່ຂົ່ມເຫັງ ແລະ ການບີບຄັ້ນຈາກພວກທີ່ບໍ່ເຊື່ອປະຕິເສດ ສິ່ງສຳຄັນຄືລາວມີ ອັລກຸຣອານທີ່ຫນັກແຫນ້ນຢູ່ໃນຫົວໃຈຂອງລາວ ເມື່ອມຸສອັບ ໄດ້ອ່ານອັລກຸຣອານອອກມາ ຜູ້ຄົນບໍ່ສາມາດຢຸດຫ້າມຫົວໃຈຂອງເຂົາເຈົ້າຈາກການຕອບສະຫນອງກັບສິ່ງທີ່ເຂົາເຈົ້າໄດ້ຍິນ

**8.4 ການເຮັດສົນທິສັນຍາຄັ້ງທີ່ ສອງ**

ເກືອບຫນຶ່ງປີຢູ່ໃນເມືອງ ຍັສຣິບ **ມຸສອັບ ບິນ ມຸໄມຣ໌** ຣໍດິຍັລລໍຮຸອັນຮູ ພະຍາຍາມຢ່າງບໍ່ຢຸດບໍ່ຢັ້ງເພື່ອປະຕິບັດໜ້າທີ່ ບໍ່ທໍ້ຖອຍໃນການເຜີຍແຜ່ອິດສະລາມ ຈົນກະທັ່ງທຸກໆບ້ານຂອງຊາວອັນຊອຣ ຈາກເຜົ່າເອົາສ໌ ແລະ ຄ໊ອດຣອຈ ຈະຕ້ອງມີຜູ້ຊາຍຍິງທີ່ເປັນມຸດສະລິມຢູ່ພາຍໃນເຮືອນ ໂດຍສະເພາະແມ່ນຫົວຫນ້າເຜົ່າ ແລະ ຜູ້ເຖົ້າແກ່ຂອງຕະກູນ[1] ບໍ່ພຽງແຕ່ອິດສະລາມຈະສ້າງຄວາມສະນິດໃຫ້ກັບທັ້ງສອງຕະກູນຄືເຜົ່າ **ເອົາສ໌** ແລະ **ຄ໊ອດຣ໊ອຈ** ລົບລ້າງຄວາມແຕກແຍກ ແລະ ການເຂັ່ນຂ້າຈາກທັງສອງຊົນເຜົ່າ ອີກທັ້ງພວກເຂົາເຈົ້າຍັງໄດ້ນຳເອົາວິທີການດຳລົງຊີວິດຕາມຄຳແນະນຳຂອງສາດສະຫນາ ຈົນເຮັດໃຫ້ມີຄວາມປອດໄພໃນການເຜີຍແຜ່ ແລະ ສະຫນັບສະຫນູນທູດຂອງ ອັລລໍຫ໌ ﷺ ເຊິ່ງສຳຄັນກວ່າຜົນປະໂຫຍດຂອງເຂົາເຈົ້າເອງ ສິ່ງທີ່ຢູ່ໃນຈິດສຳນຶກຂອງຊົນເຜົ່າທັ້ງສອງ ພວກເຂົາເຈົ້າໄດ້ຮູ້ເຖິງສະພາບຂອງສາດສະດາມຸຮຳຫມັດ ແລະ ຊາວຊາຮາບາຜູ້ທີ່ຖືກກົດຂີ່ຂົ່ມເຫັງຢ່າງຮ້າຍແຮງໃນນະຄອນມັກກະຫ໌ ດັ່ງທີ່ ຈາບີຣ ບິນ ອັບດິລລາຫ໌ ອັລອັນຊໍຣີຍ໌ ຣໍດິຍັລລໍຮຸອັນຮູ ໄດ້ກ່າວວ່າ:

**ແລ້ວພວກເຮົາຈະປ່ອຍທ່ານສາດສະດາ ໃຫ້ຕົກຢູ່ໃນສະພາບດັ່ງກ່າວດົນປານໃດ ໃນຂະນະທີ່ທ່ານຖືກຂັບໄລ່ໄປຢູ່ເທິ່ງພູທີ່ເມືອງມັກກະຫ໌? ເປັນຕາທ່ວງເຫຼືອເກີນ! ...**

---

1.ຊີເຣາະຫ໌ ອິບນີ ຮີຊາມ ເລັ່ມທີ່ 2 ໜ້າ 46

ໃນທີ່ສຸດ ພວກເຂົາເຈົ້າໄດ້ຕັດສິນໃຈຢ່າງໜັກແໜ້ນວ່າ ຕ້ອງເຊື້ອເຊີນສາດສະດາໃຫ້ມາຢູ່ທີ່ເມືອງຢາດຣິບ (ມາດີນະຫ໌) ແລະ ໃຫ້ການສະໜັບສະໜູນທ່ານ ຊ່ວງກ່ອນທີ່ຈະຮອດເທດສະການຫັຈ **ມຸສອັບ ບິນ ມຸໄມຣ໌** ໄດ້ກັບຄືນໄປ ມັກກະຫ໌ ແລະ ແຈ້ງ ຂ່າວດີກັບໃຫ້ທ່ານຣໍສູລ ຂອງ ອັລລໍຫ໌ ກ່ຽວກັບຜົນສໍາເລັດທີ່ໄດ້ເຮັດໜ້າທີ່ ທີ່ມອບໝາຍ ແລະ ໄດ້ແຈ້ງໃຫ້ເຂົາຮູ້ວ່າຈະມີກຸ່ມຄະນະຈາກຢາດຣິບ ຂອງຜູ້ທີ່ປ່ຽນໃຈເຫລື້ອມໃສຮັບອິດສະລາມ ຈະມາເຮັດສັດຕະຍາບັນຕໍ່ທ່ານສາດສະດາ ເມື່ອມາຮອດນະຄອນມັກກະຫ໌ ຈຶ່ງໄດ້ຕິດຕໍ່ກັບທ່ານສາດສະດາຢ່າງລັບໆ, ທ່ານສາດສະດາໄດ້ນັດພົບພວກເຂົາໃນຂະນະທີ່ບັນດາຫຸດຈາຈກໍາລັງຫຍຸ້ງກ່ຽວກັບເລື່ອງການເຮັດຫັຈ ພວກເຂົາອາໄສຜ່ານຄວາມມືດ ເຂົາເຈົ້າຄ່ອຍໆມາພົບທ່ານສາດສະດາຈົນຄົບທັງໝົດບ່ອນ ອັລ-ອາກໍບະຫ໌ ມີທັງໝົດ 73 ຄົນ, ຍິງ 2 ຄົນ

ຈາກການສົນທະນາລະຫວ່າງຊາວມຸດສະລິມຂອງ ອັນຊໍຣ ກັບທ່ານຣໍຊູລລຸລລໍຫ໌ ໄດ້ມີທ່ານ ອັລ-ອັບບາສ ບິນອັບດູລມຸດຕໍລິບ ລຸງຂອງທ່ານສາດສະດາໄດ້ເຂົ້າຮ່ວມຢູ່ດ້ວຍ ເຖິງແມ່ນວ່າໃນຕອນນັ້ນລາວຍັງບໍ່ໄດ້ປ່ຽນໃຈເຫລື້ອມໃສໃນອິດສະລາມ ແຕ່ເພື່ອໃຫ້ການຮັບຮອງຫຼານຊາຍ ແລະ ເປັນການຮັບປະກັນຄວາມປອດໄພຂອງສາດສະດາ ໃນການໃຫ້ຄໍາໝັ້ນສັນຍາກັບຊາວອັນຊໍຣ ທ່ານສາດສະດາເຮັດສັດຕະຍາບັນກັບມຸສລິມຊາວອັນຊໍຣວ່າ:

1. **ທ່ານທັງຫຼາຍ ໄດ້ໃຫ້ຄໍາໝັ້ນສັນຍາຕໍ່ຂ້າພະເຈົ້າໃນການເຊື່ອຟັງ ແລະ ພັກດີສັດຊື່ຕໍ່ຂ້າພະເຈົ້າໃນຍາມທີ່ມີຄວາມສຸກສະບາຍ ແລະ ໃນຍາມທີ່ມີຄວາມທຸກຍາກ**
2. **ແລະ ຈະເຊື່ອຟັງປະຕິບັດຕາມຂ້ອຍໃນການໃຊ້ກັນໃຫ້ເຮັດຄວາມດີ ແລະ ຫ້າມປາມຍັບຍັ້ງກັນຈາກການເຮັດຊົ່ວບໍ່ດີ**
3. **ແລະ ໃນນັ້ນທີ່ພວກທ່ານຕ້ອງເວົ້າກ່ຽວກັບເລື່ອງຂອງອັລລໍຫ໌ ﷻ ໂດຍທີ່ທ່ານຈະບໍ່ຢ້ານການຕໍາໜິຈາກຜູ້ໃດທັງສິ້ນ**
4. **ແລະ ພວກທ່ານຈະຕ້ອງສະໜັບສະໜູນຂ້ອຍ (ທ່ານນະບີ) ແລະ ປົກປ້ອງຂ້ອຍໃນຂະນະທີ່ຂ້ອຍອົບພະຍົບໄປຫາພວກທ່ານ ຄືກັບການທີ່ພວກທ່ານປ້ອງກັນຕົນເອງ ຕະຫຼອດຈົນບັນດາພັນລະຍາ ແລະ ລູກຂອງພວກທ່ານ ແລະ ພວກທ່ານຈະໄດ້ເຂົ້າສວນສະຫວັນ**

ບັນດາຊາວອັນຊໍຣ ຕ່າງມີຄວາມປື້ມ ປິຕິຍິນດີ ຫຼັງຈາກການໃຫ້ຄໍາສັດຕະຍາບັນ ວ່າຈະດໍາລົງຊີວິດຕາມຮູບແບບຂອງອິດສະລາມ ແລະ ເຊື່ອຟັງສາດສະດາຂອງ ອັລລໍຫ໌ ﷺ ແຕ່ພວກເຂົາເຈົ້າບໍ່ຢາກໃຫ້ພັນທະນີ້ມາຈາກຝ່າຍໃດຝ່າຍໜຶ່ງ ດັ່ງນັ້ນ ຜູ້ໜຶ່ງຈຶ່ງຂຶ້ນກ່າວວ່າ:

**ໂອ້ ທ່ານຣໍຊູລ ຂອງອັລລໍຫ໌ ﷺ ແທ້ຈິ່ງແລ້ວມີພັນທະລະຫວ່າງພວກເຮົາ ແລະ ຄົນອື່ນຈໍານວນຫຼາຍ ແລະ ພວກເຮົາຕັດຂາດພວກເຂົາແລ້ວ (ໝາຍເຖິງຊາວຍິວ) ທ່ານຄິດຫຼືບໍ່ ຖ້າພວກເຮົາໄດ້ເຮັດ**

**ສິ່ງນີ້ແລ້ວ ຫຼັງຈາກນັ້ນ ອັລລໍຫ໌ ﷻ ໄດ້ເຮັດໃຫ້ທ່ານໄດ້ຮັບໄຊຊະນະ ແລ້ວທ່ານຈະກັບໄປຫາກຸ່ມຊົນຂອງທ່ານ ແລ້ວທ່ານຈະປ່ອຍໃຫ້ພວກເຮົາໄວ້ຫຼືບໍ່?**

ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງຍິ້ມແລ້ວເວົ້າວ່າ:

**ບໍ່ແມ່ນແນວນັ້ນດອກ, ເລືອດກໍ່ແມ່ນເລືອດ, ເຈັບກໍ່ເຈັບ, ຂ້ອຍເປັນສ່ວນໜຶ່ງໃນພວກທ່ານ ພວກທ່ານເປັນສ່ວນໜຶ່ງຂອງພວກເຮົາ ເຮົາຈະຕໍ່ສູ້ກັບຜູ້ທີ່ເຈົ້າໄດ້ຕໍ່ສູ້ ແລະ ຂ້າພະເຈົ້າຈະປະນີປະນອມກັບໃຜທີ່ທ່ານປະນີປະນອມ**[1]

ກຸ່ມຄະນະຈາກ ຍັສຣິບ ໄດ້ເດີນທາງກັບຄືນ ຫຼັງຈາກທີ່ພາລະໜ້າທີ່ອັນສຳຄັນໄດ້ສຳເລັດລົງດ້ວຍການທີ່ໄດ້ໃຫ້ສັດຕະຍາບັນ ກັບທ່ານຣໍຊູລ ﷺ ພວກເຂົາເຈົ້າລໍຖ້າການອົບພະຍົບຂອງທ່ານສາດສະດາ ແລະ ບັນດາຊໍຮາບະຫ໌ ຢ່າງໃຈຈົດໃຈຈໍ່

## 9. ການອົບພະຍົບຂອງບັນດາມຸດສະລິມ

ຫຼັງຈາກທີ່ ອິດສະລາມໄດ້ແຜ່ຂະຫຍາຍໃນ ຍັສຣິບ ແລະ ມີຂໍ້ຕົກລົງທີ່ເຮັດໂດຍ ຊາວອັນຊໍຣ ກັບ ທ່ານຣໍຊູລລຸລລໍຫ໌ ﷺ ທີ່ ອັລ-ອະກໍບະຫ໌ ຄັ້ງທີ່ສອງ ໃນການໃຫ້ຄວາມສະຫນັບສະຫນູນທ່ານສາດສະດາ ເມືອງຢາດຣິບໄດ້ກາຍເປັນສະຖານທີ່ກະກຽມໃຫ້ແກ່ການອົບພະຍົບຂອງບັນດາຜູ້ສັດທາ (ມຸມິນີນ) ສ່ວນບັນດາຫົວໜ້າຊາວກຸເຣຊເມື່ອໄດ້ຮູ້ແນ່ຊັດວ່າ ຊາວອັນຊໍຣ ໄດ້ເຮັດສັດຕະຍາບັນຈິງຮັກພັກດີກັບທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງເພີ່ມຄວາມຮຸນແຮງໃນການທຳຮ້າຍຕໍ່ຊາວມຸດສະລິມ ທ່ານສາດສະດາຈຶ່ງໄດ້ສັ່ງໃຫ້ ຊໍຮາບະຫ໌ ອົບພະຍົບໄປເມືອງ ຍັສຣິບ ໂດຍທ່ານໄດ້ກ່າວວ່າ:

"إن الله عز وجل قد جعل لكم إخوانا ودارا تأمنون بـها"

**"ແທ້ຈິງ ອັລລໍຫ໌ ﷻ ໄດ້ຊົງໃຫ້ພວກທ່ານມີພີ່ນ້ອງ ແລະ ໃຫ້ພວກທ່ານມີທີ່ພັກພິງທີ່ມີຄວາມປອດໄພແລ້ວ"**

ຕໍ່ມາໄດ້ມີວະຮີຍ໌ຈາກ ອັລລໍຫ໌ ﷻ ວ່າ ເມືອງຍັສຣິບນັ້ນເປັນສະຖານທີ່ແຫ່ງການອົບພະຍົບ ສຳລັບທ່ານ ແລະ ບັນດາຊໍຮາບະຫ໌ ດັ່ງທີ່ໄດ້ກ່າວໄວ້ໃນຫຼາຍ ຮາດິຊ ທີ່ກ່າວວ່າ:

**"ທ່ານນະບີໄດ້ຝັນເຫັນສະຖານທີ່ອົບພະຍົບຂອງທ່ານຄື ເມືອງຍັສຣິບ (ມາດີນະຫ໌)"**

---

1.ເລື່ອງກ່ຽວກັບການໃຫ້ສັດຕະຍາບັນ ອັລ-ອະກໍບະຫ໌ ຄັ້ງທີສອງນີ້ ໄປຫາຫນັງສື ສຸນັນ ອັລໄບຣະກີ ສະບັບທີ 9, ຫນ້າ 9, ໜັງສື ອັລມຸສຕັດຣອກ ຂອງອັລຫະກີມ ເລັ່ມ 2 ຫນ້າ 624, ໜັງສື ຊີເຣາະຫ໌ ອັນນະບະວີຍະຫ໌ ຂອງອິບນຸ ກະຊີຣ ເລັ່ມ 2 ຫນ້າ 193 ແລະໜັງສື ຟັດຮຸລບາຣີ ຂອງອິບນິ ຮາຈັຣ 2222

ບັນດາຊໍຮາບະຫ໌ໄດ້ເລີ່ມອົບພະຍົບໄປເມືອງຢາສຣິບຢ່າງງຽບໆ ເພື່ອບໍ່ໃຫ້ພວກກຸຟຟາຣ ຊາວກຸເຣຊໄດ້ຮູ້ ພວກເຂົາເຈົ້າໄດ້ປະສົບຄວາມຜົນສໍາເລັດໃນການອົບພະຍົບ ຈາກມັກກະຫ໌ ໄປສູ່ນະຄອນມາດີນະຫ໌ ແລະ ລອດພົ້ນຈາກການຄຸກຄາມຂົ່ມຂູ່ຂອງພວກກຸເຣຊ

ພວກກຸເຣຊ ໄດ້ພະຍາຍາມໃນທຸກວິທີທາງເພື່ອຂັດຂວາງ ສະກັດກັ້ນການອົບພະຍົບໄປເມືອງມາດີນະຫ໌ ແລະ ພະຍາຍາມເຮັດໃຫ້ເກີດຄວາມວຸ່ນວາຍ ໂດຍຍຶດຊັບສິນບໍ່ໃຫ້ນໍາຕິດໂຕໄປ ບາງຄັ້ງກໍ່ຍຶດພັນລະຍາ ແລະ ລູກໆ ດ້ວຍການຫຼອກລວງເພື່ອຜູ້ອົບພະຍົບກັບຄືນໄປເມືອງມັກກະຫ໌. ແຕ່ອຸປະສັກຕ່າງໆບໍ່ໄດ້ກະທົບເຖິງຄວາມຕັ້ງໃຈຂອງເຂົາເຈົ້າທີ່ຈະອົບພະຍົບແຕ່ຢ່າງໃດ ບັນດາຜູ້ອົບພະຍົບຈຶ່ງໄດ້ກະກຽມ ທີ່ຈະສະລະຊັບສິນ ຫຼືແມ້ກະທັ້ງຄອບຄົວຂອງເຂົາເຈົ້າ ໃນການຕອບສະໜອງຕໍ່ການເຊີນຊວນສູ່ຫຼັກສັດທາທີ່ໝັ້ນຄົງ[1]

ການອົບພະຍົບຂອງບັນດາຊໍຮາບະຫ໌ມີອຸປະສັກຫຼາຍໆຢ່າງ ແຕ່ບໍ່ມີຜູ້ໃດເຫຼືອຢູ່ໃນເມືອງມັກກະຫ໌ ຍົກເວັ້ນຜູ້ທີ່ພວກມຸຊຣີກີນໄດ້ກັກຂັງເອົາໄວ້ ແລະ ຜູ້ທີ່ບໍ່ສາມາດອອກເດີນທາງໄປໄດ້ ເຊັ່ນດຽວກັນກັບທ່ານຣໍຊູລລຸລລໍຫ໌ ໄດ້ລໍຖ້າການອະນຸມັດຈາກອັລລໍຫ໌ ﷻໃຫ້ອະນຸຍາດໃຫ້ອົບພະຍົບເທົ່ານັ້ນ ທ່ານໄດ້ສັ່ງໃຫ້ທ່ານອະບູບັກກັຣ ກະກຽມສໍາລັບການເດີນທາງໃນການອົບພະຍົບກັບທ່ານນະບີ ແລະ ສໍາລັບ ທ່ານອະລີ ບິນອະບີຕໍລິບ ຣໍດີຍັລລໍ ອັນຮຸ ທ່ານສາດສະດາໃຫ້ຢູ່ໃນ ມັກກະຫ໌ ເພື່ອສົ່ງຄືນກັບເຈົ້າຂອງຜູ້ທີ່ໄດ້ຝາກມັນໄວ້ ໂດຍການຈັດຄືນເຄື່ອງຝາກໃຫ້ແກ່ເຈົ້າຂອງໃຫ້ຮຽບຮ້ອຍ

ຖະໜົນຫົນທາງໃນມັກກະຫ໌ ແລະ ພື້ນທີ່ຕ່າງໆ ຫວ່າງເປົ່າ ບ້ານເຮືອນທີ່ບໍ່ມີຜູ້ເຊື່ອສັດທາ (ມຸມິນ) ງຽບເຫງົາ ຫຼັງຈາກທີ່ແອອັດມາກ່ອນ ເຮືອນວ່າງເປົ່າເຕັມໄປດ້ວຍຂີ້ຝຸ່ນ ເຫັນແລ້ວເຮັດໃຫ້ຫົວໃຈຫົດຫູ່ ບັນດາເຈົ້າຂອງເຮືອນຖືກຂັບໄລ່ອອກຈາກເຮືອນຂອງຕົນເອງ ພຽງແຕ່ຍ້ອນວ່າພວກເຂົາເວົ້າວ່າ: ພຣະຜູ້ເປັນເຈົ້າຂອງພວກເຮົາແມ່ນ ອັລລໍຫ໌ (ຊບ) ເທົ່ານັ້ນ ສະພາບນັ້ນໄດ້ເຮັດໃຫ້ຜູ້ທີ່ມີຄວາມໂຫດຫ້ຽມ ກັບເຮັດໃຫ້ຈິດໃຈຂອງເຂົາເຈົ້າອ່ອນໄຫວ ທັ້ງໆທີ່ເຄີຍແຂງກະດ້າງມາກ່ອນ

**ອຸດບະຫ໌ ບິນ ຣໍບີອະຫ໌ ແລະ ອັລອັບບາສ** ຜູ້ເປັນລຸງຂອງທ່ານສາດສະດາ ﷺ ແລະ ອະບູຈາຮັລໄດ້ເດີນຜ່ານບ້ານຫຼັງໜຶ່ງຂອງ ບະນີຊິນ ແລ້ວອຸດບະຫ໌ໄດ້ສັງເກດເບິ່ງວ່າປະຕູໄດ້ຖືກລົມພັດຈົນປິດເປີດໂດຍບໍ່ມີຜູ້ອະໄສຢູ່ ລາວຈຶ່ງຖອນຫາຍໃຈ ແລະເວົ້າວ່າ:

**( وكل دار وإن طالت سلامتها  يوما ستدركها النكباء والحوب)**

1.ເບິ່ງໃນໜັງສື ຊໍຮີຫ໌ ອັລບຸກຄໍຣີ ກິຕາບ ມະນາກິບ ອັລອັນຊໍຣ ບາບທີ່ 5 ເລື່ອງ ຮິຈຈະເຣາະຕຸລຣໍຊູລ ແລະຊໍຮີຫ໌ ມຸສລິມ 1779/1 ຟັດຮຸລບາຣີ ເລັ່ມ 7 ໜ້າ 231 ອັລອຸມຣີ ຊີເຣາະຫ໌ 202

**"ແຕ່ລະບ້ານເຄີຍຢູ່ກັນມາດົນນານຢ່າງປອດໄພ ແຕ່ມາວັນໜຶ່ງກໍ່ເຫຼືອແຕ່ລົມຫວນ ແລະ ຄວາມຜຸພັງ"**

ແລ້ວເວົ້າໃນໃຈວ່າ: **"ແລ້ວເຮືອນຂອງ ບະນີຍະຫ໌ຊິນ ຫວ່າງເປົ່າ ແລະ ບໍ່ມີເຈົ້າຂອງ ມີພຽງແຕ່ຫົວໃຈຈຳນວນຫຼາຍທີ່ແປກປະຫຼາດ ບໍ່ມີຄວາມດີໃດໆລົງເຫຼືອຢູ່ເລີຍ ນອກຈາກແຕ່ຄວາມຊົ່ວຮ້າຍເທົ່ານັ້ນ"**

ຫົວໃຈຂອງ ອະບູຈະຮັລ ມັນເປັນຫນຶ່ງໃນຫົວໃຈເຫຼົ່ານັ້ນຄືກັນ ສະນັ້ນ ເພິ່ນຈຶ່ງຕອບໂຕ້ກັບອຸກບະຫ໌ເພື່ອເຊື່ອງຄວາມໂສກເສົ້າ ແລະ ຄວາມເຈັບປວດເວົ້າວ່າ: **"ຄົນບໍ່ມີຊື່ສຽງ ບໍ່ຮູ້ວ່າແມ່ນລູກຂອງໃຜ ເປັນຫຍັງເຈົ້າຈະຮ້ອງໄຫ້ ຫາລາວເຮັດຫຍັງ?"**

ຫມາຍຄວາມວ່າ ຄົນທີ່ບໍ່ມີຄວາມຫມາຍຈະໄປຮ້ອງໄຫ້ໃຫ້ມັນເຮັດຫຍັງ? ນີ້ແມ່ນການເຍາະເຍີ້ຍຂອງ ອະບູ ຈະຮັລ ຕໍ່ບັນດາເຈົ້າຂອງເຮືອນນັ້ນເອງ ແລ້ວອະບູ ຈະຮັລ ໄດ້ຫັນໄປຫາ ອັລອັບບາສ ແລະເວົ້າວ່າ: **"ນີ້ແມ່ນຝີມືຂອງລູກຂອງນ້ອງຊາຍຂອງທ່ານ ທີ່ເຂົາໄດ້ເຮັດໃຫ້ກຸ່ມຊົນຂອງພວກເຮົາ ແຕກແຍກ ແລະ ເຮັດໃຫ້ພວກເຮົາມີຄວາມວຸ່ນວາຍ ແລະ ເພິ່ນໄດ້ຕັດຂາດຍາດພີ່ນ້ອງໃນຫມູ່ພວກເຮົາ"** ຄົນຊົ່ວຮ້າຍທັ້ງຫຼາຍ ແລະ ຜູ້ສໍ້ໂກງທັງຫມົດ ມັນຈະກວນໃຈ ແລະ ເຈັບປວດ ແລະ ຈະຕຳນິຜູ້ອື່ນສະເຫມີ[1]

## 9.1 ການອົບພະຍົບຂອງທ່ານນະບີມູຮຳມັດ ﷺ

ເມື່ອຜູ້ປະຕິເສດຊາວກຸເຣຊ ເຫັນວ່າຊາວມຸດສະລິມໄດ້ອົບພະຍົບ ແລະ ໄດ້ພົ້ນຈາກມືຂອງເຂົາເຈົ້າ ຈຶ່ງເພີ່ມຄວາມຄຽດແຄ້ນຫຼາຍຂຶ້ນ ຈຶ່ງເຮັດໃຫ້ຮູ້ວ່າອັນຕະລາຍທີ່ຄິດວ່າມາຈາກ ທ່ານນະບີມູຮຳມັດ ﷺ ແລະ ການເຜີຍແຜ່ຈະຕ້ອງເກີດຂຶ້ນຢ່າງແນ່ນອນ ຖ້າຫາກວ່າບໍ່ຈັດການ ຫາກປ່ອຍໃຫ້ຊາວມຸດສະລິມ ແລະ ສາດສະນາທູດອົບພະຍົບໄປສຳເລັດ ນັ້ນຫມາຍຄວາມວ່າ ຊາວມຸດສະລິມແນ່ນອນຈະເຮັດສົງຄາມຕ້ານພວກເຮົາ ດ້ວຍເຫດນີ້ ຈຶ່ງບໍ່ມີທາງອື່ນອີກ ແລະ ບໍ່ສາມາດຊັກຊ້າໄດ້ແລ້ວ ພວກເຂົາເຈົ້າຈຶ່ງໄດ້ຮຽກຮ້ອງຈັດກອງປະຊຸມທີ່ ດາຣຸ້ລນັດວະຫ໌ (دار الندوة ) ເພື່ອຄິດວິທີການຈັດການກັບມຸຮຳຫມັດ ເຊິ່ງ ອັລລໍຫ໌ ﷻ ໄດ້ແຈ້ງໃຫ້ຊາບໄວ້ໃນອັລກຸຣອານ ເຖິງການປະຊຸມ ແລະ ຄວາມຄິດເຫັນທີ່ນຳສະເຫນີຢູ່ທີ່ນັ້ນ ດັ່ງທີ່ຊົງເວົ້າວ່າ:

وَإِذْ يَمْكُرُ بِكَ ٱلَّذِينَ كَفَرُوا لِيُثْبِتُوكَ أَوْ يَقْتُلُوكَ أَوْ يُخْرِجُوكَ ۚ وَيَمْكُرُونَ وَيَمْكُرُ ٱللَّهُ ۖ وَٱللَّهُ خَيْرُ ٱلْمَـٰكِرِينَ

**"ແລະຈົ່ງລະນຶກເຖິງຂະນະທີ່ ບັນດາຜູ້ປະຕິເສດສັດທາໄດ້ວາງແຜນຕໍ່ທ່ານ (ມຸຮຳຫມັດ) ຫຼືຂັບໄລ່ເຈົ້າອອກໄປ ແລະ ພວກເຂົາໄດ້ວາງແຜນກັນ ແລະ ອັລລໍຫ໌ກໍ່ຊົງໄດ້ວາງແຜນ ແລະ ອັລລໍຫ໌ ນັ້ນເປັນຜູ້ຊົງດີທີ່ສຸດບັນດາຜູ້ທີ່ວາງແຜນ"** (ສູເຣາະຫ໌ອັລ-ຟານ 8: 30)

1.ເບິ່ງໃນຊີເຣາະຫ໌ອິບນຸຮີຊາມ 2/79 ອັລກໍຊາຣີ ຟິກຮຸຊຊີເຣາະຫ໌ 166

ໃນກອງປະຊຸມໄດ້ຕົກລົງເຫັນດີກັບການສະເຫນີຂອງ ອະບູຈາຮັລ ທີ່ສະເຫນີໃຫ້ຂ້າທ່ານສາດສະດາມຸຮຳຫມັດ ﷺ ໂດຍການຄັດເລືອກຊາຍຫນຸ່ມຈາກທຸກຊົນເຜົ່າ ຊົນເຜົ່າລະຫນຶ່ງຄົນ ເພື່ອຮ່ວມກັນຂ້າທ່ານສາດສະດາມຸຮຳຫມັດ ﷺ ພ້ອມກັນ ຊຶ່ງຈະສ້າງຄວາມຫຍຸ້ງຍາກສຳລັບຊົນເຜົ່າຂອງທ່ານສາດສະດາໃນການທີ່ຈະຕອບໂຕ້ບັນດາເຜົ່າຕ່າງໆໄດ້ ແລະ ໃນທີ່ສຸດເຜົ່າຂອງທ່ານນະບີສາດສະດາມຸຮຳຫມັດ ﷺ ຈະຕ້ອງຍອມຮັບຄ່າຊົດເຊີຍເປັນການທົດແທນ ຫຼັງຈາກນັ້ນ ແຜນການລອບສັງຫານໄດ້ຖືກກຳໜົດຂຶ້ນ ພາຍໃຕ້ການຄວບຄຸມຂອງອະບູຈາຮັລ

ທ່ານຣໍຊູລ ຂອງອັລລໍຫ໌ ﷺ ໄດ້ເຮັດໃຫ້ພາລະກິດເຜີຍແຜ່ ແລະ ໃຊ້ວິທີການຕ່າງໆເພື່ອເຊື້ອເຊີນປະຊາຊົນຂອງ ມັກກະຫ໌ ແຕ່ໃນຈຸດນີ້ທ່ານໄດ້ພົບວ່າຮອດທາງຕັນ ຈຶ່ງມີຄຳບັນຊາຈາກອັລລໍຫ໌ໃຫ້ທ່ານໄດ້ຈະອົບພະຍົບ ທັນທີທີ່ທ່ານສາດສະດາໄດ້ຮັບຄຳສັ່ງ ທ່ານຈຶ່ງຟ້າວໃນການທີ່ຈະອົບພະຍົບ ແລະ ໝັ້ນໃຈວ່າ ອັລລໍຫ໌ ﷻ ຄືຜູ້ຊົງສະຫນັບສະຫນູນ ເປັນຜູ້ທີ່ໄດ້ເຮັດໃຫ້ການງານສຳເລັດລຸລ່ວງແນ່ນອນ ທ່ານຈຶ່ງໄດ້ເຮັດໃນສິ່ງທີ່ເຈົ້າຄວນເຮັດ ແລະອປ່ອຍໃຫ້ເລື່ອງທີ່ເກີນຄວາມສາມາດໄວ້ກັບ ອັລລໍຫ໌ ﷻທີ່ຈະເປັນຜູ້ຊ່ວຍເຫຼືອ ທ່ານໄດ້ໃຫ້ ອະລີ ບິນອະບີຕໍລິບ ເຂົ້າໄປໃນບ່ອນນອນຂອງທ່ານແທ່ນໃນຄືນທີ່ມີການນັດໝາຍຈະສັງຫານທ່ານ ໃນຂະນະດຽວກັນອະບູບັກກັຣກໍ່ໄດ້ຈັດແຈງຍານພາຫະນະ ແລະ ໄດ້ຕົກລົງກັບຜູ້ທີ່ຮູ້ເສັ້ນທາງທີ່ຈະນຳພາໄປເມືອງມາດີນະຫ໌ ເຊິ່ງເປັນເສັ້ນທາງທີ່ບໍ່ເປັນທີ່ຮູ້ຈັກກັນຫລາຍເທົ່າໃດ ແລະ ເລືອກເອົາຖ້ຳ **ເຊົາຣ໌** ເປັນບ່ອນລີ້ຊ່ອນໂຕເປັນເວລາ 3 ມື້ ຈົນກວ່າການຊອກຫາຈະສິ້ນສຸດລົງ

ສະຖານທີ່ຕັ້ງຂອງຖ້ຳ **ເຊົາຣ໌** ແມ່ນກົງກັນຂ້າມກັບເສັ້ນທາງທີ່ຈະໄປເມືອງມາດີນະຫ໌ ທ່ານຢູ່ທີ່ນັ້ນເພື່ອຫລົບຫລີກຄົນທີ່ຕາມລ່າ ໂດຍທີ່ **ອັບດຸລລໍຫ໌ ລູກຊາຍຂອງອະບູບັກຣ** ຈະພົບກັບພວກເຂົາທັງສອງທີ່ຖ້ຳໃນຕອນກາງຄືນ ເພື່ອແຈ້ງຂ່າວການເຄື່ອນໄຫວຂອງພວກກຸເຣຊ ແລະ ເລື່ອງລາວຕ່າງໆທີ່ໄດ້ຍິນມາ ແລະ ຈະກັບຄືນມາກ່ອນຮຸ່ງອາລຸນ ເຊັ່ນດຽວກັບ **ອາມີຣ ບິນ ຟຸໄຮເຣາະຫ໌** ຜູ້ຮັບໃຊ້ຂອງ ທ່ານອະບູບັກຣຈະມາພ້ອມກັບຝູງແບ້ທີ່ລາວລ້ຽງຢູ່ ຄືກັບຄົນລ້ຽງແກະ ແລະ ລໍຖ້າເວລາທີ່ຄວາມມືດໄດ້ພັດຜ່ານໄປ ແລະນຳເອົານົມໃຫ້ທັງສອງດື່ມກິນ ທ່ານນະບີ ﷺ ໄດ້ເຮັດທຸກວິທີທາງເພື່ອເປັນແບບຢ່າງ ແລະ ບົດຮຽນໃຫ້ແກ່ປະຊາຊາດຂອງທ່ານ

ສຳລັບບາງສິ່ງບາງຢ່າງທີ່ເກີນຄວາມສາມາດຂອງມະນຸດ ເປັນເລື່ອງຂອງອັລລໍຫ໌ ﷻ ພຣະອົງຈະຊົງຈັດການເລື່ອງນັ້ນເອງ ໂດຍທີ່ພຣະອົງໄດ້ໃຫ້ທ່ານສາດສະດາ ອອກຈາກເຮືອນເຖິງແມ່ນວ່າພວກກຸເຣຊໄດ້ປິດລ້ອມຢູ່ ແລະ ພວກເຂົາບໍ່ສາມາດເຫັນທ່ານນະບີໄດ້ ອັລລໍຫ໌ﷻ ໄດ້ປິດຕາຂອງເຂົາເຈົ້າເພື່ອໃຫ້ເຂົາເຈົ້າບໍ່ສາມາດເບິ່ງເຫັນທ່ານສາດສະດາ ໃນຂະນະທີ່ບາງຄົນໄປຮອດຖ້ຳທີ່ເຊື່ອງຕົວຢູ່ເພື່ອຊອກຫາ ຈົນກະທັ່ງວ່າຫາກຄົນໃດຄົນໜຶ່ງໃນຫມູ່ພວກເຂົາກົ້ມລົງເບິ່ງຕີນທັງສອງຂອງຕົນເອງ ພວກເຂົາເຈົ້າຈະພົບເຫັນ

ຄົນທັ້ງສອງທັນທີ ທ່ານອະບູບັກຣ ຮູ້ສຶກເປັນກັງວົນຫຼາຍ ວ່າທ່ານນະບີຈະບໍ່ປອດໄພດັ່ງນັ້ນ ທ່ານນະບີຈຶ່ງເວົ້າກັບ ທ່ານອະບູບັກຣວ່າ:

**( ماظنك ياأبابكر بإثنين الله ثالثهما )**

**"ໂອ້ທ່ານອະບູບັກຣ ຢ່າຄິດວ່າເຮົາຈະຢູ່ກັນພຽງແຕ່ສອງຄົນເທົ່ານັ້ນ ອັລລໍຫ໌ ﷻ ຕ່າງຫາກຄືຜູ້ທີ່ສາມ ທີ່ຊົງຢູ່ກັບເຮົາ"** [1]

ອັລລໍຫ໌ ﷻ ພຣະອົງໄດ້ເຮັດໃຫ້ພວກເຂົາເບິ່ງບໍ່ເຫັນ ດັ່ງນັ້ນເຂົາເຈົ້າກັບຄືນໄປ ໂດຍໝັ້ນໃຈວ່າບໍ່ມີໃຜຢູ່ໃນຖ້ຳນັ້ນ ບໍ່ມີໃຜອາໄສຢູ່ຈັກຄົນ **ສຸຣໍເກາະ ບິນມາລິກ** ໄດ້ປົກປິດເລື່ອງຂອງທ່ານສາດສະດາ ເພື່ອຫວັງຈະໄດ້ຮັບລາງວັນ ທີ່ພວກກຸເຣຊໄດ້ປະກາດ ສຳລັບຜູ້ທີ່ສາມາດນຳເອົາຕົວມຸຮໍາໝັດກັບຄືນມາ ຂະນະເດີນທາງລາວໄດ້ໄລ່ຕາມທັນທ່ານທັ້ງສອງ ປະກົດວ່າແຕ່ລະຄັ້ງທີ່ມ້າເຂົ້າໄປໃກ້ ຕີນມ້າທັງສີ່ຂ້າງກໍ່ຈົມລົງດິນ ລາວຈຶ່ງຮູ້ທັນທີວ່າ ອັລລໍຫ໌ (ຊບ) ຊົງປົກປ້ອງທ່ານຈາກການຈັບກຸມ ສະນັ້ນ ລາວຈຶ່ງໄດ້ເຈລະຈາກັບທ່ານສາດສະດາ ໃຫ້ເຮັດໃບຮັບຮອງເພື່ອເປັນຫຼັກຖານ ທ່ານສາດສະດາຈຶ່ງໄດ້ເຮັດໃບຢັ້ງຢືນໃຫ້ ແລ້ວລາວກໍ່ກັບໄປ

ທ່ານສາດສະດາ ﷺ ແລະ ທ່ານອະບູບັກຣ ໄດ້ອອກຈາກຖ້ຳນັ້ນຫຼັງຈາກຢູ່ມາສາມມື້ກັບຜູ້ນຳທາງ ໂດຍນຳໃຊ້ເສັ້ນທາງແຄມຝັ່ງທະເລເຊິ່ງບໍ່ຄ່ອຍມີຄົນໃຊ້ຫຼາຍ ສວນບັນດາຊາວເມືອງມະດີນະຫ໌ ຜູ້ທີ່ເປັນຊາວມຸດສະລິມ ເມື່ອໄດ້ຍິນຂ່າວວ່າທ່ານສາດສະດາ ﷺ ໄດ້ອອກຈາກມັກກະຫ໌ມາແລ້ວ ເຂົາເຈົ້າໄດ້ເຕົ້າໂຮມກັນຢູ່ນອກເມືອງເພື່ອລໍຖ້າການມາເຖິງຂອງທ່ານສາດສະດາ ຕັ້ງແຕ່ຕອນເຊົ້າ ຈົນຮອດຕອນບ່າຍເມື່ອຕາເວັນຕົກ ເຂົາເຈົ້າກໍ່ກັບເຂົ້າໄປເຮືອນ ເຮັດແບບນີ້ທຸກມື້ ໃນມື້ທີ່ທ່ານສາດສະດາມາຮອດ ພວກເຂົາລໍຖ້າຈົນກວ່າຕາເວັນໄດ້ຕົກດິນ ແລະ ຊອກຫາບ່ອນທີ່ມີຮົ່ມເພື່ອລົບຈາກແສງແດດ ແຕ່ກໍ່ບໍ່ພົບບ່ອນທີ່ຈະລົບແສງແດດ ພວກເຂົາເຈົ້າຈຶ່ງກັບໄປ ແລ້ວກຸ່ມຂອງທ່ານນະບີອັລ-ມຸບາຮັອກ ໄດ້ມາຮອດເວລາທີ່ພວກເຂົາໄດ້ອອກໄປແລ້ວ ແຕ່ຊາວຢິວຄົນໜຶ່ງໄດ້ເຫັນຄະນະຂອງທ່ານ ລາວຈຶ່ງຮ້ອງໂຮໃສ່ຊາວມຸດສະລິມ ເຖິງການມາຮອດຂອງຜູ້ທີ່ລໍຖ້າຢູ່ ທ່ານນະບີໄດ້ມາຮອດແລ້ວ ບັນດາຊາວມຸດສະລິມໄດ້ອອກມາຕ້ອນຮັບ ດ້ວຍຄວາມປິຕິຍິນດີ ຄວາມສຸກແຜ່ກະຈ່າຍໄປທົ່ວໃນວັນອັນເປັນທີ່ປະຈັກ ຝູງຊົນທັງຜູ້ໃຫຍ່ ເດັກນ້ອຍ ແມ່ຍິງ ແລະ ເດັກນ້ອຍໆ ຕ່າງພາກັນຮ້ອງຕະໂກນຂຶ້ນດ້ວຍນຳສຽງແຫ່ງຄວາມປີ້ມປິຕິດີໃຈວ່າ:

**"ທ່ານຣໍຊູລລຸລລໍຫ໌ ມາຮອດແລ້ວ ທ່ານຣໍຊູລລຸລລໍຫ໌ ມາຮອດແລ້ວ"**

ທ່ານຣໍຊູລ ﷺ ໄດ້ລົງພັກທີ່ ກຸບາ ຫຼາຍມື້ ແລະ ໄດ້ສ້າງມັສຍິດຂຶ້ນຫຼັງໜຶ່ງ ເຊິ່ງ ອັລລໍຫ໌ ﷻ ຊົງດຳລັດເຖິງເລື່ອງນີ້ວ່າ:

*"ເຈົ້າຢ່າໄປຮ່ວມຢືນລະຫມາດຢູ່ໃນມັສຍິດແຫ່ງນັ້ນເປັນອັນຂາດ, ແນ່ນອນ, ມັສຍິດທີ່ຖືກວາງຮາກຖານເຖິງຄວາມຍໍາເກງ ຕັ້ງແຕ່ມື້ທໍາອິດແມ່ນສົມຄວນທີ່ເຈົ້າຈະເຂົ້າໄປລະຫມາດໃນນັ້ນ ເພາະຢູ່ໃນມັສຍິດມີກຸ່ມຄົນມັກຊໍາລະຕົວໃຫ້ບໍລິສຸດ ແລະ ອັລລໍຫ໌ນັ້ນຊົງຮັກຜູ້ທີ່ຊໍາລະຕົນເອງຢູ່ສະເຫມີ"*

*(ສູເຣາະຫ໌ ອັດເຕົາບະຫ໌ 9:108)*

ຫຼັງຈາກນັ້ນ ທ່ານສາດສະດາ ﷺ ໄດ້ຍ້າຍຈາກ ມັສຍິດກຸບາ ຍ່າງຜ່ານຫລາຍໝູ່ບ້ານຂອງຊາວອາຫຣັບ ໃນເມືອງມາດີນະຫ໌ ປະຊາຊົນໄດ້ລຽນແຖວຢູ່ສອງຝັ່ງຖະໜົນ ເຕົ້າໂຮມກັນເພື່ອຕ້ອນຮັບທ່ານສາດສະດາ ﷺ ທັງຜູ້ຊາຍ ແລະ ຜູ້ຍິງ ມີບາງຄົນຂຶ້ນໄປເທິງຫຼັງຄາເຮືອນ ບັນດາເດັກນ້ອຍລຽນລາຍຢູ່ຕາມຖະຫນົນ ຮ້ອງຕະໂກນເລື້ອຍໆວ່າ: **"ໂອ້ ມຸຮໍາມັດ ໂອ້ ຣໍຊູລຂອງອັລລໍຫ໌"**

ໃນແຕ່ລະຄັ້ງທີ່ທ່ານຜ່ານບ້ານຂອງພວກເຂົາເຈົ້າ ກໍ່ຈະຈັບເອົາເຊືອກຂອງອູດຂອງທ່ານສາດສະດາ ແລະ ຂໍໃຫ້ເຂົ້າພັກຢູ່ທີ່ບ້ານຂອງພວກເຂົາ, ທ່ານສາດສະດາຈຶ່ງໄດ້ກ່າວວ່າ:

***"ທ່ານທັງຫຼາຍຈົ່ງປ່ອຍມັນເຖີດ ແທ້ຈິງແລ້ວ ມັນຖືກກໍາໜົດເອົາໄວ້ແລ້ວ"***

ສຸດທ້າຍ ອູດຂອງທ່ານສາດສະດາ ﷺ ໄດ້ຄຸກເຂົ່າລົງເທິງບໍລິເວນ ຊັບສິນຂອງເດັກກໍາພ້າສອງຄົນຈາກ ບະນີມາລິກ ບິນ ອັນນັດຈາຣ ເຊິ່ງທ່ານໄດ້ສ້າງມັສຍິດຂຶ້ນຢູ່ບ່ອນນັ້ນ ແລ້ວລົງພັກຢູ່ທີ່ເຮືອນຂອງ ອະບີ ໄອຢູບ ອັລ-ອັນຊໍຣີ ຣໍດີຍັລລໍຮຸ ອັນຮຸ[2]

ທ່ານຣໍຊູລຂອງອັລລໍຫ໌ ﷺ ໄດ້ພໍານັກຢູ່ກັບບັນດາຊໍຮາບະຫ໌ ໃນເມືອງມະດີນະຫ໌ ເຊິ່ງປະກອບໄປດ້ວຍຊາວມັກກະຫ໌ ແລະ ຊາວມາດີນະຫ໌ ແລະ ບັນດາມຸສລິມຈາກເຜົ່າ ຄ໋ອຍຣອຊ ແລະ ເຜົ່າເອົາຊ໌ ພວກເຂົາເຈົ້າໄດ້ເຮັດໃຫ້ເປັນຈິງແລ້ວໃນຄໍາສັດຕະຍາບັນທີ່ໄວ້ໃຫ້ກັບທ່ານຂອງເຂົາເຈົ້າກັບທ່ານຣໍຊູລຂອງອັລລໍຫ໌ ﷺ ຄືໃຫ້ທີ່ພັກອາໄສພັກພິງແກ່ທ່ານສາດສະດາໃນເມືອງມາດີນະຫ໌ ພວກເຂົາເຈົ້າດີໃຈຫລາຍ

ບັນດາຊື່ ແລະ ນາມສະກຸນທີ່ປະກອບເປັນໂຄງສ້າງປະຈໍາເຜົ່າໄດ້ລະຫາຍໄປ ຄໍາວ່າ **"ອັລມຸຮາຈີຣີນ"** ກາຍເປັນຊື່ທີ່ຮູ້ຈັກກັນ ຫມາຍເຖິງຜູ້ທີ່ອົບພະຍົບຈາກເມືອງມັກກະຫ໌ ໄປເມືອງມາດີນະຫ໌ ຊາວມຸດສະລິມໃນເມືອງມາດີນະຫ໌ ຈຶ່ງໄດ້ມີຊື່ໃຫມ່ **"ອັລອັນຊໍຣ"** (ຜູ້ໃຫ້ການຊ່ວຍເຫລືອ) ຊື່ເມືອງທີ່ເຄີຍເອີ້ນວ່າເມືອງຍັສຣິບ ໄດ້ປ່ຽນຊື່ໃໝ່ເປັນມາດີນະຫ໌ຕຸຣເຣາະຊູລ (ເມືອງຂອງຜູ້ເປັນຣໍຊູລ)

---

1.ຊໍຮີຫ໌ ອັລບຸກໍຣີ ກິຕາບ ຟີຕໍອິລ ອັສຮາບນຸ້ນນະບີ ບາບບຸນ ນາກີບຸລມຸຮາຈີຣີນ ມະນາກິບ ອະບີບັກຣ

2.ຊໍຮີຫ໌ມຸສລິມ 4/2311 ແລະ ເບິ່ງອັລອັນຣີ ອັຊຊີຣໍຕຸນະບາວີ ອັສຊໍຮີຫະຫ໌ 1/218-219 ສາຍລາຍງານທະດິຊ ຢູ່ຂັ້ນດີ

ຈາກການອົບພະຍົບມີຄວາມໝາຍທາງປະຫວັດສາດຫຼາຍຢ່າງ ດ້ວຍເຫດຜົນນີ້ ການອົບພະຍົບຈຶ່ງແມ່ນເຫດການທີ່ສຳຄັນທີ່ສຸດໃນປະຫວັດສາດອິດສະລາມ ທີ່ຊາວມຸດສະລິມທຸກຄົນຕ້ອງສຶກສາ ແລະ ຈາລຶກໄວ້ຈົນເຖິງວັນແຫ່ງການຟື້ນຄືນຊີບ ເມື່ອລັດອິດສະລາມຖືກສ້າງຕັ້ງຂຶ້ນ ຈຶ່ງຕ້ອງການອຳນາດເພື່ອປ້ອງກັນຕົນເອງໃນທ່າມກາງກະແສສັງຄົມທີ່ປັ່ນປ່ວນ ໃນຂະນະທີ່ສັດຕູຊອກຫາໂອກາດທີ່ຈະທຳລາຍ ແລະ ສິ່ງທີ່ສຳຄັນແມ່ນການລວມຊາວມຸດສະລິມໃຫ້ໄດ້ຫຼາຍທີ່ສຸດ ເຊິ່ງນັບເປັນສ່ວນສຳຄັນ ແລະ ພະລັງຂອງການດຳເນີນງານ ດ້ວຍເຫດຜົນນີ້ ການອົບພະຍົບໄປເມືອງມາດີນະຫ໌ ຈຶ່ງເປັນພາລະຫນ້າທີ່ສຳລັບຊາວມຸດສະລິມທຸກຄົນທີ່ຢູ່ນອກເມືອງມາດີນະຫ໌ ພຣະອົງອັລລໍຫ໌ໄດ້ລົງໂທດຜູ້ທີ່ບໍ່ປະຕິບັດຕາມຄຳສັ່ງອົບພະຍົບ ດ້ວຍການລົງໂທດຢ່າງໜັກໂດຍບໍ່ມີການລະເວັ້ນ ມີແຕ່ຄົນບໍ່ມີຄວາມສາມາດ ແລະ ຜູ້ຖືກກົດຂີ່ຂົ່ມເຫັງ ຫຼືຖືກຂັດຂວາງເທົ່ານັ້ນທີ່ຈະໄດ້ຮັບການຍົກເວັ້ນ

ອັລລໍຫ໌ ﷻ ຕະອາລາ ໄດ້ດຳລັດໄວ້ວ່າ ***"ແທ້ຈິງແລ້ວ ບັນດາຜູ້ທີ່ມະລາອິກະຫ໌ (ທູດສະຫວັນ) ໄດ້ເອົາຊີວິດຂອງເຂົາເຈົ້າໄປໃນຖານະທີ່ພວກເຂົາເປັນຜູ້ອະທຳເຮັດຜິດຕໍ່ຕົນເອງ ທູດສະຫວັນເວົ້າກັບເຂົາເຈົ້າວ່າ: ພວກເຈົ້າປາກົດຢູ່ໃນຖານະຫຍັງ? ພວກເຂົາເຈົ້າເວົ້າວ່າ "ເຮົາເປັນຄົນອ່ອນແອໃນແຜ່ນດິນ" ມະລາອິກະຫ໌ ກ່າວວ່າ ແຜ່ນດິນຂອງອັລລໍຫ໌ກວ້າງບໍ່ພໍທີ່ເຈົ້າສາມາດອົບພະຍົບໄດ້ບໍ? ຊົນເຫຼົ່ານີ້ແມ່ນແຫລະ ທີ່ຢູ່ອາໄສຂອງເຂົາເຈົ້າແມ່ນນະຣົກ ຈະຮັນນຳ, ແລະ ສະຖານທີ່ທີ່ຊົ່ວຮ້າຍທີ່ສຸດຂອງການກັບຄືນ"***

*(ສູເຣາະຫ໌ ອັນນິຊາ 4:97)*

ອັລລໍຫ໌ຊຸບຮານະຮຸ ຕະອາລາ ຍັງໄດ້ຊົງສັນຍາກັບບັນດາຜູ້ທີ່ອົບພະຍົບ ດ້ວຍການໃຫ້ໄດ້ຮັບຄວາມດີຢ່າງທ່ວມທົ້ນ ແລະ ຜົນລະບຸນອັນຍິ່ງໃຫຍ່ ໃນຄຳຕຣັດຂອງພຣະອົງ ທີ່ວ່າ

***"ແລະ ຜູ້ໃດກໍຕາມທີ່ອົບພະຍົບໃນຫົນທາງຂອງອັລລໍຫ໌ ລາວຈະພົບວ່າແຜ່ນດິນນັ້ນກວ້າງໃຫຍ່ ແລະ ຮັ່ງມີອັນມາກຫມາຍ ແລະ ຜູ້ທີ່ອອກຈາກເຮືອນຂອງຕົນໄປໃນຖານະເປັນຜູ້ອົບພະຍົບເພື່ອອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ຫຼັງຈາກນັ້ນ, ຄວາມຕາຍໄດ້ມາຮອດລາວ ແນ່ນອນລາງວັນຂອງລາວຍ່ອມປະກົດຢູ່ແລ້ວກັບອັລລໍຫ໌, ແລະ ອັລລໍຫ໌ນັ້ນມີຄວາມເອັນດູເມດຕາສະເໝີ"***

*(ສູເຣາະຫ໌ ອັນນິຊາ 4:100)*

ພາຍຫຼັງຈາກທີ່ລັດອິສລາມເຂັ້ມແຂງ ມີພະລັງທີ່ສາມາດຈະປ້ອງກັນຕົນເອງໄດ້ ອັລລໍຫ໌ ຊຸບຮານະຮູ ຕະອາລາ ຊົງມີບັນຊາໃຫ້ເຜີຍແຜ່ໄປສູ່ຊົນເຜົ່າຕ່າງໆ ພາຍຫຼັງສົນທິສັນຍາຢຸດຍິງ ອັລຮຸໄດບີຍະຫ໌ ແລະ ຫຼັງຈາກການພິຊິດນະຄອນມັກກະຫ໌ໄດ້ແລ້ວ ເລື່ອງຟັຣດູ (ຂໍ້ບັງຄັບ) ຂອງການອົບພະຍົບທີ່ເຄີຍເປັນວາຈິບ (ຈຳເປັນ) ຈຶ່ງຖືກຍົກເລີກໄປ

ທ່ານຣໍຊູລ ﷺ ໄດ້ກ່າວວ່າ:

لاهجرة بعد الفتح

***"ບໍ່ມີການອົບພະຍົບໃດໆອີກແລ້ວ ພາຍຫຼັງຈາກທີ່ໄດ້ພິຊິດນະຄອນມັກກະຫ໌"*** *(ບັນທຶກ ອິມາມບຸກໍຣີ)*

## 10. ສະພາບສັງຄົມຂອງມຸສລິມໃນເມືອງມາດີນະຫ໌

ສັງຄົມມຸສລິມໃນນະຄອນມາດີນະຫ໌ພາຍຫລັງຈາກການອົບພະຍົບ ການທິຈເຣາະຫ໌ເປັນການຍົກຖານະໃຫ້ກັບບັນດາມຸສລິມ, ອັລລໍຫ໌ ﷻ ຊົງໃຫ້ກຽດແກ່ອິດສະລາມ ແລະ ຊົງເຮັດໃຫ້ເປັນລັດອິດສະລາມ, ສັງຄົມມຸດສະລິມໄດ້ກາຍເປັນສັງຄົມທີ່ໂດດເດັ່ນ ແລະ ສົມບູນດ້ວຍຂັ້ນຕອນຕ່າງໆ ແລະ ຫຼາຍອົງປະກອບ ພື້ນຖານທີ່ສຳຄັນເຊິ່ງທ່ານຣໍຊູລ ຊ.ລ ໄດ້ ໄດ້ຈັດຕັ້ງພື້ນຖານເພື່ອເປັນການສະຫາປະນາລັດອິດສະລາມ ເພື່ອເປັນການຈັດຕັ້ງ ແລະ ກົດລະບຽບຕ່າງໆ ສຳລັບສັງຄົມມຸສລິມແມ່ນດັ່ງຕໍ່ໄປນີ້;

### 10.1 ການສ້າງມັສຍິດ

ທ່ານສາດສະດາໄດ້ເຮັດສິ່ງທຳອິດກໍ່ຄືການສ້າງມັສຍິດ ເນື່ອງຈາກວ່າມັສຍິດ ມີຄວາມສຳຄັນຫຼາຍສຳລັບຊີວິດຄວາມເປັນຢູ່ຂອງບັນດາຊາວມຸດສະລິມ ທັງສ່ວນຕົວ ແລະ ສ່ວນລວມ ເພາະສະນັ້ນ ທ່ານສາດສະດາ ﷺ ຈຶ່ງໄດ້ສ້າງມັສຍິດແຫ່ງໜຶ່ງ ບ່ອນທີ່ອູດຂອງທ່ານຄຸກເຂົ່າລົງ ທ່ານໄດ້ຊື້ທີ່ດິນຈາກເຈົ້າຂອງການກໍ່ສ້າງມັສຍິດໄດ້ເລີ່ມຕົ້ນດ້ວຍຄວາມຕັ້ງໃຈທີ່ເຂັ້ມແຂງ ການອຸທິດຕົນເພື່ອເສັ້ນທາງແຫ່ງໄຊຊະນະ ແລະ ຄວາມດີອັນຍິ່ງໃຫຍ່ ທ່ານສາດສະດາ ﷺ ໄດ້ຮ່ວມມືໃນການກໍ່ສ້າງມັສຍິດ ພ້ອມກັບຊໍຮາບະຫ໌ ເຊິ່ງເປັນສ່ວນຫນຶ່ງທີ່ສຳຄັນໃນການເພີ່ມຄວາມມຸ່ງມັ່ນ ແລະ ກຳລັງໃຈທີ່ເຂັ້ມແຂງ ອາຄານມັສຍິດໄດ້ສ້າງຂຶ້ນຢ່າງລຽບງ່າຍ ຝາຜະໜັງແມ່ນເຮັດດ້ວຍດິນເຜົາ ແລະ ເສົາແມ່ນເຮັດດ້ວຍຕົ້ນອິນທາຜາລັມ ລັງຄາເຮັດດ້ວຍກ້ານອິນທາຜາລັມ[1] ອາຄານມັສຍິດໄດ້ມີບົດບາດສຳຄັນ ດັ່ງທີ່ທ່ານ ອິມາດຸດດີນ ຄໍ່ລິດ ໄດ້ເວົ້າວ່າ: ເປັນແບບຢ່າງຕາມອິດສະລາມໄດ້ວາງເອົາໄວ້ ຢ່າງຄອບຄຸມ ແລະ ສົມບູນແບບ ກາຍເປັນສູນກາງຂອງຈິດໃຈໃນການປະຕິບັດພິທີກຳ ການເຮັດອິບາດະຫ໌ ຕະຫຼອດຈົນຮອດລະບອບການປົກຄອງດ້ານການທະຫານ ເພື່ອແນໃສ່ຮັດແໜ້ນສາຍພົວພັນລະຫວ່າງຊາດທັງພາຍໃນ ແລະ ຕ່າງປະເທດ ແລະ ເປັນສະຖາບັນວິຊາການພ້ອມກັບການວາງບົດບັນຍັດສາສະໜາ ເຊິ່ງບັນດາຊໍຮາບະຫ໌ ຈະເຕົ້າໂຮມກັນທີ່ນັ້ນ ມັນຍັງເປັນສະຖານທີ່ສຳລັບການແກ້ໄຂບັນຫາຕ່າງໆ ແລະ ເປັນບ່ອນໃຊ້ເພື່ອການສອນອົບຮົມດ້ວຍຄຳສອນຕ່າງໆ, ເປັນສູນກາງຂອງສັງຄົມຊາວມຸດສະລິມທີ່ຈະຮຽນຮູ້ກົດລະບຽບ ຄວາມສະເໝີພາບ ແລະ ຄວາມເທົ່າທຽມ ແລະ ໄດ້ສຳພັດຄວາມສາມັກຄີ ຄວາມເປັນພີ່ນ້ອງ ຄວາມເປັນລະບຽບຮຽບຮ້ອຍ[2] ມີການກໍ່ສ້າງເຮືອນທີ່ລຽບງ່າຍສ້າງຂຶ້ນຢູ່ອ້ອມຂ້າງມັສຍິດ ແລະ ເປັນທີ່ພັກອາໄສຂອງທ່ານສາດສະດາພ້ອມດ້ວຍພັນລະຍາຂອງທ່ານ ຣໍດີຍັລລໍຮູ ອັນຮຸນນະ"

### 10.2 ການຈັບມືເປັນພີ່ນ້ອງກັນ

ຜູ້ທີ່ອົບພະຍົບ (ອັລ-ມຸຮາຈີຣີນ) ໄດ້ຖິ້ມທັ້ງເຮືອນ ແລະ ທີ່ຢູ່ອາໄສ ຕະຫຼອດຈົນຊັບສິນລວມທັງຄອບຄົວໄວ້ທີ່ນະຄອນມັກກະຫ໌ ຊຶ່ງເຂົາເຈົ້າໄດ້ມາດ້ວຍຫົວໃຈຂອງເຂົາເຈົ້າ ແລະ ບໍ່ມີຫຍັງຕິດໂຕມານຳກັບເຂົາເຈົ້ານອກຈາກສາດສະໜາ ດັ່ງນັ້ນຈຶ່ງມີບັນຫາຫຼາຍຢ່າງດ້ານດ້ວຍກັນ ບາງຄົນຂາດທີ່ຢູ່ອາໄສ ບໍ່ມີຍາດພີ່ນ້ອງ ບໍ່ມີຜູ້ໃດຊ່ວຍເຫຼືອແມ້ແຕ່ບ່ອນນອນຄ້າງຄືນ ແລະ ບັນຫາຄົນຍົກຍ້າຍບ່ອນຢູ່ທີ່ຕ້ອງລອນແລນໄປບ່ອນອື່ນ ຍັງຄົງເປັນບັນຫາທີ່ສັງຄົມມະນຸດຕ້ອງປະສົບກັບທຸກຍຸກທຸກສະໄໝ ນີ້ບໍ່ແມ່ນການແກ້ໄຂທີ່ງ່າຍໆສຳຫຼັບໃນໄລຍະສັ້ນໆ ຫາກແຕ່ຜູ້ນຳຂອງມະນຸດຊາດ (ທ່ານສາດສະດາ) ໄດ້ວາງແນວທາງແກ້ໄຂໄວ້ຢ່າງຈະແຈ້ງ ແລະ ພ້ອມກັບຄວາມພະຍາຍາມທີ່ຈະແກ້ໄຂບັນຫາໃຫ້ລຸລ່ວງສຳເລັດໄປດ້ວຍດີ ໂດຍການໃຫ້ຈັບມືຄວາມສາມັກຄີເປັນພີ່ນ້ອງລະຫວ່າງກຸ່ມອົບພະຍົບ (ອັລ-ມຸຮາຈີຣີນ) ແລະ ກຸ່ມຜູ້ໃຫ້ການຊ່ວຍເຫຼືອ (ຊາວອັນຊໍຣ) ເຊິ່ງເປັນເຈົ້າຂອງໃນທ້ອງຖິ່ນ ໂດຍໃຫ້ແຕ່ລະຝ່າຍໄດ້ຈັບມືເປັນອ້າຍເອື້ອຍນ້ອງເປັນຄູ່ໆ ຈຶ່ງເຮັດໃຫ້ເກີດຄວາມອົບອຸ່ນແກ່ຄົນຕ່າງຖິ່ນ ແລະ ເພື່ອເປັນການຫຼຸດຜ່ອນຄວາມທຸກຍາກ ແລະສ້າງຄວາມສະນິດສະໜົມເຊິ່ງກັນ ແລະ ກັນ ອີກທັ້ງຄວາມເປັນພີ່ນ້ອງກັນລະຫວ່າງກຸ່ມມຸຮາຈີຣີນ ກັບກຸ່ມອັນຊໍຣ ໄດ້ ມີຄວາມເລິກຊຶ້ງເກີນກວ່າພີ່ນ້ອງທາງສາຍເລືອດເສຍອີກ ແລະ ບໍ່ເຄີຍເຫັນຮູບແບບຄວາມສຳພັນແບບນີ້ໃນຍຸກໃດກ່ອນເລີຍ ຈົນມີສິດໄດ້ຮັບມໍລະດົກທາງຊັບສິນເຊິ່ງແມ່ນຫຼາຍກວ່າທາຍາດດ້ວຍຊ້ຳແລະ ການຈັບມືເປັນພີ່ນ້ອງກໍບໍ່ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ຊາວອັນຊໍຣ ຊຶ່ງປະຊາຊົນຊາວອັນຊໍຣ ຈະຕ້ອງບັນເທົາທຸກໂດຍການແບ່ງປັນຊັບສິນຂອງເຂົາເຈົ້າ ການດູແລໃກ້ຊິດ ແລະ ອື່ນໆ, ໃນທາງກົງກັນຂ້າມຊາວອັນຊໍຣ ຕ້ອງການທີ່ຈະໃຫ້ຫຼາຍກວ່າທີ່ພວກເຂົາຖືກຮ້ອງຂໍໃຫ້ ຈາກການຈັບມືພີ່ນ້ອງກັນນີ້ພວກເຂົາເຈົ້າໄດ້ສະເໜີໃຫ້ຣໍຊູລຂອງອັລລໍຫ໌ ﷺ ວ່າຈະແບ່ງປັນສວນອິນທາຜະລັມ ໃຫ້ແກ່ພີ່ນ້ອງຊາວມຸຮາຈີຣີນອີກດ້ວຍ ແຕ່ທ່ານບໍ່ຮັບຂໍ້ສະເໜີດັ່ງກ່າວ ຊາວອັນຊໍຣຈຶ່ງໄດ້ສະເໜີໃຫ້ຊາວມຸຮາຈີຣີນສາມາດເຮັດວຽກຢູ່ໃນສວນ ແລ້ວພວກເຂົາເຈົ້າຈະແບ່ງປັນຜົນອິນທາຜະລັມໃຫ້ ຊາວມຸຮາຈີຣີນຈຶ່ງຍອມຮັບຂໍ້ສະເໜີນັ້ນ[3]

ອັລລໍຫ໌ ຊຸບຮານະຮຸ ວະຕະອາລາ ພຣະອົງໄດ້ຍົກຍ້ອງຊາວອັນຊໍຣ ແລະ ຊີ້ແຈ້ງໃຫ້ເຫັນຄວາມເອື້ອເຟື້ອເພື່ອແຜ່ຂອງເຂົາເຈົ້າໃນພຣະຄຳພີຂອງພຣະອົງ:

***"ແລະ ບັນດາຜູ້ທີ່ຕັ້ງຖິ່ນຖານຢູ່ໃນມາດີນະຫ໌ (ຊາວອັນຊໍຣ) ແລະ ພວກເຂົາໄດ້ເຊື່ອກ່ອນໜ້າການອົບພະຍົບຂອງພວກເຂົາ (ຊາວມຸຮາຈີຣີນ) ພວກເຂົາເຈົ້າຮັກຜູ້ຄົນທີ່ອົບພະຍົບມາຫາເຂົາເຈົ້າ ແລະຈະບໍ່ມີຄວາມປາຖະໜາ ຫລື ຄວາມອິດສາໃນຫົວອົກຂອງພວກເຂົາ ໃນສິ່ງທີ່ໄດ້ຖືກປະທານໃຫ້ ແລະ ຍັງເອົາສິດທິຂອງຄົນອື່ນກ່ອນຂອງຕົນເອງ ເຖິງແມ່ນວ່າພວກເຂົາຍັງມີຄວາມຕ້ອງການຫຼາຍ ແລະ ໃຜທີ່***

***ປ້ອງກັນຄວາມຂີ້ຖີ່ຢູ່ໃນຕົວເຂົາ ຄົນເຫຼົ່ານັ້ນແຫລະ ພວກເຂົາເປັນຜູ້ທີ່ປະສົບຜົນສໍາເລັດ*** *(ອັລຮັຊຣ໌ 59:9)*

ບັນດາ ຊາວມຸຮາຈິຣີນ ຢ້ານວ່າຊາວອັນຊໍຣ ຈະຮັບເອົາຜົນລະບຸນທີ່ຈະໄດ້ແກ່ພວກເຂົາໄປໝົດສິ້ນ ຊາວມຸຮາຈິຣີນ ຈຶ່ງເວົ້າກັບທ່ານຣໍຊູລ ﷺ ວ່າ:

*"ໂອ້ ທ່ານຣໍຊູລ ຂອງອັລລໍຫ໌ ﷺ ພວກເຮົາບໍ່ເຄີຍພົບໃຜຄືກັບກຸ່ມຄົນທີ່ພວກເຮົາອົບພະຍົບມາ ພວກເຂົາເຈົ້າໄດ້ທຸ້ມເທໃຫ້ຢ່າງຫຼາຍ ແລະ ບໍ່ເຄີຍເຫັນໃຜທີ່ໄດ້ສະແດງຄວາມເປັນພີ່ນ້ອງແມ້ແຕ່ຢູ່ໃນສ່ວນເລັກນ້ອຍ ພວກເຂົາເຈົ້າໄດ້ໃຫ້ພວກເຮົາແບ່ງປັນຄວາມໂສກເສົ້າ ແລະ ຄວາມສຸກຂອງພວກເຮົາ ພວກເຮົາໄດ້ມີການດໍາລົງຊີວິດຢ່າງພຽງພໍ ເຊິ່ງແນ່ນອນວ່າພວກເຮົາຢ້ານວ່າພວກເຂົາຈະເອົາຄວາມດີຂອງພວກເຮົາໄປ"* ທ່ານນະບີ ﷺ ຈຶ່ງໄດ້ກ່າວວ່າ **( كَلاَّ مَا أَثْنَيْتُمْ عَلَيْهِمْ بِهِ ، وَدَعَوْتُمْ اللهَ عز وجل لَهُمْ)**

**ຄວາມວ່າ: "ແມ່ນແລ້ວ ຕາມທີ່ພວກທ່ານກ່າວຊົມເຊີຍພວກເຂົານັ້ນ ແລະ ພວກທ່ານໄດ້ຂໍວິງວອນຕໍ່ອັລລໍຫ໌ ອັຊຊະວະຈັລ ໃຫ້ກັບພວກເຂົາ"[4]**

ຊະອ໌ດ ບິນ ອັຣຣໍບີອະຫ໌ ທີ່ເປັນ ຊາວອັນຊໍຣ ກັບພີ່ນ້ອງຂອງລາວ ຄື ອັບດຸຣເຣາະຫ໌ມານ ບິນ ເອົາຟ ຈາກຊາວມຸຮາຈິຣີນ ຣໍດີຍັລລໍຮຸ ອັນຮູມາ ຊາວອັນຊໍຣທີ່ມີຄວາມຈິງໃຈ ແລະ ມີຄວາມເມດຕາຕໍ່ ຊາວມຸຮາຈິຣີນ ແລະ ຊາວມຸຮາຈິຣີນທີ່ຮູ້ສຶກສໍານຶກໃນບຸນຄຸນອັນງົດງາມຍິ່ງ, ທ່ານສາດສະດາໄດ້ໃຫ້ເຂົາຈັບມືລະຫວ່າງສອງຄົນ ແລ້ວ ຊະອ໌ດໄດ້ສະເໜີຊັບສິນທີ່ມີຢູ່ໃຫ້ແກ່ ອັບດຸຣເຣາະຫ໌ມານ ເຄິ່ງໜຶ່ງ

ຕະຫຼອດຈົນສີເຮັດໃບຫຍ່າຮ້າງກັບເມຍຂອງລາວໜຶ່ງໃນສອງຄົນທີ່ມີຢູ່ແລ້ວໃຫ້ໄດ້ແຕ່ງງານດ້ວຍ ອັບດຸຣເຣາະຫ໌ມານ ຈຶ່ງເວົ້າວ່າ: ***"ຂໍອັລລໍຫ໌ຊົງປະທານສິລິມົງຄຸນໃຫ້ແກ່ທ່ານຄົນໃນຄອບຄົວ ແລະ ຊັບສິນຂອງທ່ານດ້ວຍເຖີດ"*** *(ລາວບໍ່ຮັບຂໍ້ສະເໜີນັ້ນ)*

ແລ້ວເວົ້າວ່າ: ***"ຂໍໃຫ້ທ່ານຈົ່ງບອກແຫຼ່ງທ້ອງຕະຫຼາດໃຫ້ແກ່ຂ້ອຍດ້ວຍ"***

ອັບດຸຣເຣາະຫ໌ມານ ໄດ້ວົນວຽນຄ້າຂາຍຢູ່ໃນຕະຫຼາດ ຈົນລາວໄດ້ກາຍເປັນຄົນມັ່ງຄັ່ງໃນຊາວມຸຮາຈິຣີນ[5]

---

1.ເບິ່ງໃນໜັງສື ຊໍຮີຫ໌ ອັລບຸກໍຄໍຣີ ກີຕາບ-ອັສຊໍລາດ ເລື່ອງ ບຸນຍານຸ້ລມັສຍິດ ເຊິ່ງຢູ່ໃນໜັງສື ຟັດຮຸລບາຣີ ເລັ່ມທີ່ 1 ໜ້າ 540

2.ເບິ່ງໜັງສື "ດີຣໍຊະຫ໌ ພີສຊີເຣາະຫ໌ ຫນ້າ 149

3.ເບິ່ງໜັງສື ຟັດຮຸ້ລບາຣີ ຂອງອີບນີ ຮະຈັຣ ເລັ່ມທີ່ 5/8 ໜ້າ 322 ຢູ່ໃນຄໍາອະທິບາຍຫະດີຊທີ່ມີໃນຊໍຮີຫ໌ ອັລບຸກໍຄໍຣີ ເລກທີ 2325 -271

4.ສຸນັດ ຕັຣມີຊີ 4/653 ມັສນັດ ອະມັດ 3/200 ສຸນັດ ໄບຮາກີ 6/183

5.ເລື່ອງນີ້ໄປເບິ່ງຊໍຮີຫ໌ ອັລບຸກໍຄໍຣີ "ກີຕາບູ້ລບຸຍູອ໌" ບົດ ເມື່ອເສັດສິ້ນການລະໝາດແລ້ວຈຶ່ງແຍກຍ້າຍໄປບົນໜ້າແຜ່ນດິນ ຫະດີຊ 2048-2049

ແທ້ຈິງແລ້ວ ການຈັບມືເປັນພີ່ນ້ອງກັນນຳໄປສູ່ຄວາມຜູກພັນທາງໃຈໃນບັນດາຜູ້ສັດທາ ແລະ ເຮັດໃຫ້ອົບອຸ່ນຫົວໃຈໃນບັນດາຊາວມຸຮາຈິຣີນ ເປັນການສ້າງສັງຄົມທີ່ໝັ້ນຄົງເປັນປຶກແຜ່ນ ອັນເຕັມດ້ວຍຄວາມຮັກ ຄວາມເປັນພີ່ນ້ອງ ເມື່ອການດຳລົງຊີວິດຂອງຊາວມຸຮາຈິຣີນສົມບູນດີ ແລະ ຫມັ້ນຄົງເປັນທີ່ພຽງພໍແລ້ວ ອັລລໍຫ໌ ຊຸບຮານະຮຸ ວະຕະອາລາ ຊົງຍົກເລີກການຮັບມໍລະດົກໃນຮູບແບບການຈັບມືເປັນອ້າຍນ້ອງ ໂດຍການປ່ຽນມາເປັນໃຫ້ຮັບມໍລະດົກໂດຍສາຍເລືອດ ດັ່ງໃນພຣະດຳລັດຂອງພຣະອົງທີ່ວ່າ:

***"ແລະ ຜູ້ທີ່ໄດ້ສັດທາທີຫຼັງ ແລະ ໄດ້ອົບພະຍົບ ແລະ ຕໍ່ສູ້ຮ່ວມກັບພວກທ່ານ ຊົນເຫຼົ່ານີ້ແຫລະແມ່ນສ່ວນໜຶ່ງໃນບັນດາພວກເຈົ້າ ແລະ ຍາດພີ່ນ້ອງເຫຼົ່ານັ້ນ ບາງສ່ວນຂອງພວກເຂົາເປັນຜູ້ສົມຄວນຕໍ່ອີກບາງສ່ວນໃນຄຳພີຂອງອັລລໍຫ໌ ແທ້ຈິງແລ້ວ, ອັລລໍຫ໌ຊົງຮູ້ທຸກສິ່ງທຸກຢ່າງ." (ອັລອັນຟາລ 8: 75)***

**ຂໍ້ຕົກລົງກັບຊາວຢິວໃນມາດີນະຫ໌**

ໃນຂະນະທີ່ທ່ານຣໍຊູລ ລູລລໍຫ໌ ﷺ ເຂົ້າໄປສູ່ເມືອງມາດີນະຫ໌ ມີຊາວຢິວອາໄສຢູ່ໃນດິນແດນນັ້ນຄືກັນ ສະນັ້ນ ເພື່ອກໍ່ສ້າງສັງຄົມໃນເມືອງມາດີນາໃຫ້ສຳເລັດ ດ້ວຍກົດລະບຽບທີ່ຈະແຈ້ງວ່າຕ້ອງການສ້າງຕັ້ງອານາຈັກລັດອິດສະລາມ ຈຶ່ງຕ້ອງກຳໜົດສ້າງຄວາມສຳພັນກັບຊາວຢິວ ຊຶ່ງເຂົາເຈົ້າເປັນສ່ວນໜຶ່ງຂອງຊາວເມືອງມາດີນະຫ໌ ນີ້ແມ່ນສິ່ງທີ່ທ່ານສາດສະດາ ﷺ ຖືປະຕິບັດ ແລະ ໄດ້ມີຂໍ້ຕົກລົງເປັນລາຍລັກອັກສອນກັບກຸ່ມຢິວຕ່າງໆ ໃນຂໍ້ກົດເກນພື້ນຖານທີ່ສຳຄັນຂອງສັນຍາດັ່ງນີ້:

- ການນັບຖືສາດສະນາໂດຍມີຄວາມເສລີ ***ມຸສລິມມີສາສະນາຂອງມຸສລິມ ຢິວມີສາສະນາຂອງຢິວ.***
- ທຸກຝ່າຍຕ້ອງມີຄວາມຮັບຜິດຊອບຕໍ່ການປ້ອງກັນເມືອງມາດີນະຫ໌ ຕໍ່ໄພຂົ່ມຂູ່ຈາກພາຍນອກ.
- ຄວາມປອດໄພພາຍໃນເມືອງມາດີນະຫ໌ ຢູ່ໃນຄວາມຮັບຜິດຊອບຂອງທຸກຄົນ ຫມາຍຄວາມວ່າໃຫ້ທຸກຄົນມີສ່ວນຮ່ວມໃນການຮັກສາຄວາມປອດໄພ.
- ທຸກຝ່າຍຕ້ອງເຄົາລົບເຊິ່ງກັນ ແລະ ກັນ ແລະ ຈະບໍ່ເປັນມິດກັບຊາວກຸເຣຊ ແລະ ບໍ່ມີການຊ່ວຍເຫຼືອໃດໆ.
- ການພົວພັນລະຫວ່າງສອງຝ່າຍຕ້ອງອີງໃສ່ຄວາມບໍລິສຸດໃຈ ໂດຍບໍ່ມີການເຊື່ອງໄວ້ໃດໆ ຫຼືການຫຼອກລວງ ເລ່ຫຼ່ຽມໃດໆ.
- ທ່ານສາດສະດາເປັນຜູ້ນຳສູງສຸດຂອງປະຊາຊົນ ແລະ ຊາວຢິວເປັນສ່ວນຫນຶ່ງຂອງປະຊາຊົນ ຊາວຢິວຕ້ອງຢູ່ພາຍໃຕ້ການປົກຄອງ ໃນເລື່ອງທີ່ມີການພິພາດໂຕ້ຖຽງກັບທ່ານຣໍຊູລ ລຸລລໍ ﷺ

ເປັນຜູ້ຊີ້ຂາດຕັດສິນ ສິດອໍານາດໃນການອອກຄໍາສັ່ງແມ່ນສິດຂອງທ່ານສາດສະດາ ﷺ ທັງໃນສົງຄາມ ແລະ ອື່ນໆ[1]

ການກໍ່ຕັ້ງມັສຍິດ ການຈັບມືເປັນພີ່ນ້ອງກັນ ຕະຫຼອດຈົນການຂຽນສົນທິສັນຍາກັບຊາວຢິວ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ວາງຮາກຖານ ກົດເກນການຈັດຕັ້ງຂອງລັດອິດສະລາມບົນພື້ນຖານທີ່ໝັ້ນຄົງ ມັສຍິດແມ່ນບ່ອນຝຶກອົບຮົມຊາວມຸດສະລິມ ແລະ ເປັນການຈັດລະບຽບມາລະຍາດ ລວມທັງການເປັນພີ່ນ້ອງກັນເຮັດໃຫ້ເອື້ອອໍານວຍຕໍ່ການດໍາລົງຊີວິດຂອງສ່ວນລວມ ດ້ວຍຄວາມຮັກ, ຄວາມຊື່ສັດ ແລະ ຄວາມເມດຕາ ສ່ວນທີ່ເປັນລາຍລັກອັກສອນຂອງສົນທິສັນຍາ ເປັນການຄວບຄຸ່ມອຸປະນິໄສຂອງຄົນທີ່ບໍ່ນັບຖືສາດສະນາອິດສະລາມ[2]

ຫຼັງຈາກນັ້ນ ວິທີການດໍາລົງຊີວິດໃນຮູບແບບອິດສະລາມໄດ້ເລີ່ມຕົ້ນໄປຢ່າງສົມບູນແບບ ມີການປະກາດໃຊ້ບົດບັນຍັດທາງສາດສະໜາ ຄໍາສອນຂອງອິດສະລາມຕາມພຣະບັນຍັດຂອງ ອັລລໍຫ໌ ﷻ ເພື່ອເປັນການຈັດລະບົບລະບຽບສັງຄົມຄົນມຸສລິມ ລັດອິດສະລາມ ຈັດຕັ້ງວິຖີຊີວິດສ່ວນບຸກຄົນ ແລະ ສັງຄົມລວມທັງຄວາມສໍາພັນກັບພຣະຜູ້ເປັນເຈົ້າ ຈັດຕັ້ງລະບົບລັດທີ່ປະຕິບັດໜ້າທີ່ ແລະ ສິດ ມີອົງການເຮັດໜ້າທີ່ຄອຍຄວບຄຸ່ມດູແລ ໃຊ້ຫຼັກບັນຍັດເພື່ອເຜີຍແຜ່ຄໍາສອນ ແລະ ໃຫ້ຄວາມຮູ້ສຶກສາອົບຮົມແກ່ປະຊາຊົນກ່ຽວກັບເລື່ອງສາສະໜາ ພ້ອມກັບປຶກຄອງຕັດສິນ ແລະ ພິຈາລະນາດ້ວຍຄວາມຍຸດຕິທໍາ ແລະ ການລົງໂທດຜູ້ກະທໍາຜິດ ກະກຽມທະຫານເພື່ອຮັບປະກັນຄວາມໝັ້ນຄົງຂອງບ້ານເມືອງ ປົກປ້ອງເຂດຂອງລັດອິດສະລາມ ແລະ ກະກຽມທີ່ຈະພິຊິດເອົາຊະນະທົ່ວເມືອງຕ່າງໆ ເພື່ອຂະຫຍາຍການເຊື້ອເຊີນສູ່ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ໃຫ້ເຂົ້າໄປເຖິງປະຊາຊົນທຸກຊົນຊັ້ນ

## 10.3 ການເຜີຍແຜ່ສາສະໜາໃນນະຄອນມາດີນະຫ໌

ການສ້າງຕັ້ງລັດອິດສະລາມໃນ **ນະຄອນມາດີນະຫ໌** ເປັນການຊີ້ໃຫ້ເຫັນວ່າຂັ້ນຕອນຂອງການຕໍ່ສູ້ (ອັລ-ຈິຮາດ) ແລະ ການທົດສອບສໍາລັບຊາວມຸດສະລິມໄດ້ເລີ່ມຂຶ້ນ, ດັ່ງນັ້ນ ຈຶ່ງບໍ່ແມ່ນພຽງແຕ່ຊາວກູເຣຊເທົ່ານັ້ນ ແຕ່ຍັງມີກຸ່ມອື່ນໆທີ່ເປັນສັດຕູນໍາອີກ ແລະ ຍັງມີອະຫ໌ລຸລກິຕາບ ຈາກຊາວຢິວ, ເຊິ່ງມີຄວາມຄຽດແຄ້ນຢູ່ແລ້ວ ເນື່ອງຈາກວ່າ

*ປະການທໍາອິດ* ຊາວຢິວຮູ້ດີວ່າຈະມີນະບີມາຢ່າງແນ່ນອນ ແຕ່ບໍ່ແມ່ນມາຈາກພວກຂອງເຂົາ

1.ລາຍລະອຽດຂອງໜັງສືສັນຍາແລະຄວາມຮູ້ເພີ່ມເຕີມນັ້ນເບິ່ງທີ່ "ອັລອັມຣີ ອັຊຊີເຣາະຫ໌ ອັນນະບາວີຍະຫ໌ ອັສຊໍຮີຫະຫ໌" "ມະຫ໌ດີຣິສກຸລລໍຫ໌ ອັຊຊີເຣາະຫ໌ ອັນນະບາວີຍະຫ໌ ຟີກອະວະອິ໊ລ ມີຊໍດີຣິສອັສລີຍະຫ໌ 306-318 282-292

2.ເບິ່ງຂໍ້ຂຽນຂອງຊໍລິຫ໌ ອັຊຊາມີ "ມິນມຸອີນີຊຊີເຣາະຫ໌" 165

*ປະການທີສອງ* ຫຼັງຈາກການອົບພະຍົບເຂົ້າເມືອງມາດີນະຫ໌ ເຮັດໃຫ້ຊາວອາຫຣັບໃນເມືອງມາດີນະຫ໌ມີຄວາມສາມັກຄີ ຊາວຢິວເຫັນວ່າເລື່ອງນີ້ເຮັດໃຫ້ເຂົາເຈົ້າອ່ອນແອລົງ ແລະ ທຳລາຍສິ່ງທີ່ເຂົາເຈົ້າໄດ້ວາງແຜນໄວ້ເປັນເວລາຫຼາຍປີ ໂດຍເຮັດໃຫ້ມີການແບ່ງແຍກໃນກຸ່ມຊົນເຜົ່າອາຫຣັບ

ແລະ ຍັງອ້ອມຮອບໄປດ້ວຍສັດຕູພາຍໃນຊາວມຸດສະລິມດ້ວຍກັນເອງ ດ້ວຍຄວາມພະຍາຍາມທີ່ຈະທຳລາຍທຸກຊ່ອງທາງ ໃນທຸກຄັ້ງທີ່ມີໂອກາດພວກເຫຼົ່ານີ້ແມ່ນ **ພວກມຸນາຟິກ "ຫນ້າຊື່ໃຈຄົດ"**

ຊາວມຸຊຣິກີນ (ຜູ້ປະຕິເສດ) ໃນມັກກະຫ໌ ພວກເຂົາເຈົ້າແມ່ນກຸ່ມທຳອິດທີ່ເປັນສັດຕູໃນການເຊີນຊວນ (ດະອະຫ໌) ແຫ່ງອິດສະລາມ, ກີດຂວາງເຮັດທຸກວິທີທາງທີ່ເປັນໄປໄດ້ເພື່ອສະກັດກັ້ນການແຜ່ຂະຫຍາຍຂອງອິສລາມ ເມື່ອທ່ານຣໍຊູລ ﷺ ໄດ້ອົບພະຍົບມາ ຈຶ່ງເຮັດເຂົາເຈົ້າໃຈຮ້າຍກັບທ່ານຫຼາຍຂຶ້ນລວມທັງບັນດາຊໍຮາບະຫ໌ໄດ້ຮອດພົ້ນໜີຈາກພວກເຂົາໄປໄດ້ ແລະ ໄດ້ຍຶດຄອງເສັ້ນທາງການຄ້າຂາຍໄປອີກ ພວກເຂົາຈຶ່ງຕ້ອງການກຳຈັດທ່ານສາດສະດາມຸຮຳຫມັດ ﷺ ພ້ອມກັບບັນດາຊໍຮາບະຫ໌ໃຫ້ໝົດ ກ່ອນທີ່ຈະມີອຳນາດຫຼາຍຂຶ້ນ ແລະ ສິ່ງທຳອິດທີ່ທ່ານສາດສະດາ ﷺ ຕ້ອງເຮັດຫຼັງຈາກການອົບພະຍົບ ຄືການຕອບແທນກັບຜູ້ທີ່ໄດ້ເຄີຍທຳຮ້າຍຜູ້ສັດທາ ຊັບສິນທີ່ຖືກຍຶດ ແລະ ຖືກຂັບໄລ່ອອກຈາກເຮືອນຢ່າງບໍ່ຍຸຕິທຳ ໃນຂະນະທີ່ໄດ້ລົງນາມໃນສົນທິສັນຍາສັນຕິພາບກັບຊາວຢິວ ທ່ານໄດ້ສັ່ງບໍ່ໃຫ້ມີການປະນີປະນອມກັບພວກກຸເຣຊ ຫຼືແມ້ກະທັ້ງໃຫ້ຄວາມໃກ້ຊິດສະນິດສະນົມ ຕະລອດຈົນການປົກປ້ອງຄາລາວານຂອງເຂົາເຈົ້າເຊິ່ງເປັນສ່ວນໜຶ່ງທີ່ຊີ້ໃຫ້ເຫັນວ່າທ່ານສາດສະດາ ນັ້ນໄດ້ກະກຽມຄວາມພ້ອມເພື່ອການຕໍ່ສູ້ກັບກຸເຣຊ ການເຮັດສົງຄາມລະຫວ່າງສອງຝ່າຍໄດ້ເກີດຂຶ້ນໃນປີຮິຈເຣາະຫ໌ທີສອງ ໂດຍໄດ້ແບ່ງສົງຄາມອອກເປັນ 3 ໄລຍະຮ່ວມກັນ ຄື: ໃນໄລຍະທີໜຶ່ງ, ພວກມຸຊຣິກີນໄດ້ອອກມາຮົບກັບຊາວມຸດສະລິມ.

ໄລຍະທີສອງ, ການປະນີປະນອມຂອງການຢຸດຍິງ.

ໄລຍະທີສາມ, ຊາວມຸດສະລິມອອກໄປຮົບກັບພວກມຸຊຣິກີນ.

**ຕອນທີ່ 1 ພວກມຸຊຣິກີນອອກມາຮົບກັບບັນດາມຸສລິມ**

### 11.1 ສົງຄາມບະດັຣ

ປະມານ 5 ປີຫຼັງຈາກການຮິຈເຣາະຫ໌ ຊາວກຸເຣຊ ໄດ້ນຳກອງທະຫານເຂົ້າສູ່ເມືອງມາດີນະຫ໌ເພື່ອແນ່ໃສ່ທຳລາຍກຸ່ມລັດອິສລາມໃຫ້ລາບຄາບລົງ ເຊິ່ງທັງສອງຝ່າຍໄດ້ຕໍ່ສູ້ກັນຫຼາຍຄັ້ງ ເຊິ່ງຈະນຳສະເໜີໂດຍສະຫຼຸບທີ່ສຳຄັນໆ, ໄດ້ແກ່ **ສົງຄາມບະດັຣ**, **ສົງຄາມອູຮຸດ**, **ແລະສົງຄວາມອັລອະຫ໌ຊາບ**, ແລະອື່ນໆ

**ສົງຄາມບະດັຣ** ແມ່ນສົງຄາມທຳອິດທີ່ຈະຈຳແນກລະຫວ່າງບັນດາມຸສລິມກັບບັນດາມຸຊຣິກ ເຊິ່ງຈາກສາເຫດຂອງສົງຄາມ ຕະຫຼອດຂັ້ນຕອນຕ່າງໆ ເຮັດໃຫ້ຮູ້ວ່າ ແທ້ຈິງອັລລໍຫ໌ ﷻ ພຣະອົງໄດ້ປາດຖະໜາທີ່ຈະກຳຈັດຈຸດອ່ອນຂອງຊາວມຸດສະລິມທີ່ພຳນັກໃຊ້ຊີວິດໃນມັກກະຫ໌ ແລະພວກມຸຊຣິກີນ ໄດ້ປະຕິບັດຕໍ່ຊາວມຸດສະລິມດ້ວຍຄວາມໂຫດຮ້າຍ ເຊັ່ນດຽວກັນກັບທີ່ພຣະອົງມີຈຸດປະສົງເພື່ອເປັນບົດຮຽນທີ່ເຈັບປວດສຳລັບຊາວກູເຣຊ ຕະຫຼອດຈົນການທຳລາຍອຳນາດຂອງພວກເຂົາ ແລະ ເປັນບົດຮຽນໃຫ້ປະຊາຊົນທົ່ວໄປ ພະລັງທີ່ແທ້ຈິງນັ້ນ ແມ່ນພະລັງແຫ່ງຄວາມສັດທາ ແທ້ຈິງແລ້ວອັລລໍຫ໌ ﷻ ຊົງຊ່ວຍເຫຼືອປົກປ້ອງທ່ານນະບີ ﷺ ລວມເຖິງສາສະໜາຂອງພຣະອົງໃຫ້ເປັນທີ່ປະຈັກຊັດເຈນ

ຫຼັງຈາກທີ່ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຈັດລະບົບພາຍໃນຂອງມາດີນະຫ໌ຮຽບຮ້ອຍແລ້ວ ຈຶ່ງຫັນມາເພື່ອເຮັດການຕອບໂຕ້ພວກກຸເຣຊ ແລະ ທວງຄືນສິ່ງທີ່ຍຶດຈາກບັນດາຜູ້ອົບພະຍົບກັບຄືນມາ ເຊິ່ງມີທັງຊັບສິນ ແລະ ທີ່ຢູ່ອາໄສ

ໂອກາດມາຮອດແລ້ວ ໃນຂະນະທີ່ທ່ານນະບີໄດ້ຮູ້ວ່າຄາຣາວານສິນຄ້າຂອງຊາວກຸເຣຊ ໄດ້ອອກມຸ່ງຫນ້າໄປສູ່ເມືອງຊາມ ທ່ານຈຶ່ງໄດ້ລໍຖ້າຂະບວນຄາຣາວານທີ່ບັນທຸກສິນຄ້າຕ່າງໆ ທີ່ກຳລັງເດີນທາງກັບຄືນ ເມື່ອຂະບວນຄາຣາວານມາຮອດ ທ່ານຈຶ່ງອອກໄປພ້ອມກັບບັນດາຊໍຮາບັດ ທີ່ມີຄວາມສາມາດ ເພື່ອສະກັດກອງຄາຣາວານນັ້ນຢ່າງໄວ, ທ່ານສາດສະດາໄດ້ກ່າວວ່າ:

( فَمَنْ كَانَ ظَهْرُهُ حَاضِرًا فَلْيَرْكَبْ مَعَنَا )

***"ໃຜທີ່ມີພາຫານະພ້ອມ ກໍ່ໃຫ້ຟ້າວຂີ່ບອອກໄປກັບເຮົາທັນທີ"*** [1]

ທ່ານສາດສະດາໄດ້ອອກໄປພ້ອມກັບຊໍຮາບະຫ໌ເພື່ອສະກັດກອງຄາຣາວານນັ້ນ ແຕ່ ອັລລໍຫ໌ ﷻ ພຣະອົງໄດ້ມີຈຸດປະສົງອື່ນ ກອງຄາຣາວານນັ້ນຈຶ່ງໄດ້ຫລຸດລອດໄປ ຜູ້ນຳຂອງກອງຂະບວນຄາຣາວານນັ້ນຄື **ອະບູ ຊຸຟຢານ**, ໄດ້ສົ່ງຄົນໄປກວດກາເສັ້ນທາງດັ່ງກ່າວ ແລະ ໄດ້ຮູ້ວ່າຊາວມຸດສະລິມໄດ້ປິດເສັ້ນທາງດັ່ງກ່າວ ສະນັ້ນ ລາວຈຶ່ງຫຼົບໜີໄປທາງອື່ນ ດ້ານຊ້າຍຝັ່ງທະເລແດງແທນ ແລະ ພ້ອມສົ່ງຄົນໄປບອກຊາວກຸເຣຊ ເພື່ອອອກມາປົກປັກຮັກສາຄາຣາວານສິນຄ້າຂອງເຂົາເຈົ້າ ດັ່ງນັ້ນ ຊາວກຸເຣຊພາກັນອອກມາຈຳນວນຫຼວງຫຼາຍ, ປະມານ 1300 ຄົນ, ແລະ ຫຼັງຈາກທີ່ໄດ້ຍິນຂ່າວຂອງການຫລົບຫນີຂອງກອງຄາຣາວານ ບາງກຸ່ມຈຶ່ງຄິດວ່າມັນສົມຄວນທີ່ຈະກັບຄືນໄປມັກກະຫ໌, ແຕ່ **ອະບູ ຈະຮັລ** ໄດ້ຫຼົງຕົວເອງຈຶ່ງຄິດວາງແຜນ ອອກອຸບາຍ ແລ້ວລາວເວົ້າວ່າ:

1.ເບິ່ງໃນຊໍຮີຫ໌ ມຸສລິມ ກິຕາບ ອິມາເຣາະຫ໌ ບາບ ສຸບູຕູ້ລຈັນນະຫ໌ ລີຊຊະຮີດ

*"ພວກເຮົາຈະບໍ່ກັບຄືນໄປມັກກະຫ໌ເທື່ອ ຈົນກວ່າພວກເຮົາຈະໄດ້ໄປບະດັຣກ່ອນ ໄປຢູ່ຈັກສາມມື້ ເຮົາຈະຂ້າອູດໜຸ່ມ ແລະ ດື່ມສຸຣາ ແລະ ລ້ຽງສະລອງ ມີທັງນັກຮ້ອງ ແລະ ນັກເຕັ້ນລຳໃຫ້ພວກເຮົາຊົມເບິ່ງ ເພື່ອວ່າຊາວອາຣັບຈະໄດ້ກ່າວຂວັນເຖິງຊື່ສຽງ ແລະ ຄວາມເປັນຢູ່ຂອງພວກເຮົາຢ່າງຍິ່ງໃຫຍ່ ແລະ ພວກເຂົາຈະໄດ້ຢ້ານກົວພວກເຮົາຕະຫຼອດໄປ"*

ມີຫຼາຍຄົນທີ່ເຊື່ອຫຼົງໃນຄຳເວົ້າຂອງອະບູຈະຮັລ ສ່ວນຜູ້ທີ່ກັບຄືນໄປເມືອງມັກກະຫ໌ມີປະມານ 300 ຄົນ. ອະບູຈະຮັລໄດ້ພາພັກພວກເດີນທາງໄປຈົນເຖິງແຫຼ່ງນ້ຳທີ່ບະດັຣ ກອງຄາຣາວານຂອງກຸເຣຊໄດ້ຜ່ານພົ້ນໄປແລ້ວ ແລະ ມີຈຳນວນຫຼາຍຂອງພວກກຸເຣຊໄດ້ມຸ່ງໜ້າໄປບະດັຣ ເພື່ອເປັນການສະແດງໃຫ້ເຫັນເຖິງອຳນາດຂອງເຂົາເຈົ້າທີ່ຈະຂົ່ມຂູ່ຊາວມຸດສະລິມ ທ່ານນະບີ ມູຮຳຫມັດ ﷺ ຈຶ່ງມີຄຳສັ່ງສຳລັບສະຖານະການນີ້ ທ່ານໄດ້ເອີ້ນຊໍຮາບະຫ໌ ມາປະຊຸມຮ່ວມກັນເພື່ອປຶກສາຫາລືກ່ຽວກັບຄວາມຕ້ອງການທີ່ຈະໄປປະເຊີນຫນ້າກັບພວກກຸເຣຊ ເພື່ອການຕໍ່ສູ້ສົງຄາມ ບັນດາຜູ້ອະວຸໂສຂອງມຸຮາຈີຣີນ ຈຶ່ງໄດ້ຊຸກຍູ້ໃຫ້ອອກໄປຕໍ່ສູ້ ແລະ ໃຊ້ຖ້ອຍຄຳເພື່ອປຸກລະດົມຈູງໃຈ ທ່ານຣໍຊູລ ລຸລລໍຫ໌ ﷺ ຈຶ່ງໄດ້ກ່າວຊົມເຊີຍ ແລະ ຂໍດຸອາໃຫ້ແກ່ພວກເຂົາເຈົ້າ ແລະ ຄົນທັ້ງຫຼາຍສະເຫນີຄວາມຄິດເຫັນອື່ນອີກ ໂດຍທ່ານຕ້ອງການຮູ້ທັດສະນະຂອງຊາວອັນຊໍຣ ເພາະວ່າພວກເຂົາມີຫຼາຍກວ່າ ແລະ ການໃຫ້ສັດຕະຍາບັນທີ່ **'ອະກໍບະຫ໌'** ຄັ້ງທີ່ສອງນັ້ນ ບໍ່ໄດ້ລະບຸຮຽກຮ້ອງໃຫ້ພວກເຂົາໄປເຮັດສົງຄາມພ້ອມກັບທ່ານຢູ່ນອກເມືອງມາດີນະຫ໌ ແຕ່ຊາວອັນຊໍຣມີຄວາມເຂົ້າໃຈດີກ່ຽວກັບຄວາມຕັ້ງໃຈຂອງທ່ານສາດສະດາ ຜູ້ທີ່ຈັບທຸ່ງກອງທັບມີຊື່ວ່າ: ສະອູດ໌ ບິນມຸອາຊ ຣໍດິຍັລລໍຮຸອັນຮຸ ຈຶ່ງໄດ້ເວົ້າຂຶ້ນວ່າ:-

واللهِ لَكَأَنَّكَ تُرِيْدُنَا يَا رَسُوْلَ الله ؟ قَالَ : أَجَل . فَقَالَ سَعْد : فَقَدْ آمَنَّا بِكَ وَ صَدَّقْنَاكَ ، وَشَهِدْنَا أَنَّ مَا جِئْتَ بِهِ هُوَ الْحَقُّ ، وَأَعْطيْنَاكَ عَلَى ذلِكَ عُهُوْدَنَا وَمَوَاثِيْقَنَا عَلَى السَّمْعِ وَالطَّاعَةِ ، فَامْضِ يَا رَسُوْلَ الله لِمَا أَرَدْتَ ، فَوَالَّذِي بَعَثَكَ بِالحَقِّ لَوْ اسْتَعْرَضْتَ بِنَا هذا البَحْرَ فَخُضْتَهُ لَخُضْنَاهُ مَعَكَ مَا تَخَلَّفَ مِنَّا رَجُلٌ وَاحِدٌ ، وَمَا نَكْرَهُ أَنْ تَلْقَى بِنَا عَدُوَّنَا غَدًا ، إِنَّا لَصُبُرٌ فِي الحَرْبِ ، صُدُقٌ عِنْدَ اللِّقَاءِ ، وَلَعَلَّ اللهَ يُرِيْكَ مَا تَقِرُّ بِهِ عينُكَ ، فَسِرْ بشنَا عَلَى بَرَكَةِ اللهِ

فَسُرَّ بِذلِكَ رَسُوْلُ الله صلى الله عليه وسلم فَقَالَ : سِيْرُوْا وَأَبْشِرُوْا

ຂ້າພະເຈົ້າສາບານໃນນາມຂອງອັລລໍຫ໌ ﷻ ທ່ານຣໍຊູລລຸລລໍຫ໌ ﷺ ມັນເບິ່ງຄືວ່າທ່ານຫມາຍເຖິງພວກເຮົາ ທ່ານຣໍຊູລລຸລລໍຫ໌ ຈຶ່ງໄດ້ຕອບວ່າ: **ແມ່ນແລ້ວ.**

ສະນັ້ນ ສະອູດ໌ຈຶ່ງກ່າວຕໍ່ໄປວ່າ: ແນ່ນອນເຮົາໄດ້ສັດທາຕໍ່ທ່ານ ເຊື່ອຕາມທ່ານ ແລະ ພວກເຮົາໄດ້ຢືນຢັນແລ້ວວ່າສິ່ງທີ່ທ່ານນຳມາແມ່ນຄວາມຈິງ ແລ້ວເຮົາກໍໄດ້ໃຫ້ຄຳມັ່ນສັນຍາວ່າຈະເຊື່ອຟັງທ່ານ. ສະນັ້ນ ຂໍທ່ານຈົ່ງອອກໄປສູ້ຣົບເຖີດທ່ານຣໍຊູລລຸລລໍຫ໌ ﷺ ຕາມຄວາມປາດຖະຫນາຂອງທ່ານ ຂ້ອຍຂໍສາບານໂດຍຜູ້ທີ່ສົ່ງທ່ານມາດ້ວຍຄວາມຈິງ ຫາກທ່ານພາພວກເຮົາໄປສູ່ທະເລ ແລ້ວທ່ານຂ້າມໄປ ແນ່ນອນ

ພວກເຮົາກໍ່ຈະຂ້າມໄປພ້ອມກັບທ່ານຄືກັນ ຈະບໍ່ມີຫນຶ່ງໃນພວກເຮົາຫາຍໄປ ແລະ ພວກເຮົາບໍ່ສົນໃຈວ່າ ພວກເຮົາຈະປະເຊີນກັບສັດຕູຂອງພວກເຮົາໃນມືອື່ນ ພວກເຮົາມີຄວາມອົດທົນແນ່ນອນ ໃນສະພາວະສົງຄາມທີ່ເຕັມໄປດ້ວຍຄວາມຈິງໃຈ ໃນຂະນະທີ່ຕໍ່ສູ້ ແລະ ຫວັງວ່າ ອັລລໍຫ໌ ﷻ ຈະສະແດງໃຫ້ທ່ານໄດ້ເຫັນສິ່ງທີ່ຕາທັ້ງສອງຂອງທ່ານຈະພໍໃຈມີຄວາມສຸກ ດັ່ງນັ້ນ ທ່ານຈົ່ງນຳພວກເຮົາໄປພ້ອມກັບພອນຂອງອັລລໍຫ໌ ﷻ ທ່ານຣໍຊູລລຸລລໍຫ໌ ﷺ ມີຄວາມປິຕິຍິນດີທີ່ຍິ່ງໃຫຍ່ກັບຄຳເວົ້ານັ້ນ ແລ້ວທ່ານກໍເວົ້າວ່າ: ພວກທ່ານ ຈົ່ງອອກໄປພ້ອມກັບຂ່າວດີໄດ້ເລີຍ.

- **ການສູ້ຮົບໃນສົງຄວາມບະດັຣ**

ຊາວມຸດສະລິມໄດ້ອອກໄປປະເຊີນໜ້າ ກັບຊາວມຸຊຣິກີນ ທີ່ແຫຼ່ງນ້ຳບະດັຣ ແລະ ເພື່ອວ່າອັລລໍຫ໌ ﷻ ຈະຊົງເຮັດໃຫ້ເກີດການສູ້ຮົບຂຶ້ນ ພຣະອົງໄດ້ຊົງເຮັດໃຫ້ຊາວມຸດສະລິມເຫັນວ່າຈຳນວນຊາວມຸຊຣິກີນມີຈຳນວນພຽງເລັກນ້ອຍ ແລະ ຊົງເຮັດສາຍຕາຂອງພວກມຸຊຣິກີນ ເຫັນຊາວມຸສລິມ ມີຈຳນວນຫຼາຍ

ພຣະອົງຊົງດຳລັດໄວ້ວ່າ:

***"ແລະ ຈົ່ງລຳລຶກຂະນະທີ່ພຣະອົງໄດ້ສະແດງໃຫ້ພວກເຈົ້າເຫັນວ່າພວກເຂົາມີຈຳນວນນ້ອຍຢູ່ໃນສາຍຕາຂອງພວກເຈົ້າ ໃນຂະນະທີ່ພວກເຈົ້າປະເຊີນໜ້າກັນ ແລະ ພຣະອົງໄດ້ຊົງເຮັດໃຫ້ພວກທ່ານມີຈຳນວນຫຼາຍໃນສາຍຕາຂອງເຂົາເຈົ້າ ເພື່ອອັລລໍຫ໌ຈະຊົງວຽກງານຫນຶ່ງສຳເລັດໄປ ຊຶ່ງວຽກງານນັ້ນໄດ້ຖືກເຮັດໄວ້ແລ້ວ ແລະ ທີ່ອັລລໍຫ໌ນັ້ນ ທຸກໆກິດຈະການຈະຖືກ ນຳກັບຄືນໄປ."***

*(ສູເຣາະຫ໌ ອັລ-ອັນຟາລ 8:44)*

ການສູ້ຮົບໄດ້ເລີ່ມຕົ້ນດ້ວຍການປະຊັນດາບຂອງແຕ່ລະຝ່າຍ ແລະ ໄດ້ສິ້ນສຸດດ້ວຍໄຊຊະນະຂອງຝ່າຍມຸດສະລິມ ຕໍ່ມາການສູ້ຮົບໄດ້ທະວີຄວາມຮຸນແຮງໄດ້ປະທຸຂຶ້ນຢ່າງໜັກຫນ່ວງ ສົ່ງຜົນໃຫ້ຊາວມຸຊຣິກີນໄດ້ຮັບຄວາມເຈັບປວດຢ່າງໃຫຍ່ຫຼວງ ***ພວກເຂົາເຈົ້າໄດ້ຖືກຂ້າຕາຍເຖິງ 70 ຄົນ, ລວມທັງຫົວຫນ້າຂອງພວກເຂົາ ອາບູ ຈາຮັລ, ແລະ 70 ຄົນ ຖືກຈັບເປັນຊະເລີຍ, ໃນຂະນະທີ່ຊາວມຸດສະລິມ 14 ຄົນໄດ້ຖືກຂ້າຕາຍໃນສົງຄາມ (ຊະຮີດ).***

- **ໄຊຊະນະໃນສົງຄາມບະດັຣ**

ຜົນຂອງການສູ້ຮົບໃນສົງຄາມທີ່ບະດັຣ ເຮັດໃຫ້ພວກກຸເຣຊ ລວມທັງຊົນເຜົ່າຕ່າງໆທີ່ເປັນຜູ້ປະຕິເສດຕ້ອງຕື່ນຕົກໃຈ ແລະ ເປັນເລື່ອງແປກປະລາດທີ່ພວກສັງຄົມນິຍົມບໍ່ຍອມຮັບຄວາມພາຍແພ້ນີ້ ແຕ່ນີ້ແມ່ນການຢືນຢັນກັບຜູ້ທີ່ຍອມຮັບວິທີການຂອງພຣະເຈົ້າໃນຈັກກະວານ. ສາເຫດທີ່ຈະແຈ້ງສຳລັບໄຊຊະນະຂອງຊາວມຸດສະລິມມີດັ່ງນີ້;

**1. ຄວາມພໍໃຈໃນສິ່ງທີ່ຕົນເອງມີຢູ່** ທ່ານສາດສະດາໄດ້ໃຊ້ອາວຸດທີ່ສໍາຄັນຫຼາຍ ຄືການຝຶກອົບຮົມບັນດາຊໍຮາບະຫ໌ໃຫ້ມີຄວາມພໍໃຈໃນສິ່ງທີ່ຕົນເອງມີໃນການຕໍ່ສູ້ຕ້ານກັບສັດຕູ ເຊິ່ງຈະຊົດເຊີຍຄວາມເຂັ້ມແຂງຂອງພົນກໍາລັງຝ່າຍມຸສລິມີນທີ່ມີນ້ອຍກວ່າ ແລະ ກໍາລັງໃຈໄດ້ຕັ້ງໝັ້ນຢູ່ບົນຄວາມປາຖະໜາທີ່ອັລລໍຫ໌ ﷻ ໄດ້ກະກຽມເອົາໄວ້ໃຫ້ສໍາລັບບັນດານັກຕໍ່ສູ້ດ້ວຍຄວາມດີທີ່ຍິ່ງໃຫຍ່ ຕົວຢ່າງຈະເຫັນໄດ້ຈາກເລື່ອງຂອງ **ທ່ານອຸໄມຣ ບິນ ອັລ-ຮໍາມານ** ຣໍດີຍັລລໍຮຸອັນຮູ ໃນຂະນະທີ່ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ ປຸກເລົ້າໃຫ້ບັນດາຊໍຮາບະຫ໌ ເຮັດການຕໍ່ສູ້ໂດຍທ່ານເວົ້າວ່າ:

فَقَالَ عُمَيْرٌ مُتَعَجِّبًا : يَارَسُوْلَ الله ، أَجَنَّةٌ عَرْضُهَا السَمَاوَاتُ والأَرْضِ ؟ قَالَ : نَعَمْ فَأَخْرَجَ تَمْرَاتٍ كَانَتْ مَعَهُ وَأَكَلَ مِنْهَا ثُمَّ قَالَ : لَئِنْ أَنَا حُيِّيْتُ حَتى آكُلَ تَمَرَاتِي هذه إِنَّهَا لَحَيَاةٌ طَوِيْلَة ، فَرَمى مَا تَبْقَى مَعَهُ ثُمَّ قَاتَلَ حَتَّى قُتِلَ

*"ພວກທ່ານທັ້ງຫຼາຍຈົ່ງໄປສູ່ສະຫວັນກັນເຖີດ ຄວາມກວ້າງໃຫຍ່ຂອງສະຫວັນຄືຊັ້ນຟ້າ ແລະ ແຜ່ນດິນໂລກ"* ຫຼັງຈາກນັ້ນ, **ອຸໄມຣ** ເວົ້າດ້ວຍຄວາມປິຕິຍິນດີວ່າ: *"ໂອ້ ທ່ານຣໍຊູລລຸລລໍຫ໌! ສະຫວັນມີຄວາມກວ້າງຂວາງດັ່ງບັນດາຊັ້ນຟ້າ ແລະ ແຜ່ນດິນໂລກແນວນັ້ນຫວາ?!"* ທ່ານຕອບວ່າ: **"ແມ່ນແລ້ວ"** ແລ້ວລາວກໍເອົາຜົນອິນທາຜະລັມຫຼາຍປຜົນທີ່ຕິດຕົວລາວອອກມາ ແລະ ກິນໄປບາງສ່ວນ ຫຼັງຈາກນັ້ນລາວເວົ້າວ່າ: ***"ແນ່ນອນ ຖ້າຫາກຂ້ອຍມີຊີວິດຢູ່ຕໍ່ໄປຈົນກ່ວາຂ້ອຍກິນອິນທາຜະລັມນີ້ໝົດ ມັນເປັນຊີວິດທີ່ຍາວນານຫຼາຍ."*** ແລ້ວລາວໄດ້ໂຍນໝາກອິນທາຜະລັມທີ່ເຫຼືອຖິ້ມໄປ ແລະ ເຮັດການສູ້ຮົບຈົນລາວຖືກສັງຫານໃນທີ່ສຸດ[1]

**2. ການຂໍດຸອາ** ທ່ານສາດສະດາ ﷺ ໄດ້ໃຊ້ອາວຸດອີກອັນໜຶ່ງທີ່ເຮັດໃຫ້ໄດ້ຮັບໄຊຊະນະ ຄືການຂໍດຸອາ ເຊິ່ງດຸອານັ້ນຈະນໍາມາຊຶ່ງໄຊຊະນະຈາກຜູ້ທີ່ໃຫ້ໄຊຊະນະ ດັ່ງທີ່ດໍາລັດຂອງພຣະອົງກ່າວວ່າ:

***"ຖ້າຫາກວ່າ ອັລລໍຫ໌ ຊົງຊ່ວຍພວກເຈົ້າ ກໍ່ຈະບໍ່ມີໃຜຈະສາມາດເອົາຊະນະເຈົ້າໄດ້ ແລະ ຖ້າຫາກພຣະອົງປະຖິ້ມທ່ານ ແລ້ວໃຜຈະສາມາດຊ່ວຍເຫຼືອພວກເຈົ້າໄດ້ຫຼັງຈາກພຣະອົງ ແລະ ແດ່ອັລລໍຫ໌ນັ້ນ ຜູ້ສັດທາທັ້ງຫຼາຍຈົ່ງມອບໝາຍເຖີດ"*** *(ສຸເຣາະຫ໌ ອາລະອິມຣອນ 3:160)*

ທ່ານສາດສະດາໄດ້ລຸກຂຶ້ນໃນຕອນກາງຄືນຂອງສົງຄາມ. ໃນຂະນະທີ່ຜູ້ຄົນທັ້ງຫຼາຍກໍາລັງນອນຫລັບສະນິດ ທ່ານໄດ້ອະທິຖານຂໍຕໍ່ພຣະຜູ້ເປັນເຈົ້າຂອງທ່ານ ໂດຍການອ້ອນວອນຕໍ່ພຣະອົງເພື່ອໃຫ້ໄດ້ຮັບໄຊຊະນະ ແລະ ເປັນຢູ່ເຊັ່ນນັ້ນຈົນຮຸ່ງເຊົ້າ ທ່ານອະບູບັກຣ ຣໍດີຍັລລໍຮຸອັນຮູ ຮູ້ສຶກສົງສານເຫັນໃຈຕໍ່ທ່ານ ແລະ ໄດ້ກ່າວກັບທ່ານສາດສະດາວ່າ:

(يَا رَسُوْلَ الله: كَفَاكَ مُنَاشَدَتُكَ رَبَّكَ فَإِنَّهُ سَيُنْجِزُ لَكَ مَا وَعَدَكَ)

*"ໂອ້ ທ່ານຣໍຊູລລຸລລໍຫ໌ ﷺ ທ່ານພໍໄດ້ແລ້ວຈາກການທູນຂໍຕໍ່ພຣະຜູ້ເປັນເຈົ້າ; ແນ່ນອນວ່າພຣະອົງຈະປະທານໃຫ້ຕາມທີ່ພຣະອົງໄດ້ຊົງໃຫ້ສັນຍາໄວ້." [2]*

**3. ການເຂົ້າຮ່ວມສູ້ຮົບຂອງເທວະດາ** (ມະລາອີກະຫ໌) ອີກເຫດຜົນອີກອັນໜຶ່ງສຳລັບໄຊຊະນະຂອງບັນດາຜູ້ສັດທາໄດ້ແກ່ ອັລລໍຫ໌ ﷻ ພຣະອົງໄດ້ສົ່ງທູດສະຫວັນມາເປັນກຳລັງເສີມ ເຮັດໃຫ້ຫົວໃຈຂອງພວກເຂົາມີຄວາມໝັ້ນຄົງ ເຫຼົ່າທູດສະຫວັນໄດ້ສູ້ຮົບກັບສັດຕູພ້ອມກັບພວກເຂົາ ດັ່ງມີຫຼັກຖານຈາກອັລກຸຣອານ ໄດ້ບົ່ງຊີ້ໄວ້ ເຊັ່ນດຽວກັນກັບມີຫະດິຊທີ່ຊໍຮິຫ໌ ທີ່ລະບຸວ່າ ບັນດາເທວະທູດໄດ້ມາຮ່ວມຕໍ່ສູ້ພ້ອມກັບຜູ້ສັດທາ[3] ດັ່ງທີ່ພຣະອົງໄດ້ກ່າວວ່າ:

***"ແລະຈົ່ງລະລຶກເຖິງ ຂະນະທີ່ອັລລໍຫ໌ ﷻ ໄດ້ຊົງສັນຍາໄວ້ກັບພວກເຈົ້າ ເຊິ່ງໜຶ່ງໃນສອງກຸ່ມວ່າເປັນຂອງພວກເຈົ້າ ແລະ ພວກເຈົ້າມັກທີ່ຈະໃຫ້ກຸ່ມບໍ່ມີກຳລັງອາວຸດນັ້ນເປັນຂອງພວກເຈົ້າ ແຕ່ອັລລໍຫ໌ ﷻ ຊົງຕ້ອງການໃຫ້ຄວາມຈິງຈະແຈ້ງຂຶ້ນດ້ວຍພົດຈະນາດຂອງພຣະອົງ ແລະ ຈະຊົງຕັດຂາດຊຶ່ງຄົນສຸດທ້າຍຂອງຜູ້ປະຕິເສດສັດທາທັ້ງຫຼາຍ"***

***"ເພື່ອພຣະອົງຈະຊົງໃຫ້ສິ່ງທີ່ເປັນຄວາມຈິງໄດ້ເປັນທີ່ປະຈັກ ແລະ ໃຫ້ສິ່ງເທັດບໍ່ຈິງໄດ້ເປັນທີ່ຊັດເຈນ, ແລະ ເຖິງແມ່ນວ່າອາດຊະຍາກອນຜູ້ທີ່ກະທຳຄວາມຜິດຈະຽດແຄ້ນບໍ່ພໍໃຈກໍ່ຕາມ."***

*(ສຸເຣາະຫ໌ອັລຟານ 8: 7-8)*

---

1. ເລື່ອງຂອງອຸໄມຣ ເບິ່ງທີ່ໜັງສືຊໍຮິຫ໌ ມຸສລິມ ເລັ່ມທີ່ 3 (15091510) ຫະດິຊທີ່ 1901 ຊີເຣາະຫ໌ຕຸບນີຣີຊາມ ໜ້າ 267-268 ອິບນຸສະອ໌ ອັດຕໍບະກອດ ອັລກູບຣໍ ເລັ່ມ 2 ໜ້າ 25

2. ການຂໍດຸອາຂອງທ່ານນະບີ ແລະການສຳລວມຂອງທ່ານໃນສົງຄາມບະດັຣ ເບິ່ງ ຊໍຮິຫ໌ ອັລບຸກໍຣີ ກິຕາບ ອັລ ມະກໍຊີ ບາບ "ອິສຕັສຕະກິສຸນະຣອບບະກຸມ" ຫະດິຊທີ່ 3959 ຊໍຮິຫ໌ ມຸສລິມ ກິຕາບ ອັລຈິຮາດ ບາບ ອັລອິມດາດບິລມາລິກະຫ໌ ຊີເຣາະຫ໌ ອິບນີ ຮີຊາມ ໜ້າ 267

3. ຄັດມາຈາກຫະດິຊຊໍຮິຫ໌ຂອງອັລບຸກໍຣີ ກິຕາບ ອັລ-ມະກໍຊີ ບາບ ຊຸຮູບຸລມະລາອິກະຫ໌ ບັດຣອນ ແລະ ຊໍຮິຫ໌ມຸສລິມ ກິຕາບຸ້ລຈິຮາດ ບາບ ອັລອິມດາດບິລມະລາອິກະຫ໌

## 11.2 ສົງຄາມອຸຮູດ

ສົງຄາມ ອຸຮູດ ເກີດຂຶ້ນ ຫຼັງຈາກພວກກຸຟຟ້າຣ ຊາວກຸເຣຊໄດ້ປະສົບກັບຄວາມພ່າຍແພ້ທີ່ຍິ່ງໃຫຍ່ ແລະ ຄວາມຢ້ານກົວໃນສົງຄສາມບະດັຣ ພວກເຂົາຈຶ່ງມີເປົ້າໝາຍທີ່ຈະແກ້ແຄ້ນ ແລະ ໄດ້ຟື້ນຟູຄວາມ

ໜ້າເຊື່ອຖືຂອງຊາວອາຣັບກັບຄືນມາ, ສະນັ້ນ ພວກເຂົາເຈົ້າຈຶ່ງໄດ້ຊັກຊວນກັນໃຫ້ອອກໄປຕໍ່ສູ້ກັບຊາວມຸດສະລິມ ແລະ ໄດ້ເອົາສິນຄ້າທີ່ຮອດພົ້ນມາຕັ້ງເປັນກອງທຶນເພື່ອເຮັດສົງຄາມ ແລ້ວພວກເຂົາເຈົ້າກໍໄດ້ອອກໄປທີ່ເມືອງມາດີນະຫ໌. ໂດຍມີຊົນເຜົ່າຕ່າງໆເຂົ້າຮ່ວມເຊັ່ນດຽວກັນ ລວມທັງໝົດສາມພັນຄົນ ເຫດການນີ້ເກີດຂຶ້ນໃນປີ ***ຮິດຈະເຣາະຫ໌ ຊັກກະຣາດທີ 3***

➢ **ທ່ານຣໍຊູລລຸລລໍຫ໌ ﷺ ຂໍຄຳປຶກສາຈາກເຫຼົ່າຊໍຮາບະຫ໌**

ໄດ້ມີໜັງສືມາເຖິງທ່ານຣໍຊູລລຸລລໍຫ໌ ﷺ ຈາກອັລອັບບາສ ຜູ້ເປັນອາວຂອງທ່ານ ບອກເຖິງເລື່ອງລາວຂອງຊາວກຸເຣຊ ສະນັ້ນ ທ່ານຈຶ່ງໄດ້ເຕົ້າໂຮມປະຊຸມກັນກັບບັນດາຊໍຮາບະຫ໌ ຄວາມຄິດເຫັນຂອງທ່ານນະບີ ﷺ ກັບກຸ່ມມຸດສະລິມຈຳພວກໜຶ່ງໃຫ້ຕັ້ງຮັບຢູ່ໃນເມືອງມາດີນະຫ໌ ໂດຍບໍ່ຕ້ອງອອກໄປປະເຊີນຫນ້າກັບພວກມຸຊຣິກີນ ຖ້າພວກເຂົາເຂົ້າມາໃນເມືອງມາດີນະຫ໌ ພວກຜູ້ຊາຍຈະດັກຂ້າພວກເຂົາຕາມຖະຫນົນ ແລະ ແມ່ຍິງໃຫ້ຕໍ່ສູ້ຢູ່ໃນເຮືອນ ແຕ່ຜູ້ທີ່ພາດໂອກາດທີ່ຈະເຂົ້າສົງຄາມບະດັຣ ສະເໜີໃຫ້ອອກໄປຕໍ່ສູ້ຢູ່ນອກເມືອງ ໃນທີ່ສຸດທ່ານນະບີ ﷺ ໄດ້ເຫັນດີດ້ວຍຈຶ່ງກັບຄືນເຂົ້າໄປໃນເຮືອນ ແລ້ວສວມໃສ່ເສື້ອເກາະພ້ອມອາວຸດຂອງຕົນ ເມື່ອທ່ານນະບີອອກມາ ພວກເຂົາກໍ່ເສຍໃຈກັບການບີບບັງຄັບຈິດໃຈຂອງທ່ານຣໍຊູລ ﷺ ພວກເຂົາເຈົ້າຈຶ່ງເວົ້າວ່າ: *"ຖ້າທ່ານຕ້ອງການທີ່ຈະໃຫ້ພວກເຮົາຢູ່ກັບໃນເມືອງມາດີນະຫ໌ ກໍ່ຈົ່ງເຮັດເຖີດ."* ທ່ານສາດສະດາ ﷺ ຈຶ່ງກ່າວວ່າ:

( مَا يَنْبَغِيْ لِنَبِيٍّ لَابِسٍ لأمته أَنْ يَضَعَهَا حَتَّى يَحْكُمَ الله بَيْنَهُ وَبَيْنَ عَدُوِّه )

***"ມັນບໍ່ສົມຄວນທີ່ສຸດແກ່ສາດສະດາຄົນໃດກໍຕາມ, ເມື່ອລາວໄດ້ສວມຊຸດຂອງນັກຮົບພ້ອມມີອາວຸດ. ແລ້ວຫຼັງຈາກນັ້ນລາວຖອດອອກ ຈົນກ່ວາພຣະອົງອັລລໍຫ໌ ຈະໄດ້ຊີ້ງຕັດສິນລະຫວ່າງເຂົາກັບສັດຕູກ່ອນ"*** [1]

ທ່ານສາດສະດາ ﷺ ຈຶ່ງໄດ້ອອກໄປພ້ອມກັບບັນດາຊໍຮາບະຫ໌ ປະມານ 1000 ຄົນ ແລະຕາມທາງ **ອັບດຸລລໍຫ໌ ບິນອຸໄບ ບິນສະລຸລ** ໄດ້ຖອຍຕົວກັບໄປພ້ອມພວກມຸນາຟິກ (ຄົນຫນ້າຊື່ໃຈຄົດ) ຈຳນວນນຶ່ງສ່ວນສາມຂອງກອງທັບ ເຊິ່ງເປັນກຸ່ມທີ່ມີຄວາມເຫັນວ່າຄວນຈະຢູ່ເຮືອນໃນມາດີນະຫ໌ ອັບດຸລລໍຫ໌ ບິນອຸໄບ ບິນສະລຸລ ໄດ້ເວົ້າວ່າ: ລາວເຊື່ອວ່າພວກນັ້ນບໍ່ເຊື່ອຂ້ອຍ ເລື່ອງອີຫຍັງເຮົາຈະເອົາຕົວເອງມາຂ້າ

---

1.ຊໍຮີຫ໌ ອັລບຸກໍຣີ ກິຕາບຸລອິອູຕີສອມບິຊສຸນນະຫ໌ ບາບ ເກົາລຸຫ໌ ຕະອາລາ "ວະອັມຣຸຮຸມຊູ ຣໍໄບນະຮຸມ" 28 ຊີຣໍຕຸບນີຊາມ 3/7

ອັບດຸລລໍຫ໌ ບິນອຸໄບ ບິນສະລຸລ ແລະ ພັກພວກໄດ້ສະແດງຄວາມຄິດທີ່ໂງ່ ແລະ ເວົ້າວ່າ: *"ຖ້າພວກເຮົາຮູ້ວ່າເຈົ້າຈະມາຕໍ່ສູ້ແທ້ ພວກເຮົາຄົງບໍ່ກັບ!*

- **ການວາງແຜນສຳລັບການສູ້ຮົບ**

ພວກມຸຊຣີກີນ ໄດ້ຕັ້ງກອງກຳລັງຢູ່ໃກ້ກັບພູເຂົາອູຮຸດ ເມື່ອທ່ານຣໍຊູລລຸລລໍຫ໌ ﷺ ມາຮອດ ທ່ານໄດ້ຕັ້ງກອງກຳໃຫ້ພູເຂົາອູຮຸດຢູ່ທາງດ້ານຫລັງ ແລະ ໄດ້ຄັດເລືອກເອົາທະຫານແມ້ນທະນູ 50 ນາຍ ຂຶ້ນປະຈຳຢູ່ເທິງພູກົງກັນຂ້າມກັບພູອູຮຸດ ໂດຍແຕ່ງຕັ້ງໃຫ້ທ່ານ **ອັບດຸລລໍຫ໌ ບິນຈຸໄບຣ ຣໍດິຍັລລໍຫຸອັນຮູ** ເປັນຫົວໜ້າ ແລະ ສັ່ງກຳຊັບໃຫ້ເຝົ້າເບິ່ງລະວັງເບື້ອງຫຼັງຂອງຊາວມຸດສະລິມ ໃຫ້ດັກຍິງສະກັດພວກມຸຊຣີກີນເພື່ອເປັນການສະກັດກັ້ນການບຸກໃນລະຫວ່າງການສູ້ຮົບ ແລະ ກ່າວຢ້ຳວ່າ ***"ຈົ່ງຮັກສາທີ່ໝັ້ນຂອງພວກເຈົ້າຢູ່ເທິງພູນັ້ນໃຫ້ດີ ແລະ ຢ່າປະຖິ້ມທີ່ໝັ້ນຂອງເຈົ້າບໍ່ວ່າຈະເກີດຫຍັງຂຶ້ນກໍ່ຕາມ ເຖິງແມ່ນວ່າພວກເຈົ້າໄດ້ເຫັນວ່າຝູງນົກກຳລັງໄລ່ຈິກບັນດາມຸສລິມກໍ່ຕາມ"*** [1]

- **ເຫດການທີ່ເກີດຂຶ້ນໃນສົງຄາມອູຮຸດ**

ໃນຂະນະທີ່ການສູ້ຮົບໄດ້ເລີ່ມຕົ້ນຂຶ້ນ ດ້ວຍພະລັງແຫ່ງສັດທາຂອງຊາວມຸດສະລິມ ພ້ອມກັບການວາງແຜນທີ່ດີເລີດ ຈຶ່ງສ້າງຄວາມເສຍຫາຍຢ່າງຫນັກຕໍ່ກຳລັງຂອງມຸຊຣີກີນ ເຖິງແມ່ນວ່າຈະມີຈຳນວນຫຼາຍກວ່າ ທະຫານມຸດສະລິມໄດ້ເຮັດໃຫ້ພວກເຂົາກະແຈກກະຈາຍອອກຈາກສະໜາມຮົບ. ແຕ່ແລ້ວກໍ່ເກີດເລື່ອງທີ່ທ່ານນະບີໄດ້ເຕືອນເອົາແລ້ວ ໃນຂະນະທີ່ນັກແມ້ນທະນູໄດ້ເຫັນໄຊຊະນະຂອງຊາວມຸດສະລິມ ແລະ ກຳລັງຂອງມຸຊຣີກີນກຳລັງຫລົບຫນີ ເຂົາເຈົ້າໄດ້ໃຊ້ຄວາມຄິດເຫັນສ່ວນຕົວທີ່ຈະລົງຈາກທີ່ໝັ້ນເພື່ອຮ່ວມເກັບສັບສິນໃນສົງຄາມນັ້ນ ເຖິງວ່າຜູ້ນຳຄື **ອັບດຸລລໍຫ໌**, ໄດ້ຫ້າມປາມ ແລະ ເຕືອນກ່ຽວກັບອັນຕະລາຍຂອງການເຮັດແນວນັ້ນ ແລະ ຢ້ຳເຕືອນເຖິງຄຳສັ່ງຂອງທ່ານສາດສະດາທີ່ໃຫ້ໄວ້ແກ່ພວກເຂົາ, ແຕ່ພວກເຂົາກໍ່ບໍ່ເຊື່ອຟັງຄຳເຕືອນນັ້ນ ແລະ ໄດ້ລົງຈາກທີ່ໝັ້ນຂອງພວກເຂົາ ໂດຍເຫຼືອນ້ອຍກວ່າສິບຄົນທີ່ຢູ່ກັບຜູ້ນຳ.

ຜົນຈາກການບໍ່ເຊື່ອຟັງຂອງທະຫານແມ່ນທະນູ ສິ່ງຜົນໃຫ້ທິດທາງຂອງສົງຄາມໄດ້ປ່ຽນແປງໄປ ໃນຂະນະທີ່ **ຄໍລິດ ບິນ ວະລີດ**, ຊຶ່ງຜູ້ທີ່ຢູ່ໃນດ້ານຂວາຂອງກຳລັງຝ່າຍກຸເຣຊ, ໄດ້ເຫັນຄົນຍິງທະນູລົງມາຈາກພູ ສະນັ້ນ ລາວຈຶ່ງໄດ້ຍ້າຍກອງກຳລັງອ້ອມໄປທາງຫລັງພູອູຮຸດທັນທີ ແລະໄດ້ນຳພາທະຫານໄປຂ້ານັກແມ່ນທະນູທີ່ຍັງເຫຼືອຈົນຕາຍໝົດ

---

1. ຊໍຮີຫ໌ ອັລບຸກຄໍຣີ : ກີຕາບ ອັລ ມະກໍຊີ ບາບ ກ໋ອຊວະອຸຮູດ "ພວກເຂົາຈຶ່ງໄດ້ຮີບມາຫ້ອມລ້ອມຮອບຕົວທ່ານ ທ່ານຣໍຊູລໄວ້ ດ້ວຍຄວາມກ້າຫານແລະມັ່ນຄົງຂອງທ່ານຣໍຊູລ ທ່ານໄດ້ຊ່ວຍພາເອົາບັນດາມຸສລິມີນຫຼົບໄປທາງດ້ານພູເຂົາ ເພື່ອລົດການໂຈມຕີຂອງພວກມຸຊຣີກີນໄດ້ສຳເລັດ"

ແລະໄດ້ໂຈມຕີກອງທັບມຸດສະລິມຢູ່ທາງດ້ານຫລັງ ໃນເວລາທີ່ພວກມຸຊຣິກີນທີ່ຍັງເຫຼືອຢູ່ໄດ້ເຫັນສິ່ງທີ່ຄໍລິດໄດ້ເຮັດ ພວກເຂົາເຈົ້າຈຶ່ງໄດ້ກັບຄືນໄປສະໜາມຮົບອີກເທື່ອໜຶ່ງ. ເຮັດໃຫ້ກອງທັບມຸດສະລິມຕົກຢູ່ໃນສະຖານະການທີ່ວຸ່ນວາຍ ຫຼັງຈາກນັ້ນ, ກອງທັບມຸຊຣິກີນໄດ້ບຸກໂຈມຕີຢ່າງໜັກໜ່ວງ ຊາວມຸດສະລິຖືກຂ້າຕາຍ ຊະຮີດເຖິງ 70 ຄົນ, ທ່ານສາດສະດາ ﷺ ຖືກໂຈມຕີຈົນໄດ້ຮັບບາດເຈັບ ບົນໃບໜ້າຂອງທ່ານ, ແຂ້ວຂອງທ່ານຫັກ, ແລະສຽງດັງອອກມາວ່າສາດສະດາມູຮຳຫມັດໄດ້ຖືກຂ້າຕາຍແລ້ວ ເຮັດໃຫ້ຊາວມຸດສະລິມບາງຄົນເສຍຂວັນກຳລັງໃຈ ເຖິງແມ່ນວ່າສະຖານະການຈະຮ້າຍແຮງສຳໃດ ບັນດາຊາວມຸດສະລິມຢູ່ໃນເຫດການຍັງຄົງຕໍ່ສູ້ຕໍ່ໄປ ຈົນກະທັ່ງເປັນທີ່ຈະແຈ້ງວ່າທ່ານຣໍຊູລ ﷺ ຍັງມີຊີວິດຢູ່ ພວກມຸຊຣິກີນຈຶ່ງໄດ້ຢຸດຕິການສູ້ຮົບເມື່ອພວກເຂົາໄດ້ຮັບໄຊຊະນະ ພ້ອມກັບຄຳເວົ້າຂອງຜູ້ບັນຊາການ ອະບູຊຸຟຢານໄດ້ເວົ້າເຍີເຍີຍຊາວມຸດສະລິມ ແລະຂູ່ວ່າຈະມາອີກໃນປີໜ້າ

ຫຼັງຈາກນັ້ນ ທ່ານສາດສະດາ ﷺ ຈຶ່ງໃຊ້ໃຫ້ອຸ໋ຮາບັດປະກາດຕອບໄປວ່າ: ***"ແມ່ນແລ້ວ ການນັດໝາຍຂອງພວກເຂົາແມ່ນໃນປີໜ້າ"***

ທ່ານຣໍຊູລ ລຸລລໍຫ໌ ﷺ ຍັງຢູ່ໃນບໍລິເວນສະໜາມຮົບ ແລະ ສັ່ງໃຫ້ອຸ໋ຮາບັດກວດສອບເບິ່ງວ່າ ພວກກຸເຣຊໄດ້ກັບຄືນໄປມັກກະຫ໌ ໝົດແລ້ວຫຼືບໍ່ ຫຼືວ່າພວກເຂົາຕ້ອງການໂຈມຕີມາດີນະຫ໌.ແລະທ່ານເວົ້າວ່າ:

( والذِي نَفْسِيْ بِيَدِهِ لَئِنْ أَرَادُوهَا لأَسِيْرَنَّ إِلَيْهِمْ فِيهَا ثُمَّ لأُنَاجِزَنَ )

*“ຂ້ອຍຂໍສາບານໃນນາມຂອງອັລລໍຫ໌ ﷻ ເຊິ່ງທີ່ຊີວິດຂອງຂ້ອຍຢູ່ໃນພຣະຫັດ (ມື) ຂອງພຣະອົງແນ່ນອນ, ຖ້າພວກເຂົາຕ້ອງການເຂົ້າໄປໃນເມືອງມາດີນະຫ໌ ຂ້ອຍຈະໄປຫາເຂົາເຈົ້າໃນທັນທີ ແລະ ກວດລ້າງພວກເຂົາໃຫ້ສິ້ນຊາກ.”*

ເມື່ອທ່ານແນ່ໃຈແລ້ວວ່າພວກເຂົາເຈົ້າໄດ້ກັບຄືນໄປເມືອງມັກກະຫ໌ແລ້ວ ຈຶ່ງເລີ່ມກວດສອນຫາຜູ້ທີ່ຖືກຂ້າຕາຍໃນສະໜາມຮົບຄັ້ງນີ້ ແລ້ວເຮັດການລະຫມາດ ແລະ ຝັງສົບເຂົາເຈົ້າ ແລ້ວກັບຄືນໄປເມືອງມາດີນະຫ໌ ກ່ອນທີ່ພວກກຸເຣຊຈະກັບຄືນໄປຮອດມັກກະຫ໌ ເບິ່ງຄືວ່າເຂົາເຈົ້າເສຍດາຍທີ່ກັບຄືນໄປໂດຍບໍ່ໄດ້ກຳຈັດຊາວມຸດສະລິມໃຫ້ໝົດສິ້ນ ພວກເຂົາຈຶ່ງຢາກກັບຄືນມາ ແລະຈັດການກັບກອບກຳລັງຂອງຊາວມຸດສະລິມທີ່ຍັງເຫຼືອ ເມື່ອທ່ານສາດສະດາ ﷺ ຊາບເລື່ອງນັ້ນ ທ່ານຈຶ່ງໄດ້ອອກຄຳສັ່ງໃຫ້ຊໍຮາບະຫ໌ທີ່ໄດ້ອອກໄປສູ້ຮົບກັບທ່ານໃນສົງຄາມອູຮູດໃຫ້ອອກໄປ ແລະ ປະເຊີນຫນ້າກັບພວກມຸຊຣິກີນ

ອັລລໍຫ໌ ﷻ ຈຶ່ງໄດ້ປະທານຄຳດຳລັດຂອງພຣະອົງວ່າ:

***“ຄືບັນດາຜູ້ທີ່ຕອບຮັບອັລລໍຫ໌ ແລະຜູ້ເປັນຣໍຊູລ ຫຼັງຈາກທີ່ບາດແຜໄດ້ປະສົບແກ່ພວກເຂົາ ສຳຫຼັບຜູ້ກະທຳດີໃນຫມູ່ພວກເຂົາ ແລະ ມີຄວາມຍຳເກງນັ້ນ ຄຫລາງວັນໃຫຍ່ຫຼວງ”*** *(ອາລະອິມຣອນ 3:172)*

## ➢ ບົດຮຽນແລະຂໍ້ຄິດຈາກສົງຄາມອູຮຸດ

ການທົດສອບທີ່ຊາວມຸດສະລິມໄດ້ຮັບໃນສົງຄາມອູຮຸດ ນັບວ່າເປັນບົດຮຽນແລະ ຂໍ້ຄິດທີ່ເປັນປະໂຫຍດຫຼາຍກ່ວາສະໜາມຮົບໃດໆ. ໃນຂະນະນັ້ນແລະຕະຫຼອດໄປ ອັລລໍຫ໌ ﷻ ພຣະອົງໄດ້ຊົງປະທານລົງມາເຖິງ 61 ອາຍະຫ໌ ດ້ວຍກັນ ໃນສູເຣາະຫ໌ ອະລາອິມຣອນພຽງສູເຣາະຫ໌ດຽວ ມີຂໍ້ຄິດທີ່ແຕກຕ່າງກັນ ແລະ ໄດ້ຊົງອະທິບາຍເຫດຜົນເຖິງສິ່ງທີ່ຊາວມຸດສະລິມຕ້ອງໄດ້ຮັບໃນສົງຄາມຄັ້ງນີ້:

1. ຄືການກວດກາກອງທັບມຸສລິມ

ສະໜາມຮົບນີ້ໄດ້ຈຳແນກລະຫວ່າງມຸມິນທີ່ແທ້ຈິງ ອອກຈາກຜູ້ທີ່ຂີ້ຕົວະ ເນື່ອງຈາກວ່າມຸມິນຈະມີຄວາມໝັ້ນຄົງໃນສະຖານະການທີ່ຫຍຸ້ງຍາກ ແລະ ຍຶດໝັ້ນໃນສັດທາຈົນເຖິງລົມຫາຍໃຈສຸດທ້າຍຂອງຊີວິດ ຊໍຮາບະຫ໌ທ່ານໜຶ່ງໄດ້ເວົ້າຂະນະທີ່ລາວຖອນຫາຍໃຈວ່າ: ***"ຂໍທ່ານຈົ່ງບອກຄົນຂອງຂ້ອຍ (ຊາວເມືອງອັນຊໍຣ) ດ້ວຍວ່າ ບໍ່ມີຂໍ້ແກ້ຕົວໃດໆສຳລັບພວກທ່ານ ຖ້າຫາກລາວບໍ່ຊ່ວຍປົກປ້ອງທ່ານຣໍຊູລ ໃນຂະນະທີ່ພວກເຈົ້າຍັງມີຕາຂ້າງໜຶ່ງທີ່ກະພິບໄດ້ຢູ່."*** ປາກົດວ່າຜູ້ທີ່ຢູ່ອ້ອມຮອບສາດສະດາໄດ້ປົກປ້ອງທ່ານໄດ້ຖືກຂ້າຈົນເຖິງ 10 ຄົນ ສ່ວນດ້ານກຸ່ມມູນາຟິກນັ້ນ ພວກເຂົາເຈົ້າດີໃຈຫຼາຍກັບສິ່ງທີ່ເກີດຂຶ້ນກັບຜູ້ສັດທາ ແລະ ໄດ້ສະແດງຄວາມຄຽດຄັ້ນ ຄວາມອິດສາທີ່ເຊື່ອງໄວ້ໃນໃຈຂອງເຂົາເຈົ້າ ອອກມາຢ່າງໂຈ່ງແຈ້ງ ຈຶ່ງເຮັດໃຫ້ເຫັນທາດແທ້ເປີດເຜີຍຢ່າງຊັດເຈນ[1]

2. ການເຕືອນບັນດາຜູ້ສັດທາດ້ວຍບົດຮຽນພາກປະຕິບັດ

ບັນດາມຸມິນໄດ້ເຫັນເຖິງຄວາມສຳຄັນຂອງການອຸທິດຕົນຕໍ່ອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ບໍ່ໃຫ້ຝ່າຝືນຄຳສັ່ງອັລລໍຫ໌ ແລະ ຣໍຊູລຂອງພຣະອົງຕະຫຼອດຈົນການເຊື່ອຟັງ ແລະ ປະຕິບັດຕາມຜູ້ນຳມຸສລິມ: ***"ແລະ ເມື່ອມີໄພພິບັດເກີດຂຶ້ນກັບພວກເຈົ້າ ທັ້ງໆ ທີ່ພວກເຂົາໄດ້ເຮັດໃຫ້ພວກເຂົາມາແລ້ວເຖິງສອງເທົ່າແຫ່ງໄພອັນຕະລາຍນັ້ນ. ພວກເຈົ້າຍັງເວົ້າວ່າ ອັນນີ້ມາຈາກໃສ? ຈົ່ງກ່າວເຖີດ (ໂອ້ ມູຮຳມັດ) ວ່າ ມັນມາຈາກຕົວຂອງພວກທ່ານເອງ, ແທ້ຈິງແລ້ວອັລລໍຫ໌ ແມ່ນຜູ້ມີອຳນາດເໜືອທຸກສິ່ງ."***

*(ສູເຣາະຫ໌ ອາລະອິມຣອນ 3:165)*

3. ເປົ້າຫມາຍການເຮັດສົງຄາມເພື່ອຍົກຫຍັດໃນສາສະໜາຂອງອັລລໍຫ໌ ﷻ

ເຕືອນໃຫ້ຜູ້ສັດທາໄດ້ຮູ້ວ່າ ເປົ້າໝາຍຂອງການເຮັດສົງຄາມ ແລະ ການເສຍສະລະ ຈຳເປັນຕ້ອງເປັນໄປເພື່ອຍົກຫຍັດສະໜັບສະໜູນສາສະໜາຂອງອັລລໍຫ໌ ﷻ ແມ່ນແຕ່ການສູນເສຍທ່ານ

---

1.ເລື່ອງນີ້ມີມາຈາກລາບງາຍຂອງ ສະອ໌ດູ ອັຣຣໍບີອ໌ ຣໍດີຍັລລໍຮຸອັນຮູ ຢູ່ໃນໜັງສື ຊີເຣາະຫ໌ ອິບນີ ຮີຊາມ ເລັ່ມ 3 ໜ້າ 46 ແລະ ອັຊ ຊະຮາບີ "ຊີເຣາະຫ໌ ອະລາມູນບະລາ ເລັ່ມໜຶ່ງໜ້າ 1/318 – 319 ແລະ ມີຢູ່ໃນລາຍງານຂອງອານັສ ບິນ ນັດ ຣໍດີຍັລລໍຮຸ ອັນຮຸ ເຊັ່ນດຽວກັບ

ສາດສະດາ ﷺ ຫລື ຜູ້ນໍາ ກໍບໍ່ໄດ້ເຮັດໃຫ້ເຂົາເຈົ້າຫັນເຫໜີໄປຈາກເກົ່າ ຫຼືໝົດກໍາລັງໃຈລົງໄດ້

4 . ການເສຍຊີວິດ ໃນຫົນທາງຂອງອັລລໍຫ໌ ﷻ ນັ້ນແມ່ນກຽດສັກສີອັນຍິ່ງໃຫຍ່

***"ແລະ ມຸຮໍາຫມັດນັ້ນ ບໍ່ແມ່ນໃຜນອກເຫນືອຈາກຄົນທົ່ວໄປ ຍົກເວັ້ນແຕ່ເປັນຜູ້ສົ່ງຂ່າວ(ຣໍຊູລ) ຊຶ່ງບັນດາຣໍຊູລກ່ອນຈາກລາວໄດ້ຕາຍໄປແລ້ວ ຫາກຖ້າລາວຕາຍຫຼືລາວຖືກຂ້າ ພວກເຈົ້າຈະຫັນສົ້ນຕີນຂອງເຈົ້າຄືນບໍ? ແລະ ຜູ້ໃດກໍຕາມທີ່ຫັນສົ້ນຕີນຂອງເຂົາກັບຄືນໄປແລ້ວ ມັນກໍ່ຈະບໍ່ເຮັດໃຫ້ເກີດອັນຕະລາຍໃດໆຕໍ່ອັລລໍຫ໌ ແຕ່ຢ່າງໃດໆເລີຍ ແລະ ອັລລໍຫ໌ຈະໃຫ້ລາງວັນຜູ້ທີ່ມີຄວາມກະຕັນຍູທັ້ງຫຼາຍ."***

*(ສູເຣາະຫ໌ ອາລະອິມຣອນ 3:144)*

ອັລລໍຫ໌ ﷻ ໄດ້ຊົງປະທານມອບກຽດສັກສີໃຫ້ບັນດາຜູ້ທີ່ຕາຍຊະຮີດເທົ່ານັ້ນ ຊຶ່ງແຕກຕ່າງຈາກປະເພດອື່ນໆຂອງຄົນຕາຍໂດຍທົ່ວໄປ

***"ແລະເຈົ້າຈົ່ງຢ່າໄດ້ຄິດ ເປັນອັນຂາດວ່າບັນດາຜູ້ທີ່ຖືກຂ້າຕາຍໃນຫົນທາງຂອງອັລລໍຫ໌ ໄດ້ເສຍຊີວິດ, ບໍ່ແມ່ນ ພວກເຂົາເຈົ້າຍັງມີຊີວິດຢູ່ກັບພຣະຜູ້ເປັນເຈົ້າຂອງເຂົາເຈົ້າໃນສະພາບທີ່ໄດ້ຮັບປັດໄຈຍັງຊີບ ພວກເຂົາເຈົ້າມີຄວາມປິຕິຍິນດີກັບສິ່ງທີ່ອັລລໍຫ໌ມອບໃຫ້ ຈາກຄວາມເມດຕາຂອງພຣະອົງ ແລະ ປິຕິຍິນດີຕໍ່ບັນດາຜູ້ທີ່ຍັງມາບໍ່ເຖິງພວກເຂົາ. ຊຶ່ງຢູ່ເບື້ອງຫລັງພວກເຂົາວ່າ ຈະບໍ່ມີຄວາມຢ້ານກົວໃດໆຕໍ່ພວກເຂົາ ແລະ ພວກເຂົາຈະບໍ່ໂສກເສົ້າເສຍໃຈ.*** *(ສູເຣາະຫ໌ ອາລະອິມຣອນ 3:169-170)*

5. ມຸດສະລິມໄດ້ຮັບຄວາມພ່າຍແພ້ຄືກັບຄົນອື່ນ

ຊາວມຸດສະລິມອາດຈະໄດ້ຮັບຄວາມພ່າຍແພ້ຄືກັນກັບຄົນອື່ນ ຖ້າລາວບໍ່ສະແຫວງຫາເຫດຜົນຕ່າງໆ ແລະ ມີການວາງແຜນທີ່ດີ ***"ຖ້າຫາກວ່າບາດແຜຫນຶ່ງປະສົບເກີດຂຶ້ນກັບທ່ານ, ແນ່ນອນກໍ່ຍ່ອມປະສົບແກ່ພວກນັ້ນຊຶ່ງບາດແຜເຊັ່ນດຽວກັນ ແລະ ບັນດາມື້ເຫຼົ່ານັ້ນພວກເຮົາ (ອັລລໍຫ໌ ﷻ) ໄດ້ໃຫ້ມັນຫມຸນວຽນໄປໃນລະຫວ່າງມະນຸດ ແລະ ເພື່ອອັລລໍຫ໌ ຈະໄດ້ຮັບຮູ້ເຖິງບັນດາຜູ້ທີ່ສັດທາ ແລະ ເພື່ອຈະຮັບເອົາຜູ້ທີ່ຖືກຂ້າຕາຍໃນສົງຄາມ (ຊູຮາດາ) ຈາກພວກເຂົາ ແລະ ອັລລໍຫ໌ນັ້ນບໍ່ໄດ້ຮັກບັນດາຜູ້ເຮັດຜິດອະທໍາທັ້ງຫຼາຍ."*** *(ອາລະອິມຣອນ 3:140)*

6. ບົດຮຽນຕ່າງໆ ທີ່ຖອດຖອນໄດ້ຈາກສົງຄາມອຸຮູດ

ຈະເປັນເວລາຍາວຫຼາຍທີ່ຈະເວົ້າເຖິງບົດຮຽນທີ່ໄດ້ຮັບຈາກການສູ້ຮົບຂອງອຸຮູດ ຊຶ່ງແທ້ຈິງແລ້ວ, **ອິບນຸ ກອຍຍິມ -ຣໍຫິມາຮູ້ລລໍຫ໌-** ໄດ້ບອກລາຍລະອຽດບາງສ່ວນຢູ່ໃນໜັງສື **ຊາດຸ້ລມະອ໊າດ**

### 11.3 ສົງຄາມອັລ-ອະຫ໌ຊາບ

ສະໜາມຮົບໄດ້ຖືກເອີ້ນວ່າ **ອັລ-ອະຫ໌ຊາບ** ເພາະວ່າໃນປີທີ 5 ຂອງການຍົກຍ້າຍຖິ່ນຖານ (ຮິຈເຣາະຫ໌) ນັ້ນມີກຸ່ມທີ່ເປັນສັດຕູຂອງຊາວມຸດສະລິມຫລາຍຝ່າຍ ມີທັ້ງຊາວມຸຊຣິກີນ, ຊາວຢິວ ແລະ ພວກມຸນາຟິກ (ຄົນໜ້າຊື່ໃຈຄົດ) ເຂົ້າຮ່ວມໃນສົງຄາມຄັ້ງນີ້ທັ້ງໝົດ

➢ **ສາເຫດຂອງການສູ້ຮົບ ອັລ-ອະຫ໌ຊາບ**

ຫຼັງຈາກທ່ານຣໍຊູລລຸລລໍຫ໌ ﷺ ໄດ້ພະຍາຍາມຂັບໄລ່ຊາວຢິວອອກຈາກມາດີນະຫ໌ ບັນດາຫົວໜ້າເຜົ່າຊາວຢິວຈາກຕະກູນ **ອັນນະຕີ້ຣ** ໄດ້ຕິດຕໍ່ພົວພັນກັບຊາວກຸເຣຊ ແລະ ຊົນເຜົ່າຕ່າງໆ ທີ່ເປັນມຸຊຣິກີນ (ປະຕິເສດສັດທາ) ແລະ ພະຍາຍາມຍຸຍົງໃຫ້ເຜົ່າຕ່າງໆເຮັດການຕໍ່ສູ້ກັບມຸດສະລິມ ຍິ່ງໄປກວ່ານັ້ນ, ຊາວກຸເຣຊ ຕ້ອງການຈັດການກັບຊາວມຸດສະລິມຢູ່ແລ້ວ ລວມທັງຄວາມຕ້ອງການໃນເສັ້ນທາງການຄ້າຂາຍ ພວກເຂົາເຈົ້າຈຶ່ງຕົກລົງທີ່ຈະຮ່ວມມື ພ້ອມກັບການເຊື້ອເຊີນຊົນເຜົ່າຕ່າງໆຜ່ານເມືອງ**ນັຈດ໌** ແລະ **ຕີຮາມະຫ໌**ທາງພາກໃຕ້ ໃນຂະນະດຽວກັນຊາວຢິວ ໄດ້ສ້າງແຮງຈູງໃຈໃຫ້ແກ່ຊົນເຜົ່າ**ກ໋ອດຟານ** ເຊິ່ງເປັນຊົນເຜົ່າໃຫຍ່ຂອງເມືອງນັຈດ໌ ໂດຍການແບ່ງປັນຜົນປະໂຫຍດເຄິ່ງໜຶ່ງທີ່ຈະໄດ້ຮັບຈາກເມືອງ**ຄອຍບັຣ**, ຈຶ່ງເຮັດໃຫ້ຈຳນວນນັກຮົບທີ່ເຂົ້າຮ່ວມໃນການສູ້ຮົບໄດ້ບັນລຸ 10,000 ຄົນ

➢ **ຊາວມຸດສະລິມ ແລະ ການຂຸດສະນາມເພາະ**

ເມື່ອບັນດາມຸສລິມຍິນຂ່າວຂອງການຍົກກອງທັບມາຂອງຊົນເຜົ່າຕ່າງໆ, ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງໄດ້ປຶກສາຫາລືກັບບັນດາຊໍຮາບັດ **ຊັລມາ ອັລ ຟາຣິຊີ** ຣໍດີຢັລລໍຮູ ອັນຮູ ໄດ້ສະເໜີແນວຄວາມຄິດທີ່ຈະຂຸດຮ່ອງນ້ຳ (ສະນາມເພາະ) ຢູ່ທາງດ້ານເໜືອຂອງເມືອງມາດີນະຫ໌ ເນື່ອງຈາກວ່າມັນເປັນພຽງດ້ານດຽວທີ່ເປີດໂລ່ງຢູ່ ໃນຂະນະທີ່ອີກດ້ານອື່ນໆ ນັ້ນເຕັມໄປດ້ວຍກຳບັງທາງທຳມະຊາດ ທີ່ມີທັ້ງບ້ານເຮືອນທີ່ຫຸ້ມຢ່າງດົກໜາ ແລະ ສວນຕ່າງໆ ສ່ວນທາງດ້ານອື່ນ ມີພື້ນທີ່ມີຫີນພູເຂົາໄຟ (ຫີນສີດຳບໍ່ລາບລຽບ ເປັນຮ່ອງຮອຍຂອງພູເຂົາໄຟລະເບີດ) ເຊິ່ງເປັນການຍາກລຳບາກໃນການທີ່ຈະລຸຍຜ່ານເຂົ້າມາໄດ້[1] ທ່ານຣໍຊູລລຸລລໍຫ໌ ﷺ ແລະ ບັນດາຊາວມຸດສະລິມໄດ້ເຫັນດີກັບຄວາມຄິດຂອງຊັລມານ ດັ່ງນັ້ນ ຈຶ່ງໄດ້ເລີ່ມປະຕິບັດງານໃນທັນທີ, ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຈັດຕັ້ງຊາວມຸດສະລິມເປັນກຸ່ມ 10 ຄົນ ເພື່ອຂຸດສະນາມຍາວ 40 ສອກ (ປະມານ 20 ເມດ)

ຊາວມຸດສະລິມພົບອຸປະສັກຫຼາຍຢ່າງໃນການຂຸດສະນາມເພາະ ທັງໄລຍະເວລາທີ່ສັ້ນ ສະພາບອາກາດທີ່ໜາວເຢັນ ສະບຽງຈຳນວນໜ້ອຍ ດິນທີ່ແຂງ ແລະ ເຄື່ອງມືທີ່ໃຊ້ບໍ່ແຂງແຮງພໍ ແຕ່ເນື່ອງຈາກວ່າທ່ານຣໍຊູລລຸລລໍຫ໌ ຍັງໄດ້ເຂົ້າຮ່ວມໃນການຂຸດຂຸມກັບຊໍຮາບະຫ໌ ຈຶ່ງສົ່ງຜົນຕໍ່ການວຽກງານຢ່າງຫຼວງຫຼາຍ ແລະ ການຂຸດຂຸມຫຼື ສະນາມເພາະນັ້ນ ແມ່ນເລື່ອງແປກໃໝ່ ເຊິ່ງຊາວອາຫຣັບບໍ່ເຄີຍເຮັດແບບນີ້ມາກ່ອນ

ດ້ວຍເຫດຜົນນີ້ ເມື່ອພວກມຸຊຣິກີນໄດ້ມາຮອດ ຈຶ່ງເກີດຄວາມປະຫລາດໃຈ ແລະ ຢືນຢູ່ທາງໜ້າຂອງສະໜາມເພາະນັ້ນ ພວກເຂົາເຈົ້າບໍ່ສາມາດຍ່າງຜ່ານມັນໄດ້ ຈຶ່ງຕັ້ງກອງທັບຢູ່ບ່ອນນັ້ນ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຈັດວາງກອງກຳລັງມຸດສະລິມ 3,000 ຄົນ ເພື່ອເຮັດໜ້າທີ່ເປັນຄົນເຝົ້າຢູ່ໃນເມືອງມາດີນະຫ໌ ເພາະຢ້ານວ່າພວກຢິວ ແລະ ພວກມຸນາຟິກ ທີ່ຢູ່ໃນເມືອງມາດີນະຫ໌ ຈະທຳລະຍົດທັກຫລັງ. ສ່ວນກອງກຳລັງທະຫານທີ່ເຫລືອຢູ່ໄດ້ເຝົ້າເບິ່ງສະໜາມເພາະ ແລະ ຄອຍຮັກສາການສະກັດສັດຕູ ທີ່ຈະບຸກໂຈມຕີຂ້າມສະໜາມມາ

ພວກມຸຊຣິກີນພະຍາຍາມຫຼາຍຄັ້ງເພື່ອຂ້າມຮ່ອງທີ່ຂຸດໄວ້ໃຫ້ໄດ້ ແຕ່ກຳລັງຊາວມຸດສະລິມໄດ້ສະກັດກັ້ນເອົາໄວ້ ແລະ ເກີດການຕໍ່ສູ້ຮົບດ້ວຍການຍິງທະນູ ແລະ ຊາວມຸດສະລິມຍັງຄົງຄວບຄຸມສະຖານະການເອົາໄວ້ໄດ້ຈົນກະທັ່ງໄດ້ **ເກີດວິກິດຂຶ້ນແກ່ຊາວມຸດສະລິມ ເມື່ອພວກມຸຊຣິກ ເຮັດການຊັກຊວນຊາວຢິວຊົນເຜົ່າກຸຣອຍເຊາະຫ໌ ທີ່ຢູ່ພາຍໃນເມືອງມາດີນະຫ໌, ໃຫ້ພວກເຂົາລະເມີດສັນຍາຂອງພວກເຂົາ ແລະ ປະກາດສົງຄາມກັບຊາວມຸດສະລິມ** ດັ່ງນັ້ນຊາວມຸດສະລິມຈຶ່ງຕົກຢູ່ໃນສະຖານະການທີ່ຫຍຸ້ງຍາກທ່ານຣໍຊູລລຸລລໍຫ໌ ﷺ ໄດ້ໂນ້ມນ້າວຈິດໃຈຂອງບາງເຜົ່າໃຫ້ຖອນຕົວອອກຈາກການສູ້ຮົບ ໂດຍການຍອມຈ່າຍຜົນຜະລິດຈຳນວນໜຶ່ງໃຫ້ແກ່ພວກເຂົາເຈົ້າ ແຕ່ປະຊາຊົນອັນຊໍຣ ບໍ່ເຫັນດີນຳ ຈຶ່ງເວົ້າຂຶ້ນໄປວ່າ:

**ຂໍສາບານຕໍ່ອັລລໍຫ໌ ﷻ ວ່າໃນສະໄໝຈາຮີລີຍະຫ໌ ພວກເຮົາບໍ່ເຄີຍຍອມອ່ອນຂໍ້ໃຫ້ເຂົາເຈົ້າເລີຍ ເມື່ອຄວາມຈິງໄດ້ມາແລ້ວ ເປັນຫຍັງເຮົາຈຶ່ງຄວນຍອມພວກເຂົາດ້ວຍ?**

ສະຖານະການກໍ່ຮ້າຍແຮງກວ່າເກົ່າເມື່ອພວກມຸນາຟິກີນ ໄດ້ປ່ອຍຂ່າວວ່າຊາວມຸດສະລິມມີຄວາມຢ້ານກົວຕະຫຼອດ. ຄຽງຄູ່ກັບການເຍາະເຍີ້ຍເຂົາເຈົ້າ ພຣະອົງອັລລໍຫ໌ ﷻ ໄດ້ແຈ້ງສະພາບຂອງບັນດາຜູ້ສັດທາເຊື່ອຟັງ ຂະນະທີ່ປະສົບກັບຄວາມທຸກລຳບາກວ່າ:

*"**ເມື່ອພວກເຫຼົ່ານັ້ນໄດ້ຍົກກອງທັບມາຫາພວກເຈົ້າ ທັ້ງຈາກຂ້າງເທິງຂອງພວກເຈົ້າ ແລະຈາກຂ້າງລຸ່ມຂອງພວກເຈົ້າ ແລະ ໃນເວລາທີ່ຕາໄດ້ເລືອກລານ ແລະ ຫົວໃຈໄດ້ມາຈຸກຢູ່ໃນຄໍຫອຍ ແລະພວກເຈົ້າມີຄວາມຄິດກັນໄປຕ່າງໆ ນານາ ກ່ຽວກັບອັລລໍຫ໌"*** (ອັລ-ອະຊາບ 39:10)

ບັນດາມຸດສະລິມໄດ້ພະຍາຍາມສຸດຄວາມສາມາດ ພ້ອມກັບການຊອກຫາສາເຫດຕ່າງໆ ແຕ່ບັນຫາທີ່ເກີດຂຶ້ນນແມ່ນເກີນຄວາມສາມາດຂອງເຂົາເຈົ້າ ແລະແລ້ວການຊ່ວຍເຫຼືອຂອງພຣະອົງອັລລໍຫ໌ ﷻ ໄດ້ມາຮອດ, ເຖິງແມ່ນວ່າຊາວມຸດສະລິມບໍ່ເຄີຍປະເຊີນກັບກອງກຳລັງທີ່ເຂັ້ມແຂງຢ່າງນີ້ມາກ່ອນ ແຕ່ຄວາມເສຍຫາຍແມ່ນມີພຽງເລັກນ້ອຍເທົ່ານັ້ນ

ພຣະອົງອັລລໍຫ໌ ﷻ ຊົງທຳລາຍຄວາມສຳພັນລະຫວ່າງມຸຊຣິກ ກັບ ຊາວຢິວ, ໂດຍທີ່ **ນະອີມ ບິນ ມັສອູດ** ໄດ້ປ່ຽນໃຈເຫລື້ອມໃສເປັນອິດສະລາມ ແຕ່ພວກມຸຊຣິກ ແລະ ຢິວ ບໍ່ຮູ້ເລື່ອງທີ່ນະອີມ, ເຊິ່ງເປັນຜູ້ທີ່ສະໜິດສະໜົມກັບທັງສອງຝ່າຍ ສະນັ້ນ ລາວຈຶ່ງເຮັດໃຫ້ເກີດຄວາມສົງໄສຂອງທັ້ງສອງຝ່າຍ ຈົນເກີດຄວາມແຕກແຍກ ທັງສອງຝ່າຍບໍ່ໄວ້ວາງໃຈເຊິ່ງກັນແລະກັນ[2] ແລະ ພຣະອົງອັລລໍຫ໌ ﷻ ໄດ້ສົ່ງກອງກຳລັງທະຫານລົງມາໄປຍັງບັນດາເຜົ່າຕ່າງໆ, ໂດຍທີ່ພຣະອົງກ່າວວ່າ:

***"ໂອ້ ບັນດາຜູ້ສັດທາທັ້ງຫຼາຍ! ຈົ່ງລຳລຶກເຖິງບຸນຄຸນຂອງ ອັລລໍຫ໌ ທີ່ມີຕໍ່ພວກທ່ານ ຂະນະທີ່ກອງທັບສັດຕູເຂົ້າມາໂຈມຕີພວກເຈົ້າ, ແລ້ວ ເຮົາໄດ້ສົ່ງລົມແຮງມາພັດໃສ່ພວກເຂົາ. ແລະ ພວກເຮົາໄດ້ສົ່ງກອງກຳລັງທະຫານທີ່ພວກເຈົ້າເບິ່ງບໍ່ເຫັນລົງມາ, ແລະ ອັລລໍຫ໌ ຊົງເຫັນສິ່ງທີ່ທ່ານເຈົ້າເຮັດ***

*(ອັລ-ອະຫ໌ຊາບ 39 : 9)*

ເຜົ່າຕ່າງໆ ຈຶ່ງຕື່ນຕົກໃຈ ແລະ ຜ້າວຍ້າຍອອກຈາກເມືອງມາດີນະຫ໌ຢ່າງຂວັນເສຍ

***"ແລະ ອັລລໍຫ໌ ຊົງເຮັດໃຫ້ຜູ້ທີ່ບໍ່ເຊື່ອຕ້ອງຖອນທັບກັບໄປດ້ວຍຄວາມໂກດແຄ້ນຂອງເຂົາເຈົ້າ, ທັ້ງໆ ທີ່ພວກເຂົາບໍ່ໄດ້ປະສົບຜົນດີແຕ່ຢ່າງໃດ, ແລະ ອັລລໍຫ໌ ຊົງພຽງພໍແລ້ວສຳຫຼັບຜູ້ເຊື່ອສັດທາໃນການທີ່ຈະຕໍ່ສູ້ຮົບ. ແລະ ອັລລໍຫ໌ ເປັນຜູ້ຊົງມີພະລັງ ເປັນຜູ້ຊົງອຳນາດຢ່າງເຫຼືອລົ້ນ,***

*(ອັລ-ອະຫ໌ຊາບ 39:25)*

ເມື່ອສົງຄາມສິ້ນສຸດລົງ ຊາວມຸດສະລິມຈຶ່ງໄດ້ປ່ຽນຈາກການທີ່ຕ້ອງປົກປ້ອງເມືອງມາດີນະຫ໌ ເປັນການອອກໄປຕໍ່ສູ້ກັບພວກມຸຊຣິກີນ ແລະ ເຂົ້າໂຈມຕີພວກເຂົາຢູ່ໃນດິນແດນຂອງພວກເຂົາ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ເວົ້າເຖິງຜົນລັບນີ້ວ່າ ທັນທີນັ້ນບັນດາເຜົ່າຕ່າງໆ ໄດ້ຖອຍໜີກັບໄປໂດຍທີ່ທ່ານໄດ້ກ່າວວ່າ:

**( الآن نَغْزُوْهُمْ وَلاَ يَغْزُوْنَنَا ، نَحْنُ نَسِيْرُ إِلَيْهِمْ )**

**"ຕໍ່ໄປຈາກນີ້ເຮົາຈະຍົກທັບອອກໄປໂຈມຕີພວກເຂົາ ພວກເຂົາບໍ່ຕ້ອງຍົກທັບມາສູ້ຮົບພວກເຮົາ ພວກເຮົາຈະເດີນໄປຫາພວກເຂົາເອງ"**

---

1. ອິບນຸ ສະອ໌ດ໌ ອັດຕໍບະກອດ ອັລ ກູບຣໍ : 2/66,67 ອັລ ອັມຣີ : ອັສຊີເຣາະຫ໌ ອັນນະບະວີຍະຫ໌ ອັສຊໍຮີຣະຫ໌ 2/420

2.ເລື່ອງຂອງນະອີມ ບິນ ມັສອູດ ໄປເບິ່ງໃນ ຊີເຣາະຫ໌ ອິບນີ ຮິຊາມ ຂອງ ອັລວາກີດີ ເລືອງ ອັລມະກໍຊີ ທີ່ ອິບນີ ກະຊີຣ ອັຊຊີເຣາຫ໌ ອັນນະບະວີຍະຫ໌ 214

### ຂັ້ນຕອນທີ່ 2 ການປະນີປະນອມສະຫງົບເສິກ

### 11.4 ການປະນີປະນອມທີ່ ອັລ-ຮູໄດບີຍະຫ໌

ຫລັງຈາກຊາວມຸດສະລິມໄດ້ອົບພະຍົບເຂົ້າເມືອງມາດີນະຫ໌ ເປັນເວລາ 6 ປີ, ພວກເຂົາເຈົ້າໄດ້ຖືກຕັດຂາດຈາກການຢ້ຽມຢາມ **ມັສຍິດ ອັລ ຫະຣອມ** ແລະ **ການຕໍວາຟທີ່ໄບຕຸລລໍຫ໌**, ເຖິງວ່າພວກເຂົາມີສິດໃນການຢ້ຽມຢາມ ແລະ ເຮັດການດູແລຫຼາຍກວ່າຊາວມຸຊຣິກີນ ໃນເວລາທີ່ ອັລລໍຫ໌ ﷻ ໄດ້ຊົງເຮັດໃຫ້ມຸດສະລິມ ຂະຫຍາຍເຂັ້ມແຂງ ມີອຳນາກຳລັງຫຼາຍຂຶ້ນ ແລະ ຊົງເຮັດໃຫ້ຝ່າຍມຸຊຣິກີນ ອ່ອນແອລົງຫລັງຈາກການສູ້ຮົບຂອງສົງຄວາມສະນາມເພາະໄດ້ສິ້ນສຸດລົງ ຈຶ່ງຮອດເວລາສຳລັບຊາວມຸດສະລິມທີ່ຈະໄປຢ້ຽມຢາມມັສຍິດ ອັລ ຫະຣອມ ຄືກັບຊາວອາຫຣັບອື່ນໆ ສິ່ງທີ່ເຮັດໃຫ້ທ່ານຣໍຊູລລຸລລໍຫ໌ ﷺ ທ່ານຕ້ອງເຮັດແນວນັ້ນ, ຄືທ່ານໄດ້ຝັນວ່າ ທ່ານ ແລະ ບັນດາຊໍຮາບະຫ໌ເຮັດການຕໍວາຟອຸມເຣາະຫ໌ທີ່ໄບຕິລລະຮີລຮະຣອມ

***"ແທ້ຈິງແລ້ວ ອັລລໍຫ໌ ໄດ້ເຮັດໃຫ້ຄວາມຝັນນັ້ນກາຍເປັນຈິງສຳລັບຣໍສູລ ຂອງພຣະອົງ ດ້ວຍຄວາມເປັນຈິງແນ່ນອນ, ພວກທ່ານຈະໄດ້ເຂົ້າໄປໃນ ມັສຍິດ ອັລ ຫະຣອມ ຢ່າງປອດໄພຕາມອັລລໍຫ໌ຊົງ ພຣະປະສົງ ໂດຍ(ບາງຄົນ) ຂອງພວກເຈົ້າໂກນຫົວແລະ (ອີກບາງຄົນ) ຕັດຜົມ ພວກເຂົາບໍ່ມີຄວາມຢ້ານກົວ, ເພາະອັລລໍຫ໌ ຊົງຮອບຮູ້ສິ່ງທີ່ພວກເຈົ້າບໍ່ຮູ້, ສະນັ້ນ ພຣະອົງຈຶ່ງໄດ້ກຳໜົດໄຊຊະນະອື່ນຈາກນັ້ນ ດ້ວຍກັບໄຊຊະນະອັນໃກ້ນີ້ "*** *(ສູເຣາະຫ໌ ອັລ-ອານຟາດ 48:27)*

ທ່ານນະບີ ﷺ ໄດ້ຄາດຄະເນແລ້ວວ່າ ພວກກຸເຣຊ ຈະຂັດຂວາງບໍ່ໃຫ້ເຂົ້າໄປໃນມັກກະຫ໌ ສະນັ້ນທ່ານຈຶ່ງພະຍາຍາມເຕົ້າໂຮມຊາວມຸດສະລິມໃຫ້ຫຼາຍເທົ່າທີ່ເປັນໄປໄດ້ ມີຊາວມຸດສະລິມ 10,400 ຄົນ ທີ່ມາກັບທ່ານ[1] ແລະ ໄດ້ສະແດງໃຫ້ຊາວກູເຣຊ ເຫັນວ່າຄວາມຕັ້ງໃຈຂອງທ່ານນັ້ນມີຄວາມບໍລິສຸດຈິງໃຈ ບໍ່ໄດ້ອອກໄປເພື່ອເຮັດສົງຄາມແຕ່ຢ່າງໃດ ທ່ານຕ້ອນຝູງສັດທີ່ຈະໄປຂ້າໃນການເຮັດພິທີໃຫ້ຢູ່ຕໍ່ໜ້າຂະບວນ ແລະ ພ້ອມທັງສວມໃສ່ເຄື່ອງນຸ່ງ ອິຫ໌ຣອມ ເພື່ອປະຕິບັດພິທີ ອຸມເຣາະຫ໌ ແລະ ເມື່ອທ່ານໄດ້ຍິນຂ່າວໃນຕາມທາງທີ່ກຳລັງໄປວ່າ ພວກກຸເຣຊ ໄດ້ຕຽມຕົວເພື່ອຂັດຂວາງບໍ່ໃຫ້ເຂົ້າເມືອງມັກກະຫ໌ ແລະ ມີຄວາມຕັ້ງໃຈທີ່ຈະເຮັດສົງຄາມ ທ່ານຈຶ່ງປ່ຽນເສັ້ນທາງເພື່ອຫຼີກລ່ຽງການປະທະກັນ ຈົນເດີນທາງໄປຮອດ ອັລ-ຮູໄດບີຍະຫ໌ ແລະ ພັກຜ່ອນທີ່ນັ້ນ

---

1.ຊໍຮີຫ໌ ອັລ ບຸກຄໍຣີ ກິຕ້າບຸລມະກໍຊີ ບາບ ກໍຊວະຕຸ້ລຮຸໄດບີຍຫ໌ ຊໍຮີຫ໌ ມຸສລິມ ກິຕາບຸລອິມາເຣາະຫ໌ ບາບ ອິສຕິຫ໌ບາບ "ມູບາຍະອະຫ໌ອັລອິມາມ

- **ການເຮັດສັດຕະຍາບັນ ອັຣຣິດວານ**

ຄືສະຖານທີ່ ອັລ-ຮູໄດບີຍະຫ໌ນີ້ເອງ ທີ່ທ່ານສາດສະດາໄດ້ສົ່ງ ອຸສມານ ບິນ ອັຟຟານ (ຣດ) ເປັນຕົວແທນເພື່ອການເຈລະຈາກັບ ພວກກຸເຣຊ ແລະ ພະຍາຍາມເຮັດໃຫ້ພວກເຂົາເປີດເສັ້ນທາງໃຫ້ຊາວມຸດສະລິມເຂົ້າໄປໃນ ມັສຍິດ ອັລ ຫະຣອມ ແລະ ປະຕິບັດພິທີອຸມເຣາະຫ໌, ແຕ່ພວກກຸເຣຊໄດ້ກັກຂັງໜ່ວງນ່ຽວອຸສມານ ແລ້ວເຜີຍແຜ່ຂ່າວວ່າ ອຸສມານໄດ້ຖືກຂ້າຕາຍແລ້ວ, ທ່ານສາດສະດາ ﷺ ຈຶ່ງໃຫ້ຊໍຫາບະຫ໌ ເຮັດສັດຕະຍາບັນ ໃນການຮ່ວມເປັນຮ່ວມຕາຍດ້ວຍກັນ ບັນດາຊໍຫາບະຫ໌ ຈຶ່ງຈັບມືເຮັດສັດຕະຍາບັນກັບທ່ານສາດສະດາ ﷺ ແລະ ເອີ້ນການເຮັດໃຫ້ສັດຕະຍາບັນນີ້ວ່າ **ໄບອະ ຕຸຣຣິດວານ** ເຊິ່ງໄດ້ເຮັດພາຍໃຕ້ຕົ້ນໄມ້ຕົ້ນໜຶ່ງ ອັລລໍຫ໌ ﷻ ພຣະອົງໄດ້ຍ້ອງຍໍຜູ້ທີ່ໄດ້ເຮັດສັດຕະຍາບັນໃນຄັ້ງນີ້ ພ້ອມກັບຄຳເວົ້າທີ່ວ່າ:

***"ແທ້ຈິງແລ້ວ ອັລລໍຫ໌ ຊົງພໍພຣະໄທຕໍ່ບັນດາຜູ້ທີ່ສັດທາ. ຍ້ອນວ່າເຂົາເຈົ້າໃຫ້ສັດຕະຍາບັນແກ່ເຈົ້າ (ມູຮຳຫມັດ) ກ້ອງຕົ້ນໄມ້ (ທີ່ຮຸໄດບີຍະຫ໌) ພຣະອົງຈຶ່ງສົ່ງສັນຕິສຸກມາສູ່ພວກເຂົາ ແລະ ໃຫ້ລາງວັນແກ່ພວກເຂົາດ້ວຍໄຊຊະນະທີ່ໃກ້ຈະມາເຖິງ*** *(ອັລ-ອັນຟານ 48 : 18)*

ເມື່ອ ພວກກູເຣຊ ໄດ້ຮູ້ເຖິງການໃຫ້ສັດຕະຍາບັນນັ້ນ, ພວກເຂົາເຈົ້າໄດ້ປ່ອຍ ອຸສມານ (ຣດ) ແລະ ໄດ້ສົ່ງຜູ້ຕາງຫນ້າໄປເຈລະຈາກັບທ່ານສາດສະດາມູຮຳມັດ ﷺ ທັງສອງຝ່າຍໄດ້ຢືນຢັນຕໍ່ພວກກູເຣຊວ່າ ທ່ານສາດສະດາມູຮຳມັດ ﷺ ແລະ ຊາວຊໍຮາບະຫ໌ ບໍ່ໄດ້ມາເພື່ອຕໍ່ສູ້ ຫາກແຕ່ວ່າມາເພື່ອຢ້ຽມຢາມ (ຊີຍາເຣາະຫ໌) ອັລ-ໄບຕຸລຮາຣອມ ແຕ່ພວກກູເຣຊ ບໍ່ອະນຸຍາດໃຫ້ຕາມສິ່ງທີ່ໄດ້ແຈ້ງໄປ ເພາະການອະນຸຍາດນັ້ນ ພວກເຂົາຖືວ່າມັນເປັນການທຳລາຍກຽດສັກສີຂອງພວກເຂົາຕໍ່ໜ້າຊາວອາຣັບ. ຍ້ອນເຫດນີ້ເຂົາເຈົ້າຈຶ່ງໄດ້ຄິດຫາທາງອອກ ແລະ ໄດ້ເຮັດການປະນີປະນອມເພື່ອຊ່ວຍຮັກສາຫນ້າໄວ້ ແລະ ສະແດງໃຫ້ເຫັນເຖິງຄວາມອ່ອນແອຂອງຊາວມຸດສະລິມຈາກຂໍ້ຕົກລົງ ທ່ານສາດສະດາ ﷺ ໄດ້ຮ່ວມຕົກລົງກັບພວກເຂົາແມ່ນ;

- ໃຫ້ຊາວມຸດສະລິມເດີນທາງກັບໃນປີນີ້ ໂດຍບໍ່ມີການເຂົ້າໄປໃນມັກກະຫ໌ ເພື່ອເຮັດອຸມເຣາະຫ໌ຫຼັງຈາກນັ້ນ, ໃນປີຫນ້າຈຶ່ງກັບຄືນມາໃຫມ່.
- ຢຸດຕິສົງຄາມລະຫວ່າງສອງຝ່າຍເປັນລະຍະເວລາ 10 ປີ.
- ຜູ້ທີ່ເປັນຊາວມຸດສະລິມອອກຈາກມັກກະຫ໌ໄປອາໄສຢູ່ມະດີນະຫ໌,ໃຫ້ສົ່ງລາວກັບຄືນໄປມັກກະຫ໌.
- ໃຜທີ່ອອກຈາກການເປັນມຸດສະລິມ ແລ້ວກັບຄືນໄປມັກກະຫ໌ ຊາວກູເຣຊຈະບໍ່ສົ່ງຄືນໃຫ້ຊາວມຸດສະລິມ.

- ບຸກຄົນຂອງຊົນເຜົ່າຕ່າງໆ ທີ່ຈະເຂົ້າຮ່ວມກັບ ມູຮຳຫມັດ ຫຼື ກູເຣຊ. ພວກເຂົາເຈົ້າສາມາດ ເຮັດໄດ້ ແລະ ໃຫ້ແຕ່ລະຝ່າຍເຄົາລົບໃຫ້ກຽດພັນທະມິດອື່ນໆ ເຊັ່ນດຽວກັນ.

ເທົ່າທີ່ພິຈາລະນາຈາກເງື່ອນໄຂຕ່າງໆ ເທົ່າກັບການບີບບັງຄັບ ຫຼື ຫຼຸດທອນສິດທິຂອງຊາວມຸສລິມ ຈຶ່ງເຮັດໃຫ້ຊາວມຸດສະລິມທັງຫລາຍປະທ້ວງ ທ່ານຣໍຊູລລຸລລໍຫ໌ ﷺ ຫຼາຍຄັ້ງ ແລະ ສະແດງຄວາມບໍ່ພໍໃຈ ຕໍ່ຂໍ້ຕົກລົງດັ່ງກ່າວ, ແຕ່ທະວ່າ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ກ່າວວ່າ:

( إِنِّيْ رَسُوْلُ اللهِ وَلَنْ يُضَيِّعَنِي اللهُ )

***"ແທ້ຈິງ ຂ້ອຍເປັນສາສະນະທູດ ຂອງອັລລໍຫ໌ ﷻ ແນ່ນອນ ອັລລໍຫ໌ ﷻ ຈະບໍ່ຊົງທອດຖິ້ມ ຂ້ອຍແນ່ນອນ"***

ໃນທີ່ສຸດ, ໄດ້ເປັນທີ່ຊັດເຈນກັບຊາວມຸດສະລິມວ່າ ເງື່ອນໄຂຕ່າງໆ ໄດ້ກັບກາຍເປັນສິ່ງທີ່ດີສຳລັບ ຜູ້ເຊື່ອຖືທັງຫມົດ ຈຶ່ງເຮັດໃຫ້ພວກກຸເຣຊ ຂໍຍົກເລີກຂໍ້ຕົກລົງທີ່ຊາວມຸດສະລິມຄິດວ່າເປັນການບີບບັງຄັບ ແລະ ຫຼຸດທອນສິດຂອງເຂົາເຈົ້າອອກໄປ

### 11.5 ຜົນຂອງການປະນີປະນອມນັ້ນ ອັລ-ຮຸໄດບີຍະຫ໌

ອັລລໍຫ໌ ﷻ ເອີ້ນການປະນີປະນອມຄັ້ງນີ້ວ່າ "ໄຊຊະນະ ຟັຕຫັນ" ພຣະອົງໄດ້ປະທານດຳລັດ ໃຫ້ກັບສາສະນະທູດໃນຂະນະທີ່ທ່ານເດີນທາງກັບວ່າ:

***"ແທ້ຈິງ ພວກເຮົາໄດ້ມອບໄຊຊະນະໃຫ້ແກ່ພວກເຈົ້າ ເປັນໄຊຊະນະທີ່ປະກົດໃຫ້ເຫັນຊັດເຈນ"***

*(ສູເຣາະຫ໌ ອັລ-ຟັຕ 48:1)* [1]

ຊາຍຄົນໜຶ່ງຖາມທ່ານສາດສະດາ ﷺ ວ່າ: ມັນເປັນໄຊຊະນະແມ່ນບໍ່?

ທ່ານນະບີ ﷺ ຕອບວ່າ:

( نعم ، والذِيْ نَفْسِيْ بِيَدِهِ إِنَّهُ لَفَتْحٌ )

**"ແມ່ນແລ້ວ ຂໍສາບານດ້ວຍຜູ້ທີ່ຊີວິດຂອງຂ້ອຍຢູ່ໃນພຣະຫັດຂອງພຣະອົງວ່າ ແນ່ນອນ ມັນຄື ໄຊຊະນະທີ່ແທ້ຈິງ"** [2]

---

1.ເບິ່ງຄວາມໝາຍຂອງອາຍະຫ໌ໃນຕັຊຊີຣ ອັດຕໍບະຣີ ແລະ ອິບນຸ ກະຊີຣ

2.ມຸສນັດ ອີມາມ ອະຫ໌ມັດ 3/420 ແລະ ອັລຮາກີມໃນ "ມຸສຕັດຣອດ" ຂອງທ່ານ 2/459 ແລະທ່ານໄດ້ບອກວ່າຖືກຕ້ອງ (ຊໍຮີ້ຫ໌) ອັຊສະ ຣາບີກໍ່ເຫັນນຳ

***ຜົນໄດ້ຮັບຂອງການປະນີປະນອມນັ້ນມີດັ່ງນີ້: -***

1. ໃນການປະນີປະນອມນີ້ຄັ້ງນີ້ ຊາວກຸເຣຊ ໄດ້ຍອມຮັບຕໍ່ສະຖຽນລະພາບ ແລະ ເຂດແດນຂອງຊາວມຸດສະລິມ ໃນຂະນະທີ່ມີການເຊັນສັນຍາຂໍ້ຕົກລົງ, ເຮັດໃຫ້ບາງຊົນເຜົ່າໄດ້ກາຍເປັນມິດຢ່າງເປີດເຜີຍກັບບັນດາມຸສລິມ ໂດຍບໍ່ມີຄວາມຢ້ານກົວ ຫຼື ຕ້ອງເອົາໃຈຊາວກຸເຣຊອີກຕໍ່ໄປ, ເຊັ່ນທີ່ ເຜົ່າຄຸຊາອະຫ໌ໄດ້ເຮັດ.

2. ສິ້ນສຸດສົງຄາມກັບຊາວກຸເຣຊ ໄດ້ເປີດໂອກາດໃຫ້ແກ່ຊາວມຸດສະລິມ ໄປຈັດການກັບຝ່າຍສັດຕູອື່ນໆ ຈຶ່ງເຮັດໃຫ້ການກຳຈັດຊາວຢິວຂອງເມືອງ “ຄອຍບັຣ” ໄດ້ສຳເລັດ ແລະ ສາມາດຍຶດຄອງໃນປີທີ 7 ແຫ່ງຮິຈຈະເຣາະຫ໌ ສັກກະຣາດ. ຕະຫຼອດຈົນການກວາດລ້າງຊົນເຜົ່າ “ກົ໊ຕໍ່ຟານ” ທາງຫົວເມືອງ “ນັຈດ໌” ໃນສົງຄາມທີ່ເອີ້ນວ່າ “ຊາຕິຣຣິກົ໊ອ໌” ລວມທັງການສົ່ງທະຫານໄປຍັງເມືອງ “ມຸອ໌ຕະຫ໌” ເຊິ່ງຢູ່ທາງພາກເໜືອຂອງແຫຼມອາຣັບ ແລະ ສຸດທ້າຍຂອງການກວາດລ້າງ. ແມ່ນສົງຄາມທີ່ເອີ້ນວ່າ “ສາຕຸສສາລາສິລ” ເພື່ອເປັນບົດຮຽນໃຫ້ແກ່ຊົນເຜົ່າຕ່າງໆ.

3. ການປະນີປະນອມໃນຄັ້ງນີ້ເປີດໂອກາດໃຫ້ຊາວມຸດສະລິມ ມີເວລາທີ່ຈະເຜີຍແຜ່ອິດສະລາມ, ທ່ານສາດສະດາ ﷺ ໄດ້ສົ່ງຜູ້ຕາງໜ້າໄປຫາຜູ້ປົກຄອງເມືອງຕ່າງໆ ແລະ ຜູ້ນຳໃນແຫຼມຄາບສະມຸດອາຣັບ. ເຮັດການເຊື້ອເຊີນເຂົາເຈົ້າໃຫ້ປ່ຽນເຂົ້າຮັບອິສລາມ ການປະນີປະນອມນີ້ໄດ້ໃຫ້ໂອກາດແກ່ຊົນເຜົ່າຕ່າງໆ. ກ້າທີ່ຈະມີຄວາມສຳພັນກັບຊາວມຸດສະລິມ ແລະ ຮັບຮູ້ເລື່ອງລາວຂອງອິດສະລາມ ເປັນການສະແດງໃຫ້ເຫັນວ່າອິດສະລາມໄດ້ແຜ່ຂະຫຍາຍຢ່າງໄວວາ ໃນລະຍະພຽງແຕ່ສອງປີຂອງຂໍ້ຕົກລົງການປະນີປະນອມ. ເຮັດໃຫ້ມີນັກຕໍ່ສູ້ຕ້ອງການເດີນທາງກັບທ່ານສາດສະດາ ເພື່ອພິຊິດເມືອງມັກກະຫ໌ ສູງເຖິງ 10,000 ຄົນ. ເຊັ່ນດຽວກັນ, ໄດ້ມີຄົນຈຳນວນໜຶ່ງທີ່ມີຊື່ສຽງທີ່ໄດ້ປ່ຽນມາຮັບນັບຖືອິດສະລາມ, ເຊັ່ນຄໍລິດ ບິນ ອັລວະລີດ ແລະ ອັມຣູບນຸ້ລອ໊າຊ ຣໍດີຢັລລໍອັນ ຮູມາ ແລະ ອື່ນໆ ເປັນຕົ້ນ.

## ຂັ້ນຕອນທີ 3 ຊາວມຸດສະລິມໄປເຮັດສົງຄາມກັບມຸຊຣິກີນ

### 11.6 ການພິຊິດມັກກະຫ໌

ສາເຫດຂອງການພິຊິດ

ຫຼັງຈາກ 18 ເດືອນ ທີ່ໄດ້ເຮັດຂໍ້ຕົກລົງການປະນີປະນອມທີ່ "ຮຸໄດບີຍະຫ໌" ຈຶ່ງໄດ້ເກີດສົງຄາມຂຶ້ນລະຫວ່າງຊົນເຜົ່າ **ຄຸຊາອະຫ໌** ເຊິ່ງເປັນມິດກັບຊາວມຸດສະລິມ ກັບເຜົ່າ **ບະນີບັກຣ໌** ເຊິ່ງຮ່ວມກັບພວກກຸເຣຊ ໄດ້ເຂົ້າມາແຊກແຊງ ແລະ ໃຫ້ການສະຫນັບສະຫນູນໃນການເຮັດສົງຄາມ ແຕ່ອີງຕາມເງື່ອນໄຂຂອງສົນທິສັນຍາປະນີປະນອມໄດ້ກ່າວໄວ້ນັ້ນຄື *"ການລະເມີດໃດໆ ກໍ່ຕາມທີ່ມີຕໍ່ເພື່ອນມິດສະຫາຍຂອງຊາວມຸດສະລິມ ຈະຖືວ່າເປັນການລະເມີດສົນທິສັນຍາທີ່ໄດ້ເຮັດກັນໄວ້* ເພາະສະນັ້ນ, ຈຶ່ງຖືວ່າພວກກູເຣຊໄດ້ລະເມີດສົນທິສັນຍາການປະນີປະນອມ. ດ້ວຍເຫດນີ້ ທ່ານຣໍຊູລ ﷺ ຈຶ່ງໃຫ້ຄວາມຊ່ວຍເຫຼືອຊົນເຜົ່າ ຄຸຊາອະຫ໌ ທັນທີທີ່ພວກເຂົາຮຽກຮ້ອງການຊ່ວຍເຫຼືອ

#### ຊາວມຸດສະລິມໄດ້ເຄືອນທັບໄປເມືອງມັກກະຫ໌ ແລະ ເຮັດການພິຊິດນະຄອນມັກກະຫ໌

ພວກກຸເຣຊ ຮູ້ສຶກເສຍໃຈຕໍ່ການໄປບຸກລຸກຂອງພວກເຂົາຕໍ່ເພື່ອນມິດສະຫາຍຂອງທ່ານຣໍຊູລ ﷺ ຈຶ່ງໄດ້ສົ່ງອະບູຊຸຟຍານ ໄປຫາເພື່ອຢືນຢັນຂໍ້ຕົກລົງສະຫງົບເສິກ ແຕ່ໄດ້ເປັນຄວາມລົ້ມເຫຼວໃນການເຈລະຈາ ອະບູຊຸຟຍານ ຈຶ່ງເດີນທາງກັບໄປມັກກະຫ໌ ຢ່າງຜູ້ຜິດຫວັງ, ທ່ານສາດສະດາ ﷺ ໄດ້ສັ່ງໃຫ້ ຊໍຮາບະຫ໌ ກະກຽມສຳລັບການອອກເດີນທາງ ໂດຍບໍ່ມີການແຈ້ງໃຫ້ຮູ້ທິດທາງທີ່ຈະໄປ ຈົນເມື່ອກຳໜົດເວລາມາເຖິງ, ທ່ານຣໍຊູລ ﷺ ໄດ້ແຈ້ງໃຫ້ຊໍຮາບະຫ໌ ຮູ້ກ່ຽວກັບຄວາມຕັ້ງໃຈຂອງຕົນທີ່ຈະໄປເຮັດສົງຄາມທີ່ນະຄອນມັກກະຫ໌ ທ່ານຕ້ອງການໂຈມຕີ ພວກກຸເຣຊ ຢ່າງກະທັນຫັນບໍ່ທັນໃຫ້ຕັ້ງຕົວ ເພື່ອຈະໄດ້ຍອມຈຳນົນໂດຍບໍ່ມີການຕໍ່ສູ້

ຊາວມຸດສະລິມໄດ້ເດີນທາງໄປກັບທ່ານສາດສະດາໃນວັນທີ 10 ຂອງເດືອນຣໍມະດອນ, ປີທີ 8 ຂອງຮິຈເຣາະຫ໌ສັກກະຣາດ. ມີຈຳນວນທັງຫມົດແມ່ນ 10,000 ນາຍທະຫານ ໃນຂະນະທີ່ຊາວມຸດສະລິມເດີນທາງເຂົ້າມາໃຫ້ນະຄອນມັກກະຫ໌ ມີຜູ້ນຳຂອງພວກກຸເຣຊ ອະບູຊຸຟຍານໄດ້ເບິ່ງເຫັນກອງກຳລັງຂອງຊາວມຸດສະລິມທີ່ກຳລັງລາດຕະເວນຢູ່ ຈຶ່ງໄດ້ຟ້າວກັບເຂົ້າໄປມັກກະຫ໌ ເພື່ອຮຽກຮ້ອງໃຫ້ປະຊາຊົນເມືອງມັກກະຫ໌ຍອມຈຳນົນ ແລະ ຫ້າມບໍ່ໃຫ້ມີການຕໍ່ຕ້ານໃດໆ ທ່ານສາດສະດາ ﷺ ໄດ້ແບ່ງທະຫານຂອງທ່ານໄປມັກກະຫ໌ ແລະ ຫ້າມບໍ່ໃຫ້ຂ້າຜູ້ໃດ ເວັ້ນເສຍແຕ່ວ່າຜູ້ໃດຜູ້ຫນຶ່ງຕໍ່ສູ້ຕ້ານ ແລະ ຂ້າຊາວມຸດສະລິມກ່ອນ ຊາວມຸດສະລິມໄດ້ຮັບຜົນສຳເລັດໃນການເຂົ້າໄປໃນເມືອງມັກກະຫ໌ ທັນທີທີ່ທ່ານຣໍຊູລ ﷺ ເຂົ້າໄປໃນເມືອງມັກກະຫ໌ ທ່ານໄດ້ປະກາດຄວາມປອດໄພແກ່ທຸກຄົນ ທີ່ຢູ່ໃນບ້ານເຮືອນຂອງເຈົ້າຂອງ ແລະ ຜູ້ໃດກໍ່ຕາມທີ່

ເຂົ້າໄປໃນເຮືອນຂອງ ອະບູຊຸຟຍານ ລາວຈະໄດ້ຮັບຄວາມປອດໄພ ຜູ້ໃດວາງອາວຸດຂອງຕົນກໍເປັນຜູ້ປອດໄພເຊັ່ນກັນ.

ທ່ານສາດສະດາ ﷺ ເຂົ້າໄປໃນມັກກະຫ໌ ດ້ວຍຄວາມຖ່ອມຕົນຕໍ່ຫນ້າພຣະຜູ້ເປັນເຈົ້າ ລາວບໍ່ໄດ້ເຂົ້າໄປຄືກັບກະສັດທີ່ຍິ່ງໃຫຍ່ ຫຼືຕ້ອງການແກ້ແຄ້ນສັດຕູ ເຖິງວ່າຈະມີຄວາມເຈັບປວດ ທັງໆທີ່ຊາວມຸສລິມໄດ້ປະສົບກັບການຂົ່ມເຫັງ ຄວາມເຈັບປວດ ການຖືກທຳລາຍ ທໍລະມານ ໂດຍຊາວມັກກະຫ໌ທັ້ງກ່ອນ ແລະ ຫຼັງຈາກການອົບພະຍົບ ທ່ານສາດສະດາມູຮຳຫມັດ ﷺ ໄດ້ປະກາດຕໍ່ໜ້າກຸ່ມຊົນຊາວກຸເຣຊທີ່ຢູ່ໃນສະຖານະການສະພາບກະວົນກະວາຍໃຈວ່າ:

**"ພວກທ່ານທັ້ງຫຼາຍຄິດວ່າຂ້ອຍຈະເຮັດແນວໃດກັບພວກທ່ານ?"**

ເຂົາເຈົ້າເວົ້າວ່າ:

"ແນ່ນອນວ່າເຈົ້າຈະຕ້ອງເຮັດສິ່ງທີ່ດີ, ເພາະວ່າເຈົ້າມີຄວາມເມດຕາ. ແລະເປັນລູກຊາຍຂອງຄວາມເມດຕາ"

ທ່ານຣໍຊູລ ﷺ ເວົ້າວ່າ:

**( لا تثريب عليكم اليوم يغفر الله لكم)**

**"ມື້ນີ້ບໍ່ມີການຕຳນິຕິຕຽນຕໍ່ພວກທ່ານແຕ່ປະການໃດ ເນື່ອງຈາກວ່າອັລລໍຫ໌ ﷻ ຈະຊົງໃຫ້ອະໄພແກ່ພວກທ່ານ"**[1]

ທ່ານຣໍຊູລ ﷺ ໄດ້ໃຫ້ອະໄພແກ່ຊາວມັກກະຫ໌ ເວັ້ນເສຍແຕ່ຄົນທີ່ເຮັດຜິດສັນຍາ ແລະ ຂໍ້ຕົກລົງຊ້ຳແລ້ວຊ້ຳເລົ່າ ພວກເຂົາຍັງລ່ວງລະເມີດໂດຍການເຍາະເຍີ້ຍຖາກຖາມທ່ານ ແລະ ສາສະຫນາຂອງອັລລໍຫ໌ ສະນັ້ນ ທ່ານຈຶ່ງສັ່ງໃຫ້ຂ້າພວກເຫຼົ່ານັ້ນ ແລະ ທຳລາຍຮູບປັ້ນທັງໝົດ ແລະ ເຮັດຄວາມສະອາດມັສຍິດຮາຣອມ ໃຫ້ສະອາດບໍລິສຸດຈາກຮູບບູຊາເຫຼົ່ານັ້ນ, ທ່ານສາດສະດາ ﷺ ໄດ້ສັ່ງຊໍຮາບະຫ໌ ເພື່ອໄປທຳລາຍຮູບປັ້ນຂອງເຜົ່າອື່ນໆດ້ວຍ ໄຊຊະນະຂອງການພິຊິດມັກກະຫ໌ ແລະ ການໃຫ້ອະໄພຊາວມັກກະຫ໌ທັງຫມົດເຮັດໃຫ້ພວກເຂົາປ່ຽນມາເປັນອິດສະລາມ ການຕໍ່ຕ້ານຈຶ່ງໄດ້ຢຸດຕິລົງ

1.ອະບູ ອຸໄບ, ບົດທີ່ວ່າດ້ວຍເລື່ອງຂອງ "ອັລອຳວານ" (ຊັບສິນ) ເລັ່ມທີ່ 1 ຫນ້າ 202 ຊີເຣາະຫ໌ອິບນີ ຮິຊາມ ເລັ່ມ 4 ໜ້າ 32 ໃນ ຊີເຣາະຫ໌ ມີຂໍ້ຄວາມວ່າ "ພວກທ່ານ ທັ້ງຫຼາຍຈົ່ງໄປໄດ້ແລ້ວ ພວກທ່ານເປັນຜູ້ອິດສະລະເສລີ" ແລະເບິ່ງໃນຕັຄຣີຈຕຸຣຸກ "ການລະບຸເຖິງສາຍລາຍງານຫະດິຊ ແລະ ການກວດສອບສາຍລາຍງານ" ທີ່ມາຂອງເລື່ອງນີ້ ຂອງມະຫ໌ດີຍ໌ ຣໍ່ຊະກັລລໍຫ໌ ອັຊຊີເຣາະຫ໌ ອັນນະບະວີຍະຫ໌ ຫນ້າ 569 ແລະ ໄດ້ກ່າວໄວ້ຫຼັງຈາກໄດ້ລະບຸໄວ້ໃນລາຍງານຕ່າງໆ ແລ້ວວ່າ ຫະດິຊນີ້ມີນ້□າໜັກເຊື່ອຖືໄດ້ດ້ວຍສາຍສືບນີ້

## 11.6 ຜົນສຳເລັດຂອງການພິຊິດເມືອງມັກກະຫ໌

ການເອົາຊະນະສາມາດພິຊິດມັກກະຫ໌ ແມ່ນການປະເຊີນຫນ້າສຸດທ້າຍກັບຜູ້ປະຕິເສດຊາວກຸເຣຊ ແລະ ດ້ວຍການຍອມຈຳນົນ ເຮັດໃຫ້ອຸປະສັກທີ່ກີດຂວາງເສັ້ນທາງຂອງອິດສະລາມຕ້ອງສິ້ນສຸດລົງ ມີຊົນເຜົ່າຕ່າງໆ ຄິດວ່າຈະຕ້ອງມີການຕໍ່ສູ້ລະຫວ່າງມຸຮຳຫມັດ ແລະ ກຸເຣຊເກີດຂຶ້ນຢ່າງແນ່ນອນ ເມື່ອການຕໍ່ຕ້ານຂອງພວກກຸເຣຊໄດ້ຢຸດເຊົາລົງແລ້ວ ແລະ ພວກເຂົາຍອມຮັບອິດສະລາມ ຊົນເຜົ່າອື່ນໆ ກໍ່ຄ່ອຍໆຮັບນັບຖືສາສະໜາອິສລາມ[1]

ໃນກໍລະນີນີ້ ອັລລໍຫ໌ ﷻ ພຣະອົງໄດ້ສົ່ງ ສູເຣາະຫ໌ ອັນນັສ Surah An-Nasr ລົງມາ;

1. **ເມື່ອການຊ່ວຍເຫຼືອຂອງອັລລໍຫ໌ ແລະ ການເອົາຊະນະພິຊິດໄດ້ມາເຖິງ.**
2. **ແລະ ເຈົ້າ (ມຸຮຳຫມັດ) ຈະໄດ້ເຫັນປະຊາຊົນເຂົ້າຮັບສາດສະຫນາຂອງອັລລໍຫ໌ ເປັນກຸ່ມໆ.**
3. **ສະນັ້ນ ຈົ່ງຍ້ອງຍໍສັນລະເສີນພຣະເຈົ້າ ຂອງພວກເຈົ້າ ແລະ ຂອກຫາການໃຫ້ອະໄພຈາກພຣະອົງ ແທ້ຈິງແລ້ວ, ພຣະອົງເປັນຜູ້ໃຫ້ອະໄພ.**

(ສູເຣາະຫ໌ອັນນາສ 110:1-3)

ສິ່ງທີ່ສະແດງໃຫ້ເຫັນວ່າປະຊາຊົນຈຳນວນຫຼາຍໄດ້ປ່ຽນໃຈເຫລື້ອມໃສເຂົ້າຮັບອິສລາມ ຫຼັງຈາກການພິຊິດມັກກະຫ໌ ໃນສົງຄາມຮຸໄນນ໌ ເຊິ່ງເກີດຂຶ້ນຫຼັງຈາກການເອົາຊະນະພິຊິດມັກກະຫ໌ ໄດ້ມີນັກຮົບເຂົ້າຮ່ວມສົງຄາມ 12,000 ຄົນ[2]

## 11.7 ຊົນເຜົ່າຊະກີຟ ສັນຫາຜູ້ນຳໃນການເຮັດຊີຣິກ "ການຕັ້ງພາຄີສະມາຄົມກັບ ອັລລໍຫ໌ ﷻ"

**ຊົນເຜົ່າຊະກີຟ**, ເປັນຊົນເຜົ່າທີ່ໃຫຍ່ທີ່ສຸດຂອງເຜົ່າຮາວະຊິນ ພະຍາຍາມເຮັດຫນ້າທີ່ເປັນຫົວຫນ້າຂະບວນການເຮັດຊີຣິກ ປົກປ້ອງຄຸ້ມຄອງການເຮັດຊີຣິກ ແລະ ຕໍ່ສູ້ຕ້ານກັບຊາວມຸດສະລິມແທນທີ່ຈະເປັນຊົນເຜົ່າກຸເຣຊ ດ້ວຍເຫດນີ້, ພາຍຫຼັງຍຶດເອົາເມືອງມັກກະຫ໌ ໄດ້ແລ້ວ, ກອງກຳລັງຊາວມຸດສະລິມຈຶ່ງໄດ້ມຸ່ງໜ້າໄປປາບປາມ ແລະ ໄດ້ສູ້ຮົບໃນການສູ້ຮົບໃນເສິກທີ່ "ຮຸໄນນ໌"

---

1. ເບິ່ງຈາກຊໍຮີຫ໌ ອັລ-ບຸກຄໍຣີ: ບົດທີ່ວ່າດ້ວຍເລື່ອງສົງຄາມ/ພາກພິຊິດມັກກະຫ໌ ຫະດິຊທີ່ 4302 ໃນ ໜັງສື ອັລຟັຕຮູ ອັຣຣ໊ອບບານີ ເລັ່ມ 8 ຫນ້າ 22

2.ຊີເຣາະຫ໌ ອິບນີ ຮິຊາມ: ຕາຣິດ ຄໍລີຟະຫ໌ ອິບນີ ຄ໊ອຍຍາດ ໜ້າ 88 ກໍ່ບາກ໊ອດ ອິບນີ ຊະຫ໌ດີ ເລັ່ມ 2 ໜ້າ 154-155 ແລະ ເບິ່ງ ອັລອຸມະຣີ ອັຊຊີເຣາະຫ໌ ອັນນະບະວີຍະຫ໌ ອັຊຊໍຮີ້ຫະຫ໌ ເລັ່ມ 2 ໜ້າ 496

ໃນການປະທະກັນຄັ້ງທຳອິດ, ພວກຮະວາຊິນມີທະຫານ 20,000 ຄົນ, ເຂົາເຈົ້າຈຶ່ງມີກຳລັງໄດ້ປຽບໃນການສູ້ຮົບ ແຕ່ການຕໍ່ສູ້ຮົບໃນຄັ້ງທີສອງຝ່າຍມຸສລິມໄດ້ຮັບໄຊຊະນະ ເຮັດໃຫ້ເຜົ່າຊາກີຟ ແລະ ເຜົ່າອື່ນໆ ເຊັ່ນເຜົ່າຮະວາຊິນ ໄດ້ຮັບຄວາມພ່າຍແພ້ໄປນຳ ຊາວມຸດສະລິມຈຶ່ງໄດ້ຊັບສະເລີຍຢ່າງຫລວງຫຼາຍຈາກການສູ້ຮົບຄັ້ງນີ້

ການພ່າຍແພ້ຂອງຊົນເຜົ່າຊາກີຟ ໃນການຕີເສິກ "ຮຸໄນນ໌" ຖືວ່າຍັງບໍ່ທັນສິ້ນສຸດລົງ, ທ່ານສາດສະດາ ﷺ ໄດ້ມຸ່ງໜ້າໄປຍັງ "ຕໍອິຟ" ແລະ ໄດ້ໃຊ້ເວລາປິດລ້ອມພວກເຂົາໄວ້ເປັນໄລຍະໜຶ່ງ ຕໍ່ມາທ່ານໄດ້ເດີນທາງກັບເມືອງມະດີນະຫ໌ ເມື່ອຊົນເຜົ່າຊາກີຟ ໄດ້ເຫັນວ່າປະຊາຊົນອ້ອມຂ້າງທັງຫມົດໄດ້ປ່ຽນໃຈເຫລື້ອມໃສມາເຂົ້າຮັບອິສລາມ ພວກເຂົາເຈົ້າຈຶ່ງໄດ້ປ່ຽນໃຈມາເຫລື້ອມໃສເປັນອິດສະລາມຄືກັບຄົນອື່ນໆ ພວກເຂົາໄດ້ເດີນທາງມາເມືອງມາດີນະຫ໌ ໃນປີທີ 9 ຂອງຮິຈຈະເຣາະຫ໌ ສັກກະຣາດ ເພື່ອປະກາດການຮັບອິສລາມ[1]

1.ສົງຄາມ "ອັລ-ຮຸໄນນູ" ແລະ ການປິດລ້ອມເມືອງຕໍອິຟໄວ້ ເບິ່ງໃນ ອັລບຸຄໍຣີ ອັລມະກໍຊີ ບົດດຳລັດຂອງອັລລໍຫ໌ (ຊບ) ທີ່ວ່າ (( وَيَوْمَ حُنَيْنٍ إِذْ أَعْجَبَتْكُمْ كَثْرَتُكُمْ )) "ແລະ ໃນວັນແຫ່ງສົງຄາມ "ຮຸໄນນູ" ດ້ວຍຂະນະທີ່ການມີຈຳນວນຫຼາຍຂອງພວກເຈົ້າເຮັດໃຫ້ພວກເຈົ້າສະລ່າໃຈ" ໜ້າ 54 ແລະ ບົດສົງຄາມ ອັດຕໍອິຟ ໜ້າ 56 ຊີເຣາະຫ໌ ອິບນຸ ຮິຊາມ ເລັ່ມ 4 ໜ້າ 65,127

## 12. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກອະຫ໌ລິລກິຕາບ (ຊາວຄຳພີ)

### 12.1 ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກຢິວທີ່ຜິດຄຳສັນຍາ

ຊາວຢິວ (ຍະຮູດ) ເປັນຜູ້ສົມຄວນທີ່ສຸດທີ່ຈະປະຕິບັດຕາມທ່ານສາດສະດາມູຮຳໝັດ ﷺ ໃນຂະນະທີ່ທ່ານໄດ້ຮັບການແຕ່ງຕັ້ງໃຫ້ເປັນສາສະນະທູດ ເພາະເຂົາເຈົ້າຮູ້ວ່າການປະກົດຕົວຂອງສາດສະດາຜູ້ສຸດທ້າຍຕາມພຣະຄຳພີຂອງຊາວຢິວໃກ້ເຂົ້າມາແລ້ວ ເຊິ່ງພວກເຂົາເຈົ້າຮູ້ຈັກຄຸນລັກສະນະຂອງທ່ານຣໍຊູລ ﷺ ເປັນຢ່າງດີແຕ່ເມື່ອປາກົດວ່າຣໍຊູລ ﷺ ບໍ່ແມ່ນບຸກຄົນທີ່ມາຈາກຊາວຢິວ ດັ່ງນັ້ນພວກເຂົາເຈົ້າຈຶ່ງປະຕິເສດບໍ່ຍອມຮັບສາສະໜາຂອງມຸຮຳໝັດ ﷺ ແລະ ປິດບັງຄວາມຈິງທີ່ຮູ້ມາ ເພາະຄວາມອິດສາທີ່ເກີດຂຶ້ນ ບໍ່ພຽງແຕ່ພວກເຂົາປິດບັງຄວາມຈິງເທົ່ານັ້ນ ພວກເຂົາຍັງຂັດຂວາງປະເດັນຂໍ້ເທັດຈິງ ຂະນະທີ່ພວກກູເຣຊ ຖາມຜູ້ນຳຊາວຢິວບາງຄົນກ່ຽວກັບຄວາມສຳພັນຂອງເຂົາເຈົ້າກັບສາດສະດາມຸຮຳໝັດ ﷺ ລາວຕອບວ່າ:

**"ພວກທ່ານດີກວ່າ ແລະ ຢູ່ໃນເສັ້ນທາງທີ່ຖືກຕ້ອງກວ່າມຸຮຳມັດ ຊັລລັລລໍ ຮຸອະໄລຮີຊັລລັມ."**

ອັລລໍຫ໌ ຊຸບຮານະ ຮູວະຕະ ອາລາ ﷻ: ຈຶ່ງໄດ້ປະທານອາຍະຫ໌ນີ້ລົງມາວ່າ:

**"ເຈົ້າ (ມຸຮຳໝັດ) ບໍ່ໄດ້ເຫັນບັນດາຜູ້ທີ່ໄດ້ຮັບສ່ວນໜຶ່ງຈາກຄຳພີຫວ່າ? ໂດຍທີ່ພວກເຂົາສັດທາຕໍ່ "ອັລຈິບຕີ" (ຈະເວັດ) ແລະ ອັດ-ຕໍ່ກູ່ຕ" (ໄຊຕອນ ຫຼື ທຸກສິ່ງທີ່ຖືກເຄົາລົບກາບໄຫວ້ອື່ນຈາກອັລລໍຫ໌) ແລະ ກ່າວກັບພວກທີ່ບໍ່ເຊື່ອວ່າ, ພວກເຂົາເຫຼົ່ານີ້ແຫລະ ແມ່ນຜູ້ທີ່ຢູ່ໃນແນວທາງທີ່ທ່ຽງທຳກວ່າບັນດາຜູ້ທີ່ສັດທາທັ້ງຫຼາຍ** (ອັນນິຊາ 4:51)

ພວກເຂົາໄດ້ສົ່ງຄຳຖາມໄປຫາພວກກູເຣຊເພື່ອຖາມທ່ານສາດສະດາມຸຮຳໝັດ ﷺ ເພື່ອສ້າງຄວາມອັບອາຍໃຫ້ກັບທ່ານສາດສະດາມຸຮຳໝັດ[1]ແລະ ເມື່ອທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ເດີນທາງມາຮອດເມືອງມາດີນະຫ໌ ທ່ານໄດ້ສະແດງຄວາມເມດຕາ ແລະ ຄວາມອ່ອນໂຍນ ສະແດງຄວາມເຫັນອົກເຫັນໃຈຢ່າງເປີດເຜີຍຕໍ່ຊາວຢູດາ (ຢິວ) ແລະ ປະຕິບັດຕໍ່ພວກເຂົາເປັນຢ່າງດີ ແລະ ເປີດກວ້າງເພື່ອສ້າງຄວາມສຳພັນທີ່ເຂັ້ມແຂງ ເພື່ອໃຫ້ທັງສອງຝ່າຍບັນລຸຜົນສຳເລັດ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ລົງນາມໃນສົນທິສັນຍາສັນຕິພາບກັບຊາວຢິວ ພວກຢິວໄດ້ລົງນາມໃນສັນຍາກໍ່ເພື່ອຄວາມຢູ່ລອດໃນສະຖານະການໃນປະຈຸບັນແຕ່ພາຍໃນຫົວໃຈນັ້ນພວກເຂົາເຈົ້າລໍຖ້າໂອກາດ ແລະ ຊອກຫາວິທີທີ່ຈະກຳຈັດຊາວມຸດສະລິມອອກຈາກເມືອງມາດີນະຫ໌. ພວກຢິວໄດ້ສະແດງຄວາມອິດສາຂອງເຂົາເຈົ້າຕໍ່ອິດສະລາມ ແລະ ບັນດາຊາວມຸດສະລິມ

---

1.ຊຸນັນ ອັດຕິຣມີຊີ ເລັ່ມ 4 ໜ້າ 366 ຣະດີຊທີ່ 5148

ດ້ວຍວິທີຕ່າງໆເຊັ່ນ: ການດູຖູກ, ເຍາະເຍີ້ຍ, ສ້າງຄວາມບໍ່ຊັດເຈນ ແລະ ຄວາມສົງໃສໃຫ້ເກີດຂຶ້ນ ພະຍາຍາມຟື້ນຟູຄວາມເປັນຝັກຝ່າຍລະຫວ່າງຊາວອາຣັບທີ່ເມືອງມາດີນະຫ໌ຂຶ້ນມາໃຫມ່ ແລະ ຊຸກຍູ້ຂະບວນການຕີສອງໜ້າ (ຫນ້າໄຫວ້ຫຼັງລອກ ມຸນາຟິກ), ໂດຍມີບາງຄົນຫັນມາເປັນອິດສະລາມເພື່ອຕົວະ ແລະ ຫລອກລວງ ແລ້ວອອກມາຈາກອິສລາມ ເພື່ອສ້າງຄວາມສົງໃສໃຫ້ແກ່ປະຊາຊົນກ່ຽວກັບສາດສະຫນາຂອງອັລລໍຫ໌ ຊຸບຮານະ ຮູວະຕາອ່າລາ

ດັ່ງທີ່ພຣະອົງອັລລໍຫ໌ ຊຸບຮານະ ຮູວະຕາອ່າລາ ໄດ້ກ່າວກ່ຽວກັບພວກເຂົາໄວ້ວ່າ:

**"ແລະ ກຸ່ມໜຶ່ງຈາກບັນດາຜູ້ທີ່ໄດ້ຮັບພຣະຄຳພີໄດ້ກ່າວວ່າ: ທ່ານທັງຫຼາຍຈົ່ງເຊື່ອໃນສິ່ງທີ່ຖືກປະທານລົງມາແກ່ບັນດາຜູ້ສັດທາໃນຕອນເລີ່ມຕົ້ນຂອງຕອນເເຈ້ງ (ຕອນເຊົ້າ), ແລະ ຈົ່ງປະຕິເສດບໍ່ເຊື່ອໃນຕອນສຸດທ້າຍຂອງມັນ (ຕອນແລງ), ເພື່ອເຂົາເຈົ້າຈະໄດ້ກັບໃຈ,**

(ອະລາອິມຣອນ ບົດທີ່ 3 : 72)

ແຕ່ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ ຍັງຄົງສັດຊື່ຕໍ່ພັນທະສັນຍາທີ່ໄດ້ເຮັດກັບຊາວຢູດາ ຈົນກວ່າມັນຖືກລະເມີດ ມັນໄດ້ກາຍເປັນການປະເຊີນຫນ້າຢ່າງໂຈ່ງແຈ້ງ ແລະ ໃນທີ່ສຸດຊາວຢິວໄດ້ລະເມີດພັນທະສັນຍາຂອງເຂົາເຈົ້າ ແລະ ທ່າທີຂອງທ່ານຣໍຊູລ ລຸລລໍຫ໌ ﷺ ທີ່ມີຕໍ່ສາມກຸ່ມຂອງພວກຍະຮູດ ທີ່ໄດ້ຝ່າຝືນພັນທະສັນຍາ

## 12.2 ເຜົ່າໜຶ່ງຈາກພວກຢິວ ກອຍນຸກໍ່ອ

ໄຊຊະນະຂອງຊາວມຸດສະລິມໃນສົງຄາມບະດັຣ ໄດ້ສ້າງຄວາມເຈັບປວດໃນຫົວໃຈຂອງພວກຍະຮູດ ທີ່ຕ້ອງການໃຫ້ຊາວມຸດສະລິມໄດ້ຮັບການທຳລາຍຫາຍະນະ ຍະຮູດ ບະນີກ໋ອຍນຸກໍ່ໄດ້ ເປີດເຜີຍຄວາມອິດສາ ຄວາມກຽດຊັງຢູ່ໃນຫົວໃຈຂອງພວກເຂົາອອກມາຢ່າງຊັດເຈນ ຫຼັງຈາກສົງຄາມບະດັຣໄດ້ຜ່ານໄປ ດ້ວຍເຫດນີ້, ທ່ານຣໍຊູລ ລຸລລໍຫ໌ ﷺ ເພິ່ນຈຶ່ງເອີ້ນພວກເຂົາມາເຕົ້າໂຮມກັນທີ່ຕະຫຼາດ (ຊຶ່ງເປັນສູນກາງແຫ່ງການເຕົ້າໂຮມກັນ) ແລະ ທ່ານໄດ້ເວົ້າວ່າ:

يَامَعْشَرَ يَهُوْد اِحْذَرُوْا مِنَ اللهِ مثل ما نـزل بِقُرَيْشٍ مِنَ النِّقْمَةِ ، وَأَسْلِمُوا فإِنَّكُمْ قَدْ عَرَفْتُمْ أَنِّي نَبِيٌّ مُرْسَلٌ : تَجِدُوْنَ ذَلِكَ فِي كِتَابِكُمْ وَعَهْدِ اللهِ إِلَيْكُمْ :

قَالُوْا يَا مُحَمَّدُ إِنَّكَ تَرَى أَنَّا قَوْمكَ لاَ يَغُرَّنَّكَ أَنَّكَ لَقِيْتَ قَوْمًا لاَ عِلْمَ لَـهُمْ بِالْحَرْبِ فَأَصَبْتَ مِنْهُمْ فُرْصَةً ، وَإِنَّا وَاللهِ لَئِنْ حَارَبْنَاكَ لَتَعْلَمَنَّ أَنَّا نَحْنُ النَّاس

*ໂອ້ ຊາວຢິວທັງຫຼາຍ! ລະວັງການລົງໂທດຈາກອັລລໍຫ໌ ﷻ ມັນຄ້າຍຄືກັບການລົງໂທດທີ່ຖືກກະທຳຕໍ່ພວກກຸເຣຊ ຈົ່ງເຂົ້າຮັບອິດສະລາມເຖີດ ເພາະພວກເຈົ້າຮູ້ຢູ່ແລ້ວວ່າ ແທ້ຈິງ ເຮົາຄືສາດສະດາທີ່ຖືກສົ່ງມາພວກເຈົ້າຮູ້ວ່າສິ່ງນີ້ໄດ້ປະກົດຢູ່ໃນພຣະຄຳພີຂອງພວກເຈົ້າແລ້ວ.*

**ພວກຍະຮູດ ເວົ້າວ່າ:**

*ໂອ້ ມູຮຳໝັດເອີ່ຍ! ທ່ານກໍ່ຮູ້ວ່າພວກເຮົາເປັນພວກພ້ອງຂອງທ່ານ ທ່ານຢ່າໄດ້ຫລອກລວງຕົນເອງເລີຍ ທ່ານໄດ້ພົບກັບຄົນທີ່ບໍ່ມີຄວາມຮູ້ກ່ຽວກັບສົງຄາມ ທ່ານຈຶ່ງປະສົບກັບໄຊຊະນະຈາກເຂົາເຈົ້າ ພວກເຮົາຂໍສາບານອັລລໍຫ໌ ﷻ ວ່າຖ້າຫາກວ່າພວກເຮົາເຮັດສົງຄາມກັບທ່ານ, ທ່ານກໍ່ຈະໄດ້ຮູ້ວ່າເຮົານັ້ນເປັນມະນຸດພັນແທ້ [1]*

ນີ້ແມ່ນຄຳຂົ່ມຂູ່ຂອງຊາວຢິວຕໍ່ທ່ານຣໍຊູລລຸລລໍຫ໌ ﷺ ແຕ່ທ່ານຍັງມີດຽງບຢູ່ຈົນກວ່າຄົນຢິວຄົນໜຶ່ງໄດ້ເຮັດຜິດຕໍ່ຜູ້ຍິງທີ່ສັດທາຄົນໜຶ່ງ ໃນຂະນະທີ່ນາງໄປໃນຕະຫຼາດຂອງຊາວຢິວ. ນາງໄດ້ນັ່ງລົງຢູ່ທີ່ຊ່າງເຮັດທອງຄຳ ພວກເຂົາເຈົ້າຕ້ອງການໃຫ້ນາງຖອດຜ້າຄຸມອອກ ນາງໄດ້ປະຕິເສດທີ່ຈະເປີດເຜີຍໃບໜ້າຂອງນາງ ຊາຍຢິວທີ່ເປັນຊ່າງທອງໄດ້ໃຊ້ກົນອຸບາຍອັນຊົ່ວຊ້າ ໂດຍມັດເສື້ອຜ້າຂອງນາງມັດໄວ້ເທິ່ງຫຼັງຂອງນາງ ເມື່ອນາງຢືນຂຶ້ນ ເອົາຣັຕ (ສິ່ງທີ່ຄວນສະຫງວນ ແລະ ປິດບັງ) ຂອງນາງຕ້ອງເປີດເຜີຍອອກມາໃຫ້ເຫັນ. ແລ້ວຊາວຢູດາ ກໍພາກັນຫົວຂວັນມັກຖືກໃຈ ນາງຈຶ່ງຮ້ອງຂຶ້ນ ທັນໃດນັ້ນຊາວມຸດສະລິມຄົນໜຶ່ງໄດ້ໂດດເຂົ້າໄປຂ້າຄົນຢິວຄົນນັ້ນ ຫຼັງຈາກນັ້ນ, ຊາວຢິວຈຶ່ງໄດ້ເຂົ້າມາໂຈມຕີ ແລະ ຂ້າຊາວມຸດສະລິມນັ້ນຈົນລາວເສຍຊີວິດ, ຫຼັງຈາກນັ້ນ, ຄວາມຊົ່ວຮ້າຍກໍ່ເກີດຂຶ້ນລະຫວ່າງຊາວມຸດສະລິມ ແລະຊາວຢິວ[2]

## 12.3 ບະນີ "ກອຍນຸກໍ່" ຖອນຕົວອອກໄປ

ເຫດການຂອງທີ່ເກີດຈາກຍະຮູດ ບະນີ "ກອຍນຸກໍ່" ແມ່ນການລະເມີດພັນທະສັນຍາຂອງພວກເຂົາທີ່ມີຕໍ່ກັນ ແລະ ກັນ, ດັ່ງນັ້ນທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ນຳພາຊໍຮາບະຫ໌ໄປເພື່ອປິດລ້ອມພວກເຂົາ ແລະ ເຮັດສົງຄາມເປັນເວລາ 15 ຄືນ, ໃນທີ່ສຸດພວກຢິວໄດ້ຈຶ່ງຍອມຈຳນົນ. ແລະ ຕົກຢູ່ພາຍໃຕ້ການປົກຄອງຂອງທ່ານສາດສະດາ ໃນເຫດການຄັ້ງນີ້, **ອັບດຸລລໍຫ໌ ອິບນຸ ອຸໄບ ອິບນຸ ຊະລູລ**, ພວກທີ່ຕີສອງໜ້າຂອງຍະຮູ, ໄດ້ມາຂໍຮ້ອງໃຫ້ປ່ອຍຊາວຢິວໄປ, ທ່ານຣໍຊູລລຸລລໍຫ໌ຈຶ່ງໄດ້ກ່າວວ່າ: (هم لك) ພວກເຂົາ**ເປັນກຳມະສິດຂອງເຈົ້າ.**

---

1.ຊີເຣາະຫ໌ ອິບນີ ຮິຊາມ ເລັ້ມ 2 ໜ້າ 426

2.ຊີເຣາະຫ໌ ອິບນີ ຮິຊາມ ໜ້າ 2427

ຫຼັງຈາກນັ້ນ, ລາວ (ອັບດຸລລໍຫ໌) ຈຶ່ງໃຫ້ພວກຍະຮູດ ບະນີ "ກອຍນຸກໍ່" ອອກຈາກເມືອງມາດີນະຫ໌ໄປອາໄສຢູ່ໃນປະເທດຊາມ (ຊີເຣຍ)[1] ຈາກພຶດຕິກຳຂອງ ອັບດຸລລໍຫ໌ ອິບນຸ ອຸໄບ ອິບນຸ ຊະລູລ ພຣະອົງອັລລໍຫ໌ ﷻ ໄດ້ປະທານອາຍະຫ໌ໃນພຣະຄຳພີຕໍ່ໄປນີ້:

*ໂອ້ ບັນດາຜູ້ສັດທາ! ຈົ່ງຢ່າໄດ້ຍຶດເອົາຊາວຢິວແລະຄລິດສະຕຽນເປັນເພື່ອນມິດ, (ເພາະ) ບາງສ່ວນຂອງພວກເຂົານັ້ນຄື ມິດຂອງອີກບາງສ່ວນ ແລະ ຜູ້ໃດໃນພວກທ່ານເອົາພວກເຂົາໄປເປັນເພື່ອນມິດແລ້ວ, ແນ່ນອນວ່າຜູ້ນັ້ນກໍເປັນຜູ້ໜຶ່ງໃນພວກເຂົາ ອັລລໍຫ໌ນັ້ນ ບໍ່ຊົງແນະນຳກຸ່ມຊົນທີ່ກໍ່ອະທຳ.*

*ແລ້ວເຈົ້າຈະໄດ້ເຫັນບັນດາຜູ້ທີ່ໃນໃຈຂອງເຂົາເຈັບປ່ວຍມີໂລກ (ກັບກອກຕີສອງໜ້າ) ຕ່າງຟ້າວພາກັນແລ່ນໄປຢູ່ທ່າມກາງພວກເຂົາ ໂດຍເວົ້າວ່າ ພວກເຂົາຢ້ານວ່າຈະເກີດຄວາມເສຍຫາຍປະສົບກັບພວກເຮົາ. ຫວັງວ່າອັລລໍຫ໌ ຈະຊົງນຳເຊິ່ງໄຊຊະນະ ຫຼື ກໍ່ບໍ່ນຳເອົາຄຳສັ່ງບາງຢ່າງໃດຢ່າງໜຶ່ງຈາກພຣະອົງມາ. ແລ້ວ (ໃນທີ່ສຸດ) ພວກເຂົາເຈົ້າກໍ່ກາຍເປັນຜູ້ຮູ້ສຶກເສຍໃຈກັບສິ່ງທີ່ພວກເຂົາເຈົ້າໄດ້ປິດບັງໄວ້ໃນໃຈຂອງພວກເຂົາ.* (ສູເຣາະຫ໌ ອັລ-ມາອິດະຫ໌ 51-52)

## 12.4 ບະນີ "ອັນນະຕີ້ຣ" ລະເມີດຂໍ້ສັນຍາ

ຫຼັງຈາກສົງຄາມບະດັຣ, ພວກຍະຮູດ **ບະນີ "ອັນນະດີຣ"** ໄດ້ສະແດງໃຫ້ເຫັນຢ່າງເປີດເຜີຍອາການຂອງຄວາມອິດສາ ແລະ ຄວາມກຽດຊັງຕໍ່ຊາວມຸດສະລິມ, ໂດຍສະເພາະ **ກະ ບິບນິລ ອັຊຣອຟ** ຫຼັງຈາກສູ້ຮົບບະດັຣ ລາວໄດ້ເດີນທາງໄປມັກກະ ເພື່ອສະແດງຄວາມເສົ້າສະຫລົດໃຈ ແລະ ເປັນຂວັນກຳລັງໃຈແກ່ປະຊາຊົນຊາວກຸເຣຊ ຜູ້ທີ່ໄດ້ພົບກັບຄວາມໂຊກຮ້າຍໃນສົງຄາມ, *ກະ ບິບນິລ ອັຊຣອຟ* ໄດ້ເວົ້າກອນລຳຂໍ້ໜຶ່ງໃຫ້ແກ່ພວກກຸເຣຊທີ່ເສຍຊີວິດ ແລະ ກໍ່ຍຸຍົງໃຫ້ເຮັດສົງຄາມກັບຊາວມຸດສະລິມອີກເທື່ອດ້ວຍເຫດນີ້, ທ່ານຣໍຊູລ ລຸລລໍຫ໌ ﷺ ເພິ່ນຈຶ່ງສັ່ງໃຫ້ສັງຫານລາວເສຍ ທ່ານກ່າວວ່າ

(مَن للكعب بن الأشرف فإنه قد آذى الله ورسوله صلى الله عليه وسلم)

***ໃຜຈະເປັນຄົນຈັດການຕໍ່ ກະ ບິບນິລ ອັຊຣອຟ ຍ້ອນວ່າລາວໄດ້ກະທຳຮ້າຍຕໍ່ອັລລໍຫ໌ ﷻ ແລະ ຣໍຊູລ ຂອງພຣະອົງ?***

---

1.ອ້າງແລ້ວ ໃນອັລມັຊດັຣ ອັຊຊາບີກ ໜ້າ 427-428 ກໍ່ບະກອດ ອິບນີ ຊະອ໌ ເລັ່ມ 2 ໜ້າ 92

ເພື່ອປະຕິບັດໄປຕາມຄຳສັ່ງ ບັນດາສະຫາຍຊໍຮາບະຫ໌ຈຶ່ງໄດ້ປະຕິບັດຕາມຄຳສັ່ງ[1] ແຕ່ການກະທຳຂອງ *ກູະ ບິບນິລ ອັຊຣອຟ* ເປັນການກະທຳສ່ວນຕົວ, ດັ່ງນັ້ນ ທ່ານຣໍຊູລ ﷺ ຈຶ່ງບໍ່ໄດ້ລົງໂທດເຜົ່າ "ບະນີນະດີ້ຣ" ທັງໝົດ ການຕາຍຂອງ *ກູະ ບິບນິລ ອັຊຣອຟ* ສົ່ງຜົນເຮັດໃຫ້ຊາວຢິວຢ້ານກົວຕໍ່ທ່ານຣໍຊູລ ລຸລລໍຫ໌ ﷺ ຈຶ່ງໄດ້ເຮັດຂໍ້ຕົກລົງກັນໃໝ່ ໂດຍເນັ້ນຫນັກເຖິງການປະຕິບັດຕາມຂໍ້ຕົກລົງທີ່ຜ່ານມາທີ່ໄດ້ເຮັດໃນເມືອງມາດີນະຫ໌, ແຕ່ພວກບະນີ ນະດີ້ຣ ຍັງມີຄວາມອິດສາ ແລະ ຄວາມຄຽດແຄ້ນຕໍ່ທ່ານສາດສະດາ. ພວກເຂົາຈຶ່ງໄດ້ຜິດສັນຍາທີ່ໄດ້ຕົກລົງໄວ້ ແລະ ເຮັດການຕິດຕໍ່ລັບໆກັບ ພວກກຸເຣຊ ເພື່ອສະໜັບສະໜູນໃຫ້ການຄັດຄ້ານແຂງຂໍ່ຕໍ່ຊາວມຸດສະລິມ ແລະ ຍັງໄດ້ສົ່ງສັນຍານໃຫ້ພວກກຸເຣຊ ຮູ້ກ່ຽວກັບຈຸດອ່ອນຂອງຊາວມຸດສະລິມ ແລະ ໄດ້ສະເຫນີໃຫ້ການຊ່ວຍເຫຼືອພວກກຸເຣຊອີກດ້ວຍ[2]

ພວກບະນີ "ນະດີ້ຣ" ພະຍາຍາມລອບສັງຫານທ່ານຣໍຊູລລໍຫ໌ ﷺ ໃນຂະນະທີ່ເດີນທາງໄປເພື່ອເຈລະຈາການຈ່າຍຄ່າຊົດເຊີຍ (ດີຍະຫ໌) ໃຫ້ແກ່ຍາດພີ່ນ້ອງຂອງຜູ້ທີ່ຖືກຂ້າຕາຍໂດຍຊໍຮາບະຫ໌ຜູ້ຫນຶ່ງ ທີ່ບໍ່ມີຄວາມຕັ້ງໃຈໃນການຂ້າ ພວກເຂົາເຈົ້າໄດ້ຮ່ວມມືເພື່ອເປັນໄປຕາມຂໍ້ຕົກລົງທີ່ເຂົາເຈົ້າໄດ້ເຮັດຮ່ວມກັນ ບະນີ "ນະດີ້ຣ" ຂໍໃຫ້ທ່ານນະບີ ﷺ ນັ່ງລໍຖ້າຢູ່ຂ້າງກຳແພງເຮືອນ ແລ້ວໄດ້ເຂົ້າໄປວາງແຜນທີ່ຈະລອບສັງຫານທ່ານ ໂດຍໃຊ້ໂອກາດໃນຂະນະທີ່ທ່ານຣໍຊູລ ﷺ ກຳລັງເຮັດຂໍ້ຕົກລົງ ໂດຍໃຫ້ຄົນໜຶ່ງເອົາກ້ອນຫີນໃຫຍ່ມາໂຍນລົງມາເພື່ອຂ້າທ່ານ ແຕ່ອັລລໍຫ໌ ﷻ ໄດ້ສົ່ງວະຫ໌ຍີ (ການດົນໃຈ) ໃຫ້ກັບທ່ານຣໍຊູລ ﷺ ໄດ້ຮັບຮູ້ແຜນການຊົ່ວຮ້າຍນັ້ນ ທ່ານຈຶ່ງຟ້າວລຸກຂຶ້ນ ແລະ ເດີນທາງກັບໄປເມືອງມາດີນະຫ໌ ແລ້ວສັ່ງໃຫ້ຊໍຮາບະຫ໌ (ຣໍດີຍັລລໍຮຸ ອັນຮູມ) ອອກເດີນທາງເພື່ອໄປເຮັດສົງຄາມກັບພວກບະນີ "ນະດີ້ຣ"

ຊາວມຸດສະລິມໄດ້ໄປປິດລ້ອມເຜົ່າບະນີ "ນະດີ້ຣ" ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ສັ່ງໃຫ້ເຂົາເຈົ້າມາເຮັດສັນຍາໃໝ່ ແຕ່ເຂົາເຈົ້າບໍ່ຍອມເຮັດຕາມ ທ່ານຣໍຊູລ ﷺ ຈຶ່ງໄດ້ເຮັດສົງຄາມ ຈົນສຸດທ້າຍພວກເຂົາກໍ່ຍອມຈຳນົນ ທ່ານຣໍຊູລ ﷺ ໄດ້ສັ່ງໃຫ້ພວກເຂົາຖອນຕົວອອກໄປຈາກເມືອງມາດີນະຫ໌ ໂດຍເຂົາເຈົ້າມີສິດທີ່ຈະນຳເອົາສຳພາລະຕິດຕົວໄປໄດ້ເທົ່າທີ່ອູດຈະບັນທຸກໄດ້ ພວກເຂົາເຈົ້າຈຶ່ງໄດ້ບັນທຸກສຳພາລະຕ່າງໆຫຼາຍເທົ່າທີ່ຈະສາມາດເອົາມັນຂຶ້ນຢູ່ເທິງຫຼັງອູດ ແລະ ທຳລາຍສິ່ງຂອງອື່ນໆ ທີ່ມີຢູ່ໃນເຮືອນ ເພື່ອບໍ່ໃຫ້ຊາວມຸດສະລິມເອົາມັນມານຳໃຊ້ເປັນປະໂຫຍດໄດ້ອີກ ບາງຄົນໃນພວກບະນີ "ນະດີ້ຣ" ບາງຄົນໄປຕັ້ງຮາກຖານຢູ່ເມືອງຄອຍບັຣ ບາງຄົນໄປອາໄສຢູ່ເມືອງຊາມ ເຫດການຄັ້ງນັ້ນເກີດຂຶ້ນໃນປີທີ 4 ຂອງຮິຈເຣາະຫ໌ ສັກກະຣາດ[3] ເລື່ອງຂອງບະນີ "ອັນນະດີ້ຣ" ອັລລໍຫ໌ ﷻໄດ້ປະທານສູເຣາະຫ໌ ອັລ-ຮັຊຣີ ລົງມາ

---

1.ຊໍຣີຫ໌ ອັລບຸກຄໍຣີ ບົດທີ່ວ່າດ້ວຍ ສົງຄາມຕ່າງໆ ພາກການ ສັງຫານ ກະບ໌ ບິບນີ ອັຊຣອຟ ໜ້າ 15

2.ມະດີ ຣໍ່ຊະກັລລໍຫ໌ ອັຊຊີເຣາະຫ໌ ອັນນະບະວີຍະຫ໌ ໜ້າ 418

## 12.5 ຍະຮູດ ບະນີ "ກູຣອຍເຊາະຫ໌" ລະເມີດຜິດສັນຍາ

ການລະເມີດສັນຍາຂອງ **ບະນີ "ກູຣອຍເຊາະຫ໌"** ເກີດຂຶ້ນໃນຊ່ວງທີ່ມີພາວະຄັບຂັນ ຊາວມຸດສະລິມກຳລັງກະກຽມເພື່ອສະກັດກັ້ນ ແລະ ຂັດຂວາງພວກມຸຊຣິກີນທີ່ກຳລັງປິດລ້ອມເມືອງມາດີນະຫ໌ ເຊິ່ງມີກຳລັງທະຫານ 10,000 ຄົນ ການລະເມີດສົນທິສັນຍາແມ່ນເກີດມາຈາກການປຸກປັ່ນຂອງຍະຮູດ ບະນີ "ນະດີ້ຣ" ຫຼັງຈາກຖືກຂັບໄລ່ອອກຈາກໃຫ້ອອກຈາກເມືອງມາດີນະຫ໌ ໄດ້ມີການຕິດຕໍ່ລະຫວ່າງຜູ້ນຳຂອງ ບະນີ "ນະດີ້ຣ" ຄື ຍະຫ໌ຍາ ອິບນຸ ອັຄຕອບ ກັບ ກະອ໌ ອິບນຸ ອະຊັດ ແລະ ຜູ້ນຳຂອງ ບະນີ "ກູຣອຍເຊາະຫ໌" ຜູ້ນຳຂອງບະນີ "ນະດີ້ຣ" ໄດ້ຍຸຍົງຜູ້ນຳຂອງ ບະນີ "ກຸຣອຍເຊາະຫ໌" ຈົນຄ້ອຍຕາມ ແລະ ເຫັນດີຕົກລົງທີ່ຈະລະເມີດສັນຍາ ຈຶ່ງເຕັມໃຈທີ່ຈະເຂົ້າຮ່ວມສົງຄາມຕໍ່ຕ້ານ ແລະ ທຳລາຍຊາວມຸດສະລິມ. ເມື່ອຊາວມຸດສະລິມໄດ້ຮູ້ເຖິງແຜນການນັ້ນ, ຊາວມຸສລິມໄດ້ມີຄວາມກັງວົນ ເປັນຫ່ວງ ແລະ ຢ້ານວ່າມັນຈະເປັນອັນຕະລາຍຕໍ່ແມ່ຍິງ ແລະ ເດັກນ້ອຍ ແຕ່ທ່ານຣໍຊູລຸລລໍຫ໌ ໄດ້ມີແຜນການທີ່ຮັດກຸມ ໂດຍໄດ້ກະຈາຍໜ່ວຍລາດຕະເວນອ້ອມຂ້າງ ເມືອງມາດີນະຫ໌ ເພື່ອໃຫ້ເຝົ້າລະວັງຢູ່ໃນເມືອງມາດີນະຫ໌ ເມື່ອອັລລໍຫ໌ ﷻຊົງຈັດການໃນກຸ່ມມຸຊຣິກີນໄດ້ຮັບຄວາມພ່າຍແພ້ ຈຶ່ງມີຄຳສັ່ງຈາກ ອັລລໍຫ໌ ﷻ ມາເຖິງທ່ານນະບີ ﷺ ໃຫ້ມຸ່ງໜ້າອອກໄປຈັດການກັບຊາວຢິວບະນີ "ກຸຣອຍເຊາະຫ໌" ໃນທັນທີ, ທ່ານຣໍຊູລຸລລໍຫ໌ ﷺ ມີຄຳສັ່ງໃຫ້ບັນດາຊໍຮາບະຫ໌ເຄື່ອນກຳລັງໄປພິຊິດຢ່າງວ່ອງໄວຕໍ່ພວກເຂົາ ທ່ານໄດ້ເວົ້າວ່າ:

لاَيُصَلِّيَنَّ أَحَدٌ الْعَصْرَ إِلاَّ فِي بَنِي قُرَيْظَة

**"ໃຜກໍຕາມຫ້າມປະຕິບັດລະຫມາດ ອັສຣີ Salaat al-Asr (ໃນລະຫວ່າງທາງ) ເປັນອັນຂາດ ຈົນກວ່າເຂົາຈະໄປເຖິງ ບະນີ "ກຸຣອຍເຊາະ" ເສຍກ່ອນ**[4]

---

3.ຈາກການຖອນຕົວອອກໄປຈາກເມືອງມະດີນະຫ໌ພວກບະນີ້ "ນະດີ້ຣ" ເບິ່ງໃນຊໍຮີຫ໌ ອັລບຸກໍຣີ ບົດທີ່ວ່າດ້ວຍເລື່ອງການເຮັດສົງຄາມຕ່າງໆ ພາກຫະດິຊບະນີ "ອັນນະດີ້ຣ" ຫະດິຊທີ່ 14 ຊີເຣາະຫ໌ ອິບນີ ຮິຊາມ ເລັ່ມທີ່ 3 ໜ້າ 191 ອັລໄບຮາກີ ດະລາອິລ "ອັລນຸບູວະຫ໌" ເລັ່ມທີ່ 3 ໜ້າ 181-182

4.ຊໍຮີຫ໌ ອັລບຸກໍຣີ ບົດທີ່ວ່າດ້ວຍເລື່ອງ ອັລມະກໍຊີ ພາກທີ່ 30 ສົງຄາມບະນີ້ ກຸຣອຍເຊາະຫ໌

ເມື່ອໄປຮອດ ກອງກຳລັງຊາວມຸດສະລິມໄດ້ກຽມພ້ອມຢູ່ຕໍ່ໜ້າປ້ອມຂອງບະນີ "ກຸຣອຍເຊາະຫ໌ ແລະ ໄດ້ປິດລ້ອມເປັນເວລາ 25 ຄືນ, ຈົນໃນທີ່ສຸດພວກເຂົາຈິ່ງໄດ້ຍອມຈຳນົນ ແລະ ຍອມຢູ່ພາຍໃຕ້ການປົກຄອງຂອງທ່ານຣໍຊູລລູລລໍຫ໌ ﷺ ແລະ ຮ້ອງຂໍໃຫ້ແຕ່ງຕັ້ງ ຊະດ໌ ອິບນູ ມຸອາຊ (ຣດ) ເປັນຜູ້ພິພາກສາຕັດສິນ ເຊິ່ງພວກເຂົາຫວັງວ່າ ຊະດ໌ ອິບນູ ມຸອາຊ ຈະໃຫ້ການຕັດສິນອ່ອນລົງ ຍ້ອນວ່າມີຂໍ້ຕົກລົງລະຫວ່າງຝ່າຍພວກເຂົາກັບຝ່າຍ ຊະດ໌ ອິບນູ ມຸອາຊ, ຄືດັ່ງທີ່ ອັບດຸລລໍຫ໌ ອິບນູ ອຸໄບ ອິບນຸ ຊະລູລ ເຄີຍເຮັດໃຫ້ບະນີ "ກອຍນຸກໍ່" ທ່ານຣໍຊູລລູລລໍຫ໌ ﷺ ໄດ້ຮັບເອົາການສະເໜີ ແລະ ເອີ້ນ ຊະດ໌ ອິບນູ ມຸອາຊ ໃຫ້ເຂົ້າມາພົບ ເມື່ອຊະດ໌ ອິບນູ ມຸອາຊເຂົ້າມາຈິ່ງໄດ້ພິພາກສາຕັດສິນໂທດປະຫານຊີວິດນັກຮົບຍິວ ສ່ວນລູກຫລານກໍໃຫ້ຕົກເປັນສະເລີຍເສິກ ແລະ ຊັບສິນໄດ້ຖືກແບ່ງອອກເປັນສ່ວນໆ, ທ່ານຣໍຊູລລູລລໍຫ໌ ﷺ ກ່າວກັບຊະດ໌ ອິບນູ ມຸອາຊ ວ່າ:

قَضَيْتَ بِحُكْمِ اللهِ

**"ທ່ານໄດ້ຕັດສິນໃຫ້ເປັນໄປຕາມບົດບັນຍັດຂອງອັລລໍຫ໌ ﷻ ແລ້ວ"**[1]

ເພື່ອປະຕິບັດຕາມຄຳຕັດສິນ ເພາະສະນັ້ນ, ຈຶ່ງມີການກັກກັນຊາວຍະຮູດ ແລະ ໄດ້ຂຸດຄັນຄູຂຶ້ນຢູ່ໃນເມືອງມາດີນະຫ໌ ພວກເຂົາໄດ້ຖືກນຳມາເປັນກຸ່ມໆ ແລະມີ 400 ຄົນທີ່ຖືກປະຫານຊີວິດ, ບາງທັດສະນະບອກວ່າມີຫລາຍກວ່ານັ້ນ[2] ແລະ ມີຜູ້ທີ່ປ່ຽນໃຈມາເຫລື້ອມໃສຮັບເປັນອິດສະລາມ[3] ແລະ ຜູ້ທີ່ໄດ້ຮັບການປົກປ້ອງໂດຍຊໍຮາບະຫ໌ ເຊິ່ງພວກເຂົາຈະບໍ່ຖືກປະຫານຊີວິດ[4] ສຳລັບຊັບສິນຂອງບະນີ "ນະດີ້ຣ" ໄດ້ຖືກຈັດສັນປັນສ່ວນໃນບັນດາຊາວມຸດສະລິມ.

## 12.6 ການລົງໂທດ ຍິວ ບະນີ "ກຸຣອຍເຊາະຫ໌"

ການລົງໂທດທີ່ **ບະນີ "ກຸຣອຍເຊາະຫ໌"** ໄດ້ຮັບນັ້ນແມ່ນ ການລົງໂທດທີ່ຮ້າຍແຮງ. ແຕ່ຄວາມຮູ້ສຶກນັ້ນໄດ້ຫາຍໄປ ເມື່ອເບິ່ງມັນດ້ວຍຈິດໃຈທີ່ຍຸດຕິທຳ ແລະ ບໍ່ລຳອຽງ ຈາກສະຖານະການຕ່າງໆທີ່ເກີດຂຶ້ນ;

1.ອ້າງແລ້ວ ອັລມັຊດັຣ ອັສຊາບິກ ໃນບົດ ແລະ ພາກດຽວກັນ

2.ຈາກການລາຍງານຕ່າງໆ ທີ່ລະບຸຈຳນວນຜູ້ຖືກປະຫານຊີວິດ ເບິ່ງໃນໜັງສືຂອງ ອິບນຸ ຮາຈະຣິນ ຟັດຮູລບາຣີ ເລັ່ມ 7 ໜ້າ 414 ເບິ່ງໜັງສືຂອງ ມະຫ໌ດີ ຣໍ່ຊະກັລລໍຣີ ອັສຊີເຣາະຫ໌ ອັນນະບະວີຍະຫ໌ ໜ້າ 461

3.ຊໍຮີ້ຫ໌ ອັລບຸກຄໍຣີ ບົດອັລມະກໍຊີ ພາກຫະດີຊ ບະນີນະດີ້ຣ ເລກທີ່ 14

4.ຊີເຣາະຫ໌ ອິບນຸ ຮີຊາມ ເລັ່ມ 3 ໜ້າ 261 - 263

1. ການລະເມີດສັນຍາຂອງ ບະນີ ກຸຣອຍເຊາະຫ໌ ໄດ້ປະກົດຂຶ້ນຫຼັງຈາກການຮັບຮູ້ການລົງໂທດຕໍ່ກຸ່ມຍະຮູດຕ່າງໆ ກ່ອນທີ່ມັນຈະເກີດຂຶ້ນກັບເຂົາເຈົ້າ ທັງນີ້ຍ້ອນວ່າບະນີ ກອຍນຸກໍ່ ແລະ ບະນີ ນະດີຣໄດ້ຮັບໂທດດ້ວຍເຫດຈາກການລະເມີດສັນຍາຂໍ້ຕົກລົງ ແລະ ເປັນການເຕືອນໃຫ້ລະມັດລະວັງບໍ່ໃຫ້ເຮັດແນວນັ້ນ ແຕ່ພວກເຂົາບໍ່ໄດ້ຮັບຜົນປະໂຫຍດຈາກເຫດການດັ່ງກ່າວບໍ່ໄດ້ນຳມາໃຊ້ເປັນບົດຮຽນ ດັ່ງນັ້ນ ການລົງໂທດຕໍ່ຜູ້ທີ່ໄດ້ຮັບການຕັກເຕືອນຢູ່ເລື້ອຍໆຊ້ຳໆໃຫ້ລະມັດລະວັງ ມັນຕ້ອງໜັກກວ່າຜູ້ທີ່ຖືກເຕືອນພຽງແຕ່ຄັ້ງດຽວ

2. ບະນີ ກຸຣອຍເຊາະຫ໌ ພວກເຂົາເຈົ້າໄດ້ທຳລາຍສັນຍາສອງເທື່ອດ້ວຍກັນ

- **ການກະທຳຜິດຄັ້ງທຳອິດ** ບໍ່ສົນໃຈຂໍ້ຕົກລົງທີ່ເຮັດກັບຊາວມຸດສະລິມ ກ່ຽວກັບການຮ່ວມມືປ້ອງກັນເມືອງມາດີນະຫ໌ ຫາກມີສັດຕູມາບຸກລຸກໂຈມຕີ

- **ການກະທຳຜິດຄັ້ງທີສອງ** ມັນເປັນການກະທຳຜິດທີ່ຮ້າຍແຮງກວ່າຄັ້ງທຳອິດ ເນື່ອງຈາກວ່າບໍ່ພຽງແຕ່ພວກເຂົາບໍ່ຮູ້ ແລະ ປະຕິເສດທີ່ຈະຮ່ວມມືໃນການປົກປ້ອງເມືອງມາດີນະຫ໌ ຍິ່ງໄປກວ່ານັ້ນ, ພວກເຂົາຍັງສະໜັບສະໜູນສັດຕູ ແລະ ຮ່ວມມືໃນການໂຈມຕີຊາວມຸດສະລິມ. ດັ່ງນັ້ນ, ການລົງໂທດຈຶ່ງລວມເອົາການກະທຳຜິດທັງສອງຢ່າງເຂົ້າກັນ ຊຶ່ງເປັນຄວາມຮ້າຍແຮງ ແລະ ເຈັບປວດຫລາຍກວ່າຄົນທີ່ເຮັດຜິດພຽງຂໍ້ດຽວ

3. ການລະເມີດສັນຍາຂອງບະນີ ກຸຣອຍເຊາະຫ໌ ເກີດຂຶ້ນໃນຂະນະທີ່ຊາວມຸດສະລິມຢູ່ໃນສະຖານະການທີ່ຄັບຂັນຍຸ່ງຍາກ ຖ້າຫາກບໍ່ແມ່ນການດູແລເອົາໃຈໃສ່ຂອງອັລລໍຫ໌ ﷻ ແລະ ການຊ່ວຍເຫຼືອຂອງພຣະອົງທີ່ຕໍ່ຜູ້ສັດທາແລ້ວ ເຫດການຮ້າຍແຮງຈະເກີດຂຶ້ນກັບຊາວມຸດສະລິມແນ່ນອນ ສຳລັບເຫດຜົນນີ້ ການລົງໂທດຂອງບະນີ ກຸຣອຍເຊາະຫ໌ ສິ່ງທີ່ເຂົາເຈົ້າໄດ້ຮັບນັ້ນ ແມ່ນເໝາະສົມ ແລະ ສົມຄວນກັບສິ່ງທີ່ເຂົາເຈົ້າໄດ້ວາງແຜນ ແລະ ການລົງໂທດຈຶ່ງເປັນສິ່ງດຽວກັບທີ່ເຂົາເຈົ້າໄດ້ຄິດເອົາໄວ້

4. ເມື່ອ ຊະດ໌ ອິບນູ ມຸອາຊ (ຣດ) ລາວເປັນຜູ້ອອກຄຳຕັດສິນລົງໂທດຕໍ່ ບະນີ ກຸຣອຍເຊາະຫ໌ ທີ່ເຮັດຜິດບໍ່ຖືກຕ້ອງ ຖືວ່າເປັນກົດໝາຍ ແລະ ລະບຽບການຂອງອັລລໍຫ໌ ﷻ ທີ່ກຳໜົດໄວ້, ໂດຍທ່ານສາດສະດາ ﷺ ໄດ້ຢືນຢັນເລື່ອງນີ້ເມື່ອລາວເວົ້າກັບຊະດ໌ ວ່າ:

قَضَيْتَ بِحُكْمِ اللهِ

**“ທ່ານໄດ້ຕັດສິນໃຫ້ເປັນໄປຕາມບົດບັນຍັດຂອງອັລລໍຫ໌ (ຊຸບຮານະຮູ ຕະອາລາ) ແລ້ວ”**

*ແລະ ໃຜສາມາດຈະຕັດສິນຢ່າງຍຸດຕິທຳແລະດີໄປກ່ວາ ອັລລໍຫ໌ (ຊຸບຮານະຮູ ຕະອາລາ) ຊຶ່ງພຣະອົງຮູ້ດີເຖິງຄວາມຕັ້ງໃຈຂອງຊາວຢູດາ ອັລລໍຫ໌ (ຊຸບຮານະຮູ ຕະອາລາ) ຊົງຮູ້ເຖິງຄຳຕັດສິນໂທດ*

*ທີ່ເໝາະສົມກັບອາດຊະຍາກຳທີ່ເຂົາເຈົ້າໄດ້ກໍ່ຂຶ້ນ ແລະ ບໍ່ມີສິດທີ່ຈະຄັດຄ້ານຄຳຕັດສິນຂອງຜູ້ພິພາກສາທີ່ດີທີ່ສຸດ ອັລລໍຫ໌ (ຊຸບຮານະຮູ ຕະອາລາ) ໂດຍການຈັດການຢ່າງເດັດຂາດກັບພວກເຂົາ ຍະຮູດ ບະນີ "ກຸຣອຍເຊາະຫ໌" ບະນີ "ກອຍນຸກໍ່" ແລະ ບະນີ "ນະດີ້ຣ" ໄດ້ອົບພະຍົບອອກໄປ ເຮັດໃຫ້ຊາວມຸດສະລິມທີ່ຢູ່ເມືອງມະດີນະຫ໌ ຮູ້ສຶກສະບາຍໃຈ ໂດຍບໍ່ຈຳເປັນຕ້ອງເຝົ້າລະວັງສັດຕູທີ່ລໍຖ້າໂອກາດເພື່ອທຳການໂຈມຕີຊາວມຸດສະລິມຢູ່ສະເໝີ.*

## 13. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກຍະຮູດ ທີ່ ຄອຍບັຣ

ຫຼັງຈາກທີ່ຊາວຢິວ (ຢາຮູດ) ໄດ້ຖອນຕົວອອກໄປຈາກເມືອງມາດີນະຫ໌ **ເມືອງຄອຍບັຣ** ກາຍເປັນສູນກາງຂອງຍະຮູດໃນແຫຼມຄາບສະມຸດອາຣັບ. ບັນດາຜູ້ນຳຂອງກຸ່ມຕ່າງໆຂອງຍະຮູດ ທີ່ຫນີຈາກ ເມືອງມາດີນະຫ໌ ຈຶ່ງໄປຢູ່ທີ່ເມືອງຄອຍບັຣ ພວກເຂົາໄດ້ເລີ່ມວາງແຜນທີ່ຈະຈັດການກັບສາສະໜາອິດສະລາມ ຈຶ່ງຄິດທີ່ຈະເຮັດສົງຄາມເພື່ອທຳລາຍເມືອງມາດີນະຫ໌ ໂດຍຕັ້ງໃຈທີ່ຈະໂຈມຕີຊາວມຸດສະລິມໃນເວລາດຽວພ້ອມໆກັນ

ເຫດການນີ້ເກີດຂຶ້ນຫຼັງຈາກທີ່ທ່ານສາດສະດາ ໄດ້ເຮັດສັນຍາຂໍ້ຕົກລົງປະນີປະນອມກັບພວກກຸເຣຊ ທີ່ກຸ່ມບ້ານ ຮຸໄດບີຍະຫ໌, ແລ້ວຫຼັງຈາກນັ້ນຈຶ່ງມຸ່ງໜ້າໄປຍັງເມືອງຄອຍບັຣ, ໃນປີທີ 7, ກອງກຳລັງຊາວມຸດສະລິມໄດ້ປິດລ້ອມເມືອງຄອຍບັຣ ແລະ ເຮັດການພິຊິດເມືອງຄອຍບັຣ ໂດຍການເຂົ້າໄປຈັດການກັບປ້ອມປາການແຕ່ລະປ້ອມ ຫຼັງຈາກທີ່ມີການສູ້ຮົບຢ່າງຮຸນແຮງໃນທີ່ສຸດ, ຊາວຢິວໄດ້ຍອມຈຳນົນ ແລະ ຍອມປະຕິບັດຕາມຄຳຕັດສິນຂອງທ່ານຣໍຊູລລຸລລໍຫ໌. ໂດຍໃຫ້ເຂົາເຈົ້າຖອນຕົວອອກຈາກ ເມືອງຄອຍບັຣ[1] ແຕ່ຍ້ອນວ່າເມືອງຄອຍບັຣ ເປັນເມືອງອຸດົມສົມບູນທາງດ້ານກະສິກຳ ແລະ ການຄ້າ ແລະຊາວມຸດສະລິມບໍ່ສາມາດໄປສ້າງຕັ້ງການຕັ້ງຖິ່ນຖານຢູ່ແທນທີ່ພວກຍະຮູດໄດ້. ເນື່ອງຈາກວ່າມີພາລະກິດໃນການຊ່ວຍເຜີຍແຜ່ສາດສະໜາ ແລະ ຕໍ່ສູ້ເພື່ອປົກປ້ອງສາດສະໜາ

ດ້ວຍເຫດນີ້, ທ່ານຈຶ່ງຍອມໃຫ້ຊາວຢິວຢູ່ ແລະ ເຮັດການກະເສດຕາມຄຳຂໍຂອງພວກເຂົາ ໂດຍເຄິ່ງຫນຶ່ງຂອງຜົນຜະລິດຕ້ອງໄດ້ຮັບການແບ່ງປັນໃຫ້ກັບຊາວມຸດສະລິມ[2]

---

1.ຈາກການພິຊິດເມືອງຄອຍບັຣ ເບິ່ງໃນໜັງສືຊີເຣາະຫ໌ ອິບນຸ ຮີຊາມ ເລັ່ມ 3 ໜ້າ 378 ແລະໜ້າຫຼັງຈາກນັ້ນ

2.ຊໍຮີ້ຫ໌ ອັລບຸກໍຣີ້ ບົດທີ່ວ່າດ້ວຍເລື່ອງສົງຄາມພາກທີ່ວ່າດ້ວຍການປະຕິບັດກັບຊາວຄອຍບັຣຂອງທ່ານນະບີ ເລັ່ມທີ່ 40 ຊໍຮີ້ຫ໌ ມຸສລິມບົດທີ່ວ່າດ້ວຍເລື່ອງອັລມຸຊາກໍ້ຕຸ ພາກອັລມຸຊາກໍ້ຕຸອັລມຸອາມະລະຕິ(ຜົນປະໂຫຍດຮ່ວມກັນໃນສ່ວນອິນທະຜາລັມແລະພືດຜົນ

ແລະ ຊາວມຸດສະລິມມີສິດທີ່ຈະໃຫ້ອອກຈາກພື້ນທີ່ເຮັດກະສິກຳເພາະປູກເມື່ອມີຄວາມຈຳເປັນ ຊາວຍະຮູດ ສືບຕໍ່ອາໄສຢູ່ທີ່ນັ້ນເລື້ອຍມາຕະຫຼອດ ຈົນຮອດຍຸກສະໄໝຂອງທ່ານ *ອຸມັຣ ອິບນຸ ຄ໋ອດຕອບ ຣໍດີຍັລລໍຮຸ ອັນຮູ* ໂດຍທ່ານຕ້ອງການຢາກໃຫ້ຊາວຢິວອອກໄປເນື່ອງຈາກມີຄວາມຈຳເປັນ

ຫຼັງຈາກການພິຊິດເມືອງຄອຍບັຣໄດ້ແລ້ວ ຊາວຍະຮູດທີ່ເຫລືອໃນຄາບແຫຼມສະມຸດອາຣັບໄດ້ຕົກມາຢູ່ພາຍໃຕ້ການປົກຄອງຂອງທ່ານສາດສະດາ, ເຊັ່ນ **"ຍະຮູດ ຟະດັກ" "ຍະຮູດ ໄຕມາອ໌" ແລະ ຍະຮູດ ກຸຣໍ** ການປະຕິບັດໄດ້ເຮັດຄືກັບຍະຮູດທີ່ເມືອງຄອຍບັຣ[1]

ຊາວຢິວ (ຍະຮູດ) ສາມາດອາໄສຢູ່ໃນມາດີນະຫ໌ ແລະ ຄາບແຫຼມສະມຸດອາຣັບໄດ້ຢ່າງສະຫງົບ ແລະ ຄວາມປອດໄພ ຖ້າພວກເຂົາປະຕິບັດຕາມຄຳສັນຍາທີ່ໃຫ້ໄວ້ຕໍ່ຊາວມຸດສະລິມຢ່າງຄົບຖ້ວນສົມບູນ ແລະ ສະແດງເຈດຕະນາທີ່ດີຢ່າງຈະແຈ້ງ ແຕ່ຍ້ອນຄວາມອິດສາ ແລະ ຄວາມໂກດແຄ້ນທີ່ມີຕໍ່ທ່ານສາດສະດາ, ຜູ້ທີ່ມີຄວາມເມດຕາ, ຜູ້ມີກຽດ ແລະ ສາສະໜາອິດສະລາມຍັງເຮັດໃຫ້ເຂົາເຈົ້າບໍ່ສາມາດເຫັນຄວາມຈິງໃນເລື່ອງຕ່າງໆ ຕັ້ງແຕ່ວິນາທຳອິດຂອງການຕິດຕໍ່ກັບທ່ານສາດສະດາ ຈົນວິນາທີສຸດທ້າຍ

ທ່ານຍິງຊໍຟີຍະຫ໌ ບິນຕິ ຮຸໄຍ ອິບນຸ ອັຄຕ໊ອບ ໄດ້ກ່າວວ່າ: **ຫຼັງຈາກເຂົ້າຮັບອິສລາມ ແລະ ແຕ່ງງານກັບທ່ານສາດສະດາﷺ ຮຸໄຍ ອິບນຸ ອັຄຕ໊ອບ ພໍ່ຂອງນາງ ແລະ ອ້າຍນ້ອງຂອງນາງ, ອະບູ ຍາຊີຣ ອິບນຸ ອັຄຕ໊ອບ, ໄດ້ມາຫາທ່ານສາດສະດາທີ່ມາດີນະຫ໌ ຕໍ່ມາທັງສອງຄົນກໍກັບຄືນມາ, ໃນສະພາລເມື່ອຍລ້າ ແລະ ໝົດແຮງ ຕົນຂອງເຂົາເຈົ້າທັງສອງບໍ່ສາມາດຮອງຮັບຕົນເອງໄດ້ ອັນເນື່ອງຈາກການປະຈັກໄດ້ວ່າທ່ານສາດສະດາ ﷺ ນັ້ນເປັນນະບີ ທີ່ແທ້ຈິງ.**

ທ່ານຍິງຊໍຟີຍະຫ໌ ໄດ້ເວົ້າອີກວ່າ: ຂ້ອຍໄດ້ຍິນລຸງ ອະບູ ຍາຊີຣ ເວົ້າກັບຮຸໄຍ ພໍ່ຂອງຂ້ອຍເວົ້າວ່າ:

**ລາວແມ່ນ ນະບີແມ່ນບໍ?**

ຮຸໄຍ ກ່າວຕອບວ່າ:

**ແມ່ນແລ້ວ,ຂໍສາບານຕໍ່ອັລລໍຫ໌ ຊຸບຮານະ ຮູວະຕະ ອາລາ**

ອະບູ ຍາຊີຣ ເວົ້າວ່າ:

ເຈົ້າຮູ້ຈັກລາວ ແລະ ຢືນຢັນວ່າລາວເປັນສາດສະດາບໍ?

ຮຸໄຍ ກ່າວຕອບວ່າ:

**ຂ້ອຍສາມາດຢືນຢັນໄດ້**

ອະບູ ຍາຊີຣ ຖາມຕື່ມວ່າ:

**ໃນຫົວໃຈຂອງທ່ານຄິດແນວໃດກັບລາວ?**

ຮຸໄຍ ກ່າວຕອບວ່າ:

**ເປັນສັດຕູຂອງຂ້ອຍ. ຂໍສາບານຕໍ່ອັລລໍຫ໌ ຊຸບຮານະ ຮູວະຕະ ອາລາ ວ່າຄວາມເປັນສັດຕູຈະຍັງຄົງຢູ່ຕະຫຼອດທີ່ຂ້າພະເຈົ້າມີຊີວິດຢູ່**[2]

ຮຸໄຍ ເປັນສັດຕູທີ່ໂຫດຮ້າຍໃນທຸກເລື່ອງທີ່ກ່ຽວຂ້ອງກັບທ່ານຣໍຊູລລຸລລໍຫ໌ ﷺ ເມື່ອອັລລໍຫ໌ ﷻ ຊົງສັ່ງໃຫ້ຈັບກຸມຕົວເຂົາພ້ອມກັບຍະຮູດ **ບະນີ "ກຸຣອຍເຊາະຫ໌"**. ແລະ ໃນຂະນະທີ່ຖືກນຳຕົວໄປເພື່ອປະຫານ, ທ່ານຣໍຊູລລຸລລໍຫ໌ ໄດ້ເຫັນຮູໄນ ທ່ານຈຶ່ງເວົ້າວ່າ:

أما والله مالمت نفسي في عداوتك ولكنه من يخذل الله يخذل

**"ຂ້າພະເຈົ້າສາບານຕໍ່ອັລລໍຫ໌ ﷻ ວ່າ ຂ້ອຍ (ມຸຮຳມັດ) ບໍ່ໄດ້ຕຳນິຕິຕຽນຕົນເອງສຳລັບການເປັນສັດຕູກັບທ່ານ ແຕ່ທະວ່າໃຜຜູ້ໃດທອດຖິ້ມ ອັລລໍຫ໌ ﷻ ລາວຈະຖືກປະຖິ້ມແນ່ນອນ"**[3]

**ທ່ານກໍ່ຊາລີ ຣໍຫິມາຮຸລລໍຫ໌** [4] ໄດ້ກ່າວເຖິງເຫດຜົນຂອງການເປັນສັດຕູຂອງຊາວຢູດາ (ຢິວ) ຕໍ່ຊາວມຸດສະລິມ:

**ແທ້ຈິງ ມີຄຳອະທິບາຍສຳລັບເຫດການນີ້: ຄືຄວາມສຳພັນຂອງພວກ ຍະຮູດ ຕໍ່ສາສະໜາຂອງເຂົາເຈົ້າໄດ້ຖືກທຳລາຍຂາດສະບັ້ນລົງ ແລະ ວິທີທາງໃນການດຳເນີນຊີວິດບໍ່ໄດ້ເຊື່ອມໂຍງຕິດຕໍ່ກັບມໍລະດົກແຫ່ງຟາກຟ້າ (ປື້ມຂອງພະເຈົ້າ) ອີກຕໍ່ໄປ, ເຂົາເຈົ້າບໍ່ໃຫ້ຄວາມສຳຄັນ ບໍ່ສົນໃຈຕໍ່ສິ່ງທີ່ຢູ່ໃກ້ຄຽງກັບ "ອະກີດະຕຸດເຕົາຮີດ" (ຫຼັກການເອກະພາບ) ຫຼືຂໍ້ກຳນົດຕ່າງໆທີ່ມີຢູ່ໃນຄຳພີເຕົາຣອດ ແລະ ຫຼັກອະກີດະຫ໌ທີ່ມີໄດ້ປາກົດຢູ່ຕໍ່ໜ້າ ພວກເຂົາເຈົ້າໃຊ້ອາລົມເປັນໃຫຍ່ ແລະ ຮັກທີ່ຈະຍຶດຕິດກັບສິ່ງທີ່ເຂົາເຈົ້າຮັກຕະຫຼອດໄປ ໃນຈຸດນີ້ ເຂົາເຈົ້າສົງໄສຄຸນຄ່າຂອງອັລກຸຣອານ ການອີມານ(ສັດທາ) ທີ່ໄດ້ກ່າວໄວ້**

---

1.ອັລບະລາຊີຣີ ໃນໜັງສືຟຸຕູ້ລອັລບຸລດານ ໜ້າ 42 – 47 ອິບນຸ ກອຍຍິມ ຊາດັລມະອາດ ເລັ້ມ 1 ໜ້າ 405

2.ຊີເຣາະຫ໌ ອິບນຸ ຮີຊາມ ເລັ້ມ 2 ໜ້າ 140-141 ລາຍງານເລື່ອງນີ້ຈາກ ອິບນີ ອີສຮາກ

3.ເຣາະຫ໌ ອິບນຸ ຮີຊາມ ເລັ້ມ 3 ໜ້າ 260 ອັຊຊີເຣາະຫ໌ ອັລນະບະວີຍະຫ໌ ຂອງອິບນີ ກະຊີ້ຣ ເລັ້ມ 3 ໜ້າ 239 ລາຍງານອິບນີ ອີສຮາກ

4.ຟີກຣຸສ ຊີເຣາະຫ໌ ໜ້າ 261-262

**ແລະ ເມື່ອໄດ້ຖືກກ່າວກັບພວກເຂົາເຫຼົ່ານັ້ນວ່າ, ຈົ່ງສັດທາເຊື່ອຕໍ່ສິ່ງທີ່ອັລລໍຫ໌ ໄດ້ຊົງປະທານລົງມາເຖີດ. ພວກເຂົາເຈົ້າກໍ່ເວົ້າວ່າ: ເຮົາກໍາລັງສັດທາເຊື່ອຕໍ່ສິ່ງທີ່ໄດ້ຖືກປະທານລົງມາແກ່ເຮົາຢູ່ແລ້ວ ແລະ ພວກເຂົາບໍ່ເຊື່ອໃນສິ່ງອື່ນຈາກນັ້ນ ເຖິງແມ່ນວ່າມັນເປັນຄວາມຈິງ ໂດຍຢືນຢັນສິ່ງທີ່ມີຢູ່ກັບພວກເຂົາ (ມູຮໍາມັດ) ຈົ່ງກ່າວເຖີດວ່າ ເພາະເຫດໃດ ແຕ່ກ່ອນພວກທ່ານຈຶ່ງໄດ້ຂ້າ ນະບີຂອງອັລລໍຫ໌ ຖ້າຫາກພວກທ່ານເປັນຜູ້ເຊື່ອສັດທາ?** (ອັລ-ບະກໍເຣາະຫ໌ : 91)

ອັລກໍຊາຣີ້ ເວົ້າວ່າ:

*ຝ່າຍຕ່າງໆຂອງຊາວຍະຮູດ ທີ່ອາໄສຮ່ວມກັບຊາວອາຣັບ ພວກເຂົາເຈົ້າແມ່ນກຸ່ມກອງໂຈນຮັບຈ້າງທີ່ໃຊ້ສາສະໜາເປັນເຄື່ອງມືເພື່ອໃຫ້ໄດ້ມາເຊິ່ງການຄວບຄຸມລະບົບເສດຖະກິດ. ເມື່ອຮູ້ສຶກວ່າຄວາມປາຖະໜາ ແລະ ຄວາມໂລບແມ່ນຄວາມຄິດທີ່ຜິດພາດ, ພວກເຂົາຈຶ່ງກ່າວວ່າກຸ່ມຂອງພວກເຂົາຈະສິ້ນສຸດລົງໂດຍບໍ່ມີສິ່ງເຫຼືອໃດໆ ແລະ ໄດ້ເປີດເຜີຍຄວາມບໍ່ເຊື່ອທີ່ຖືກເຊື່ອງໄວ້ອອກມາຢ່າງຈະແຈ້ງ, ແລ້ວມັນກໍ່ຄືການປະຕິເສດສັດທາຕໍ່ອັລລໍຫ໌ ﷻ ແລະ ປະຕິເສດຕໍ່ບັນດາຣໍຊູລຂອງອັລລໍຫ໌ ນັ້ນເອງ.*

### 14. ທ່າທີຂອງທ່ານຣໍຊູລ ﷺ ຕໍ່ພວກ "ນະຊໍຣໍ" (ຄຣິສຕຽນ)

ຊາວຄຣິສຕຽນທີ່ອາໄສຢູ່ໃນແຫຼມສະມຸດອາຣັບມີຈໍານວນໜ້ອຍ ຊາວຄຣິດສະຕຽນໄດ້ເຕົ້າໂຮມກັນຢູ່ເມືອງນັຈຣອນ ເຊິ່ງມີຊົນເຜົ່າອາຣັບບາງເຜົ່າທີ່ຢູ່ຕິດກັບປະເທດຊີເຣຍ(ຊາມ) ໄດ້ເຂົ້າຮັບນັບຖືເປັນຄຣິສຕຽນ ເພາະວ່າ ພວກເຂົາຢູ່ໄກຈາກການແຕ່ງຕັ້ງນະບີໃນຊ່ວງປີທໍາອິດ ແລະ ບໍ່ໄດ້ປະກົດວ່າມີຄວາມຂັດແຍ່ງກັນລະຫວ່າງເຂົາເຈົ້າກັບຊາວມຸດສະລິມແຕ່ຢ່າງໃດ

ກະສັດຂອງເອທີໂອເປຍ ລາວເປັນຄຣິສຕຽນມີຈິດໃຈທີດີ ເຂົາເຈົ້າມີຄວາມເມດຕາຕໍ່ຊາວມຸດສະລິມທີ່ໄດ້ອົບພະຍົບໄປຢູ່ທີ່ນັ້ນ ແລະ ມີຄວາມຍຸດຕິທໍາ ຫຼັງຈາກອິດສະລາມມີຄວາມເຂັ້ມແຂງຂຶ້ນ ພາຍຫຼັງຈາກການພິຊິດເມືອງຄອຍບັຣ ແລະ ເມືອງມັກກະຫ໌ແລ້ວ ທ່ານຣໍຊູລລຸລລໍຫ໌ ﷺໄດ້ເລີ່ມເຜີຍແຜ່ສາສະໜາອິດສະລາມໄປທົ່ວແຫຼມສະມຸດອາຣັບ ແລະ ເຂດອ້ອມຂ້າງ, ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ເລີ່ມສົ່ງຂໍ້ຄວາມໄປຫາບັນດາກະສັດຂອງເມືອງຕ່າງໆ ຮຽກຮ້ອງເຊີນຊວນໃຫ້ບັນດາຜູ້ນໍາເຂົ້າຮັບສາສະໜາອິດສະລາມ ແລະ ນີ້ແມ່ນຈຸດເລີ່ມຕົ້ນຂອງການຕໍ່ສູ້ກັບຊາວຄຣິດສະຕຽນ

## 14.1 ຄຣິສຕຽນ ເມືອງນັຈຣອນ

ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ສົ່ງສານຂໍ້ຄວາມໄປຫາ **"ອັຊກໍຟ"** ຜູ້ນຳແຫ່ງເມືອງນັຈຣອນ ເພື່ອຮຽກຮ້ອງເຊີນຊວນໃຫ້ເຂົ້າຮັບສາສະໜາອິດສະລາມ ເຈົ້າແຂວງນັຈຣອນ ໄດ້ປຶກສາຫາລືກັບຄະນະທີ່ປຶກສາ ໂດຍໄດ້ສົ່ງຄະນະຜູ້ແທນໄປເຈລະຈາກັບທ່ານສາດສະດາມຸຮຳມັດ ແລະ ໄປສືບສວນເລື່ອງທັງໝົດ ເມື່ອຄະນະຜູ້ແທນໄດ້ໄປພົບປະກັບທ່ານຣໍຊູລລຸລລໍຫ໌ ﷺ ແລະ ເຈລະຈາກ່ຽວກັບປະເດັນບັນຫາຕ່າງໆ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຕອບຄຳຖາມກ່ຽວກັບບັນຫາເຫຼົ່ານັ້ນ ຈົນກະທັ່ງພວກເຂົາຖາມກ່ຽວກັບທ່ານສາດສະດາ ອີຊາ ອະໄລຮິສສະລາມ, ທ່ານສາດສະດາ ﷺ ໄດ້ກ່າວວ່າ:

**ماعندي فيه شيئ يومي هذا**

**ຂ້ອຍຍັງບໍ່ມີຄຳຕອບກ່ຽວກັບລາວ (ອີຊາ) ໃນມື້ນີ້ ...**

ໃນຕອນເຊົ້າມື້ຕໍ່ມາ, ທ່ານສາດສະດາ ﷺ ໄດ້ໄປຫາພວກເຂົາ ແລະ ອັລລໍຫ໌ ﷻ ໄດ້ປະທານຄຳຕອບລົງມາໃຫ້ແກ່ທ່ານໃນເລື່ອງກ່ຽວກັບທ່ານນະບີອີຊາ ອະໄລຮິສສະລາມ, ດັ່ງດຳລັດຂອງອັລລໍຫ໌ ﷻ ທີ່ວ່າ:

**ແທ້ຈິງ ອຸປະມາອີຊາ ນະທີ່ອັລລໍຫ໌ ອຸປະໄມດັ່ງອາດຳ ພຣະອົງຊົງບັງເກີດເຂົາຂຶ້ນມາຈາກດິນຕໍ່ມາພຣະອົງໄດ້ຊົງປະກາສິດແກ່ເຂົາວ່າ ເຈົ້າ ຈົ່ງເປັນ! ແລ້ວເຂົາກໍ່ເປັນຂຶ້ນມາ** (ອັລ-ອິມຣານ 3 : 59)

ແຕ່ຊາວຄຣິດສະຕຽນບໍ່ຍອມຮັບຂໍ້ເທັດຈິງກ່ຽວກັບທ່ານນະບີອີຊາ ອະໄລຮິສສະລາມ, ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງໃຫ້ພວກເຂົາເຮັດການດຸອາອ໌ສາບແຊ່ງກັນ (ມຸບາຮາລະຫ໌) ຕາມຂໍ້ເທັດຈິງທີ່ມີຢູ່ໃນອາຍະຫ໌ທີ່ 2 ແຕ່ຄະນະຜູ້ແທນຂອງເມືອງນັຈຣອນ ຢ້ານວ່າການລົງໂທດຈາກການສາບແຊ່ງ (ມຸບາຮາລະຫ໌) ຈະເກີດຂຶ້ນ, ຈຶ່ງບໍ່ຍອມຮັບຄຳຂໍຂອງທ່ານຣໍຊູລລຸລລໍຫ໌ ﷺ ແລະ ຍອມຕົກລົງທີ່ຈະຈ່າຍຄ່າພາສີຄຸ້ມຄອງ **(ຈີຊຍະຫ໌)** ໃຫ້ ແລະ ກຳນົດຈຳນວນຂອງ(ຈີຊຍະຫ໌) ທີ່ຈະຕ້ອງຈ່າຍໃຫ້ດ້ວຍ, ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງໄດ້ສົ່ງຂໍ້ຄວາມພ້ອມກັບຄະນະຜູ້ແທນເພື່ອສົ່ງມັນໃຫ້ກັບຜູ້ປົກຄອງຂອງເມືອງນັຈຣອນ, ໂດຍລະບຸຈຳນວນຈີຊຍະຫ໌ ທີ່ຈະຕ້ອງຈ່າຍເປັນ **"ຮຸລລະຫ໌"** (ເສື້ອຄຸມຍາວ) 2,000 ຊຸດຕໍ່ປີ ເມື່ອຄະນະຜູ້ແທນເດີນທາງມາຍັງເມືອງນັຈຣອນ ໄດ້ພຽງໄລຍະເວລາໜຶ່ງ **ອັຊຣໍຟ** ຜູ້ປົກຄອງຂອງເມືອງນັຈຣອນ, ໄດ້ເປັນຫົວໜ້າຄະນະຜູ້ແທນທີ່ເດີນທາງໄປເມືອງມາດີນະຫ໌ ແລະ ອາໄສຢູ່ກັບທ່ານຣໍຊູລລຸລລໍຫ໌ ﷺ ພວກເຂົາເຈົ້າໄດ້ຍິນອັລກຸຣອານທີ່ໄດ້ຖືກປະທານລົງມາໃຫ້ແກ່ທ່ານຣໍຊູລລຸລລໍຫ໌ ﷺ ເມື່ອພວກເຂົາເດີນທາງກັບຄືນ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ສົ່ງສານຂໍ້ຄວາມຢືນຢັນຄວາມປອດໄພຕໍ່ສິ່ງທີ່ພວກເຂົາໄດ້ປັບປຸງ ແລະ ສະແດງຄວາມຈິງໃຈຂອງພວກເຂົາ ໄດ້ມີຊາວຄຣິດສະຕຽນ "ນັຈຣອນ" ຈຳນວນໜຶ່ງເຂົ້າຮັບ ປ່ຽນໃຈເຫລື້ອມໃສມາເປັນອິດສະລາມກ່ອນທີ່ທ່ານຣໍຊູລລຸລລໍຫ໌ ﷺ ຈະເສຍຊີວິດຂອງ[1]

## 14.2 ຄຣິສຕຽນທາງຕອນພາກເໜືອ

ກຸ່ມນີ້ແມ່ນເປັນຕົວແທນທີ່ຢູ່ໃນປະເທດໂຣມັນ ແລະ ເປັນຕົວແທນຂອງຊາວອາຫລັບ ທີ່ມີຄວາມສຳພັນກັບພວກໂຣມັນ ເລີ່ມມີການຕໍ່ສູ້ກັນຂຶ້ນກັບຊາວມຸດສະລິມ ໃນຂະນະທີ່ຊາວຄຣິສຕຽນໄດ້ສັງຫານທູດທີ່ເຮັດໜ້າທີ່ຖືສານອິສລາມໄປເຜີຍແຜ່ ແລະ ບາງກຸ່ມໄດ້ເຂົ້າໄປທ້າທາຍ ແລະ ຍົ່ວຍຸໜ່ວຍທະຫານທີ່ສົ່ງໄປເຮັດໜ້າທີ່ເຜີຍແຜ່ສາສະໜາໃຫ້ເກີດຄວາມໂກດ[2]

ດ້ວຍເຫດນີ້, ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງສົ່ງຕົວແທນ ແລະ **ຊາຣິຍາ** (ກອງກຳລັງທະຫານເຊິ່ງມີຈຳນວນ 5 ຄົນຫາ 300 ຄົນ) ໄປຍັງຊາວຄຣິດສະຕຽນເພື່ອເປັນການຕອບໂຕ້ໃນສິ່ງທີ່ເຂົາໄດ້ເຮັດໄວ້ ແລະ ເປັນຈຸດເລີ່ມຕົ້ນຂອງການແຜ່ຂະຫຍາຍຂອງອິສລາມ ພາຍນອກແຫຼມຄາບສະມຸດອາຣາບີ ເພື່ອບັນລຸພາລະກິດຂອງການເຜີຍແຜ່ຂ່າວສານຂອງອິສລາມ ໃນປີທີ 8 ຂອງ ຮິຈເຣາະຫ໌, ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ສົ່ງກອງກຳລັງທະຫານ 3,000 ຄົນ ໄປປະເຊີນໜ້າກັບພວກໂຣມັນ ທີ່ **ມຸອ໌ຕະຫ໌** ໃນຄັ້ງນັ້ນເຮັດໃຫ້ ຜູ້ທີ່ທ່ານຣໍຊູລລຸລລໍຫ໌ ແຕ່ງຕັ້ງໃຫ້ເປັນຜູ້ບັນຊາການທະຫານຄົນທີໜຶ່ງ ຄົນທີສອງ ແລະ ທີສາມຕັ້ງແຕ່ກ່ອນອອກຈາກເມືອງມະດີນະຫ໌ ປະຕິບັດໜ້າທີ່ຢ່າງຕໍ່ເນື່ອງເປັນໄປຕາມລຳດັບ ແລະ ຜູ້ບັນຊາການທັງສາມຄົນໄດ້ຕາຍໄປໃນຖານະທີ່ເປັນຊາຮີດທັ້ງໝົດ ແລະ ໃນປີທີ 9 ທ່ານຣໍຊູລລຸລລໍຫ໌ ມີຄຳສັ່ງໃຫ້ຊໍຮາບະຫ໌ເດີນທາງໄປທາງທິດເໜືອກັບທ່ານ ໃນນາມຂອງໜ່ວຍທະຫານ **"ອັລ-ອຸຊເຣາະຫ໌"** ຫຼືກອງທະຫານສົງຄາມ ຕະບູ໊ກ ໜ່ວຍທະຫານ **"ອັລ-ອຸຊເຣາະຫ໌"** ເອີ້ນຄວາມນ່າເກງຂາມເປັນຕາຢ້ານ ແລະ ກຽດສັກສີຂອງຊາວມຸດສະລິມໄດ້ກັບຄືນມາ ໂດຍທີ່ຊາວໂຣມັນ ແລະ ຊົນເຜົ່າອາຣັບບາງກຸ່ມທີ່ນັບຖືສາດສະໜາຄຣິສຕຽນ ບໍ່ໄດ້ລຸກຂຶ້ນມາປະເຊີນກັບການຕໍ່ຕ້ານກັບຊາວມຸດສະລິມ ດັ່ງທີ່ເຄີຍລຸກຂຶ້ນມາເພື່ອຕ້ານທີ່ສະໜາມຮົບ "ມຸອ໌ຕະຫ໌" ຕໍ່ມາທ່ານຣໍຊູລລຸລລໍຫ໌ ﷺ ໄດ້ສົ່ງກອງກຳລັງທະຫານໄປປາບປາມຊາວອາຣັບຈຳນວນໜຶ່ງທີ່ອາໄສຢູ່ທີ່ນັ້ນ ແລະ ເຮັດສັນຍາຂໍ້ຕົກລົງປະນີປະນອມກັບກຸ່ມອື່ນໆ ນອກຈາກກຸ່ມເຫຼົ່ານັ້ນ[3]

ກ່ອນ ທ່ານຣໍຊູລລຸລລໍຫ໌ ﷺ ຈະເສຍຊີວິດເລັກນ້ອຍ ທ່ານໄດ້ກຽມກອງທະຫານເພື່ອໄປສູ້ຮົບກັບຊາວໂຣມັນ ໂດຍການແຕ່ງຕັ້ງໃຫ້ **"ອຸສາມະຫ໌"** ເປັນຜູ້ບັນຊາການຮົບ ແຕ່ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ເສຍຊີວິດກ່ອນທີ່ກອງທະຫານເຄື່ອນທັບອອກຈາກເມືອງມະດີນະຫ໌ ແລະ ເມື່ອທ່ານອະບູບັກຣ (ຣດ) ໄດ້ຂຶ້ນເປັນຄໍລີຟະຫ໌ (ຜູ້ປົກຄອງ) ທ່ານຈຶ່ງໄດ້ປະຕິບັດຕາມແນວທາງທີ່ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ກຳນົດໄວ້

---

1.ຈາກລາຍລະອຽດຕ່າງໆ ຂອງຄະນະຜູ້ແທນບັຈຣອນ ເບິ່ງໃນໜັງສືຂອງ "ດະລາອິລ ອັນນຸບູວະຫ໌" ເລັ່ມ 5 ໜ້າ 385 – 391 ອັຊຊີເຣາະຫ໌ ອັນນະບະວີຍະຫ໌ ຂອງທ່ານອິບນຸ ກະຊີຣ ເລັ່ມ 4 ໜ້າ 100 -108 ແລະ ຫະດີຊທີ່ກ່ຽວກັບ "ອັລມຸບາຣະລະຫ໌" ທີ່ມີປະກົດຢູ່ໃນຊໍຮີຫ໌ ອັລບຸກໍຣີ ບົດທີ່ວ່າດ້ວຍເລື່ອງ "ອັລມະກໍຊີ" ເລື່ອງ ຄະນະຜູ້ແທນບັຈຣອນ

## 15. ທ່າທີຂອງພວກມຸນາຟິກີນ ໜ້າຊື່ໃຈຄົດ

***ອັນນິຟ້າກ*** (ການກັບກອກ, ການບິດພິ້ວ) ແມ່ນການເປີດເຜີຍຄວາມດີ ແລະ ເຊື່ອງຄວາມຊົ່ວຮ້າຍພາຍໃນຈິດໃຈ ມີຢູ່ສອງປະເພດ

**- ປະເພດທີ 1:** ການກັບກອກຫລັກການຍຶດໝັ້ນສັດທາ ຄືການເປີດເຜີຍການເປັນອິສລາມອອກມາຢ່າງຊັດເຈນ ແລະ ປົກປິດການເປັນກຸຟຸຣ (ການປະຕິເສດ) ການກັບກອບປະເພດນີ້ ຜູ້ກັບກອບຈະຢູ່ໃນນະຣົກຕະຫຼອດການ

**- ປະເພດທີ 2:** ການກັບກອບທາງການປະຕິບັດທີ່ຖືວ່າເປັນບາບໃຫຍ່[4] ຄື ຄົນທີ່ມີຄຸນລັກສະນະບາງປະການຂອງພວກມຸນາຟິກີນ (ຫນ້າຊື່ໃຈຄົດ) ຢູ່ ແລະ ຄົນທີ່ຄຳເວົ້າຂອງເຂົາບໍ່ກົງກັບການກະທຳຂອງເຂົາ (ການຫຼອກລວງ, ບິດເບືອນ)

- **ອັນນິຟ້າກ (ການກັບກອກ ການບິດພິ້ວ)**

ການກັບກອກໜ້າຊື່ໃຈຄົດ ບໍ່ໄດ້ເຫັນຊັດເຈນໃນເມືອງມັກກະຫ໌ ລະຍະເລີ່ມຕົ້ນຂອງອິດສະລາມ ແຕ່ມັນເກີດຂຶ້ນຫຼັງຈາກການອົບພະຍົບສູ່ເມືອງມາດີນະຫ໌ແລ້ວ ເນື່ອງຈາກວ່າຊາວມຸດສະລິມໃນມັກກະຫ໌ຍັງອ່ອນແອ ບໍ່ມີພະລັງອຳນາດ ເພາະສະນັ້ນ ຜູ້ທີ່ຕ້ອງການທີ່ຈະຢູ່ກັບການເຮັດຊີຣິກ (ການຕັ້ງພາຄີ) ຈຶ່ງບໍ່ມີຄວາມຈຳເປັນທີ່ຈະຕ້ອງມາເອົາໃຈມຸສລິມ ແຕ່ເມື່ອການການອົບພະຍົບສູ່ເມືອງມະດີນະຫ໌ສຳເລັດລົງ ຊາວມຸດສະລິມມີຄວາມເຂັ້ມແຂງ ແລະ ໄຊຊະນະເປັນຂອງຊາວມຸດສະລິມ ຈຶ່ງພົບວ່າຜູ້ທີ່ຍັງຢາກຢູ່ກັບການເປັນຜູ້ປະຕິເສດສັດທາ ໃນບັນດາຜູ້ທີ່ຄິດເຖິງແຕ່ຜົນປະໂຫຍດຂອງຕົນເອງ ຈຶ່ງບໍ່ຄິດຕຶກຕອງຫຍັງເລີຍນອກຈາກຊີວິດຄວາມເປັນຢູ່ແຫ່ງໂລກນີ້ ແລະ ບໍ່ຄິດເຖິງໂລກໜ້າ ເມື່ອພົບວ່າພວກເຂົານັ້ນຈະຕ້ອງເປັນພວກທີ່ຢູ່ນອກສັງຄົມ ແລະ ຜົນປະໂຫຍດທາງດ້ານການຄ້າ ແລະ ສັງຄົມຕ້ອງປະສົບກັຍຮັບອັນຕະລາຍ

ດ້ວຍເຫດນີ້ ລາວຈຶ່ງເລືອກທີ່ຈະມີບຸກຄະລິກລັກສະນະສອງໜ້າ ( ຊາຕຸ ວັຈໄຮນ໌) ຄື ການຍັງຮັກສາໄວ້ເຊິ່ງການປະຕິເສດໃນໃຈ ແລະ ທຳທ່າວ່າເປັນຊາວມຸດສະລິມຢ່າງເປີດເຜີຍເພື່ອເຮັດໃຫ້ຊາວມຸດສະລິມພໍໃຈ ພວກເຂົາເຈົ້າໄດ້ປະກົດໂຕຢ່າງເປີດເຜີຍໃນຊ່ວງຕົ້ນໆ ແຕ່ເຫດການຕ່າງໆໄດ້ເປີດເຜີຍໃຫ້ເຫັນຊັດແຈ້ງເຖິງລັກສະນະຂອງພວກເຂົາ ແລະ ໄດ້ເຫັນຊັດເຈນໃນໄລຍະຕໍ່ມາ

---

2.ເຊັ່ນການສັ່ງຫານຫູດຂອງທ່ານຣໍຊູລ ຄືທ່ານ ອັລຫາຣິສ ອິບນຸ ອຸໄມຍ໌ ຣໍດີຍັລລໍຮຸ ອັນຮຸ ທີ່ຖືກສົ່ງໄປຍັງຜູ້ປົກຄອງເມືອງບຸສຣໍ ໃນໜັງສື "ອຸຊູດຸລກໍບະຫ໌" ຂອງອິບນິ ອະຊີຣ ເລັ່ມ 1 ໜ້າ 341 ແລະ ພວກເຂົາໄດ້ສັ່ງຫານກຸ່ມບຸກຄົນທີ່ທ່ານຣໍຊູລ ແຕ່ງຕັ້ງໄປໂດຍການນຳຂອງທ່ານກະອ ອິບນຸ ອຸໄບ (ເບິ່ງໃນອັຊຊີເຣາະຫ໌ ອັນນະບະວີຍະຫ໌ ຂອງທ່ານອິບນຸ ກະຊີຣ ເລັ່ມ 3 ໜ້າ 454 ຈາກທ່ານອັລວາກີດີຍ໌

3.ເຊັ່ນໄດ້ເຮັດສັນຍາປະນີປະນອມກັບເຈົ້າຊີວິດ "ໄອລະຫ໌" ເບິ່ງຊໍຮີ້ຫ໌ ອັລບຸກຄໍຣີ ບົດທີ່ວ່າດ້ວຍເລື່ອງພາສີຫົວເມືອງ (ອັລຈິຊຍະຫ໌) ພາກເມື່ອອິມາມອຳລາ ເລກທະດີຊທີ່ 3

4.ຕັຟຊີ້ຣ ອິບນີ ກະຊີຣ ເລັ່ມ 1 ໜ້າ 72

ດ້ວຍເຫດນີ້ ລາວຈຶ່ງເລືອກທີ່ຈະມີບຸກຄະລິກລັກສະນະສອງໜ້າ ( ຊາຕຸ ວັຈໄຮນ໌) ຄື ການຍັງຮັກສາໄວ້ເຊິ່ງການປະຕິເສດໃນໃຈ ແລະ ທຳທ່າວ່າເປັນຊາວມຸດສະລິມຢ່າງເປີດເຜີຍເພື່ອເຮັດໃຫ້ຊາວມຸດສະລິມພໍໃຈ ພວກເຂົາເຈົ້າໄດ້ປະກົດໂຕຢ່າງເປີດເຜີຍໃນຊ່ວງຕົ້ນໆ ແຕ່ເຫດການຕ່າງໆໄດ້ເປີດເຜີຍໃຫ້ເຫັນຊັດແຈ້ງເຖິງລັກສະນະຂອງພວກເຂົາ ແລະ ໄດ້ເຫັນຊັດເຈນໃນໄລຍະຕໍ່ມາ

- **ວິທີການຕ່າງໆຂອງພວກມຸນາຟີກີນ ໃນການຕໍ່ຕ້ານອິດສະລາມ**

ເຖິງແມ່ນວ່າພວກມຸນາຟີກີນບໍ່ໄດ້ຈັບອາວຸດເພື່ອເຮັດສົງຄາມກັບຊາວມຸດສະລິມ ແຕ່ຖືວ່າເປັນສັດຕູທີ່ເປັນອັນຕະລາຍຫຼາຍ ເພາະວ່າພວກເຂົາອາໄສຢູ່ທ່າມກາງບັນດາຊາວມຸດສະລິມ ແລະ ສາມາດຮູ້ຄວາມລັບຕ່າງໆ ແລະ ສະແດງອອກເຖິງຄວາມຮັກຂອງພວກເຂົາທີ່ມີຕໍ່ຊາວມຸດສະລິມ ແນ່ນອນພວກເຂົາໄດ້ດຳເນີນການໃນຫລາຍຮູບແບບຫຼາຍຂັ້ນຕອນທີ່ຈະນຳພາໃຫ້ເກີດສົງຄາມ ແລະ ການຕໍ່ຕ້ານກັບອິດສະລາມ ວິທີການຕ່າງໆ ທີ່ເຂົາເຈົ້າໄດ້ເຮັດໄວ້ ດັ່ງຕໍ່ໄປນີ້;

*1. ພະຍາຍາມເຮັດໃຫ້ເກີດການແບ່ງແຍກ ພະລັງຄວາມສາມັກຄີລະຫວ່າງຊາວມຸສລິມ ຫຼັງຈາກທີ່ ອັລລໍຫ໌ໄດ້ຊົງລວບລວມພວກເຂົາໄວ້ໃນສາດສະໜາແລ້ວ*

ເມື່ອຊາວມູຮາຈິຣີນອົບພະຍົບມາຢູ່ທີ່ເມືອງມະດີນະຫ໌ ພວກຄົນໜ້າຊື່ໃຈຄົດຕ້ອງການທີ່ຈະແກ້ແຄ້ນຈຶ່ງພະຍາຍາມເຮັດໃຫ້ຫົວໃຈຂອງຊາວ “ອັນຊໍຣ” ຮູ້ສຶກອິດສາລິດສະຍາ ກຽດຊັງຕໍ່ກຸ່ມ “ມູຮາຈິຣີນ” ເມື່ອໃດກໍ່ຕາມທີ່ເຂົາເຈົ້າພົບໂອກາດ ເຂົາເຈົ້າກໍ່ຖືໂອກາດທັນທີ ດັ່ງກັບເຫດການທີ່ເກີດຂຶ້ນໃນ **"ກໍສວະຫ໌ ບະນີລ ມຸສຕໍລິກ" (ສົງຄາມ ບະນີລ ມຸສຕໍລິກ)** ໃນຂະນະທີ່ມີການຂັດແຍ້ງລະຫວ່າງ “ອັນຊໍຣ” (ຊາວເມືອງມະດີນະຫ໌) ກັບຊາວມູຮາຈິຣີນ(ຜູ້ທີ່ອົບພະຍົບມາຈາກມັກກະຫ໌ມາຢູ່ທີ່ເມືອງມະດີນະຫ໌) ໄດ້ມີມຸນາຟີກີນຄື **ອັບດຸລລໍຫ໌ ອິບນຸ ອຸໄບ ອິບນີ ຊະລູລ** ໄດ້ຊວຍໂອກາດຕຳນິວິພາກວິຈານຊາວອັນຊໍຣ ທີ່ໃຫ້ທີ່ພັກອາໄສແກ່ຊາວມູຮາຈິຣີນ ແລະ ໃຫ້ຊາວອັນຊໍຣ ຢຸດເຊົາການຈ່າຍຊັບສິນເພື່ອຊ່ວຍຊາວມູຮາຈິຣີນ ເພື່ອທີ່ຊາວມູຮາຈິຣີນ ຈະໄດ້ແຍກຕົວອອກຈາກທ່ານຣໍຊູລ ລຸລລໍຫ໌ ຊໍລລັລລໍຫຸ ອະໄລຮີ ວະຊັລລໍາ

ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ໄດ້ປະທານອັລກຸຣອານກ່ຽວກັບເລື່ອງນີ້:

**"ພວກເຂົາ (ຄົນຫນ້າຊື່ໃຈຄົດ) ແມ່ນຜູ້ທີ່ເວົ້າວ່າ: ພວກທ່ານ (ຊາວອັນຊໍຣ) "ຢ່າໄດ້ບໍລິຈາກໃຫ້ແກ່ຜູ້ທີ່ຢູ່ກັບຣໍຊູລ ລຸລລໍຫ໌ (ມູຮາຈິຣີນ)ເລີຍ ເພື່ອທີ່ພວກເຂົາຈະໄດ້ແຍກຕົວອອກຈາກ (ທ່ານຣໍຊູລ ລຸລລໍຫ໌) ແຕ່ ທະວ່າ ຄັງຊັບສົມບັດຂອງຝາກຟ້າ ແລະ ແຜ່ນດິນໂລກ ເປັນກຳມະສິດຂອງອັລລໍຫ໌ ແຕ່ຫາກວ່າ ພວກຄົນໜ້າຊື່ໃຈຄົດບໍ່ເຂົ້າໃຈ”** (ອັລມຸນາຟີກູນ63:7)

*2. ຍຸຍົງໃຫ້ລະຖິ້ມການຕໍ່ສູ້ ແລະ ການເສຍສະລະທັ້ງຄໍາເວົ້າ ແລະ ການກະທໍາ (ອັລຈິຮາດ)*

ພວກມຸນາຟິກີນ ຄົນຫນ້າຊື່ໃຈຄົດ ຮູ້ດີວ່າໄຊຊະນະຂອງຊາວມຸດສະລິມມີເໜືອກວ່າພວກມຸຊຣິກີນ ແລະ ພວກຍະຮູດຫຼາຍຄັ້ງ ເຮັດໃຫ້ພະລັງອໍານາດຂອງມຸສລິມເພີ່ມທະວີຫຼາຍຂຶ້ນ ແລະ ເຮັດໃຫ້ມີຄວາມຫມັ້ນຄົງຍິ່ງຂຶ້ນ ດ້ວຍເຫດນີ້ພວກມຸນາຟິກີນພະຍາຍາມເຜີຍແຜ່ແນວຄວາມຄິດຂອງເຂົາເຈົ້າ ໃຫ້ລະຖິ້ມການເຮັດຈິຮາດ (ການເສຍສະລະໃນການສູ້ຮົບ) ແລະ ເຮັດໃຫ້ຂວັນກໍາລັງໃຈຂອງມຸສລິມອ່ອນແອລົງ ບາງຄັ້ງມາໃນຮູບແບບຂອງຄໍາເວົ້າຄືສິ່ງທີ່ໄດ້ກ່າວໃນສົງຄາມຕະບູ໊ກ ວ່າ:

**"ພວກທ່ານ ຢ່າອອກໄປເລີຍ ໃນຂະນະທີ່ອາກາດຮ້ອນຫຼາຍ"**

ແລະ ໃນສົງຄາມອູຮຸດ ຂະນະທີ່ຊາວມຸດສະລິມບາງຄົນໄດ້ຖືກຂ້າຕາຍ (ຊະຮີດ), ພວກມຸນາຟິໄດ້ເວົ້າວ່າ: ດັ່ງທີ່ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ໄດ້ແຈ້ງໃຫ້ຊາບວ່າ:

**"ບັນດາຜູ້ທີ່ເວົ້າວ່າ (ອັບດຸລລໍຫ໌ ອິບນຸ ອຸໄບ ອິບນີ ຊະລູລ) ກັບພີ່ນ້ອງຂອງພວກເຂົາ ຂະນະທີ່ລາວນັ່ງຢູ່ລາລ້າວ່າ ຖ້າພວກເຂົາເຊື່ອຟັງຂ້ອຍ ພວກເຂົາກໍ່ຈະບໍ່ຖືກຂ້າຕາຍ ຈົ່ງກ່າວເຖີດ (ມຸຮໍາມັດ) ວ່າ ພວກທ່ານຈົ່ງປ້ອງກັນຄວາມຕາຍໃຫ້ພົ້ນຈາກຕົວຂອງພວກທ່ານເຖີດ ຖ້າຫາກພວກເຈົ້າເປັນຄົນເວົ້າຄວາມຈິງ (ສະນັ້ນ ສະແດງວ່າເຂົາຈະເປັນຜູ້ຖືກທອດຖິ້ມນັ່ນເອງ)"**

(ອັລ-ອະລາອິມຣອນ 3: 168)

ສ່ວນໃນຮູບແບບການກະທໍາ ຄືການສະແດງອອກ, ເຊັ່ນ: ພວກເຂົາຈໍານວນ 300 ຄົນ ໄດ້ຖອນຕົວອອກຈາກກອງທັບມຸດສະລິມໃນສົງຄາມອຸຮູດ ໃນຂະນະທີ່ເດີນທາງຮ່ວມໄປກັບຊາວມຸດສະລິມ ການກະທໍາດັ່ງກ່າວມີຈຸດປະສົງເພື່ອກໍ່ຄວາມວຸ່ນວາຍ ແລະ ເຮັດໃຫ້ຊາວມຸດສະລິມເສຍຂວັນກໍາລັງໃຈ

*3. ຊ່ວຍເຫຼືອ ແລະ ສະຫນັບສະຫນູນສັດຕູຂອງອິສລາມ ທີ່ຈະເຮັດສົງຄາມກັບມຸສລິມ*

ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ພຣະອົງໄດ້ຊີ້ແຈງຄວາມສໍາພັນຂອງພວກມຸນາຟິກີນ ທີ່ມີຕໍ່ບັນດາສັດຕູຂອງອິສລາມ ແລະ ໃຫ້ຄວາມຮ່ວມມືກັບສັດຕູໃນການວາງແຜນເພື່ອເຮັດສົງຄາມກັບຊາວມຸດສະລິມ ດັ່ງຄໍາດໍາລັດຂອງອັລລໍຫ໌ ຊຸບຮານະຮູ ວະຕະອາລາ ທີ່ກ່າວເຖິງພວກເຂົາ:

**"ແລະ ເມື່ອພວກເຂົາ (ຄົນໜ້າຊື່ໃຈຄົດ) ພົບກັບບັນດາຜູ້ສັດທາ ເຂົາເຈົ້າກໍ່ຈະເວົ້າວ່າ: ພວກເຮົາໄດ້ສັດທາເຊື່ອແລ້ວ ແລະ ເມື່ອເວລາທີ່ເຂົາເຈົ້າຢູ່ກັບບັນດາຫົວໂຈກຂອງພວກເຂົາແຕ່ລໍາພັງ ພວກເຂົາກໍ່ເວົ້າວ່າ: ພວກເຮົາຍັງຢູ່ກັບພວກທ່ານ ແທ້ຈິງແລ້ວ ພວກເຮົາພຽງແຕ່ເປັນຜູ້ເຍາະເຍີ້ຍເທົ່ານັ້ນ"**

(ອັລ-ບະກໍເຮາະຫ໌ 2:14)

ຄວາມຫມາຍຂອງຄຳວ່າ **"ຊະຍາຕີນີຮີນ"** ໃນທີ່ນີ້ຫມາຍເຖິງຫົວຫນ້າ ຜູ້ນຳທີ່ເປັນບາດຫຼວງຂອງພວກຍະຮູດ ຫົວຫນ້າຜູ້ນຳມຸຊຣີກີນ ແລະ ພວກມຸນາຟິກີນ[1] ແຜນການນັ້ນແມ່ນ ພວກເຂົາເຈົ້າໄດ້ສ້າງມັສຍິດຫຼັງໜຶ່ງຂຶ້ນມາເພື່ອສະແດງໃຫ້ເຫັນວ່າ ເຂົາເຈົ້າເຮັດການລະຫມາດ ແຕ່ໃນຄວາມເປັນຈິງແລ້ວມັສຍິດຖືກສ້າງຂຶ້ນເພື່ອໃຊ້ຈັດປະຊຸມກັນ ເນື່ອງຈາກວ່າມັນຫ່າງໄກຈາກສາຍຕາຂອງຊາວມຸດສະລິມ ສາມາດສົນທະນາຕາມໃຈມັກ ແລະ ມີການພົບປະກັບຜູ້ແທນທີ່ເປັນສັດຕູຂອງມຸສລິມ ເພື່ອກຳໜົດແຜນການຕ່າງໆໃນມັສຍິດນັ້ນ ພວກເຂົາເຈົ້າໄດ້ສ້າງມັສຍິດກ່ອນທີ່ທ່ານຣໍຊູລ ລຸລລໍຫ໌ ﷺ ຈະໄປເຮັດສົງຄາມຕະບູ໊ກພຽງເລັກນ້ອຍ ແລະ ຮ້ອງຂໍໃຫ້ທ່ານຣໍຊູລ ລຸລລໍຫ໌ ﷺ ໄປອະທິຖານລະຫມາດຢູ່ມັສຍິດແຫ່ງນັ້ນ ເພື່ອຈະເປັນຫຼັກຖານໃນການເຫັນດີຂອງທ່ານຣໍຊູລ ລຸລລໍຫ໌ ທ່ານໄດ້ສັນຍາວ່າຈະໄປມັສຍິດນັ້ນເພື່ອອະທິຖານຫຼັງຈາກການສູ້ຮົບທີ່ຕະບູ໊ກ ແຕ່ຫຼັງຈາກເດີນທາງກັບຄືນມາ ແລະກ່ອນທີ່ຈະມາຮອດເມືອງມະດີນະຫ໌ ພຽງແຕ່ມື້ຫນຶ່ງ ພຣະອົງອັລລໍຫ໌ ﷻ ໄດ້ປະທານອາຍະຫ໌ຕ່າງໆ ລົງມາໃຫ້ແກ່ທ່ານຣໍຊູລ ລຸລລໍຫ໌ ໂດຍເປີດເຜີຍເຖິງຄວາມຕັ້ງໃຈອັນຊົ່ວຮ້າຍຂອງພວກມຸນາຟິກີນ ໄວ້ໃນອາຍະຫ໌ເຫຼົ່ານັ້ນວ່າ:

**"ແລະ ພວກທີ່ຍຶດເອົາມັສຍິດຫຼັງໜຶ່ງເພື່ອເຮັດໃຫ້ເກີດຄວາມເດືອດຮ້ອນ ແລະ ການປະຕິເສດສັດທາ ແລະ ເຮັດໃຫ້ເກີດການແບ່ງແຍກລະຫວ່າງຜູ້ເຊື່ອຖືສັດທາດ້ວຍກັນ ແລະ ມັນເປັນບ່ອນລີ້ໄພສຳລັບຜູ້ທີ່ເຮັດການຕໍ່ຕ້ານອັລລໍຫ໌ ແລະ ຣໍຊູລ ລຸລລໍຫ໌ ມາກ່ອນ ແລະ ແນ່ນອນພວກເຂົາຈະສາບານວ່າພວກເຮົາບໍ່ມີເຈດຕະນາອື່ນນອກໄປຈາກສິ່ງທີ່ດີ ແລະ ອັລລໍຫ໌ ຊົງເປັນພະຍານວ່າເຂົາເຈົ້າເປັນຄົນຂີ້ຕົວະຢ່າງແນ່ນອນ"** (ອັດເຕົາບະຫ໌ 9:107)

*4. ເຍາະເຍີ້ຍຊາວມຸດສະລິມ*

ສ່ວນຫນຶ່ງຂອງວິທີການເຍາະເຍີ້ຍຂອງພວກມຸນາຟິກີນ ທີ່ມີຕໍ່ຊາວມຸດສະລິມ ຕໍ່ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ແລະ ຣໍຊູລຂອງພຣະອົງ ຕະຫຼອດຈົນບັນດາມຸມິນ ດັ່ງເຊັ່ນ ລະຫວ່າງທີ່ຂຸດສະນາມເພາະຢູ່ນັ້ນ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ແຈ້ງຂ່າວດີແກ່ບັນດາມຸມິນຜູ້ສັດທາວ່າ ອັລລໍຫ໌ຊຸບຮານະຮູວະຕະອາລາ ພຣະອົງຈະຊົງເປີດເມືອງຊາມ (ຊີເຣຍ) ເມືອງເປີເຊຍ ແລະ ເມືອງເຢເມນໃຫ້ແກ່ບັນດາມຸມິນຜູ້ສັດທາ ພວກມຸນາຟິກີນ ໄດ້ເວົ້າວ່າຕາມທີ່ພຣະອົງອັລລໍຫ໌ ໄດ້ກ່າວກ່ຽວກັບພວກເຂົາໃຫ້ຊາບວ່າ:

**"ແລະ ຈົ່ງລຳລຶກເຖິງຂະນະທີ່ພວກມຸນາຟິກີນ ແລະ ບັນດາຜູ້ທີ່ຫົວໃຈຂອງພວກເຂົາມີໂລກເຈັບໄດ້ກ່າວວ່າ: 'ອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ບໍ່ໄດ້ສັນຍາຫຍັງກັບພວກເຮົາ' ນອກເໜືອໄປຈາກການຫຼອກລວງເທົ່ານັ້ນ"** (ອັນອາຊາບ 33:12)

ຂະນະທີ່ພວກມຸນາຟິກີນ ຫລຽວເບິ່ງຜູ້ທີ່ເຊື່ອສັດທາແຂ່ງຂັນກັນບໍລິຈາກໃນທົນທາງຂອງອັລລໍຫ໌ ໄດ້ນຳເອົາສັບສິນເງິນທອງມາກອງຮ່ວມກັນ ພວກມຸນາຟິກີນໄດ້ເວົ້າທີ່ມແທງ ແລະ ເຍາະເຍີ້ຍ ເມື່ອເຫັນຄົນບໍລິຈາກເງິນຫຼາຍກໍກ່າວຫາວ່າໂອ້ອວດ ໃຜທີ່ບໍລິຈາກພຽງເລັກນ້ອຍ ກໍ່ເວົ້າວ່າລາວເຮັດສຸດຄວາມສາມາດແລ້ວ ພວກມຸນາຟິກີນເວົ້າວ່າ:

**"ແທ້ຈິງອັລລໍຫ໌ ຊຸບຮານະຮູ ວະຕະອາລາ ຊົງລຳລວຍ, ບໍ່ຕ້ອງການການບໍລິຈາກຂະໜາດນີ້."**

ທັນທີທັນໃດນັ້ນ, ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ໄດ້ປະທານອາຍະຫ໌ລົງມາກ່ຽວກັບພວກເຂົາວ່າ

**"ພວກທີ່ຕຳໜິບັນດາຜູ້ທີ່ສະໝັກໃຈ ຈາກບັນດາຜູ້ທີ່ເຊື່ອສັດທາໃນການບໍລິຈາກທານ ແລະໄດ້ວິພາກວິຈານຜູ້ທີ່ບໍ່ພົບເຫັນສິ່ງໃດ (ເພື່ອຈະບໍລິຈາກ) ນອກຈາກຄ່າໃຊ້ຈ່າຍແຮງງານອັນເລັກນ້ອຍຂອງພວກເຂົາ ແລ້ວຍັງໄດ້ເຍາະເຍີ້ຍພວກເຂົາ (ຜູ້ບໍລິຈາກ) ນັ້ນ ອັລລໍຫ໌ໄດ້ຊົງເຍາະເຍີ້ຍພວກເຂົາແລ້ວ ແລະສຳລັບພວກເຂົານັ້ນ ຄືການລົງໂທດທີ່ເຈັບປວດ"** (ອັດເຕົາບະຫ໌ 9:79)

*5. ການໂຄສະນາຊວນເຊື່ອທີ່ບໍ່ຖືກຕ້ອງໃນສັງຄົມມຸດສະລິມ*

ການເຜີຍແຜ່ກະຈ່າຍສິ່ງທີ່ເປັນຄວາມເທັດຂອງພວກມຸນາຟິກີນ ໂດຍການສ້າງເລື່ອງທີ່ບໍ່ເປັນຄວາມຈິງເພື່ອສ້າງຄວາມແຕກແຍກ ແລະ ເຮັດໃຫ້ເກີດຄວາມຂັດແຍ້ງ ການແພ່ກະຈາຍເລື່ອງເທັດທີ່ໜ້າກຽດຊັງທີ່ສຸດຄື ການສ້າງຂ່າວປອມກ່ຽວກັບ ທ່ານຍິງອາອິຊະຫ໌ ຣໍດີຍັລລໍຮຸ ອັນຮາ ອູມມິລມຸ ມີນີນ (ແມ່ຂອງບັນດາມຸດສະລິມທັງຫມົດ) ເມື່ອໂອກາດອຳນວຍໃຫ້ແກ່ພວກມຸນາຟິກີນ ເມື່ອຄັ້ງທີ່ທ່ານຣໍຊູລ ﷺ ໄດ້ເດີນທາງກັບຄືນຈາກສົງຄາມ **"ບະນີມຸຊຕໍ່ລີກ"** ຕຸ້ມຫູຂອງທ່ານຍິງໄດ້ຕົກລົ່ນເສຍ ນາງຈຶ່ງໄດ້ອອກໄປຄົ້ນຫາມັນ ໃນຂະນະທີ່ ທ່ານຣໍຊູລ ﷺ ແລະ ສະຫາຍຂອງທ່ານ ໄດ້ກະກຽມທີ່ຈະເດີນທາງຕໍ່ໄປ ເຈົ້າໜ້າທີ່ທີ່ແບກສະລຽງ[2] **"ເຮົາດາຈ"** ເຂົ້າມາເຮັດໜ້າທີ່ຂອງເພິ່ນໂດຍຄິດວ່ານາງຢູ່ໃນ "ເຮົາດາຈ" ນັ້ນປະກອບກັບທ່ານຍິງເປັນຄົນມີນ້ຳຫນັກເບົາ ເມື່ອນາງກັບຄືນມາຈາກການຊອກຫາຕຸ້ມຫູທີ່ເສຍໄປ ໄດ້ພົບວ່າກຸ່ມຄະນະດັ່ງກ່າວໄດ້ອອກເດີນທາງໄປແລ້ວ ສະນັ້ນ ນາງຈຶ່ງນັ່ງຢູ່ບ່ອນເກົ່ານັ້ນບໍ່ໄປໃສ

ແລະ ເມື່ອມີສະຫາຍທ່ານຫນຶ່ງຄື **ທ່ານຊໍຟວານ ອິບນິລ ມູອັດດອລ ຣໍດີຍັລລໍຮຸ ອັນຮຸ** ໄດ້ຜ່ານມາ ລາວແມ່ນຜູ້ທີ່ຢູ່ເບື້ອງຫຼັງຂອງກອງທະຫານເພື່ອທີ່ຈະກວດກາ ສະນັ້ນລາວຈຶ່ງໄດ້ໃຫ້ນາງນັ່ງອູດຂອງລາວ ເມື່ອມາຮອດເມືອງມາດີນະຫ໌ ພວກມຸນາຟິກີນນຳພາໂດຍ **ອັບດຸລລໍຫ໌ ບິນອຸໄບ ຊະລູລ** ໄດ້ສະແດງອາການກຽດຊັງຢ່າງຈະແຈ້ງ ແລະ ເປີດເຜີຍການປະຕິເສດສັດທາອອກມາຢ່າງຮ້າຍແຮງ ໂດຍກ່າວຫາທ່ານຍິງອາອິຊະຫ໌ ຣໍດີຍັລລໍຮຸອັນຮາ ວ່ານາງເຮັດເລື່ອງ "ຟາຮິຊະຫ໌" (ລາມົກ, ການຫລິ້ນຊູ້ຜິດປະເວນີ)

ກັບທ່ານຊໍຟວານ ຮໍດີຍັລລໍຮຸ ອັນຮູ ພວກເຂົາໄດ້ກະຈາຍຂ່າວເລື່ອງເທັດໂດຍການຕີແຜ່ອອກໄປໃນບັນດາຜູ້ຄົນທັ້ງຫຼາຍ ເຮືອນຂອງທ່ານສາດສະດາ ﷺ ຈຶ່ງຕົກຢູ່ໃນຄວາມລະທົມທຸກເປັນເວລາໜຶ່ງເດືອນ

ຈົນກະທັ່ງ ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ຊົງປະທານອັລກຸຣອານລົງມາ 10 ອາຍະຫ໌ ໄດ້ແຈ້ງລາຍລະອຽດໄວ້ໃນອາຍະຫ໌ເຫຼົ່ານັ້ນ ກ່ຽວກັບການລົງໂທດອັນໃຫຍ່ຫຼວງຂອງຜູ້ທີ່ເຮັດໃຫ້ເກີດຄວາມທຸກທໍລະມານຣໍຊູລຂອງພຣະອົງ ດ້ວຍການໃສ່ຮ້າຍປ້າຍສີຊັ້ນທີ່ຕ່ຳຊາມເຊັ່ນນີ້ ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ພຣະອົງໄດ້ຊົງເຮັດໃຫ້ອຸມມຸລມຸມີນີນ ບໍລິສຸດ ແລະ ປາດສະຈາກຄວາມຜິດໃດໆ ແລະແຈ້ງຂ່າວດີກັບນາງວ່າການກ່າວຫານັ້ນ ມັນບໍ່ແມ່ນສິ່ງທີ່ບໍ່ດີສຳລັບນາງ, ແຕ່ມັນເປັນສິ່ງທີ່ດີສຳລັບນາງ ແລະ ເລີ່ມຕົ້ນຂອງອາຍະຫ໌ເຫຼົ່ານີ້ແມ່ນ ດຳລັດຂອງອັລລໍຫ໌ ທີ່ວ່າ:

**"ແທ້ຈິງແລ້ວ, ບັນດາຜູ້ທີ່ເອົາຂ່າວເທັດມານັ້ນ ເປັນກຸ່ມຄົນຈາກບັນດາພວກເຈົ້າ ພວກເຈົ້າຢ່າຄິດວ່າມັນບໍ່ດີສຳລັບພວກເຈົ້າ ແຕ່ມັນເປັນສິ່ງທີ່ດີແກ່ພວກເຈົ້າ ແລະສຳລັບທຸກຄົນໃນພວກເຂົານັ້ນ ແມ່ນສິ່ງທີ່ພວກເຂົາໄດ້ສະແຫວງຫາເອົາໄວ້ໂດຍຜ່ານຈາກການເຮັດບາບ ສ່ວນຜູ້ທີ່ວາງແຜນກ່ຽວກັບເລື່ອງນີ້ ໃນຄົນພວກນັ້ນຈະຖືກລົງໂທດຢ່າງຮ້າຍແຮງ"** (ອັນນູຣ 24:11)

---

1. ຕັຟຊີຣ ອິບນີ ກະຊີ້ຣ ເຫຼັ້ມທີ 1, ໜ້າ 72

2. ຕັຟຊີຣ ອິບນີ ກະຊີ້ຣ ເຫຼັ້ມທີ 1, ໜ້າ 76

3. ຄື ເປັນສະຖານທີ່ ທີ່ຖືກປົດບັງຢ່າງມິດຊິດສຳຫຼັບຜູ້ຍິງ ຕັ້ງຢູ່ເທິງຫລັງຂອງອູດ

**16. ທ່າທີຂອງທ່ານຣໍຊູລຕໍ່ ﷺ ພວກມຸນາຟີກີນ**

ສະພາບຂອງພວກມຸນາຟີກີນໃນການເຮັດສົງຄາມຕໍ່ຕ້ານອິດສະລາມເປັນເລື່ອງລຳບາກຫຍຸ້ງຍາກ ແລະ ບໍ່ໄດ້ເປີດເຜີຍ ພວກເຂົາເຈົ້າຈຶ່ງສະແດງອອກໂດຍການປ່ຽນມາເປັນອິດສະລາມ ເຖິງແມ່ນວ່າຫົວໃຈຂອງພວກເຂົາເຕັມໄປດ້ວຍຄວາມປະຕິເສດບໍ່ເຊື່ອ ຄວາມຄຽດແຄ້ນ ຄວາມກຽດຊັງອິສລາມ ແລະ ການຫລອກລວງຊາວມຸດສະລິມ ພວກເຂົາໄດ້ປະກາດວ່າຈະຢູ່ກັບຜູ້ທີ່ເຊື່ອ ແລະ ສາບານຢ່າງໜັກແໜ້ນ ພວກມຸນາຟີກີນຈະຂໍໂທດສຳລັບຄວາມຜິດໃດໆທີ່ລາວໄດ້ເຮັດມາຊ້ຳໆດ້ວຍພຽງລົມປາກ ແຕ່ຫົວໃຈຍັງຢືນຢັນວ່າຈະກະທຳອາຊະຍາກຳຄວາມຜິດຕ່າງໆຄືເກົ່າ ດັ່ງນັ້ນ ການເຮັດສົງຄາມກັບພວກມຸນາຟີກີນທີ່ບໍ່ແມ່ນການຕໍ່ສູ້ຢ່າງເປີດເຜີຍ ໃນຄວາມເປັນຈິງມັນແມ່ນສົງຄາມທີ່ເຊື່ອງໄວ້ຢູ່ພາຍໃນໃຈ ແລະ ປົດບັງຢູ່ໃນຫົວໃຈ

ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ພະອົງໄດ້ປົກປ້ອງບັນດາມຸມິນ ຈາກການບໍ່ໃຫ້ເຂົ້າໄປເຮັດສົງຄາມສະກັດກັ້ນພວກມຸນາຟີກີນ ແລະ ພຣະອົງເປັນຜູ້ທີ່ດູແລດ້ວຍພຣະອົງເອງໃນການໃຫ້ຄຳແນະນຳເພື່ອໂຈມຕີພວກເຂົາ ພຣະອົງຊົງເປີດເຜີຍໄວ້ໃນຫຼາຍໂອງການ ເຖິງສິ່ງທີ່ຫົວໃຈຂອງພວກເຂົາເຊື່ອງໄວ້ ພຣະອົງຊົງປະຈານເຈດຕະນາທີ່ຊົ່ວຮ້າຍຂອງພວກເຂົາ ແລະ ປະກາດໃຫ້ຮູ້ເຖິງສິ່ງທີ່ເຂົາເຈົ້າໄດ້ປົກປິດຮັກສາໄວ້ເປັນຄວາມລັບ ເຊັ່ນດຽວກັບທີ່ພຣະອົງໄດ້ແຈກແຈງລັກສະນະຂອງພວກມຸນາຟີກີນໃຫ້ແກ່ ມຸສລິມໄດ້ຮັບຮູ້ໄວ້ ເພື່ອຈະໄດ້ລະມັດລະວັງພວກເຂົາໃນທຸກເວລາ

ຮີກມະຫ໌ ໃນຫຼາຍໂອງການທີ່ໄດ້ບອກເຖິງເລື່ອງລາວຂອງພວກມຸນາຟີກີນ ຢ່າງຫຼວງຫຼາຍ ຍິ່ງກວ່າອາຍະຫ໌ຕ່າງໆທີ່ເວົ້າກ່ຽວກັບພວກມຸຊຣີກີນ ເນື່ອງຈາກວ່າ ພວກມຸຊຣີກີນ ໄດ້ປະກາດຢ່າງຊັດເຈນວ່າຕົນເອງເປັນສັດຕູ ສ່ວນທ່າທີຂອງພວກມຸນາຟີກີນໄດ້ປິດບັງເຊື່ອງມັນໄວ້ ຈຳເປັນຕ້ອງອາໄສລາຍລະອຽດ ແລະ ຄວາມກະຈ່າງເພີ່ມເຕີມ ດັ່ງນັ້ນໃນສູເຣາະຫ໌ ອາລະອິມຣອນ ຈຶ່ງເປັນການແຈກແຈງລາຍລະອຽດ ແລະ ອະທິບາຍໄວ້ຢ່າງຊັດເຈນຕໍ່ສິ່ງທີ່ເຊື່ອງໄວ້ໃນຫົວໃຈຂອງພວກເຂົາ ແລະ ໄດ້ປະຈານທ່າທີທີ່ໜ້າອັບປະຍົດຂອງພວກເຂົາໃນສົງຄາມອູຮຸດ ແລະ ຫຼາຍອາຍະຫ໌ໃນສູເຣາະຫ໌ເຕົາບະຫ໌, ອາຍະຫ໌ທີ່ຖືກປະກາດອອກມາແມ່ນຄ້າຍຄືກັບສາຍຟ້າ ທີ່ຜ່າລົງມາ ເຊິ່ງທັ້ງຄວາມກຽດຊັງ ຄວາມອິດສາລິດສະຍາ ທີ່ເຊື່ອງໄວ້ໃນຫົວໃຈ ນອກເຫນືອຈາກການຖືກລະບຸໄວ້ທັງຫມົດແລ້ວ ຍັງໄດ້ແຈກແຈງລາຍລະອຽດທີ່ກ່ຽວກັບສະຖານະພາບ ແລະ ລັກສະນະຕ່າງໆ ຂອງເຂົາເຈົ້າຢ່າງຊັດເຈນ ດ້ວຍເຫດນີ້ ສູເຣາະຫ໌ນີ້ຈຶ່ງຖືກເອີ້ນໂດຍຫຼາຍຊື່ເຊິ່ງກ່ຽວໂຍງກັບຫົວຂໍ້ທີ່ປະຈານພວກມຸນາຟີກີນ[1] ມີສູເຣາະຫ໌ທີ່ຖືກເອີ້ນໃນການຕໍ່ສູ້ທີ່ເຄີຍເກີດຂຶ້ນກັບພວກມຸນາຟີກີນ ອັລລໍຫ໌ ﷻ ພຣະອົງໄດ້ເປີດເຜີຍດ້ວຍກັບຫຼາຍອາຍະຫ໌ ທີ່ພຣະອົງໄດ້ຊົງປະທານລົງມາ

ເປັນການໂຈມຕີຢ່າງຮຸນແຮງ ຈົນເຮັດໃຫ້ຈິດໃຈຂອງພວກເຂົາວິຕົກກັງວົນ ແລະ ເຮັດໃຫ້ຫົວໃຈກະວົນກະວາຍຢູ່ທຸກໆ ມື້ ໂດຍຢ້ານວ່າອາຍະຫ໌ອື່ນຈະລົງມາປະຈານພວກເຂົາອີກ

ດັ່ງທີ່ອັລລໍຫ໌ ﷻ ໄດ້ຊົງກ່າວວ່າ

**"ບັນດາພວກມຸນາຟິກີນ ຢ້ານວ່າຈະມີ ສູເຣາະຫ໌ໜຶ່ງ ຖືກປະທານລົງມາແກ່ພວກເຂົາ ເຊິ່ງແຈ້ງໃຫ້ພວກເຂົາຮູ້ເຖິງສິ່ງທີ່ມີຢູ່ໃນໃຈຂອງພວກເຂົາ (ມູຮຳມັດ) ຈົ່ງກ່າວເຖີດວ່າ: ພວກທ່ານຈົ່ງເຍາະເຍີ້ຍກັນເຖີດ ແທ້ຈິງແລ້ວ ອັລລໍຫ໌ ຈະຊົງໃຫ້ອອກມາສິ່ງທີ່ພວກທ່ານຢ້ານກົວ"** (ອັດເຕົາບະຫ໌ 9:64)

ສ່ວນທ່ານຣໍຊູລລຸລລໍຫ໌ ﷺ ຕ້ອງປະຕິບັດຕໍ່ພວກເຂົາຢ່າງລະມັດລະວັງ ເປັນການປະຕິບັດຕາມຄຳສັ່ງຂອງອັລລໍຫ໌ ທີ່ມີໃຫ້ທ່ານ ໂດຍພຣະອົງກ່າວວ່າ:

**ແລະເມື່ອເຈົ້າເຫັນພວກເຂົາແລ້ວ ຮ່າງກາຍຂອງພວກເຂົາຈະເປັນທີ່ພໍໃຈແກ່ເຈົ້າ ແລະ ຫາກພວກເຂົາເວົ້າ ເຈົ້າກໍ່ຈະຟັງຄຳເວົ້າຂອງເຂົາ ມັນຄືກັບວ່າພວກເຂົາເປັນທ່ອນໄມ້ທີ່ຖືກຍັນໄວ້ ພວກເຂົາຄິດວ່າທຸກໆ ສຽງຮ້ອງນັ້ນເປັນປະຕິປັກຕໍ່ພວກເຂົາ ພວກເຂົາ(ພວກມຸນາຟິກີນ) ຄືສັດຕູ, ດັ່ງນັ້ນ (ມູຮຳມັດ) ຈົ່ງລະວັງພວກເຂົາ ຂໍອັລລໍຫ໌ເຮັດໃຫ້ພວກເຂົາໄດ້ຮັບຄວາມອັບປະຍົດ ແລ້ວພວກເຂົາໄດ້ຫັນໜີຈາກ (ສາສະນາອິດສະລາມ) ໄດ້ແນວໃດ?** (ອັລ ມຸນາຟີກູນ 63:4)

ທ່ານຣໍຊູລລຸລລໍຫ໌ ﷺ ຕ້ອງປະຕິບັດດ້ວຍນະໂຍບາຍທີ່ໃຊ້ຄວາມອົດທົນອັນຍິ່ງໃຫຍ່ ເຊິ່ງທ່ານຕ້ອງຍອມຮັບການຂໍອະໄພໃນຄວາມຜິດທີ່ໄດ້ເຮັດ ດ້ວຍທ່າທີເສແສ້ງທັ້ງໆທີ່ບໍ່ມີຄວາມຈິງໃຈ ແລະ ເປັນທີ່ປະຈັກເຫັນໄດ້ວ່າ ຜູ້ນຳຂອງພວກມຸນາຟິກີນ ໄດ້ກ່າວປະໂຍກໜຶ່ງຂຶ້ນມາວ່າ:

لَئِن رَّجَعْنَا إِلَى الْمَدِينَةِ لَيُخْرِجَنَّ الأَعَزُّ مِنْهَا الأَذَلَّ

**"ຖ້າພວກເຮົາກັບຄືນໄປເມືອງມະດີນະຫ໌ ຜູ້ທີ່ມີກຽດຫຼາຍກວ່າຈະຂັບໄລ່ຄົນຕໍ່າຕ້ອຍອອກຈາກເມືອງມາດີນະຫ໌ຢ່າງແນ່ນອນ"**

ໝາຍຄວາມວ່າ ລາວ (**ອັບດຸລລໍຫ໌ ບິນອຸໄບ ຊະລູລ**) ຜູ້ທີ່ອ້າງວ່າຕົນເອງເປັນບຸກຄົນທີ່ມີກຽດຈະຂັບໄລ່ ທ່ານຣໍຊູລລຸລລໍຫ໌ ﷺ ອອກໄປ

ທ່ານອຸມັຣ ອິບນຸລ ຄອດຕອບ ຣໍດີຍັລລໍຮຸ ອັນຮຸ ເວົ້າວ່າ:

**"ໂອ້ ທ່ານຣໍຊູລລຸລລໍຫ໌ ﷺ ປ່ອຍໃຫ້ຂ້າພະເຈົ້າຂ້າຄໍຄົນຊົ່ວນີ້ເຖີດ"**

ທ່ານຣໍຊູລລຸລລໍຫ໌ ກ່າວວ່າ:

**"ປ່ອຍໃຫ້ເຂົາໄປຊະ ເພາະຜູ້ຄົນຈະບໍ່ໄດ້ເວົ້າກັນວ່າ ມູຮຳມັດຂ້າຫມູ່ຂອງລາວ**[2]

ເມື່ອພວກເຂົາເດີນທາງໃກ້ສິຮອດເມືອງມະດີນະຫ໌, ລູກຊາຍຂອງອັບດຸລລໍຫ໌ ອິບນຸ ອຸໄບ ເຊິ່ງເປັນຊາວມຸດສະລິມ, ໄດ້ມາຫາທ່ານຣໍຊູລລຸລລໍຫ໌ ﷺ ແລະ ເວົ້າກັບທ່ານວ່າ:

**"ຂ້ອຍຮູ້ວ່າ ທ່ານຕ້ອງການຈະຂ້າພໍ່ຂອງຂ້ອຍ ເພາະເຫດທີ່ລາວໄດ້ເຮັດລ່ວງເກີນທ່ານຫຼາຍຄັ້ງ ຖ້າທ່ານຕ້ອງການເຮັດ ກະລຸນາສັ່ງໃຫ້ຂ້ອຍເຮັດມັນ ຂ້ອຍຈະເອົາຫົວຂອງລາວມາໃຫ້ທ່ານ ຂ້ອຍຢ້ານວ່າທ່ານປ່ອຍໃຫ້ຄົນອື່ນເຮັດແລ້ວ ຫົວໃຈຂອງຂ້ອຍຄົງຈະບໍ່ຍອມໃຫ້ຂ້ອຍເບິ່ງຜູ້ຊາຍທີ່ຂ້າພໍ່ຂອງຂ້ອຍຍ່າງຢູ່ໃນທ່າມກາງຜູ້ຄົນໄດ້ເປັນແນ່ໃນທີ່ສຸດ ຂ້ອຍກໍ່ຈະຕ້ອງຂ້າຄົນມຸມິນ ເພາະເຫດຈາກຄົນກາຟີຣ (ຖືກຂ້າ) ແລ້ວຂ້ອຍກໍ່ຈະຕ້ອງເຂົ້າໄປຢູ່ໃນນະລົກ"**

ທ່ານຣໍຊູລລຸລລໍຫ໌ ﷺ ກ່າວກັບ ອັບດຸລລໍຫ໌ (ຜູ້ທີ່ເປັນລູກຊາຍຂອງຫົວຫນ້າຄົນຫນ້າຊື່ໃຈຄົດ) ເວົ້າວ່າ:

**"ໃນທາງກົງກັນຂ້າມ ພວກເຮົາຈະປະຕິບັດກັບລາວຢ່າງດີ ພວກເຮົາຈະເຮັດມັນຢ່າງສຸພາບ ເຮົາຈະຄົບຫາກັບລາວດ້ວຍຄວາມດີ ຕາບໃດທີ່ລາວຍັງຢູ່ກັບພວກເຮົາ ຫຼັງຈາກນັ້ນແລ້ວ ຖ້າລາວໄປສ້າງເລື່ອງຂຶ້ນມາອີກ ພວກພ້ອງຂອງລາວນັ້ນແຫລະທີ່ຈະວິພາກວິຈານ ແລະ ລົງໂທດ ຫຼືບໍ່ໃຫ້ອະໄພລາວ**

ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ກ່າວກັບ ທ່ານອຸມັຣ ອິບນຸລ ຄອດຕອບ ຣໍດີຍັລລໍຮຸ ອັນຮຸ ເວົ້າວ່າ:

**ອຸມັຣ, ເອີ່ຍ ເຈົ້າເປັນແນວໃດ? ຂ້າພະເຈົ້າຂໍສາບານອັລລໍຫ໌ ﷻ ຂ້ອຍບໍ່ໄດ້ເຈດຕະນາຮ້າຍຖ້າຫາກວ່າ ຂ້ອຍຂ້າລາວໃນມື້ທີ່ທ່ານເວົ້າກັບຂ້ອຍ(ມູຮຳມັດ) ວ່າ ຂ້ອຍ (ອຸມັຣ)ຈະຂ້າລາວ ແນ່ນອນວ່າຈະເຮັດໃຫ້ຄວາມໂກດແຄ້ນລຸກໂຊນຂຶ້ນມາ.**

ທຸກຍຸກທຸກສະໄໝ ຍັງມີໃຫ້ເຫັນເຖິງຄຸນລັກສະນະຂອງພວກມຸນາຟີກີນ ທີ່ໄດ້ກ່າວໄວ້ຢ່າງຊັດເຈນໃນໂອງການຕ່າງໆຂອງອັລກຸຣອານ ອະທິບາຍສະພາບທີ່ຊັບຊ້ອນ ແລະ ການໃຊ້ຄຳເວົ້າເຍາະເຍີ້ຍຕໍ່ຊາວມຸດສະລິມ ເພາະວ່າພວກມຸນາຟີກີນ ແລະ ພວກພ້ອງນັ້ນ ຂອງເຂົາເຈົ້າຈະບໍ່ປະຖິ້ມຄຸນລັກສະນະດັ່ງກ່າວ ບໍ່ວ່າຈະຍຸກສະໄໝໃດ

---

1. ຊື່ເຫຼົ່ານີ້ (ເປັນການປະຈານ) ເພາະມັນໄດ້ແຊ ໄດ້ປະຈານ ພວກມຸນາຟີກີນ (ຟັຕຮຸລກໍດີຣ ຂອງ ເຊົາການີ) ເຫຼັ້ມທີ 2, ໜ້າ 332.

2. ຊໍຮີຫ໌ ອັລບຸກຄໍຣີ ບົດອັລ ມະນາກິ້ບ ສິ່ງທີ່ຖືກຫ້າມບໍ່ໃຫ້ກ່າວອ້າງແບບໃນຈາຫີຣີຍະຫ໌ ເລກທີ່ 8

## 17. ເຫດການຊ່ວງສຸດທ້າຍຂອງທ່ານຣໍຊູລ ລຸລລໍຫ໌ ຊໍລັລລໍຮຸ ອະໄລຮີ ວະຊັລລໍາ ບັນດາຜູ້ຕາງໜ້າໄດ້ພາກັນເຂົ້າພົບກັບທ່ານຣໍຊູລ ລຸລລໍຫ໌ ﷺ

ຫຼັງຈາກການໄດ້ເປີດເມືອງມັກກະຫ໌ ການຕໍ່ຕ້ານຈາກຊາວກູເຣໍຊໄດ້ສິ້ນສຸດລົງ ພວກເຂົາທັງໝົດພາກັນເຂົ້າຮັບເປັນອິດສະລາມ ແລະ ຫຼັງຈາກການປາບປາມຊົນເຜົ່າຂອງ **"ຮາວາຊິນ"**ໃນສະນາມສູ້ຮົບຮຸໄນ ອຸປະສັກອັນໃຫຍ່ຕໍ່ການເຜີຍແຜ່ຂອງອິດສະລາມໃນແຫຼມສະມຸດອາຣັບ ແລະ ຊົນເຜົ່າຕ່າງໆ ໄດ້ໝົດໄປ ສວນເຜົ່າອື່ນໆ ສັງເກດເບິ່ງທີທ່າຂໍ້ຂັດແຍ່ງລະຫວ່າງມຸຮໍາມັກ ກັບຊາວກຸເຣໍຊ ເມື່ອການຕ້ານໝົດໄປເຂົ້າຊາວກຸເຣໍຊເຂົ້າຮັບອິດສະລາມ ຊົນເຜົ່າທີ່ຍັງເຫຼືອຈຶ່ງເຂົ້າຮັບອິດສະລາມ ເຊັ່ນກັນ[1]

ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ພຣະອົງໄດ້ປະທານສູເຣາະຫ໌ ອັນນັສຣ ໂດຍທີ່ພຣະອົງໄດ້ກ່າວວ່າ:

**ເມື່ອການຊ່ວຍເຫຼືອຂອງ ອັລລໍຫ໌ ໄດ້ມາພ້ອມກັບການພິຊິດ (ເມືອງມັກກາ)**

**ເຈົ້າຈະເຫັນຜູ້ຄົນເຂົ້າຮັບສາສະນາອິສລາມ ຂອງອັລລໍຫ໌ ເປັນກຸ່ມໆ ຢ່າງຫຼວງຫຼາຍ**

**ສະນັ້ນ ເຈົ້າຈົ່ງສະດຸດີຍ້ອງຍໍ ສັນລະເສີນ ແລະ ຂໍການໃຫ້ອະໄພຈາກພຣະຜູ້ເປັນເຈົ້າຂອງເຈົ້າເຖີດ ເພາະ ພຣະອົງຕອບຮັບຜູ້ທີ່ກັບໃຈສະເໝີ.**

(ອັນ-ນາສ 110:1-3)

ໃນປີທີ່ 9 ຮ.ສ. ບັນດາຜູ້ຕາງໜ້າຈາກແຫຼມສະມຸດອາຣັບໄດ້ຫຼັ່ງໄຫຼເຂົ້າມາເມືອງມາດີນະຫ໌ ຈົນກະທັ່ງຖືກເອີ້ນວ່າປີ **ອັມມູ້ລວຸພູດ**[2] ເວົ້າກັນວ່າຜູ້ຕາງໜ້າເຫຼົ່ານັ້ນມີຈຳນວນຫຼາຍເຖິງ 70 ຮອດ 100 ຄົນ[3] ເຊິ່ງເປັນຕົວແທນຂອງເຜົ່າຕ່າງໆ ຈາກເໜືອຫາໃຕ້ ຕາເວັນອອກເຖິງຕາເວັນຕົກ[4] ປະຊາຊົນຊາວເມືອງມາດີນະຫ໌ ມີຄວາມກະຕືລືລົ້ນທີ່ຈະຕ້ອນຮັບຜູ້ຕາງໜ້າທີ່ມາຢ້ຽມຢາມ ເຊິ່ງຈຳນວນຂອງແຕ່ລະກຸ່ມມີບໍ່ເທົ່າກັນ ບາງກຸ່ມມີ 9 -10 ຄົນ, ບາງກຸ່ມມີເຖິງ 400 ຄົນ[5] ແລະ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ໃຫ້ຄວາມສຳຄັນອັນໃຫຍ່ຫຼວງຕໍ່ຜູ້ຕາງໜ້າເຫຼົ່ານັ້ນຢ່າງດີ ເຊິ່ງສາມາດເຫັນໄດ້ຈາກປະກົດການດັ່ງຕໍ່ໄປນີ້;

1. ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ແຕ່ງຕັ້ງ ອະບູບັກກັຣ ເປັນຜູ້ນຳພາຊາວມຸດສະລິມທັງໝົດປະຕິບັດເຮັດຮັຈໃນປີນັ້ນ ເພາະ ທ່ານຕ້ອງຕ້ອນຮັບແຂກທີ່ມາຕະຫຼອດປີ[6]

2. ການຕ້ອນຮັບຜູ້ແທນດ້ວຍຄວາມເມດຕາ, ເຄົາລົບ ແລະ ໃຫ້ສະຖານທີ່ພັກທີ່ປອດໄພ ໂດຍບາງຄົນກໍໃຫ້ພັກຢູ່ໃນມັສຍິດ ແລະ ບາງຄົນກໍຢູ່ໃນເຮືອນຂອງສໍຮາບະຫ໌

3. ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຮັບຟັງຄຳປາໄສຂອງເຂົາເຈົ້າ ແລະ ຮັບຮູ້ຄວາມຮູ້ສຶກຂອງເຂົາເຈົ້າ ແລະ ຕອບຂໍ້ສົງໃສຂອງເຂົາເຈົ້າ ເຊິ່ງສ້າງຄວາມປະທັບໃຈອັນຍິ່ງໃຫຍ່

ເມື່ອບັນດາຜູ້ຕາງຫນ້າກັບຄືນໄປບ້ານເກີດເມືອງນອນຂອງພວກເຂົາ, ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ໃຫ້ຊໍຮາບະຫ໌ບາງທ່ານຕິດຕາມໄປນຳ ເພື່ອໄປສອນອັລກຸຣອານ ແລະ ຄຳສອນທາງສາສະຫນາໃຫ້ແກ່ຊົນເຜົ່າເຫຼົ່ານັ້ນ ແລະ ຍັງໄດ້ແຕ່ງຕັ້ງຜູ້ນຳໃນການຕັດສິນໃຫ້ແກ່ທຸກໆຊົນເຜົ່າ

ດ້ວຍເຫດຜົນນີ້, ແຫຼມສະມຸດອາຣັບໃນຍຸກທຳອິດນັ້ນ ໄດ້ຖືກລວມເຂົ້າເປັນຫນຶ່ງ ແລະ ມີເປົ້າຫມາຍ ແລະ ຫົວໃຈອັນດຽວກັນເພື່ອອິສລາມ ດ້ວຍການນະມັດສະການ ອັລລໍຫ໌ ຊຸບຮານະຮູ ວະຕະອາລາພຽງແຕ່ພຣະອົງດຽວ

## 17.1 ຮັດຈ໌ອຳລາ

ໃນປີທີ່ 10 ຮ.ສ, ທ່ານຣໍຊູລ ລຸລລໍຫ໌ ﷺ ມີຄວາມຕັ້ງໃຈທີ່ຈະເດີນທາງໄປປະກອບພິທີ ຮັຈ ທ່ານຈຶ່ງປະກາດເລື່ອງນີ້ຕໍ່ບັນດາຊໍຮາບະຫ໌ ແລະ ຄົນທົ່ວໄປໄດ້ຮູ້ ເມື່ອປະຊາຊົນໄດ້ຍິນຂ່າວດັ່ງກ່າວ ຈຶ່ງພາກັນກຽມພ້ອມທີ່ຈະໄປເຮັດພິທີຮັຈກັບທ່ານເປັນຈຳນວນຫຼວງຫຼາຍ ບາງຄົນເດີນທາງກັບ ທ່ານຣໍຊູລ ລຸລລໍຫ໌ ﷺ ບາງຄົນມາຮ່ວມໃນຕາມທາງ ບາງຄົນໄດ້ມາເຕົ້າໂຮມກັນຢູ່ໃນເມືອງມັກກະຫ໌ ຈຳນວນຄົນທີ່ມາປະກອບພິທີ ຮັຈ ແມ່ນມີຈຳນວນຫຼາຍ ຈົນບໍ່ສາມາດໃຫ້ທຸກຄົນໄດ້ຍິນສຽງຂອງທ່ານ ຈຶ່ງຕ້ອງໃຊ້ "ມຸບັລລິຄ" (ຜູ້ປະກາດ) ເພື່ອທີ່ຈະໃຫ້ໄດ້ຍິນໃນສິ່ງທີ່ທ່ານເວົ້າ ກ່າວກັນວ່າມີຫຼາຍເຖິງ 40,000 ຄົນ[7]

ເຫດຜົນທີ່ເອີ້ນວ່າ ຮັຈອຳລາ ຄັ້ງນີ້ເນື່ອງຈາກວ່າ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ອຳລາຊໍຮາບະຫ໌ຂອງທ່ານ ທ່ານເວົ້າວ່າ:

**ຫວັງວ່າຂ້ອຍຄົງບໍ່ໄດ້ເຮັດຮັຈ ຫຼັງຈາກປີນີ້.**

**ເອີ້ນອີກຊື່ວ່າ ຮັຈ ແຫ່ງການເຜີຍແຜ່** ເນື່ອງຈາກວ່າ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ອະທິບາຍກົດລະບຽບ(ຂໍ້ບັນຫຍັດ) ຂອງການປະກອບພິທີ ຮັຈ ມີຄຳສັ່ງເສຍຕ່າງໆຫຼວງຫຼາຍ ແລະ ຍັງໃຊ້ໃຫ້ທຸກຄົນເຜີຍແຜ່ຄຳເວົ້າຂອງທ່ານກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ຍິນມາ[8]

## 17.2 ຄຳສັ່ງເສຍຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ

ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ໃຫ້ຄຳປາໄສຂະນະເຮັດຮັຈອຳລາ ຫຼາຍຄັ້ງດ້ວຍກັນ ບາງຄັ້ງທ່ານໄດ້ກ່າວຄຳປາໄສຕາມທາງ ບາງຄັ້ງຢູ່ໃກ້ເມືອງມັກກະຫ໌ ເຊິ່ງຄຳເສຍຕ່າງໆນັ້ນ ໄດ້ໃຫ້ສາລະສຳຄັນດັ່ງຕໍ່ໄປນີ້

1. ແຈ້ງລາຍລະອຽດໃນການເຮັດປະກອບພິທີຮັຈ

2. ຫ້າມລະເມີດສິດຂອງຜູ້ອື່ນ ບໍ່ວ່າຈະເປັນຊີວິດ ຊັບສິນ ແລະ ກຽດສັກສີ

3. ເນັ້ນຫນັກໃຫ້ມີຄວາມເປັນພີ່ນ້ອງກັນລະຫວ່າງຊາວມຸດສະລິມ ແລະ ແຈ້ງໃຫ້ຊາບກ່ຽວກັບສິດທິຂອງກັນ ແລະ ກັນ

4. ໃຫ້ຍຶດໝັ້ນໃນ ຄຳພີຂອງອັລລໍຫ໌ ﷻ ແລະ ແບບຢ່າງຂອງທ່ານຣໍຊູລ ລຸລລໍຫ໌ ﷺ ແລະ ຫ້າມໂກຫົກຕໍ່ທ່ານຣໍຊູລ ລຸລລໍຫ໌ ﷺ

5. ລະວັງການແຕກແຍກ ແລະ ການຜິດຖຽງກັນລະຫວ່າງເພື່ອນມຸດສະລິມດ້ວຍກັນ ແລະ ຈົ່ງລະມັດລະວັງທີ່ຈະເດີນຮອຍຕາມຂອງໄຊຕອນ

6. ຫ້າມການກິນດອກເບ້ຍ ແລະ ຂົ່ມເຫັງເພື່ອນມະນຸດ

7. ເນັ້ນໜັກໃຫ້ຍຶດໝັ້ນໃນຫຼັກການຕ່າງໆ ແລະ ກົດລະບຽບຂອງອິດສະລາມ

8. ສັ່ງໃຫ້ບັນດາຜູ້ຊາຍເຮັດດີກັບບັນດາແມ່ຍິງ ໃຫ້ເມດຕາເຫັນອົກເຫັນໃຈ ແລະ ການດູແລເອົາໃຈໃສ່ຕໍ່ສິດທິຂອງພວກນາງ ແລະ ຍັງໄດ້ແຈ້ງສິດທິຂອງສາມີທີ່ມີຕໍ່ພັນລະຍາ

9. ເຊື່ອຟັງບັນດາຜູ້ນຳ ໃນການເຮັດຄວາມດີ

10. ສັ່ງເສຍໃຫ້ເຮັດດີກັບຂ້າໃຊ້ (ທາສ)[9]

ເມື່ອການເຮັດຮັຈອຳລາ ສຳເລັດເສັດສິ້ນ, ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຊີ້ແຈ້ງສາລະສຳຄັນ ແລະ ຄຳສັ່ງຂອງອິສລາມ ເຊິ່ງແມ່ນຄວາມໂປດປານຂອງອັລລໍຫ໌ ຊຸບຮານະຮູ ວະຕະອາລາ ທີ່ເຮັດໃຫ້ສາດສະໜາຂອງພຣະອົງສົມບູນ ແລະ ໄດ້ມອບໃຫ້ຊາວມຸດສະລິມທຸກຄົນ ໂດຍທີ່ພຣະອົງໄດ້ປະທານອາຍະຫ໌ສຸດທ້າຍ ເພື່ອເປັນການຢືນຢັນເຖິງຄວາມໂປດປານຂອງພຣະອົງໃນໂອງການທີ່ວ່າ:

**ມື້ນີ້ເຮົາໄດ້ເຮັດໃຫ້ສາສະໜາ ຂອງທ່ານສົມບູນແລ້ວ ແລະ ຄວາມໂປດປານຂອງຂ້າທີ່ໄດ້ມອບໃຫ້ພວກທ່ານ ກໍ່ສົມບູນເຊັ່ນກັນ ແລະ ເຮົາພໍໃຈຍິນດີທີ່ຈະໃຫ້ອິດສະລາມເປັນສາສະໜາຂອງພວກທ່ານ**

(ອັລ ມາອິດະຫ໌ 5:3)

---

1. ຂໍຮີຫ໌ ບູກໍຣີ ກິຕາບູລມະຄໍຊີ ບາບຸ ກໍ່ຊວະຕຸ້ລຟັຕ ຫາດີຊທີ 4302 ຟັລຟັຕຫີ້ລຣ໊ອບບານີ 8/22

2. ຊີເຣາະຫ໌ອິບນຸ ຮິຊາມ 4/221-222

3. ອັລອຳຣີ ອັຊຊີເຣາະຕຸ້ລນະບະວີຍະຫ໌ ອັຊຊໍຮີຫະຫ໌ 2/541. ດັ່ງທີ່ທ່ານຊາມີໄດ້ກ່າວໄວ້ໃນຊີເຣາະຫ໌ ຂອງລາວ.

## 18. ການເຈັບປ່ວຍແລະການເສຍຊີວິດຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ

ເມື່ອການເຮັດຮັຈອໍາລາໄດ້ສິ້ນສຸດລົງ ບັນຍັດຂອງອິສລາມຄົບຖ້ວນສົມບູນ ສານຂອງອິສລາມ ເຊິ່ງທ່ານນະບີມູຮໍາມັດ ﷺ ນໍາມາໄດ້ສິ້ນສຸດສົມບູນເຊັ່ນດຽວກັນ ດ້ວຍເຫດນີ້, ເມື່ອໜ້າທີ່ຂອງທ່ານໃນຖານະເປັນຜູ້ເຜີຍແຜ່ນໍາຄໍາສອນສາດສະຫນາຂອງ ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ສໍາເລັດແລ້ວ ກໍ່ຕ້ອງຈາກໄປເຊັ່ນດຽວກັນກັບສາດສະດາອື່ນໆ ຜູ້ທີ່ມາກ່ອນຫນ້າທ່ານ ດັ່ງທີ່ອາຍະຫ໌ໃນຄໍາພີກ່າວວ່າ:

**"ເຮົາບໍ່ໄດ້ເຮັດໃຫ້ມະນຸດຄົນໃດ ທີ່ມາກ່ອນເຈົ້າຍັງຄົງຢູ່ປະພັນ (ມີຊີວິດນິຣັນ) ເຖິງແມ່ນວ່າເຈົ້າຕາຍ ແລ້ວພວກເຂົາຈະບໍ່ຕາຍບໍ?** (ອັລ ອໍາບີຍາ 21:34)

ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ພຣະອົງໄດ້ເຮັດໃຫ້ທ່ານສາດສະດາ ﷺ ຮູ້ເຖິງຊ່ວງເວລາສຸດທ້າຍທີ່ໃກ້ເຂົ້າມາແລ້ວ ໃນຂະນະທີ່ທ່ານປະກອບພິທີຮັຈອໍາລາ ໂດຍພຣະອົງປະທານສູເຣາະຫ໌ອັລນັສ ລົງມາ:

**ເມື່ອການຊ່ວຍເຫຼືອຂອງ ອັລລໍຫ໌ ໄດ້ມາພ້ອມກັບການພິຊິດ (ເມືອງມັກກາ)**

**ເຈົ້າຈະເຫັນຜູ້ຄົນເຂົ້າຮັບສາສະນາອິສລາມ ຂອງອັລລໍຫ໌ ເປັນກຸ່ມໆ ຢ່າງຫຼວງຫຼາຍ**

**ສະນັ້ນ ເຈົ້າຈົ່ງສະດຸດີຍ້ອງຍໍ ສັນລະເສີນແລະຂໍການໃຫ້ອະໄພຈາກພຣະຜູ້ເປັນເຈົ້າຂອງເຈົ້າເຖີດ ເພາະພຣະອົງຕອບຮັບຜູ້ທີ່ກັບໃຈສະເໝີ.** (ອັນ-ນາສ 110:1-3)

ແລະ ອາຍະຫ໌ສຸດທ້າຍທີ່ກ່າວວ່າ:

**ມື້ນີ້ເຮົາໄດ້ເຮັດໃຫ້ສາສະໜາ ຂອງທ່ານສົມບູນແລ້ວ ແລະ ຄວາມໂປດປານຂອງຂ້າທີ່ໄດ້ມອບໃຫ້ພວກທ່ານ ກໍ່ສົມບູນເຊັ່ນກັນ ແລະ ເຮົາພໍໃຈຍິນດີທີ່ຈະໃຫ້ອິດສະລາມເປັນສາສະຫນາຂອງພວກທ່ານ**

(ອັລ ມາອິດະຫ໌ 5:3)

---

4. ເພື່ອເປັນການພຽງພໍຕໍ່ການອະທິບາຍລາຍລະອຽດເຖິງຈໍານວນຜູ້ຄົນ, ເບິ່ງ مهدي رزق الله ຊີເຣາະຫ໌ອິບນຸ ຮິຊາມ 4/221 ແລະຕໍ່ມາ ອັດຕະບາກອຕ ອັລກຸບຣໍ ລິອິບນິຊະອູ 1/259-291

5. ອັດຕະບາກອຕ ອັລກຸບຣໍ ລິອິບນິຊະອູ 1/291- 292 -295.

6. ອິມາດຸດດີນ ຄໍລີລ ດີຣໍຊະຫ໌ ພີຊີເຣາະຫ໌ 264

7. ຊີເຣາະຫ໌ອິບນຸ ຮິຊາມ 4/276 ອະບູຊັຣອະ ແຈ້ງຈໍານວນດັ່ງກ່າວ ອັລອັມຣີ ອັຊຊີເຣາະຕຸ້ລນະບະວີຍະຫ໌ ອັຊຊໍຮີທີຫ໌ 2/549.

8. ສູນັນ ອັລຕິຣມີຊີ ກີຕາບູ້ລຮັຈ 55. ມຸສນັດ ອິມ່າມອະມັດ 5/262

9. ຄໍາເວົ້າຂອງທ່ານຣໍຊູລລຸລລໍຫ໌ ໃນເທດສະການເຮັດບຸນ ຮັຈ, ເບິ່ງ ຊໍຮີຫ໌ບຸກຄໍຣີ ກີຕາບູ້ລມະກໍ່ຊີ ບົດຮັຈອໍາລາ ຫະດີຊທີ່ 4403-4406. ຊໍຮີຫ໌ມຸສລິມ 2/889-890 مهدي رزق الله ອັຊຊີເຣາະຕຸ້ລນະບາວີ 683

ທ່ານສາດສະດາ ﷺ ໄດ້ຮູ້ເຖິງວາລະສຸດທ້າຍຂອງທ່ານ ແລະ ທ່ານໄດ້ກ່າວຄຸດບະຫ໌ໃນຂະນະທີ່ເຮັດຮັຈອໍາລາ ແລະ ຫຼັງຈາກກັບຄືນເມືອງມາດີນະຫ໌ [1] ທ່ານກໍ່ເລີ່ມເຈັບປ່ວຍ

ສາມເດືອນຫຼັງຈາກທີ່ທ່ານກັບມາຈາກການເຮັດຮັຈ ທ່ານກໍ່ເລີ່ມເຈັບປ່ວຍ ແລະ ອາການເຈັບປ່ວຍຂອງທ່ານກໍ່ຮ້າຍແຮງຂຶ້ນເລື່ອຍໆ ທ່ານຈຶ່ງຂໍອະນຸຍາດຈາກພັນລະຍາຂອງທ່ານໃນການທີ່ຈະມາພັກຢູ່ທີ່ເຮືອນຂອງທ່ານຍິງ ອາອີຊະຫ໌ ຣໍດີຍັລ ລໍຮູອັນຮາ ພວກນາງກໍ່ອະນຸຍາດ ແລະ ໄດ້ໃຊ້ໃຫ້ອະບູບັກກັຣເປັນອີມ່າມນໍາລະຫມາດແທນ ແລະ ໃນມື້ສຸດທ້າຍທ່ານມີຄວາມຮູ້ສຶກສົດໃສ ແລະ ແນ່ມເບິ່ງບັນດາມຸສລີມີນ ທີ່ກໍາລັງອະທິຖານລະມາດຢູ່ໃນມັສຍິດ ພວກເຂົາເກືອບຈະອອກມາຈາກການລະຫມາດ ດ້ວຍຄວາມດີໃຈທີ່ໄດ້ເຫັນທ່ານຣໍຊູລ ລຸລລໍຫ໌ ﷺ ມີອາການດີຂຶ້ນ, ທ່ານອະບູບັກກັຣ ຄິດວ່າທ່ານຣໍຊູລ ລຸລລໍຫ໌ ﷺ ຈະມານໍາລະຫມາດ, ແຕ່ທ່ານໄດ້ຊີ້ນິ້ວໃຫ້ທ່ານອະບູບັກກັຣ ນໍາລະຫມາດໃຫ້ຄົບສົມບູນ, ຫຼັງຈາກນັ້ນທ່ານກໍ່ກັບໄປບ່ອນນອນຂອງທ່ານ[2]

ຫຼັງຈາກທີ່ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ເຈັບປ່ວຍເປັນເວລາ 10 ມື້, ທ່ານໄດ້ເສຍຊີວິດລົງ ໃນຂະນະທີ່ຫົວຂອງທ່ານວາງຢູ່ເທິງຕັກຂອງທ່ານຍິງ ອາອີຊະຫ໌ ຣໍດີຍັລ ລໍຮູອັນຮາ ເຫດການດັ່ງກ່າວໄດ້ເກີດຂຶ້ນໃນວັນທີ **12 ຂອງເດືອນ ຣໍບີອູລ-ເອົາວາລ ປີຮິຈເຣາະຫ໌ ທີ່ 11,** ຂະນະນັ້ນທ່ານຣໍຊູລ ລຸລລໍຫ໌ ﷺ ມີອາຍຸໄດ້ 63 ປີ, ຂ່າວການເສຍຊີວິດຂອງທ່ານເປັນດັ່ງກັບສາຍຟ້າຜ່າລົງມາຍັງຊາວມຸດສະລິມ ຈະມີໃຜແດ່ທີ່ບໍ່ສົນໃຈການຕາຍຂອງຄົນອັນເປັນທີ່ຮັກ? ສິ່ງໜຶ່ງທີ່ຈາກຄວາມຢ້ານກົວແມ່ນບາງຄົນບໍ່ເຊື່ອວ່າທ່ານຣໍຊູລ ໄດ້ເສຍຊີວິດ ຂະນະນັ້ນທ່ານອະບູບັກກັຣ ຢູ່ໃນເຂດນອກຂອງເມືອງມະດີນະຫ໌ ເມື່ອໄດ້ຍິນຂ່າວກໍຟ້າວກັບໄປ ແລະ ໄດ້ເຂົ້າໄປຫາທ່ານຣໍຊູລ ລຸລລໍຫ໌ ﷺ ທ່ານອະບູບັກກັຣໄດ້ເປີດຜ້າຄຸມລົງ ແລະ ຈູບທີ່ຫນ້າຜາກ ແລ້ວຮ້ອງໄຫ້ແລະເວົ້າວ່າ:

**ຂ້າພະເຈົ້າຂໍໄຖ່ທ່ານດ້ວຍສິດທິຂອງພໍ່ ແລະ ແມ່ຂອງຂ້າພະເຈົ້າ ພຣະອົງຈະບໍ່ເຮັດໃຫ້ເຈົ້າຕາຍສອງເທື່ອ ຄັ້ງທໍາອິດໄດ້ເກີດຂຶ້ນກັບທ່ານແລ້ວ**

ຕໍ່ມາທ່ານອະບູບັກກັຣ ໄດ້ອອກໄປຫາຜູ້ຄົນ ໃນຂະນະທີ່ຜູ້ຄົນກໍາລັງສັບສົນກ່ຽວກັບການຈາກໄປຂອງທ່ານຣໍຊູລ ລຸລລໍຫ໌ ﷺ ບາງຄົນເຊື່ອ, ບາງຄົນບໍ່ເຊື່ອ, ທ່ານອະບູບັກກັຣ ຈຶ່ງເວົ້າວ່າ:

**ໂອ້ຜູ້ຄົນທັ້ຫຼາຍ ຜູ້ໃດທີ່ອິບາດະຫ໌ຕໍ່ມຸຮໍາມັດ ແທ້ຈິງມູຮໍາມັດນັ້ນໄດ້ຕາຍແລ້ວ ແລະ ຜູ້ໃດທີ່ອິບາດະຫ໌ຕໍ່ອັລລໍຫ໌ ແທ້ຈິງແລ້ວ, ອັລລໍຫ໌ນັ້ນຊົງຢືນຍົງ ແລະ ບໍ່ຕາຍ**

---

1. ຊໍຮີຫ໌ ບູກໍຄໍຣີ ກິຕາບູລຕັຟຊີຣ ສູເຣາະຫ໌ຕຸ້ລຟັຕ, ຕັຟຊີຣ ອິບນຸກະຊີຣ 8/529

2. ຊໍຮີຫ໌ ບູກໍຄໍຣີ ກິຕາບູລມະຄໍຊີ ບົດທີກ່ຽວກັບການເຈັບປ່ວຍແລະການເສຍຊີວິດຂອງທ່ານສາດສະດາ, ຫະດີຊເລກທີ່ 4448 ຟັຟັດຕຮິລບາຣີ

ແລະ ທ່ານອະບູບັກກັຣໄດ້ອ່ານໂອງການຂອງອັລລໍຫ໌ ﷻ ທີ່ກ່າວວ່າ:

**ແລະ ມູຮຳມັດນັ້ນ ບໍ່ແມ່ນສິ່ງອື່ນໃດນອກເໜືອຈາກເປັນຣໍຊູລຂອງອັລລໍຫ໌ເທົ່ານັ້ນ ເຊິ່ງບັນດາສາສະນະທູດກ່ອນຈາກເຂົາກໍ່ໄດ້ເສຍຊີວິດໄປແລ້ວ ແລະ ຖ້າລາວຕາຍຫຼືຖືກຂ້າ ພວກເຈົ້າກໍ່ຈະກັບຄືນໄປຫາສາສະໜາເດີມຂອງພວກເຈົ້າແນວນັ້ນຫວາ? ແລະ ໃຜກໍຕາມທີ່ກັບຄືນໄປສູ່ສາສະໜາເກົ່າຂອງລາວບໍ່ໄດ້ສ້າງຜົນກະທົບຕໍ່ອັລລໍຫ໌ແຕ່ຢ່າງໃດ ແລະ ພຣະອົງອັລລໍຫ໌ຈະໃຫ້ລາງວັນຕອບແທນແກ່ຜູ້ມີຄວາມກະຕັນຍູສະເໝີ** (ອັລ-ອິມຣອນ 3:144).

ຜູ້ຄົນເຫຼົ່ານັ້ນຄືກັບວ່າເຂົາເຈົ້າບໍ່ເຄີຍໄດ້ຍິນອາຍະຫ໌ນັ້ນມາກ່ອນ ແລະ ນີ້ແມ່ນໜຶ່ງໃນບັນດາເຫດການຫຼາຍໆຄັ້ງ ທ່ານອະບູບັກກັຣ ສະແດງໃຫ້ເຫັນເຖິງຄວາມສະລາດ, ສະຕິປັນຍາ, ຄວາມເຂົ້າໃຈ, ແລະ ຄວາມມີອີ່ມ່ານທີ່ເຂັ້ມແຂງຂອງທ່ານ.

## 18.1 ການຈັດການສົບ ແລະ ການຝັງສົບ

ໃນມື້ຕໍ່ມາ (ວັນອັງຄານ) ຈຶ່ງໄດ້ຈັດໃຫ້ມີການອາບນ້ຳ ແລະ ຫໍ່ສົບຂອງທ່ານຣໍຊູລ ລຸລລໍຫ໌ ﷺ ເຊິ່ງໄດ້ວາງຢູ່ໃນຫ້ອງຂອງທ່ານຍິງ ອາອິຊະຫ໌ ຣໍດີຍັລ ລໍຮູອັນຮາ ບັນດາຊາວມຸດສະລິມຄ່ອຍໆທະຍອຍເຂົ້າໄປລະຫມາດໃຫ້ແກ່ທ່ານ ໂດຍບໍ່ມີອີ່ມ່ານ ເມື່ອລະຫມາດສິ້ນສຸດລົງ ຜູ້ຄົນມີຄວາມຄິດເຫັນຂັດແຍ້ງກັນກ່ຽວກັບສະຖານທີ່ຝັງສົບທ່ານຣໍຊູລ ລຸລລໍຫ໌ (ຊັລລັລລໍ ຮຸອະໄລຮີ ວະຊັລລຳ)

ທ່ານອະບູບັກກັຣ ຣໍດີຍັລລໍຮຸ ອັນຮຸ ຈຶ່ງເວົ້າວ່າ: ຂ້າພະເຈົ້າໄດ້ຍິນ ທ່ານຣໍຊູລ ﷺ ເວົ້າວ່າ:

**“ອັລລໍຫ໌ຈະບໍ່ຊົງເກັບຊີວິດຂອງສາດສະດາຄົນໜຶ່ງຄົນໃດ ຍົກເວັ້ນນອກຈາກບ່ອນທີ່ລາວມັກທີ່ຈະຖືກຝັງໃນທີ່ບ່ອນນັ້ນ”**

ດັ່ງນັ້ນ ທ່ານອະບູບັກກັຣ ຈຶ່ງໃຫ້ຜູ້ຄົນຝັງສົບທ່ານຣໍຊູລ ລຸລລໍຫ໌ ﷺ ບ່ອນທີ່ນອນຂອງທ່ານ[1] ຄືຫ້ອງຂອງທ່ານຍິງ ອາອິຊະຫ໌ ຣໍດີຍັລ ລໍຮູອັນຮາ ແມ່ຂອງບັນດາຜູ້ສັດທາທັງຫຼາຍ[2]

## 18.2 ຜົນຈາກການເສຍຊີວິດຂອງທ່ານຣໍຊູລ ລຸລລໍຫ໌ ﷺ

ການຈາກໄປຂອງ**ທ່ານຣໍຊູລ ລຸລລໍຫ໌** ﷺ ໄດ້ສ້າງຄວາມໂສກເສົ້າແກ່ບັນດາຊໍຮາບະຫ໌ຢ່າງຫຼວງຫລາຍ ໃບໜ້າຂອງເຂົາເຈົ້າມົນມອງ ແລະ ໂສກເສົ້າທົ່ວເມືອງມາດີນະຫ໌ ແລະ ຊາວມຸດສະລິມໃນແຫຼມຄາບສະມຸດອາຣັບ ຈະບໍ່ໂສກເສົ້າໄດ້ແນວໃດ? ເນື່ອງຈາກວ່າ ທ່ານຣໍຊູລ ລຸລລໍຫ໌ ﷺ ມີຊີວິດອາໄສຢູ່ຮ່ວມກັບເຂົາເຈົ້າ ໄດ້ສ້າງຂວັນ ກຳລັງໃຈໃຫ້ພວກເຂົາຢ່າງຫຼວງຫຼາຍ ອັລລໍຫ໌ ﷻ ພຣະອົງໄດ້ນຳເອົາພວກ

ເຂົາອອກຈາກຄວາມມືດໄປສູ່ຄວາມສະຫວ່າງ ລວມຫົວໃຈຂອງພວກເຂົາໃຫ້ເປັນຫນື່ງດຽວກັນ ຫຼັງຈາກທີ່ເຄີຍມີຄວາມຂັດແຍ່ງກັນມາກ່ອນ ແລະ ເມື່ອພວກເຂົາຂາດທ່ານຣໍຊູລ ລຸລລໍຫ໌ ﷺ ໄປ ວະຮີເຊິ່ງເປັນຄວາມຜູກພັນຂອງພວກເຂົາກັບພຣະເຈົ້າກໍ່ຕ້ອງຢຸດລົງ

ຄັ້ງເມື່ອທ່ານອຸມັຣ ແລະ ທ່ານອະບຸບັກກັຣ (ຣໍດິຍັລລໍຮຸ ອັນຮຸມາ) ໄດ້ໄປຢ້ຽມຢາມ ອຸມມູໄອມັນ ຜູ້ທີ່ເຄີຍລ້ຽງດູທ່ານສາດສະດາ ແລະ ຫລັງຈາກທ່ານນະບີ ﷺ ໄດ້ຈາກໄປແລ້ວ ເມື່ອທັ້ງສອງມາເຖິງ, ນາງກໍ່ຮ້ອງໄຫ້, ທັ້ງສອງຈຶ່ງເວົ້າວ່າ:

**ແມ່ນຫຍັງເຮັດໃຫ້ເຈົ້າຮ້ອງໄຫ້? ເຈົ້າບໍ່ຮູ້ບໍວ່າສຳຫຼັບ ອັລລໍຫ໌ ຊຸບຮານະຮູ ວະຕາອາລາ ນັ້ນມີການຕອບແທນທີ່ດີສຳລັບທ່ານຣໍຊູລ ຢູ່ແລ້ວ** ນາງເວົ້າວ່າ:

*ມັນບໍ່ແມ່ນວ່າຂ້ອຍບໍ່ຮູ້ດອກ ທີ່ເຮັດໃຫ້ຂ້ອຍຮ້ອງໄຫ້ ແຕ່ທີ່ຂ້ອຍຕ້ອງຮ້ອງໄຫ້ເພາະ ໃນຕອນນີ້ ວະຮີ (ສານຈາກພຣະເຈົ້າ) ຈາກຟາກຟ້າ ບໍ່ມີການລົງມາອີກຕໍ່ໄປແລ້ວ.*

ນາງຮ້ອງໄຫ້ຈົນເຮັດໃຫ້ພວກເຂົາທັງສອງຮ້ອງໄຫ້ຕາມໄປດ້ວຍ[3]

ຊາວມຸດສະລິມມີຄວາມຮູ້ສຶກໃນການເສຍຊີວິດຂອງທ່ານສາດສະດາ ﷺ ວ່າມັນໂຫດຮ້າຍຕໍ່ຫົວໃຈຂອງພວກເຂົາ ຄວາມມືດມິດອ້ອມຮອບພວກເຂົາທັງຫມົດ ທ່ານອານັສ ລູກຊາຍຂອງມະລິກ(ຣດ) ກ່າວວ່າໃນມື້ທີ່ທ່ານຣໍຊູລ ﷺ ເຂົ້າມາທີ່ເມືອງມາດີນະຫ໌ ແສງສະຫວ່າງກະຈາຍໄປທົ່ວເມືອງ ຫຼັງຈາກທີ່ທ່ານຣໍຊູລ ﷺ ຈາກໄປຄວາມມືດມິດໄດ້ເຂົ້າມາແທນທີ່ ມືຂອງພວກເຮົາຕ່າງກໍ່ສັ່ນໄຫວ ຂະນະທີ່ຮ່າງກາຍຂອງທ່ານຣໍຊູລ ﷺ ລົງຝັງ, ຫົວໃຈຂອງພວກເຮົາບໍ່ສາມາດຍອມຮັບການຈາກໄປຂອງທ່ານໄດ້ເລີຍ

ສ່ວນຜູ້ທີ່ບໍ່ແມ່ນຊາວມຸດສະລິມ ຄືບັນດາຄົນຫນ້າຊື່ໃຈຄົດ(ມຸນາຟິກ), ຊາວຢິວ, ຊາວຄຣິດສະຕຽນ ແລະ ຊາວອາຣັບບາງກຸ່ມ ພວກເຂົາຕ່າງປິຕິຍິນດີຕໍ່ການເສຍຊີວິດຂອງທ່ານຣໍຊູລ ﷺ ຊາວອາຣັບຫຼາຍຄົນຍອມຖິ້ມສາສະນາ ຊາວຄຣິດສະຕຽນ ແລະ ຊາວຢິວໄດ້ເຫັນຄວາມອ່ອນແອຂອງຊາວມຸດສະລິມ ແລະດິນແດນທີ່ຊາວມຸດສະລິມຄອບຄອງ ດັ່ງນັ້ນ ຊາວມຸດສະລິມຈຶ່ງຕົກຢູ່ໃນອັນຕະລາຍທີ່ຈະຕ້ອງປະເຊີນກັບສັດຕູຂອງພວກເຂົາ ແລະ ອັລລໍຫ໌ ຊຸບຮານະຮູ ວະຕາອາລາ ຊົງໄດ້ໃຫ້ທ່ານອະບຸບັກກັຣ ເປັນຜູ້ນຳ ແລະເຮັດການປາບປາມພວກກະບົດເຫຼົ່ານັ້ນ ຈົນກະທັ່ງອິສລາມກັບມາເຂັ້ມແຂງອີກຄັ້ງໜຶ່ງໃນເຫຼມສະມຸດອາຣັບ

1. ສຸນັນ ອັດຕີຣ ມີຊີ 3-338- ວະເຊາະຣະຣ່າຊູ ອັລບານີ ແລະ ມີລາຍງານຫະດີຊສະບັບອື່ນຂອງ ما قبض نبي إلا دفن قبض ພີມຸສນັດ ອະບີຍະລາ 1/31 ແລະສຸນັນອັລໄບຣະກີ 4/30

2. ການຈັດການສົບ ແລະ ການຝັງສົບຂອງສາດສະດາ ເບິ່ງ ອັຊຊີເຣາະຕຸ້ລນະບະວີຍະຫ໌ ອິບນຸຮິຊາມ 4/341 ອິບນຸກະຊີຣ 4/329-533

3. ຊໍຮີຫ໌ ມຸສລິມ 4/1907 ຫະດີຊ ສະບັບເລກທີ 2454

## 19. ສ່ວນໜຶ່ງຈາກມາລະຍາດຂອງທ່ານນະບີ ﷺ

### 19.1 ມາລະຍາດຂອງທ່ານນະບີ ﷺ ຕໍ່ພຣະຜູ້ເປັນເຈົ້າ

ທ່ານນະບີມຸຮຳມັດ ﷺ ເປັນຜູ້ທີ່ມີຄວາມຮູ້ຫຼາຍທີ່ສຸດໃນບັນດາມະນຸດ ທ່ານປະຕິບັດຕໍ່ພຣະເຈົ້າຂອງທ່ານຕາມຄວາມຮູ້ນັ້ນ ດ້ວຍເຫດນີ້, ລາວຈຶ່ງເຮັດອິບາດະຫ໌ຫລາຍທີ່ສຸດ ຢ້ານຕໍ່ອັລລໍຫ໌ ຊຸບຮານະຮຸວະຕາອາລາ ຫຼາຍທີ່ສຸດ. ໃກ້ຊິດຕໍ່ອັລລໍຫ໌ ຊຸບຮານະຮຸ ວະຕາອາລາ ຫຼາຍທີ່ສຸດ ຮັກອັລລໍຫ໌ ຊຸບຮານະຮຸວະຕາອາລາ ຫລາຍທີ່ສຸດ ແລະ ໝັ້ນໃຈໃນອັລລໍຫ໌ ຊຸບຮານະຮຸ ວະຕາອາລາ ຫຼາຍທີ່ສຸດ ເຊິ່ງບໍ່ມີໃຜສາມາດເຮັດໄດ້ຄືກັບທ່ານ, ທ່ານອາລີ ອິບນຸ ອາບີຕໍລິບ ຣໍດີຍັລລໍຮຸ ອັນຮຸ ໄດ້ຖືກຖາມກ່ຽວກັບການປະຕິບັດສິ່ງທີ່ເປັນສຸນນະຫ໌ຂອງທ່ານນະບີ ﷺ ໃນການລະມາດ ທ່ານອາລີຕອບວ່າ:

**ພວກເຈົ້າບໍ່ສາມາດເຮັດໄດ້ດອກ**[1]

ລາຍງານຈາກ ທ່ານອານັສ ບິນມາລິກ ຣໍດີຍັລລໍຮຸ ອັນຮຸ, ເວົ້າວ່າ:

ທ່ານສາດສະດາ ﷺ ນັ້ນ ບໍ່ໄດ້ຖືສິນອົດອາຫານຕະຫຼອດເດືອນຈົນພວກເຮົາຄິດວ່າ ທ່ານຈະບໍ່ຖືສິນອົດອີກ ແລະ ທ່ານຈະຖືສິນອົດຈົນພວກເຮົາຄິດວ່າ ທ່ານຈະບໍ່ແກ້ສິນອົດ ບາງເທື່ອທ່ານລະມາດໃນຕອນກາງຄືນຢ່າງຕໍ່ເນື່ອງ ແລະ ບາງຄັ້ງທ່ານກໍ່ນອນຫລາຍຄືນຕິດຕໍ່ກັນ ທ່ານຈະລຳລຶກເຖິງອັລລໍຫ໌ ໃນທຸກສະຖານະການ ບໍ່ວ່າທ່ານຈະເຮັດອີຫຍັງກໍ່ຕາມ ຈະມີການຊິກຣຸລລໍຫ໌ ໃນທຸກເວລາ *ແລະ ຊຸກຍູ້ໃຫ້ປະປະຊາຊົນເຮັດຄືກັນ*[2] ໃນກອງປະຊຸມຄັ້ງໜຶ່ງ ທ່ານໄດ້ກ່າວ ອິສຕິກຟັຣ(ກ່າວຂໍອະໄພໂທດ) 100 ເທື່ອ[3] ເພາະໃນໃຈຂອງທ່ານນັ້ນ ລຳລຶກເຖິງອັລລໍຫ໌ສະເໝີ ແລະ ບໍ່ເຄີຍຫຼັບເລີຍ

ທ່ານຍິງ ອາອີຊະຫ໌ ຣໍດີຍັລ ລໍຮູອັນຮາ ຖາມ ທ່ານຣໍຊູລ ﷺ ວ່າ:

ໂອ້ ທ່ານຣໍຊູລ ﷺ ຂອງອັລລໍຫ໌ ທ່ານນອນກ່ອນລະມາດວິຕິຣ ຫຼືບໍ່?

ທ່ານສາດສະດາ ﷺ ຕອບວ່າ:

ໂອ້! ອາອີຊະຫ໌ເອີ່ຍ ແທ້ຈິງແລ້ວ, ຕາຂອງຂ້ອຍຫຼັບແຕ່ຫົວໃຈຂອງຂ້ອຍບໍ່ຫຼັບ[4]

---

1. ສຸນັນອັດຕິຣມີຊີ 2/493 ມຸສນັດອິມ່າມອະມັດ 1/160 ອັສຊຸນະນຸ້ລກຸບຣໍ ລີ້ລໄບຮາກີ 1/178

2. ຊໍຮີຫ໌ຮູລ ບູກໍຄໍຣີ ກິຕາບຸລຕະຮັດຈຸດ ບົດ ກິຍາມຸລໄລ ເລກທີ 11 .2/46

3. ເບິ່ງ ໃນຊາດັລມະອາດ ລີອິບນິກອຍຍິມ 367-365/2 في فصل هديه صلى الله عليه وسلم في الذكر.

4. ຊໍຮີຫ໌ຮູລ ບູກໍຄໍຣີ ກິຕາບຸລຕະຮັດຈຸດ ບົດ 61 .2/48

ທ່ານຈະລຳລຶກເຖິງອັລລໍຫ໌ ﷻ ຢ່າງຫຼາຍໂດຍສະເພາະໃນຂະນະທີ່ມີເຫດການຄັບຂັນ ໃນການເຮັດສົງຄາມ ບາງເທື່ອທ່ານໄດ້ຍົກມືຂຶ້ນສູງເພື່ອຂໍດຸອາຈົນເຫັນຂີ້ແຮ້ ທັ້ງນີ້ເພື່ອຈະໃຫ້ໝັ້ນໃຈວ່າພຣະອົງອັລລໍຫ໌ ﷻ ຄືຜູ້ປະທານການຊ່ວຍເຫຼືອ ຜູ້ໃຫ້ໄຊຊະນະທີ່ແທ້ຈິງ ນີ້ເປັນອິບາດະຫ໌ທີ່ທ່ານນະບີ ﷺ ເຮັດຢ່າງຕໍ່ເນື່ອງເພື່ອອັລລໍຫ໌ ﷻ ທ່ານບໍ່ໄດ້ເຮັດມັນເພາະວ່າມັນເປັນສິ່ງຈຳເປັນ ເຊິ່ງສາມາດເຮັດໄດ້ຢ່າງໄວກໍ່ໄດ້ ແຕ່ທ່ານເຮັດດ້ວຍຄວາມຮູ້ສຶກທີ່ມີຄວາມສຸກອັນລົ້ນເຫຼືອ ທ່ານເວົ້າວ່າ:

**ຂ້ອຍໄດ້ເຮັດການລະມາດນັ້ນເພື່ອເປັນຂວັນຕາຂວັນໃຈແກ່ຂ້ອຍ**[1]

ທ່ານປະຕິບັດລະມາດ ເພື່ອສະແຫວງຫາຄວາມພໍພຣະໄທຈາກອັລລໍຫ໌ ﷻ ເຖິງແມ່ນວ່າທ່ານໄດ້ກ່າວວ່າທ່ານນັ້ນໄດ້ຮັບການໃຫ້ອະໄພ ບໍ່ວ່າຈະເປັນເລື່ອງຂອງບາບທີ່ຜ່ານມາ ຫຼືຄວາມຜິດພາດໃຫມ່ຈະເກີດຂຶ້ນ

ດັ່ງທີ່ດຳລັດຂອງພຣະອົງໄດ້ກ່າວວ່າ:

**ເພື່ອອັລລໍຫ໌ຈະໄດ້ຊົງອະໄພບາບໃນອະດີດ ແລະ ອະນາຄົດຂອງເຈົ້າ ແລະ ຈະຊົງເຮັດຄວາມໂປດປານຂອງພຣະອົງສົມບູນແກ່ເຈົ້າ ແລະ ຊົງຊີ້ແນະນຳທາງແກ່ເຈົ້າຄືເສັ້ນທາງອັນຊື່ຕົງ**

(ອັລ-ຟັຕ 48 : 2)

ທ່ານສາດສະດາ ﷺ ໄດ້ປະຕິບັດອິບາດະຫ໌ຢ່າງພາກພຽນ ແລະ ສະຫມ່ຳສະເຫມີ ທ່ານຢືນລະມາດໃນຍາມກາງຄືນຈົນຕີນຂອງທ່ານນັ້ນບວມ, ມີຄົນຖາມວ່າ:

*ທ່ານເຮັດທັ້ງໆ ທີ່ອັລລໍຫ໌ ໄດ້ຊົງອະໄພແກ່ທ່ານຈາກຄວາມຜິດບາບທີ່ຜ່ານມາຂອງທ່ານ ແລະທີ່ຈະເກີດຂຶ້ນແນວນັ້ນບໍ?*

ທ່ານສາດສະດາຕອບວ່າ:

**ຈະບໍ່ໃຫ້ຂ້ອຍເປັນບ່າວທີ່ກະຕັນຍູຂອບໃຈຕໍ່ ອັລລໍຫ໌ແນວນັ້ນບໍ່?**[2]

ການອິບາດະຫ໌ສະຫມ່ຳສະເຫມີຕໍ່ ອັລລໍຫ໌ ຊຸບຮານະ ຮູວະຕາ ອາລາ ﷻ ເຊິ່ງຊົງເປັນຜູ້ທີ່ ຊ່ວຍທີ່ດີທີ່ສຸດ ເພື່ອຕໍ່ສູ້ກັບອຸປະສັກໃນການເຜີຍແຜ່ສາດສະໜາ ແລະ ຈະເຮັດໃຫ້ໄດ້ຮັບໄຊຊະນະ ແລະ ໄດ້ຮັບຄວາມພໍໃຈຈາກພຣະອົງ ນັ້ນຄື ສວນສະຫວັນໃນໂລກອາຄິເຣາະຫ໌.

---

1. ມຸສນັດອີມ່າມອະມັດ 3/128 ມຸສຕັດຣົກ ອັລຮາກີມ 2/174 ເປັນຫະດິຊທີ່ ຊໍຮີ້ຫ໌ຕາມກົດຫມາຍມຸສລິມ ແລະທ່ານສະຮະບີກໍ່ເຫັນດີນຳ.

2. ຊໍຮີຫ໌ຮູລ ບູກໍຣີ ກິຕາບຸລຕະຮັດຈຸດ ບົດທີ ກີຍາມຸນະບີ 6

### 19.2 ການປະຕິບັດຂອງທ່ານຣໍຊູລຕໍ່ຄອບຄົວຂອງທ່ານ

ການເສແສ້ງ ຕົວະວ່າເຮັດຄວາມດີສາມາດເຮັດໄດ້ພຽງແຕ່ບາງເວລາເທົ່ານັ້ນ ແລະ ມັນເປັນການຍາກຫຼາຍທີ່ຈະດີກັບຄົນອື່ນຕະຫຼອດເວລາ ສະນັ້ນ ພຶດຕິກໍາຂອງຄົນໆໜຶ່ງຈຶ່ງປະກົດອອກມາຢ່າງແທ້ຈິງເມື່ອຢູ່ພາຍໃນເຮືອນຂອງຕົນເອງພ້ອມກັບຄອບຄົວ

ແທ້ຈິງແລ້ວ ທ່ານຣໍຊູລ ລຸລລໍຫ໌ ﷺ ນັ້ນເປັນຕົວຢ່າງທີ່ດີທີ່ສຸດໃນການຢູ່ຮ່ວມກັນກັບຄອບຄົວດ້ວຍຄວາມດີ ທ່ານຕ້ອງດູແລພັນລະຍາ 11 ຄົນ, ທາສ ແລະ ທາສີ ແລະ ລູກສາວອີກ 4 ຄົນ, ເຊິ່ງນາງເຫຼົ່ານັ້ນກໍມີລູກອີກຫລາຍຄົນ ທ່ານປະຕິບັດຕໍ່ທຸກຄົນໃນຖານະສາມີທີ່ໃຈດີ ເປັນພໍ່ທີ່ເມດຕາ ແລະເປັນນາຍທີ່ໃຫ້ຄວາມສົງສານ

ທ່ານຣໍຊູລ ﷺ ກ່າວວ່າ:

"خَيْرُكُمْ خَيْرُكُمْ لأَهْلِهِ وَأَنَا خَيْرُكُمْ لأَهْلِي"

**ຜູ້ທີ່ດີທີ່ສຸດໃນບັນດາພວກເຈົ້າ ແມ່ນຜູ້ທີ່ດີທີ່ສຸດກັບຄອບຄົວຂອງລາວ ແລະ ຂ້ອຍກໍ່ດີທີ່ສຸດໃນບັນດາເຈົ້າໃນການເຮັດດີກັບຄອບຄົວຂອງຂ້ອຍ**[1]

ທ່ານຣໍຊູລ ﷺ ໄດ້ກ່າວອີກວ່າ:

"خِيَارُكُمْ خِيَارُكُمْ لِنِسَائِهِمْ"

**ຜູ້ດີທີ່ສຸດໃນບັນດາເຈົ້າ ຄືຜູ້ທີ່ເຮັດດີທີ່ສຸດເພື່ອພັນລະຍາຂອງຕົນ**[2]

ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ປະຕິບັດຕໍ່ພັນລະຍາຂອງທ່ານດ້ວຍຄວາມອ່ອນໂຍນນຸ່ມນວນ, ມີຢອກຫຼິ້ນ ອົດທົນ ແລະ ເຄົາລົບໃຫ້ກຽດ ເຖິງແມ່ນວ່າມີເມຍຫຼາຍຄົນ ແລະ ນາງເຫຼົ່ານັ້ນຕ່າງມີການຫຶງຫວງເຊິ່ງກັນ ຊຶ່ງເປັນທໍາມະຊາດຂອງຜູ້ຍິງ

ທ່ານຣໍຊູລ ລຸລລໍຫ໌ ﷺ ແຕ່ງງານກັບທ່ານຍິງອາອິຊະຫ໌ ໃນຂະນະທີ່ນາງຍັງມີອາຍຸພຽງແຕ່ 9 ປີທ່ານຈຶ່ງເຂົ້າໃຈເຖິງຄວາມຕ້ອງການຂອງເດັກ ໂດຍທີ່ທ່ານອະນຸຍາດໃຫ້ນາງໄປຫຼິ້ນກັບຫມູ່ເພື່ອນທີ່ອາຍຸເທົ່າກັບນາງ ຄັ້ງເມື່ອທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຍ່າງໄປຫາເດັກສາວເຫຼົ່ານັ້ນ ພວກນາງກໍ່ຈະເຂີນອາຍ ແລະ ແລ່ນຫນີໄປ ທ່ານຣໍຊູລ ລຸລລໍຫ໌ ﷺ ກໍ່ພານາງໄປຫຼິ້ນກັບໝູ່ໃໝ່[3]

---

1. ສຸນັນອັດຕິຣມີຊີ 5/709 ຣ/3895 ເປັນຫະດີຊທີ່ຊໍຮີ້ຫ໌ ແລະ ອັລບານີໄດ້ເຫັນດ້ວຍ.

2. ສຸສຸນັນອັດຕິຣມີຊີ 3/466-ຣ/1162 ເປັນຫະດີຊຮາຊັນຊໍຮີ້ຫ໌ ມຸສນັດອະມັດ 2/472ຣ/10110

ແລະ ເມື່ອທ່ານຍ່າງໄປຫາເດັກຍິງເຫຼົ່ານັ້ນ ທ່ານກໍ່ຈະປົກຕົວເຈົ້າຂອງດ້ວຍຜ້າ ໂດຍຢ້ານວ່າເດັກຍິງເຫຼົ່ານັ້ນຈະອາຍ ແລະ ບໍ່ກ້າຫຼິ້ນນຳອາອິຊະຫ໌ອີກ[4]

ຄວາມລຽບງ່າຍ ແລະ ຄວາມອ່ອນໂຍນຕໍ່ພັນລະຍາ ມັນບໍ່ເຄີຍຖືກປິດບັງຕໍ່ບັນດາຊໍຮາບະຫ໌ ຄັ້ງໜຶ່ງທ່ານເດີນທາງກັບລູກສິດ ແລະ ພັນລະຍາຂອງທ່ານ ນັ້ນຄື ທ່ານຍິງຊໍຟີຍະຫ໌ ໄດ້ເດີນທາງໄປດ້ວຍ ທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຍໍ່ຫົວເຂົ່າລົງໂດຍໃຫ້ຕີນຂອງນາງໄດ້ຫຍຽບເທິງເຂົ່າຂອງທ່ານ ເພື່ອນາງຈະໄດ້ຂີ່ອູດໄດ້[5] ແລະ ການເດີນທາງອີກເທື່ອໜຶ່ງ ທ່ານໄດ້ເວົ້າກັບບັນດາສາວົກວ່າ:

**ພວກທ່ານທັ້ງຫຼາຍ ຈົ່ງຍ່າງລ່ວງໜ້າໄປກ່ອນເຖີດ ແລ້ວເຮົາຈະຕາມໄປທີ່ຫຼັງພ້ອມກັບທ່ານຍິງອາອິຊະຫ໌**

ເຊິ່ງທ່ານໄດ້ແລ່ນແຂ່ງກັບນາງ ແລະ ນາງກໍ່ຊະນະ ຄັ້ງຕໍ່ມາເມື່ອນາງມີນ້ຳໜັກຫຼາຍຂຶ້ນ ທ່ານໄດ້ແລ່ນແຂ່ງກັບນາງອີກເທື່ອໜຶ່ງ ແລະ ເທື່ອນີ້ ທ່ານຣໍຊູລ ລຸລລໍຫ໌ ﷺ ຊະນະນາງ ແລ້ວທ່ານກໍ່ເວົ້າວ່າ:

**ການແຂ່ງຂັນກໍ່ເປັນແບບນີ້ແຫລະ**[6]

ທ່ານເປັນຄົນທີ່ອ່ອນໂຍນເມື່ອຢູ່ໃນເຮືອນ ທ່ານຈະຊ່ວຍພັນລະຍາຂອງທ່ານເຮັດວຽກເຮືອນ[7] ບາງເທື່ອທ່ານຈະຫຍິບເສື້ອ ຫຍິບເກີບຂອງທ່ານເອງ ທ່ານບີບນົມແບ້ແລ້ວບໍລິການຕົນເອງ[8]

ທ່ານປະຕິບັດຕໍ່ລູກ ແລະ ເດັກນ້ອຍທີ່ຢູ່ອ້ອມຮອບໂດຍເປັນພໍ່ທີ່ມີເມດຕາປານີ ເປັນຄົນອົບຮົມດ້ວຍຄວາມສຸຂຸມ ພະຍາຍາມເຮັດໃຫ້ພວກເຂົາມີຄວາມສຸກປິຕິຍິນດີ ແລະ ຈະຍິ້ມແຍ້ມກັບລູກໆ ແລະ ເດັກໆ ສະເໝີ ທ່ານຈະອຸ້ມ ແລະ ຈູບເດັກນ້ອຍເຫຼົ່ານັ້ນ

---

3. ເບິ່ງໃນ ຊໍຮີຮ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ 81 ມຸສນັດອິມ່າມອະມັດ 6/166

4. ອັດຕໍ່ບະກອຕ ອັລກຸບຣໍ ລີອິບນີ ຊະອູ 7/65 ທ່ານອັກຣອມ ອັລອັມຣີ ກ່າວວ່າມັນແມ່ນສາຍຂອງທີ່ ຊໍຮີຫ໌ ອັຊຊີຣໍຕຸ້ລນະບະວີຍະຫ໌ ອັຊ-ຊໍຮີຣະຫ໌ 2/649

5. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລມະກໍຊີ ບົດ: ສົງຄາມຄອຍບັຣ 38

6. ສຸນັນອະບີດາວູດ 3/29 ຮ/2578 ອັສຊຸນະນຸ້ລກຸບຣໍ ລີລໄບຮະກີ 5/304 ຮ/894

7. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລບົດທີ 40

8. ຟັດຮຸ້ລບາຣີ 10/461 ອິມ່າມອະມັດເປັນຜູ້ຂຽນຂອງຫະດີຊ ແລະ ອິບນິຊະອູທີ່ຕັຊອຽະ ແລະອິບນີຮິບບານ

ທ່ານອະບູຮຸຣອຍເຣາະຫ໌ ຣໍດີຍັລລໍ ອັນຮຸ ໄດ້ລາຍງານວ່າ:

**ແທ້ຈິງທ່ານຣໍຊູລ ລຸລລໍຫ໌ ﷺ ໄດ້ຈັບມືຂອງ ຮາຊັນ ຫຼື ຮຸເຊັນ ແລະ ຕີນຂອງ ຮາຊັນ ຫຼື ຮຸເຊັນ ຢູ່ເທິງຕີນຂອງທ່ານ ແລ້ວທ່ານຣໍຊູລ ﷺ ບອກໃຫ້ຍ່າງຂຶ້ນມາຈົນກວ່າຮອດໜ້າເອິກຂອງທ່ານ ແລ້ວທ່ານກໍ່ບອກໃຫ້ເປີດປາກ ແລ້ວກໍ່ຈູບຫອມ[9] ທ່ານເຄີຍອຸ້ມຫຼານອູມາມະຫ໌ ລູກສາວຂອງໄຊນັບ ຣໍດີຍັລລໍຫຸ ອັນຮາ ລູກສາວຂອງທ່ານໃນຂະນະລະໝາດ ເມື່ອທ່ານກົ້ມຣູກົວະ ທ່ານຈະວ່າງນາງລົງ ແລະ ເມື່ອທ່ານລຸກຂຶ້ນ ທ່ານກໍອຸ້ມນາງລາວຂຶ້ນມາໃໝ່[10]**

ຄັ້ງໜຶ່ງໃນຂະນະທີ່ທ່ານກຳລັງນຳລະໝາດກັບບັນດາຊໍຮາບະຫ໌ຢູ່ ຮາຊັນ ບິນ ອາລີ ຣໍດີຍັລລໍ ອັນຮູ ໄດ້ຫຼິ້ນ ແລະ ຂຶ້ນຂີ່ຄໍໃນຂະນະທີ່ທ່ານສຸຈູດ ທ່ານຈຶ່ງສຸຈູດເປັນເວລາດົນນານ ມີຄົນຖາມທ່ານ ແລະ ທ່ານໄດ້ຕອບວ່າ:

**ແທ້ຈິງ ລູກຂອງຂ້ອຍກຳລັງຂີ່ຂ້ອຍຢູ່ ຂ້ອຍບໍ່ຢາກຟ້າວຈົນກວ່າລາວຈະເຊົາເຮັດເອງ[11]**

ການປະຕິບັດເຊັ່ນນີ້ບໍ່ແມ່ນແຕ່ສະເພາະກັບລູກຫຼືຫລານໆເທົ່ານັ້ນ ກັບເດັກນ້ອຍອື່ນທົ່ວໄປ ທ່ານກໍ່ຫຍອກຫຼິ້ນກັບເດັກໆ ທ່ານຈະລູບຫົວ ແລະ ໃບໜ້າ ລົມກັບເດັກໆ ສະເໝີ[12]

ໃນທຳນອງດຽວກັນ ທ່ານປະຕິບັດຕໍ່ຄົນຮັບໃຊ້ຫຼືທາສດ້ວຍຄວາມເມດຕາອ່ອນໂຍນ

ທ່ານ ອານັສ ບິນ ມາລິກ ຣໍດີຍັລລໍຮຸ ອັນຮຸ ເວົ້າວ່າ:

**ຂ້ອຍເຄີຍຮັບໃຊ້ ທ່ານຣໍຊູລ ລຸລລໍຫ໌ ຊັລລັລລໍຮຸ ອະໄລຮີ ວະຊັລລັມ ເປັນເວລາ 10 ປີ ທ່ານບໍ່ເຄີຍເວົ້າກັບຂ້ອຍ 'ອຸຟ' (ຄຳເວົ້າບໍ່ດີ) ທ່ານບໍ່ເຄີຍເວົ້າກັບຂ້ອຍເລີຍໃນສິ່ງທີ່ຂ້ອຍໄດ້ເຮັດລົງໄປ ວ່າເປັນຫຍັງຈຶ່ງເຮັດແບບນີ້? ຫຼືສິ່ງໃດທີ່ຂ້ອຍບໍ່ໄດ້ເຮັດ ທ່ານກໍ່ບໍ່ເຄີຍເວົ້າເລີຍວ່າ ເປັນຫຍັງເຈົ້າຈຶ່ງບໍ່ເຮັດມັນ?[13] ແລະ ທ່ານເຄີຍອຸ້ມລູກຂອງທາສ ຄື ອຸສາມະຫ໌ ບິນ ໄຊດ໌ ວ່າງຢູ່ເທິງຕັກຂອງທ່ານ ແລະ ເອົາ ຮາຊັນ ບິນ ອາລີ ວ່າງຢູ່ເທິງຕັກອີກຂ້າງໜຶ່ງ ແລ້ວທ່ານກໍ່ກອດເດັກນ້ອຍທັງສອງ ແລ້ວທ່ານກໍ່ໄດ້ກ່າວວ່າ: *ໂອ້ ອັລລໍຫ໌ ຂໍພຣະອົງຊົງເມດຕາໃຫ້ເຂົາເຈົ້າທັງສອງ ເພາະຂ້ອຍຮັກແລະເມດຕາທັງສອງ* [14]**

ຂະນະທີ່ທ່ານຊາບວ່າ ທ່ານອະບາຊັຣ ຣໍດີຍັລລໍຮຸ ອັນຮຸ ໄດ້ເວົ້າຕຳໜິຄົນຮັບໃຊ້ຂອງລາວເຖິງກ ແມ່ຂອງລາວ ທ່ານຣໍຊູລ ລຸລລໍຫ໌ ﷺ ຈຶ່ງເວົ້າກັບລາວວ່າ:

**ໃນຕົວຂອງທ່ານນັ້ນຍັງ ຈາຮີລີຍະຫ໌ຢູ່ (ຍັງມີຄວາມໂງ່)**

ແລ້ວ ທ່ານກໍ່ເວົ້າຕໍ່ວ່າ:

**ແທ້ຈິງພວກເຂົາເຫຼົ່ານັ້ນເປັນອ້າຍນ້ອງຂອງເຈົ້າ ອັລລໍຫ໌ຊົງໃຫ້ພວກເຂົາຢູ່ພາຍໃຕ້ການດູແລຂອງທ່ານ ດັ່ງນັ້ນຜູ້ໃດທີ່ ອັລລໍຫ໌ ໄດ້ໃຫ້ພີ່ນ້ອງຂອງເຂົາຢູ່ພາຍໃຕ້ການດູແລແລ້ວລະກໍ່ ຈົ່ງໃຫ້ເຂົາກິນອາຫານດຽວກັນກັບຕົວທ່ານເອງກິນ ຈົ່ງໃຫ້ດື່ມເໝືອນກັບຕົວເອງດື່ມ ຈົ່ງໃຫ້ເຂົາສວມໃສ່ເສື້ອຜ້າເໝືອນຢ່າງທີ່ຕົວເອງສວມໃສ່ ຢ່າບັງຄັບໃຫ້ລາວເຮັດວຽກເກີນພາລະກຳລັງ ດັ່ງນັ້ນຖ້າຜູ້ໃດບັງຄັບເຂົາໃຫ້ເຮັດວຽກເກີນກຳລັງແລ້ວລະກໍ່ ຂໍໃຫ້ລາວຖືກສາບແຊ່ງ**[15]

ທ່ານຣໍຊູລ ລຸລລໍຫ໌ ﷺ ນັ້ນໃຫ້ຄວາມສຳຄັນຫຼາຍຕໍ່ທາສຂ້າໃຊ້ ໂດຍທ່ານໄດ້ສັ່ງເສຍໃຫ້ເຮັດດີຕໍ່ພວກເຂົາໃນຂະນະທີ່ທ່ານໃກ້ສິເສຍຊີວິດຢູ່ເທິງຕຽງ[16]

---

9. ລາຍງານໂດຍ ອິມ່າມບຸກຄໍຣີ ໃນເລື່ອງກ່ຽວກັບຈັນຍາບັນມາລະຍາດ ແລະທ່ານຕ໊ອບຣໍນີ ການລ້ຽງດູທ່ານສາດສະດາໃນໄວເດັກ 182

10. ຊໍຮີ້ຫ໌ຣຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ: ການມີຄວາມເມດຕາຕໍ່ເດັກນ້ອຍ 18

11. ມຸສນັດອິມ່າມອະມັດ 6/91 ທ່ານອິຣໍກີ ກ່າວໄວ້ໃນ ອັລ-ອຸ່ະຢາ 2/218 ລາຍງານໂດຍ ອັລບະຊາອີ ແລະ ອັລຮາກິມ ເປັນຫະດິຊທີ່ຊໍຮີ້ຫ໌ ຕາມກົດເກນຂອງທັງສອງ

12. ຖືວ່າພຽງພໍສຳລັບເຫດການຂອງທ່ານສາດສະດາໃນເລື່ອງນີ້ ເບິ່ງໃນ ມູຮຳມັດນູຣ ສຸເວຊ. ການລ້ຽງດູທ່ານສາດສະດາໃນໄວເດັກ 179 ແລະຫຼັງຈາກນັ້ນ

13. ຊໍຮີ້ຫ໌ຣຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ: ມາລະຍາດທີ່ດີງາມ 39 ແລະລາຍງານໂດຍ ມຸສລິມ ແລະ ຕິຣມີຊີ

14. ຊໍຮີ້ຫ໌ຣຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ 22

15. ຊໍຮີ້ຫ໌ຣຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ 44

16. ມຸສນັດອິມ່າມອະມັດ 3/117 ສຸນັນອະບີ ດາວູດ 5/359 ກິຕາບ ອະດັບ ຣ/3156 ເພື່ອຢຸດເວົ້າກ່ຽວກັບການປະຕິບັດຕໍ່ຜູ້ຮັບໃຊ້ແລະບັນດາກະສັດຂອງນະບີ ເບິ່ງ ມະຫ໌ດີຣິສກຸ້ລໍຣີ ອັຊຊີຣໍຕຸ້ລ ນະບະວີຍະຫ໌ 723-724

## 19.3 ການປະຕິບັດຂອງທ່ານສາດສະດາ ﷺ ຕໍ່ບັນດາຊໍຮາບະຫ໌

ການປະຕິບັດຂອງທ່ານຕໍ່ບັນດາສາວົກດ້ວຍຄວາມດີງາມຢ່າງທີ່ສຸດ ເຊິ່ງບໍ່ມີໃຜສາມາດເຮັດໄດ້ ແລະ ຂໍຍົກຕົວຢ່າງຕໍ່ໄປນີ້;

- **ຄວາມນອບນ້ອມຖ່ອມຕົວກັບຜູ້ທີ່ຢູ່ອ້ອມຂ້າງ**

ທາສຍິງຄົນໜຶ່ງຈາກຊາວມາດີນະຫ໌ໄດ້ຈັບມືຂອງທ່ານຣໍຊູລລຸລລໍຫ໌ ﷺ ແລະ ພາຍ່າງໄປຕາມທີ່ນາງປາດຖະໜາ[1] ທ່ານເປັນຄົນທີ່ບໍ່ເຄີຍຖືຕົວຕໍ່ບັນດາສາວົກຂອງທ່ານເລີຍ ບັນດາແມ່ຍິງມີຄວາມກ້າຫານທີ່ຈະຖາມຢ່າງດັງໆກ່ຽວກັບສິດທິຂອງພວກນາງ ແຕ່ກັບຄົນອື່ນພວກນາງຈະບໍ່ກ້າ ມີເທື່ອໜຶ່ງທ່ານອຸມັຣໄດ້ເຂົ້າໄປຫາ ທ່ານຣໍຊູລລຸລລໍຫ໌ ﷺ ໃນເວລານັ້ນທ່ານຢູ່ກັບບັນດາແມ່ຍິງ ແລະ ພວກນາງໄດ້ຖາມທ່ານຣໍຊູລລຸລລໍຫ໌ ﷺ ດ້ວຍສຽງທີ່ດັງ ເມື່ອພວກນາງໄດ້ຍິນສຽງຂອງ ທ່ານອຸມັຣເຂົ້າມາຫາ ທ່ານຣໍຊູລລຸລລໍຫ໌ ﷺ ພວກບັນດາແມ່ຍິງເຫຼົ່ານັ້ນໄດ້ມິດງຽບໃນທັນທີ ທ່ານນະບີຈຶ່ງຫົວ ອຸມັຣ ຈຶ່ງຖາມວ່າ:

**ທ່ານຫົວອີຫຍັງ?**

ທ່ານຕອບວ່າ:

**ຂ້າພະເຈົ້າປະຫລາດໃຈກັບບັນດາແມ່ຍິງເຫຼົ່ານີ້ ເມື່ອພວກເຂົາໄດ້ຍິນສຽງຂອງເຈົ້າ ພວກນາງກໍ່ຢຸດເວົ້າທັນທີ.**

ອຸມັຣ ຈຶ່ງເວົ້າວ່າ:

**ທ່ານ (ນະບີ ﷺ) ແມ່ນສົມຄວນທີ່ຈະຢ້ານກົວຫຼາຍກວ່າ**[2]

- **ຢ້ຽມຢາມເຮືອນຂອງຊໍຮາບະຫ໌**

ລາຍງານໂດຍ ອານັສ ບິນ ມາລິກ ຣໍດີຍັລລໍຮຸ ອັນຮູ ເວົ້າວ່າ:

ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ໄປຢ້ຽມຢາມເຮືອນຫຼັງໜຶ່ງຂອງຊາວມະດີນະຫ໌ ທ່ານໄດ້ຮ່ວມກິນເຂົ້ານຳເຈົ້າຂອງບ້ານນັ້ນ ແລະ ເມື່ອທ່ານຈະອອກຈາກເຮືອນ ທ່ານໄດ້ຂໍສະຖານທີ່ໃນເຮືອນ ແລ້ວທ່ານກໍ່ເອົາຜ້າປູ ຈາກນັ້ນທ່ານໄດ້ລະໝາດ ແລະ ຂໍພອນໃຫ້ພວກເຂົາ[3]

- **ການໄດ້ຮັບຂອງຂວັນ ແລະ ການດຸອາ**

ທ່ານຣໍຊູລລຸລລໍຫ໌ ﷺ ຈະຮັບເອົາຂອງຂວັນຈາກຜູ້ໃຫ້ສະເໝີ ແລະ ຂໍດຸອາໃຫ້ແກ່ພວກເຂົາເຫຼົ່ານັ້ນເຖິງແມ່ນວ່າຂອງຂວັນນັ້ນຈະມີພຽງເລັກນ້ອຍ

ທ່ານຣໍຊູລລຸລລໍຫ໌ ﷺ ກ່າວວ່າ:

لَوْ دُعِيتُ إِلَى ذِرَاعٍ أَوْ كُرَاعٍ لَأَجَبْتُ وَلَوْ أُهْدِيَ إِلَيَّ ذِرَاعٌ أَوْ كُرَاعٌ لَقَبِلْتُ

"ຖ້າຂ້ອຍຖືກເຊີນໃຫ້ກິນຊີ້ນແກະ ຂ້ອຍກໍ່ຈະຕອບຮັບ ແລະ ຖ້າຫາກວ່າຂ້ອຍໄດ້ຮັບມອບຊີກໂຄງ ຂ້ອຍກໍ່ຈະຮັບມັນເຊັ່ນດຽວກັນ" [4]

- **ໄປຢ້ຽມຢາມຄົນເຈັບ ແລະ ປອບໃຈເຂົາເຈົ້າ**

ທ່ານຣໍຊູລລຸລລໍຫ໌ ﷺ ໃຊ້ໃຫ້ໄປຢ້ຽມຢາມຄົນເຈັບ ແລະ ຊຸກຍູ້ສົ່ງເສີມໃຫ້ ຊໍຮາບະຫ໌ ໄປຢ້ຽມຢາມຄົນເຈັບປ່ອຍສະເໝີ ເມື່ອໄດ້ຍິນຂ່າວວ່າຊໍຮາບະຫ໌ຄົນໃດເຈັບປ່ວຍ ທ່ານຈະໄປຢ້ຽມຢາມ ແລະ ດູອາໃຫ້[5] ທ່ານແຕ່ງງານກັບຜູ້ຍິງຫຼາຍຄົນ ເພື່ອເປັນການປອບໃຈແກ່ພວກນາງທີ່ໄດ້ສູນເສຍສາມີໄປ ແລະ ຊ່ວຍດູແລລູກໆ ໃຫ້ແກ່ພວກນາງ ເຊັ່ນຕອນທີ່ທ່ານແຕ່ງງານກັບ ອູມມຸ ສາລາມະຫ໌ ທີ່ທ່ານແຕ່ງງານເພາະຍ້ອນວ່າສາມີຂອງນາງໄດ້ເສຍຊີວິດ ແລະ ປະລູກໄວ້ໃຫ້ນາງລ້ຽງ 4 ຄົນ[6] ແລະ ທ່ານຣໍຊູລລຸລລໍຫ໌ ﷺ ແຕ່ງງານກັບທ່ານນາງເຊົາດະຫ໌ ບິນຕິ ຮັມຊະຫ໌ ເນື່ອງຈາກສາມີຂອງນາງໄດ້ເສຍຊີວິດໄປ ແລະ ທ່ານຢ້ານວ່ານາງຈະຖືກທຳຮ້າຍຈາກພີ່ນ້ອງພວກພ້ອງທີ່ຍັງບໍ່ເຊື່ອສັດທາ[7]

- **ຄວາມອ່ອນໂຍນຕໍ່ຜູ້ທີ່ເຮັດຄວາມຜິດ**

ທ່ານຣໍຊູລລຸລລໍຫ໌ ﷺ ເປັນຜູ້ທີ່ເອົາໃຈໃສ່ກັບຄວາມຮູ້ສຶກຂອງຄູ່ຂອງບັນດາຊໍຮາບະຫ໌ ອ່ອນໂຍນກັບຜູ້ທີ່ເຮັດຜິດພາດ ເມື່ອທ່ານຮູ້ ທ່ານຈະບໍ່ເວົ້າວ່າ ເປັນຫຍັງເຈົ້າຈຶ່ງເຮັດແບບນັ້ນ ແບບນີ້? ແຕ່ທ່ານຈະເວົ້າວ່າ:

"مَا بَالُ أَقْوَامٍ قَالُوا كَذَا وَكَذَا"

**ເປັນຫຍັງກຸ່ມຕ່າງໆ ເວົ້າແນວນັ້ນ ແນວນີ້?**

ຄັ້ງໜຶ່ງ, ມີຊາວອາຣັບຊົນນະບົດຄົນໜຶ່ງໄດ້ເຂົ້າມາໃນມັສຍິດ ແລ້ວກໍ່ຍ່ຽວລົງທີ່ພື້ນ ຜູ້ຄົນໄດ້ແລ່ນໄປຫາລາວເພື່ອດ່າວ່າຊາຍຜູ້ນັ້ນ ທ່ານຣໍຊູລລຸລລໍຫ໌ ﷺ ກ່າວວ່າ:

دَعُوهُ وَأَهْرِيقُوا عَلَى بَوْلِهِ ذَنُوبًا مِنْ مَاءٍ أَوْ سَجْلاًمِنْ مَاءٍ فَإِنَّمَا بُعِثْتُمْ مُيَسِّرِينَ وَلَمْ تُبْعَثُوا مُعَسِّرِينَ

ປ່ອຍລາວໄປສາ. ແລະເອົານ້ຳມາຣົດໃສ່ບ່ອນທີ່ມີຍ່ຽວນັ້ນ, ກະປ໋ອງຫຼືປະລິມານໜຶ່ງ ແທ້ຈິງແລ້ວ ພວກທ່ານຖືກສົ່ງມາເພື່ອເປັນຜູ້ອຳນວຍຄວາມສະດວກ ບໍ່ໄດ້ຖືກສົ່ງມາເພື່ອເຮັດໃຫ້ເກີດຄວາມລຳບາກແຕ່ປະການໃດ[8]

➢ **ຄວາມເອື້ອເຟື້ອເພື່ອແຜ່ຕໍ່ສະຫາຍຂອງທ່ານ**

ແມ່ຍິງຄົນຫນຶ່ງໄດ້ນຳເອົາຜ້າຄຸມມາໃຫ້ທ່ານຣໍຊູລລຸລລໍຫ໌ ﷺ ເປັນຂອງຂວັນ ແລ້ວທ່ານໄດ້ຮັບໄວ້ ເພາະ ທ່ານເອງມີຄວາມຕ້ອງການຜ້າຜືນນັ້ນ ທ່ານໄດ້ສວມໃສ່ມັນ ຊໍຮາບະຫ໌ຜູ້ໜຶ່ງເຫັນສິ່ງນີ້ຈຶ່ງເວົ້າວ່າ:

**ໂອ້ ທ່ານຣໍຊູລລຸລລໍຫ໌ ﷺ ຜ້າຄຸມທີ່ທ່ານປົກຄຸມນັ້ນມັນງາມຫຼາຍ ຂ້ອຍຢາກໄດ້ ຢາກໃສ່ມັນ.**

ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຕອບວ່າ: **ໄດ້**

ເມື່ອທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຍ່າງອອກໄປ ບັນດາຊໍຮາບະຫ໌ໄດ້ດ່າຊາຍຄົນນັ້ນ ແລະ ເວົ້າວ່າ:

**ເຈົ້າກໍ່ຮູ້ວ່າ ທ່ານຣໍຊູລລຸລລໍຫ໌ ﷺ ມີຄວາມຕ້ອງຜ້າຜືນນັ້ນຢູ່ ແລ້ວເຈົ້າສິຂໍມັນເຮັດຫຍັງ ເຈົ້າກໍ່ຮູ້ຢູ່ວ່າ ທ່ານຣໍຊູລລຸລລໍຫ໌ ﷺ ບໍ່ເຄີຍປະຕິເສດຜູ້ທີ່ມາຂໍນຳທ່ານ.**

ຜູ້ຊາຍເວົ້າວ່າ:

**ຂ້ອຍຫວັງວ່າຈະໄດ້ຮັບຄວາມສິລິມົງຄຸນຈາກຜ້ານັ້ນ ເນື່ອງຈາກວ່າ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ໃສ່ມັນ ແລະ ຂ້ອຍຄິດວ່າຂ້ອຍຈະເອົາຜ້ານີ້ ຫໍ່ຮ່າງກາຍຂອງຂ້ອຍເມື່ອເສຍຊີວິດ**[9]

*ເຫຼົ່ານີ້ແມ່ນພຽງແຕ່ບາງຕົວຢ່າງຂອງພຶດຕິກຳຂອງ ທ່ານຣໍຊູລລຸລລໍຫ໌ ﷺ ທີ່ປະຕິບັດກັບບັນດາຊໍຮາບະຫ໌ ເຊິ່ງບໍ່ສາມາດເວົ້າໃນສ່ວນທີ່ເຫຼືອໄດ້ທັງໝົດ ທ່ານຣໍຊູລລຸລລໍຫ໌ ﷺ ພົບກັບຜູ້ຄົນດ້ວຍໃບໜ້າຍິ້ມແຍ້ມ ອົດທົນກັບຄວາມຜິດພາດຂອງຊໍຮາບະຫ໌ສະເໝີ ທ່ານໄດ້ໃຫ້ກຽດຜູ້ອາວຸໂສຜູ້ເຖົ້າແກ່, ມີຄວາມເມດຕາຕໍ່ຜູ້ນ້ອຍ, ແລະ ຊ່ວຍເຫຼືອຄົນຂັດສົນສະເໝີ.*

---

1. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ ( باب الكبر / 61.وباب التبسم/68 )

2. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ ( باب الكبر / 61.وباب التبسم/68 )

3. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ ບົດ ການຊີຍາເຣາະຫ໌ ຢ້ຽມຍາມ

4. ຊາຮີຮູ ບູຄາຣີ Kitābul-Hibah ບົດທີ: ການໃຫ້ສິ່ງເລັກນ້ອຍ /2

5. ຊາຮີຮູ ບູຄາຣີ Kitābul Marta ບົດທີ 4-5-10-13-15

6. ອັດຕໍ່ບ່າກອດ ອັລກຸບຣໍ ລິອິບນີ ຊະອຸ໌ 8/87-89 ດຸມະຫ໌ຮິສກູ້ລລໍຫ໌ ອັຊຊິເຣາະຫ໌ຕຸລນະບ່າວີຍະຫ໌ 702

7. ອັດຕໍ່ບ່າກອດ ອັລກຸບຣໍ ລິອິບນີ ຊະອຸ໌ 8/52-53

8. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ 80/ باب يسروا ولا تعسروا.

9. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບຸ້ລອະດັບ ບົດທີ 39

## 19.4 ການປະພຶດຂອງ ທ່ານຣໍຊູລລຸລລໍຫ໌ ﷺ ຕໍ່ບັນດາສັດຕູ

ທ່ານຣໍຊູລລຸລລໍຫ໌ ﷺ ບໍ່ຕ້ອງການເປັນສັດຕູກັບທຸກຄົນ ແຕ່ຫາກວ່າບັນດາສັດຕູໄດ້ພະຍາຍາມທຳຮ້າຍທ່ານ ເພາະທ່ານຖືກສົ່ງມາເພື່ອໃຫ້ທາງນຳແກ່ມະນຸດ ແລະ ພະຍາຍາມທຸກວິທີທາງເພື່ອທີ່ຈະນຳເຂົາເຈົ້າອອກຈາກຄວາມມືດສູ່ແສງສະຫວ່າງ ແລະ ອອກຈາກຄວາມຫຼົງຜິດໄປສູ່ຫົນທາງທີ່ຊື່ຕຣົງ ທ່ານຈະມີຄວາມສຸກຫຼາຍເມື່ອໄດ້ຊ່ວຍຄົນໆໜຶ່ງອອກຈາກຄວາມຊົ່ວຮ້າຍໄປສູ່ຄວາມຜາສຸກ ຈາກຄວາມຫຼົງຜິດໄປສູ່ຫົນທາງສະຫວ່າງ ທ່ານຣໍຊູລລຸລລໍຫ໌ ﷺ ມີຄວາມອົດທົນຢ່າງຫຼາຍຕໍ່ການຖືກທຳຮ້າຍຈາກກຸ່ມຕໍ່ຕ້ານ ແຕ່ທ່ານເອງມີຄວາມປາຖະໜາອັນແຮງກ້າ ໃນການເຮັດໃຫ້ພວກເຂົາໄດ້ຮັບແສງສະຫວ່າງ ເຫຼົ່ານີ້ແມ່ນຕົວຢ່າງຂອງຈັນຍາບັນຂອງ ທ່ານຣໍຊູລລຸລລໍຫ໌ ﷺ ປະຕິບັດຕໍ່ບັນດາສັດຕູ

- **ຄວາມຈິງຈັງໃນການທີ່ຈະໃຫ້ພວກເຂົາໄດ້ຮັບແສງສະຫວ່າງ**

ທ່ານຣໍຊູລລຸລລໍຫ໌ ﷺ ເອົາໃຈໃສ່ຢ່າງຫຼວງຫຼາຍໃນການຊີ້ນຳສັດຕູສູ່ທາງສະຫວ່າງ ທ່ານຈະໂສກເສົ້າ ແລະ ເຈັບປວດຫຼາຍ ຂະນະພວກເຂົາເຫຼົ່ານັ້ນບໍ່ສົນໃຈການເຜີຍແຜ່ ທ່ານຈິງຈັງ ແຕ່ພວກເຂົາກັບທຳຮ້າຍທ່ານຫຼາຍຂຶ້ນ

ອັລລໍຫ໌ ﷻ ກ່າວໃນພຣະຄຳພີ ອັລກຸຣອານວ່າ:

**“ບາງທີເຈົ້າອາດເປັນຜູ້ທີ່ທຳລາຍຊີວິດຂອງເຈົ້າດ້ວຍຄວາມເສຍໃຈ ຍ້ອນການຫັນໜີຂອງເຂົາເຈົ້າ ຖ້າຫາກເຂົາເຈົ້າບໍ່ເຊື່ອໃນອັລກຸຣອານ ນີ້”** (ອັລ-ກະຫ໌ຟີ 18: 6)

ອີກໂອງການໜຶ່ງ ອັລລໍຫ໌ ﷻ ເວົ້າວ່າ:

**“ບາງທີ ແມ່ນເຈົ້າ (ມູຮຳມັດ) ເປັນຜູ້ທີ່ໄດ້ທຳລາຍຊີວິດຂອງເຈົ້າ ເພາະວ່າເຂົາເຈົ້າບໍ່ໄດ້ເປັນຜູ້ສັດທາ”** (ອັລ-ຊູຣໍ 26:3)

*ໝາຍຄວາມວ່າ ທ່ານໂສກເສົ້າຍ້ອນການປະຕິເສດສັດທາບໍ່ເຊື່ອຂອງເຂົາເຈົ້າ*[1]

- **ການຂໍອະທິຖານ ເພື່ອຈະໄດ້ຮັບທາງນຳ ແລະ ຫ່າງໄກຈາກຄວາມຫຼົງຜິດ**

ຫຼາຍໆ ຄັ້ງ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຂໍດູອາຕໍ່ພຣະເຈົ້າໃຫ້ປະທານທາງແສງສະຫວ່າງແກ່ຜູ້ທີ່ຕໍ່ຕ້ານສາສະໜາ ແລະ ຜູ້ທີ່ຫລົງຜິດ ບໍ່ວ່າຈະເປັນຄົນດຽວຫຼືຫຼາຍຄົນກໍ່ຕາມ ອັລລໍຫ໌ ﷻ ຊົງຕອບຮັບຄຳຮ້ອງຂໍ ໂດຍການໃຫ້ຫົວໃຈຂອງບຸກຄົນນັ້ນມີຄວາມເຂົ້າໃຈກ່ຽວກັບອິດສະລາມ ເຊັ່ນການຂໍດຸອາໃຫ້ທ່ານ **ທ່ານອຸມັຣ ບິນ ຄອດຕອບ ຣໍດີຍັລລໍ ອັນຮຸ** ຕາມທີ່ທ່ານຂໍວ່າ:

**"ໂອ້ ອັລລໍຫ໌ ຂໍພຣະອົງເຮັດໃຫ້ອິສລາມ ສູງສົ່ງຈາກຜູ້ຊາຍສອງຄົນ ອັນເປັນທີ່ຮັກແພງສຳລັບຂ້ອຍນັ້ນແມ່ນ ອາບູ ຈະຮັລ ຫຼື ອຸມັຣ ບິນ ຄອດຕອບ ດ້ວຍເຖີດ**[2]

ແລະ ຫຼັງຈາກນັ້ນຊົນເຜົ່າ ເດົາຊ໌ ກໍ່ຍອມຮັບອິດສະລາມ ເນື່ອງຈາກການອ້ອນວອນຂໍດູອາຂອງທ່ານຣໍຊູລລຸລລໍຫ໌ ﷺ ໃຫ້ແກ່ພວກເຂົາ ແລະໃນຂະນະທີ່ທ່ານ **ຕູໄຟ ບິນອັມຣີ ອັດເດົາຊີ** ໄດ້ຮຽກຮ້ອງເຊີນຊວນປະຊາຊົນໃນເຜົ່າຂອງຕົນມາສູ່ອິສລາມ ແລະ ມີຄົນຄັດຄ້ານຕໍ່ຕ້ານ ລາວຈຶ່ງກັບຄືນມາຫາທ່ານຣໍຊູລລຸລລໍຫ໌ ﷺ ທ່ານຈຶ່ງຂໍອະທິດຖານດູອາໃຫ້ປະຊາຊົນຂອງເພິ່ນ ແຕ່ລາວປະຕິເສດ ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງຂໍດຸອາອະທິຖານວ່າ:

**"ໂອ້ ອັລລໍຫ໌ ຂໍພຣະອົງຊົງໃຫ້ທາງແສງສະຫວ່າງແກ່ປະຊາຊົນຊາວເດົາຊ ດ້ວຍເຖີດ"**

ຫຼັງຈາກນັ້ນ, ທ່ານຣໍຊູລລຸລລໍຫ໌ ﷺ ກ່າວວ່າ:

**"ເຈົ້າຕ້ອງກັບຄືນໄປເຖີດ ຈົ່ງເຊີນຊວນພວກເຂົາດ້ວຍຄວາມນິ່ມນວນ ຄ່ອຍໆເປັນ"**

ລາວຈຶ່ງກັບຄືນມາ ແລະ ເຊີນຊວນຜູ້ຄົນອີກຄັ້ງ ແລະພວກເຂົາໄດ້ປ່ຽນໃຈເຫລື້ອມໃສໃນອິສລາມ[3] ໃນມື້ຂອງການພິຊິດເມືອງ ຕໍອິຟ ໃນຂະນະທີ່ພວກເຂົາຝ່າຝືນຕໍ່ບັນດາມຸສລິມີນ ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຮຽກຮ້ອງໃຫ້ບັນດາ ຊໍຮາບະຫ໌ ເປີດການປິດລ້ອມຂອງຊົນເຜົ່າ ຊະກີຟ ແລະ ເຊື້ອເຊີນໃຫ້ຊາວມຸດສະລິມດູອາໃຫ້ແກ່ສັດຕູ ແຕ່ຊາວມຸດສະລິມປະຕິເສດ ທ່ານຣໍຊູລລຸລລໍຫ໌ ﷺ ຈຶ່ງໄດ້ຂໍດູອາອະທິຖານໃຫ້ແກ່ພວກເຂົາ ໂດຍກ່າວວ່າ:

**"ໂອ້ ອັລລໍຫ໌ ຂໍພຣະອົງຊົງໃຫ້ທາງແສງສະຫວ່າງກັບປະຊາຊົນຂອງຊາວສະກີຟ ດ້ວຍເຖີດ"**[4]

ແລະ ບໍ່ດົນຊົນເຜົ່າ ຊະກີຟ ກໍ່ມາປະກາດເຂົ້າຮັບເອົາອິສລາມ

1. ຕັຟຊີຣ ອິບນຸ ກະຊີຣ 5/132. 6/144

2. ມຸສນັດອິມ່າມອະມັດ 1/95 ສຸນັນ ອັດ-ຕິຣມີຊີ

3. ກີຊເຊາະຫ໌ ລີອິບນີ້ລອະຊີຣ 4/54 ຈາກ ອິບນິອິສຮາກ ໃນ ຊໍຣີຫ໌ຮຸລບຸກຄໍຣີ ຄໍບັຣຯ ອັລມະກໍຊີ ກີສເຊາະຫ໌ ເດົາຊ໌/75

4. ສຸນັນ ອັດ-ຕິຣມີຊີ ມະນາກິບສະກີຟ ເປັນຊໍຣີຫ໌ ກໍຣິບ

- **ໃຫ້ອະໄພເຖິງແມ່ນວ່າສາມາດຈະເອົາຄືນເຂົາເຈົ້າໄດ້**

ຫຼັງຈາກການເສຍຊີວິດຂອງລຸງຄື ອະບູ ຕໍລິບ ແລະ ພັນລະຍາ ທ່ານຍິງຄໍດີຈະຫ໌ ພວກກູເຣຊ ໄດ້ເພີ່ມທະວີການທໍາຮ້າຍຂອງພວກເຂົາຕໍ່ທ່ານ ທ່ານຈຶ່ງໄດ້ເດີນທາງໄປເມືອງຕໍອິຟ ແຕ່ກັບພົບວ່າພວກເຂົາພະຍາຍາມທໍາຮ້າຍທ່ານຫຼາຍກວ່າພວກມັກກະຫ໌ສໍ່າອີກ ແລະ ໃນຂະນະທີ່ຍ່າງຜ່ານເມືອງຕໍອິຟ ໃນລະຫວ່າງທາງ ທ່ານຈິບຣິລ ອະໄລຮິສ ສະລາມ ໄດ້ມາຫາ ແລະບອກວ່າ:

**"ແທ້ຈິງ ອັລລໍຫ໌ໄດ້ຍິນຄໍາເວົ້າຂອງປະຊາຊົນຂອງທ່ານແລ້ວ ແລະ ຮູ້ດີວ່າພວກເຂົາຕອບໂຕ້ທ່ານແນວໃດ ແລະ ອັລລໍຫ໌ໄດ້ສົ່ງມາໃຫ້ທ່ານ ເທວະດາແຫ່ງພູເຂົາ ເພື່ອທີ່ຈະທ່ານໃຊ້ແກ້ແຄ້ນໄດ້ຕາມທີ່ທ່ານຕ້ອງການ"**

ເທວະດາແຫ່ງພູເຂົາໄດ້ເອີ້ນ ທ່ານຣໍຊູລລຸລລໍຫ໌ ﷺ ວ່າ:

**"ໂອ້ ມຸຮໍາມັດເອີ່ຍ ຖ້າຫາກທ່ານຕ້ອງການຈັດການກັບພວກເຫຼົ່ານີ້ ຂ້າພະເຈົ້າຈະທໍາລາຍພວກເຂົາຢ່າງລາບຄາບ"**

ທ່ານຣໍຊູລລຸລລໍຫ໌ ﷺ ໄດ້ຕອບວ່າ:

**"ຂ້າພະເຈົ້າຫວັງວ່າອັລລໍຫ໌ ຈະນໍາພວກເຂົາອອກຈາກຄວາມຫຼົງຜິດໄປສູ່ນະມັດສະການພຣະອົງພຽງຜູ້ດຽວ ໂດຍບໍ່ມີການຕັ້ງພາຄີກັບສິ່ງໜຶ່ງສິ່ງໃດ"**

ທ່ານຣໍຊູລລຸລລໍຫ໌ ﷺ ໃຫ້ອະໄພຊາວກູເຣຊ ຂະນະທີ່ພິຊິດເມືອງມັກກະຫ໌ ໂດຍທ່ານໄດ້ກ່າວກັບພວກເຂົາວ່າ:

**"ພວກທ່ານທັງຫຼາຍບໍ່ມີຄວາມຜິດແລ້ວຂະນະນີ້ ເພາະອັລລໍຫ໌ໄດ້ຊົງອະໄພໃຫ້ພວກທ່ານ "**[1]

ແລະ ທ່ານຍັງໄດ້ໃຫ້ອະໄພແກ່ທ່ານ **ເກົາຣິຊ ບິນ ຮາລິຊ** ເຖິງແມ່ນວ່າລາວໄດ້ພະຍາຍາມທີ່ຈະຂ້າທ່ານຣໍຊູລລຸລລໍຫ໌ ﷺ ແລ້ວເມື່ອລາວກັບຄືນໄປຫາພວກພ້ອງຂອງລາວ ລາວເວົ້າວ່າ:

**"ຂ້ອຍໄດ້ມາຈາກຄົນທີ່ດີທີ່ສຸດໃນຫມູ່ມະນຸດ"**[2]

---

1. ຊໍຮີຫ໌ຮຸລບຸກຄໍຣີ ກິຕາບຸ້ລອະຕັບ ບົດທີ 7 ຮ/3231 ໃນ ຟັດ 6/321-313 ຊໍຮີຫ໌ ມຸສລິມ 3/1420ຮ /1795.- ອະບູໄບດ ກິຕາບູ້ລອັມວານ 1/202 ຊີເຣາະຫ໌ ອິບນຸຮີຊາມ 4/32 ໆ. ເບິງໃນມະດີຣີສ ກຸລລໍຫ໌. ອັຊຊີເຣາະຫ໌ ນະບະວີຍະຫ໌ 569 ແລະອື່ນໆ.

2. ຊໍຮີຫ໌ຮຸລບຸກຄໍຣີ ອັລມະກໍຊີ ບົດ: ສົງຄາມ ຊາຕອັຣຣີກໍ່ 31 ຊໍຮີຫ໌ຮຸລບຸກຄໍຣີ ອັລຊໍລາຫ໌ ບົດ: ສໍລາຕຸ້ລເຄົ້າຟ

- **ໃຫ້ກຽດຕໍ່ສົນທິສັນຍາທີ່ໄດ້ເຮັດ**

ບໍ່ເຄີຍປາກົດຢູ່ໃນປະຫວັດສາດເລີຍວ່າທ່ານຣໍຊູລລຸລລໍຫ໌ ﷺ ເຮັດສັນຍາກັບໃຜແລ້ວ ທ່ານກໍ່ເຮັດຜິດສັນຍາ ເຖິງແມ່ນວ່າຜູ້ທີ່ເຮັດສັນຍານັ້ນ ຈະແມ່ນສັດຕູກໍ່ຕາມ ໃນເລື່ອງນີ້ສັດຕູຂອງທ່ານໄດ້ຢືນຢັນ ເຊິ່ງຂະນະຊາວຢູດາຍ (ຍິວ) ຄົນໜຶ່ງຊື່ວ່າ ໄຮຍີ ລູກຊາຍຂອງ ອັດຕ໊ອບ, ໄດ້ຢືນຂຶ້ນເວົ້າກັບ ກະອ ບິນ ອະຊັດ, ເຊິ່ງເປັນຜູ້ນຳຊາວຍິວຈາກເຜົ່າບະນີ ກູຣອຍເຊາະຫ໌, ຢາກທີ່ຈະຈີກສົນທິສັນຍາທີ່ໄດ້ເຮັດໄວ້ກັບທ່ານຣໍຊູລລຸລລໍຫ໌ ﷺ ແລ້ວໂຮມຕົວກັບບັນດາພັນທະມິດ, ຖ້ອຍຄຳທີ່ກະອ ໄດ້ກ່າວກັບໄຮຍ ໃນຕອນຕົ້ນວ່າ:

**"ຂ້ອຍໄດ້ເຮັດພັນທະສັນຍາກັບມູຮຳມັດ ແລະ ຂ້ອຍຈະບໍ່ເຮັດຜິດສັນຍາທີ່ເຮັດໄວ້ກັບລາວ ເພາະຂ້ອຍບໍ່ເຄີຍເຫັນລາວເຮັດຜິດຄຳສັນຍາ ເພາະ ລາວຮັກສາຄຳສັນຍາ ແລະ ສັດຊື່ສະເໝີ"**[1]

- **ກຳໜົດຂອບເຂດການສູ້ຮົບໃຫ້ແຄບທີ່ສຸດເທົ່າທີ່ເປັນໄປໄດ້**

ການເຮັດສົງຄາມຂອງທ່ານຣໍຊູລລຸລລໍຫ໌ ﷺ ກັບບັນດາສັດຕູ ມັນຈະແຕກຕ່າງຈາກສົງຄາມກັບການເຮັດສົງຄາມຂອງຄົນອື່ນໆ ໃນແຜ່ນດິນນີ້ ເນື່ອງຈາກວ່າ ທ່ານຣໍຊູລລຸລລໍຫ໌ ﷺ ບໍ່ເຄີຍຄິດທີ່ຈະຂ້າສັດຕູຂອງທ່ານເລີຍ ຫາກແຕ່ຕ້ອງເຮັດສົງຄາມເນື່ອງຈາກວ່າມີສະຖານະການເນື່ອງຈາກການສະກັດການການເຜີຍແຜ່ສາສະໜາຂອງອັລລໍຫ໌ ﷻ ດ້ວຍເຫດນີ້ ການເຮັດສົງຄາມຈຶ່ງມີຄວາມຈຳເປັນທີ່ຈະຕ້ອງເກີດຂຶ້ນ ເພື່ອທີ່ຈະບໍ່ເຮັດໃຫ້ເກີດຄວາມວຸ່ນວາຍຂອງຜູ້ທີ່ຈະປ່ຽນມາເປັນອິດສະລາມ

ອັລລໍຫ໌ ﷻ ຕຣັດວ່າ:

**"ແລະ ພວກເຈົ້າຕໍ່ສູ້ກັບພວກເຂົາ ຈົນກ່ວາຄວາມວຸ່ນວາຍຈະໝົດໄປ ແລະ ການອິບາດະຫ໌ທັງໝົດຈະຕ້ອງເປັນສິດຂອງອັລລໍຫ໌ພຽງຜູ້ດຽວເທົ່ານັ້ນ ຖ້າຫາກພວກເຂົາຢຸດເຊົາ ແນ່ນອນ ອັລລໍຫ໌ຊົງເຫັນໃນສິ່ງທີ່ພວກເຂົາເຮັດກັນ"** (ອັລ-ອັນຟານ8: 39)

ສົງຄາມຂອງ ທ່ານຣໍຊູລລຸລລໍຫ໌ ﷺ ເປັນສົງຄາມທີ່ຖືກຈຳກັດສະເພາະຢູ່ໃນສະໜາມຮົບ ແລະ ກັບບຸກຄົນທີ່ກະບົດແຂງຂໍ້ກະດ້າງເຮັດຕົວບໍ່ເຊື່ອຟັງ ອັລລໍຫ໌ ແລະ ຣໍຊູລຂອງພຣະອົງ ເມື່ອທ່ານໄດ້ແຕ່ງຕັ້ງຜູ້ນຳກອງທະຫານຫຼືຫົວໜ້າ **ຊະຣິຍະຫ໌** (سرية), ຈຳນວນທະຫານມີຕັ້ງແຕ່ 5 ເຖິງ 300 ນາຍ) ທ່ານຣໍຊູລລຸລລໍຫ໌ ﷺ ຈະແນະນຳໃຫ້ຜູ້ນຳທັບມີຄວາມຢ້ານກົວຕໍ່ຂອງອັລລໍຫ໌ ແລະ ຊາວມຸດສະລິມທີ່ຢູ່ຮ່ວມກັບເຂົາໃຫ້ເຮັດຄວາມດີງາມ ຫຼັງຈາກນັ້ນທ່ານສາດສະດາໄດ້ກ່າວວ່າ:

اغْزُوا بِاسْمِ اللهِ فِي سَبِيلِ اللهِ قَاتِلُوا مَنْ كَفَرَ بِاللهِ اغْزُوا وَلاَ تَغُلُّوا وَلاَتَغْدِرُوا وَلاَ تَمْثُلُوا وَلاَ تَقْتُلُوا وَلِيدًا وَإِذَا لَقِيتَ عَدُوَّكَ مِنْ الْمُشْرِكِينَ فَادْعُهُمْ إِلَى ثَلاَثِ خِصَالٍ أَوْ خِلاَلٍ فَأَيَّتُهُنَّ مَا أَجَابُوكَ فَاقْبَلْ مِنْهُمْ وَكُفَّ عَنْهُمْ ثُمَّ ادْعُهُمْ إِلَى الإِسْلاَمِ فَإِنْ أَجَابُوكَ فَاقْبَلْ مِنْهُمْ وَكُفَّ عَنْهُمْ .....فَإِنْ هُمْ أَبَوْا فَسَلْهُمْ الْجِزْيَةَ فَإِنْ هُمْ أَجَابُوكَ فَاقْبَلْ مِنْهُمْ وَكُفَّ عَنْهُمْ فَإِنْ هُمْ أَبَوْا فَاسْتَعِنْ بِاللهِ وَقَاتِلْهُمْ

*"ພວກເຈົ້າຈົ່ງຕໍ່ສູ້ດ້ວຍພຣະນາມຂອງອັລລໍຫ໌ ﷻ ໃນທົນທາງຂອງອັລລໍຫ໌ ﷻ ພວກທ່ານຈົ່ງຕໍ່ສູ້ກັບຜູ້ທີ່ປະຕິເສດອັລລໍຫ໌ ﷻ ພວກທ່ານຈົ່ງຕໍ່ສູ້ ແລະ ບໍ່ລັງເລ ຢ່າລວງເອົາສັບສິນຂອງຊະເລີຍເສິກ ແລະ ຢ່າເຮັດຜິດຄຳສັນຍາ ຢ່າເຮັດສິ່ງໃດທີ່ໜ້າກຽດຊັງ ຢ່າເຮັດຄົນຕາຍໃຫ້ເສຍໂສມ (ໂດຍການຕັດດັງ ຫຼື ຫູໃນຂະນະທີ່ມີຊີວິດຢູ່) ແລະ ຢ່າຂ້າເດັກນ້ອຍ ແລະ ເມື່ອພວກທ່ານປະເຊີນໜ້າກັບສັດຕູ ຈາກພວກມຸຊຣິກີນ ກໍ່ຈົ່ງເຊື້ອເຊີນໃຫ້ເຂົາເຈົ້າສູ່ສິ່ງສາມປະການ ບໍ່ວ່າພວກເຂົາເຈົ້າຈະຕອບຮັບທ່ານປະການໃດ ຈົ່ງຮັບພວກເຂົາ ແລະ ຈົ່ງຍຸດເຊົາການເຮັດສົງຄາມຂອງທ່ານກັບເຂົາເຈົ້າ. ຈົ່ງເຊີນເຂົາເຈົ້າໃຫ້ປ່ຽນມາເປັນອິດສະລາມ. ຖ້າຫາກພວກເຂົາຕອບຮັບການເຊື້ອເຊີນ ກໍ່ຈົ່ງຕອບຮັບ ແລະ ຢຸດສົງຄາມກັບພວກເຂົາ .... ຖ້າພວກເຂົາປະຕິເສດ ກໍ່ຈົ່ງຮຽກຮ້ອງຄິດຄ່າເກັບ ອັລຈິຊຍະຫ໌ (ພາສີຫົວ) ແລະ ຖ້າຫາກພວກເຂົາຍອມຕົກລົງທີ່ຈະຈ່າຍໃຫ້ທ່ານ ກໍ່ຈົ່ງຕອບຮັບ ແລະ ຢຸດຕິການເຮັດສົງຄາມ ແລະ ຖ້າຫາກພວກເຂົາປະຕິເສດການຈ່າຍຄ່າພາສີຫົວ, ກໍ່ຈົ່ງຂໍຄວາມຊ່ວຍເຫຼືອຈາກ ອັລລໍຫ໌ ﷻ ແລະ ຈົ່ງເຮັດສົງຄາມກັບພວກເຂົາ"* [2]

- **ການປະຕິບັດຕໍ່ຜູ້ທີ່ລອດຊີວິດຕາມສິດ ແລະ ໜ້າທີ່**

ມີຜູ້ທີ່ແມ່ນຊາວມຸດສະລິມໄດ້ອາໄສຢູ່ຮ່ວມກັນກັບຊາວມຸດສະລິມ ເຊິ່ງເປັນກຸ່ມຊົນທີ່ຢູ່ພາຍໃຕ້ສັນຍາຄຸ້ມຄອງ ແລະ ການດູແລຂອງມຸສລິມ ຫຼືເປັນກຸ່ມມຸນາຟິກີນ (ພວກໜ້າຊື່ໃຈຄົດ) ທີ່ສະແດງໃຫ້ເຫັນເຖິງການຍອມຮັບພາຍນອກ ແຕ່ປົກປິດຄວາມບໍ່ເຊື່ອຖືປະຕິເສດສັດທາ ແລະ ຄວາມເປັນສັດຕູກັບຊາວມຸດສະລິມ, ທ່ານຣໍຊູລລຸລລໍຫ໌ ﷺ ຈະປະຕິບັດໃນສ່ວນທີ່ເປັນສິດທິ ແລະ ຫນ້າທີ່ສຳລັບພວກເຂົາຢ່າງດີ

ດັ່ງເຊັ່ນ: ສິດທິໃນການເປັນເພື່ອນບ້ານ ຖ້າຫາກພວກເຂົາເປັນເພື່ອນບ້ານ ຫຼືສິດທິໃນການເປັນພີ່ນ້ອງ ຖ້າພວກເຂົາເປັນພີ່ນ້ອງ

---

1. ຊີເຣາະຫ໌ ອິບນີ ຮິຊາມ 3/236 ອັຊຊີເຣາະຫ໌ ນະບະວີຍະຫ໌ ລິອິບນີກະຊີຣ 3/198 ທັງສອງລາຍງານຈາກ ອິບນີ ອິສຮາກ ອັລ-ໄບຮາກີ ດ້າລາອີ້ລ ນຸບູວະຫ໌ 3/400

2. ຊໍຮີຫ໌ ມຸສລິມ ເຫຼັ້ມທີ່ 3, ຫະດິຊ 1357 / ປ່ຽນສາຍລາຍງານເປັນ 1731, ສຸນັນອັດຕິຣ ມີຊີ ສະບັບທີ 4, ຫະດິຊເລກທີ່ 162, ມຸສນັດ ອິມາມ ອະຫ໌ມັດ ເລັ່ມ 5, ຫະດິຊທີ່ 358 ແລະຄຳວ່າ "ມຸຊລະຫ໌" ຫມາຍຄວາມວ່າການຕັດອະໄວຍະວະບາງສ່ວນຂອງຮ່າງກາຍໃນຂະນະທີ່ຍັງມີຊີວິດຢູ່

ຄັ້ງໜຶ່ງ ທ່ານຣໍຊູລຸລລໍຫ໌ ﷺ ເຄີຍມີເພື່ອນບ້ານຄົນໜຶ່ງທີ່ເປັນຊາວຢິວ ແລະ ທ່ານມີເດັກຮັບຊາວຢິວ ເມື່ອເດັກຊາຍເຈັບປ່ວຍ ແລະ ຫາຍໜ້າໄປ ທ່ານຣໍຊູລຸລລໍຫ໌ ﷺ ໄດ້ໄປຢ້ຽມຢາມລາວ ແລະ ເຊື້ອເຊີນລາວໃຫ້ປ່ຽນມາເປັນອິດສະລາມ ແລ້ວລາວກໍ່ໄດ້ຮັບອິດສະລາມ[1]

*ທີ່ກ່າວມາຂ້າງເທິງນີ້ແມ່ນລັກສະນະ, ນິໄສ ແລະ ບຸກຄະລິກກະພາບຂອງທ່ານສາດສະດາ ພຽງແຕ່ເລັກນ້ອຍທີ່ນຳມາສະເໜີ ແລະ ຍັງຕ້ອງການທີ່ຈະຈື່ຈຳໃຫ້ລະນຶກເຖິງມາລະຍາດ ບຸກຄະລິກກະພາບໃນການດຳລົງຊີວິດສ່ວນຕົວຂອງທ່ານ ເຊັ່ນ: ການດຳລົງຊີວິດແບບໂດດດ່ຽວ ດຳລົງຊີວິດຢ່າງພຽງພໍຫ່າງໄກຈາກຄວາມສະດວກສະບາຍມັ່ງມີ, ຄວາມສະອາດ, ຄວາມຮັກ, ການສວມໃສ່ເສື້ອຜ້າ ການໃຊ້ເຄື່ອງຫອມ, ວິທີກິນຢູ່, ການແຕ່ງກາຍ, ການນອນ, ການຍ່າງ, ແລະ ຄວາມກ້າຫານຂອງທ່ານ ແລະອື່ນໆ ຕະຫຼອດຈົນຈັນຍາບັນມາລະຍາດໂດຍລວມ ເຊິ່ງບໍ່ສາມາດກ່າວເຖິງໄດ້ທັງໝົດ ແຕ່ຈັນຍາບັນ ແລະ ມາລະຍາດຂອງທ່ານສາດສະດາ ນັ້ນໄດ້ຖືກການສັງລວມໃນປື້ມຈຳນວນຫຼາຍກ່ຽວກັບຈັນຍາບັນມາລະຍາດ ແລະ ສຸນັດ ຮາດີຊ ຈຳນວນຫຼາຍ.*

---

1. ຊໍຮີ້ຫ໌ຮຸລບຸກຄໍຣີ ກິຕາບ ອັລ-ຈະນາອິຊ (الجنائز) ບົດ ເມື່ອເວລາທີ່ເດັກນ້ອຍຍອມຮັບອິດສະລາມ ( ຫະດີຊເລກທີ່ 1356) ສຸນັນ ອາບີດາວູດ ເລັ່ມທີ 3, ຫະດີຊທີ່ 185 ມຸສນັດ ອີມາມ ອະຫ໌ມັດ ເລັ່ມ 3 ຫະດີຊເລກທີ່ 175

## 20. ຫຼັກຖານການເປັນນະບີ ແລະ ປະຕິຮານ

***ມຸອ໌ຈິຊາດ*** ຄືເລື່ອງຂອງຄວາມມະຫັດສະຈັນປະຕິຮານ ແລະເປັນເລື່ອງທີ່ເກີດຂື້ນໃນແນວທາງຂອງຈັກກະວານໂລກ[1] ສະນັ້ນ ອັລລໍຫ໌ ﷻ ບໍ່ໄດ້ສົ່ງທ່ານສາດສະດາມາ ເວັ້ນເສຍແຕ່ພຣະອົງຈະຊົງໃຫ້ທ່ານມີສິ່ງປະຕິຮານ ຫຼື ມີສິ່ງທີ່ເປັນມະຫັດສະຈັນອັນຫຼາຍຢ່າງທີ່ຊີ້ໃຫ້ເຫັນເຖິງວ່າ ທ່ານສາດສະດາ ມູຮຳມັດ ເປັນນະບີ ທີ່ຖືກສົ່ງມາຈາກພຣະອົງອັລລໍຫ໌ແກ່ມວນມະນຸດ ຕໍ່ໄປນີ້ຈະຂໍເວົ້າເຖິງຄວາມສຳຄັນຂອງສິ່ງມະຫັດສະຈັນຂອງທ່ານນະບີ ແລະ ຫຼັກຖານຂອງການເປັນສາດສະດາຂອງທ່ານ

### 20.1 ມູອ໌ຈິຍາດທີ່ດຳລົງຢູ່ຖາວອນ

ອັລກຸຣອານ ກະຣີມ ຫຼື ພຣະຄຳພີອັລກຸຣອານ ແມ່ນຄຳເວົ້າຂອງ ອັລລໍຫ໌ ﷻ ເຊິ່ງໄດ້ປະທານລົງມາແກ່ທ່ານນະບີ ມູຮຳມັດ ﷺ ຜູ້ທີ່ອ່ານພຣະຄຳພີອັລກຸຣອານ ນັ້ນຖືວ່າເປັນຜູ້ປະຕິບັດອິບາດະຫ໌ ເຮັດຄວາມດີ[2] ແລະ ຄຳພີອັລກຸຣອານກໍ່ເປັນສິ່ງອັດສະຈັນທີ່ຍິ່ງໃຫຍ່ຂອງທ່ານນະບີ ມູຮຳມັດ ﷺ ອັລກຸຣອານໄດ້ຊີ້ໃຫ້ເຫັນເຖິງຄວາມຍິ່ງໃຫຍ່ແຫ່ງສານທີ່ມາຈາກອັລລໍຫ໌ ﷻ ອັລກຸຣອານໄດ້ຖືກປະທານລົງມາໃຫ້ ຈິນ ແລະ ມະນຸດທັ້ງມວນ ແລະ ອັລກຸຣອານມີຄວາມທ່ຽງທຳໃນທຸກຍຸກທຸກສະໄໝ ຈົນເຖິງວັນພິພາກສາ

ການເຜີຍແຜ່ຂອງບັນດາສາດສະດາໃນຍຸກກ່ອນໆ ຖືກຈຳກັດໃຫ້ຢູ່ສະເພາະໃນກຸ່ມຊົນນັ້ນໆ ເທົ່ານັ້ນ ຫຼືເວລາ ແລະ ສະຖານທີ່ທີ່ກຳນົດໄວ້ ດ້ວຍເຫດນີ້ ສິ່ງທີ່ເປັນປະຕິຮານມະຫັດສະຈັນຂອງບັນດາສາດສະດາກ່ອນໆ ຈຶ່ງຖືກຈຳກັດໂດຍເວລາ ແລະ ຍຸກສະໄໝ ແລະ ສິ່ງປະຕິຮານທີ່ໄດ້ນຳມາແກ່ທ່ານສາດສະດາມຸຮຳຫມັດ ໃນອັລກຸຣອານ ນັ້ນແມ່ນນິລັນດອນ ແລະ ຍືນຍົງ ມະນຸດທຸກຄົນສາມາດສຳຜັດ ແລະ ຮູ້ສຶກໄດ້ຈົນເຖິງວັນສິ້ນໂລກ

ດັ່ງທີ່ທ່ານຣໍຊູລ ﷺ ກ່າວໃນຕອນນຶ່ງວ່າ:

مَا مِنَ الْأَنْبِيَاءِ نَبِيٌّ إِلاَّ أُعْطِيَ مِنَ الآيات مَا مِثْلهُ آمَنَ عَلَيْهِ الْبَشَرُ

وَإِنَّمَا كَانَ الَّذِي أُوتِيتُ وَحْيًا أَوْحَاهُ اللهُ إِلَيَّ فَأَرْجُو أَنْ أَكُونَ أَكْثَرَهُمْ تَابِعًا يَوْمَ الْقِيَامَةِ

ຫມາຍຄວາມວ່າ: ບໍ່ມີສາດສະດາທ່ານໃດຈາກບັນດາສາດສະດາທັງຫມົດ ນອກຈາກຈະປະທານຫຼັກຖານຕ່າງໆ (ແຫ່ງການເປັນສາດສະດາ) ສິ່ງທີ່ຄ້າຍຄືກັນກັບອັລກຸຣອານນັ້ນ ມະນຸດນັ້ນກໍ່ໄດ້ເຊື່ອໃນບັນດາສາດສະດາມາແລ້ວ ແລະ ສິ່ງທີ່ຂ້າພະເຈົ້າໄດ້ນຳມານັ້ນເປັນການວະຫ໌ຍີ ເຊິ່ງພຣະອົງອັລລໍຫ໌ ຊົງ

ວະຫ໌ຮີ (ດົນໃຈ) ໃຫ້ຂ້າພະເຈົ້າ ແລະ ຂ້າພະເຈົ້າຫວັງວ່າພວກທ່ານທັ້ງຫຼາຍຈະປະຕິບັດຕາມຂ້າພະເຈົ້າຈົນເຖິງວັນແຫ່ງການພິພາກສາ[3]

ການທີ່ມີຜູ້ທີ່ປະຕິບັດຕາມທ່ານຣໍຊູລ ﷺ ໂດຍປະຕິບັດຕາມສິ່ງທີ່ເປັນຄຳສັ່ງ (ອັລກຸຣອານ) ເປັນປະຈຳ ຈຶ່ງເຮັດໃຫ້ຜູ້ເຊື່ອຖືສັດທາຫຼາຍຂຶ້ນ[4] ແລະ ໄດ້ນຳເອົາຖ້ອຍຄຳທີ່ເປັນຄຳເວົ້າ ຂອງພຣະຄຳພີອັລກຸຣອານ ແລະ ແນວທາງຕ່າງໆ ແຕ່ສ່ວນໜຶ່ງທີ່ສຳຄັນແມ່ນ;

**1. ຖ້ອຍຄຳ ແລະ ລັກສະນະ ໃນດ້ານພາສາສາດ ເຊິ່ງຈະປາກົດຢູ່ໃນຄຳກ່າວທີ່ຈະແຈ້ງ.**

ຖ້ອຍຄຳທີ່ສວຍງາມຂອງອັລກຸຣອານ ແລະ ການຮຽບຮຽງທີ່ສວຍງາມ ແລະ ສຳນວນຕ່າງໆໃນອັລກຸຣອານຈະມີຄວາມຫມາຍທີ່ແຕກຕ່າງກັນ ເນື່ອງຈາກວ່າອັລກຸຣອານນັ້ນ ໄດ້ຖືກປະທານມາແດ່ສັງຄົມອາຫຣັບ ເຊິ່ງເປັນຜູ້ທີ່ເວົ້າຈາຈະແຈ້ງຊັດເຈນ ມີສີລະປະໃນສຳນວນຄຳເວົ້າຕ່າງໆ ແລະ ຄວາມເລັ້ນລັບຂອງວາທະສິນ ຊາວອາຣັບແມ່ນກຸ່ມຊົນທີ່ມີວາທະສິນທີ່ດີເລີດທີ່ສຸດ ໃນເວລາດຽວກັນນັ້ນ ອັລລໍຫ໌ ﷻ ໄດ້ຊິງທ້າທາຍຊາວອາຣັບມູຊຣິກີນ (ພວກປະຕິເສດ) ໂດຍການໃຫ້ພວກເຂົານຳເອົາບາງສິ່ງບາງຢ່າງທີ່ຄ້າຍຄືກັບອັລກຸຣອານ (ມາທັ້ງເລັ່ມ) ຫຼັງຈາກນັ້ນອັລລໍຫ໌ ﷻ ພຣະອົງໄດ້ທ້າທາຍພວກເຂົາໃຫ້ນຳເອົາສິບສູເຣາະຫ໌ ຍິ່ງໄປກວ່ານັ້ນອັລລໍຫ໌ ﷻ ພຣະອົງໄດ້ທ້າທາຍພວກເຂົາໃຫ້ນຳເອົາຫນຶ່ງສູເຣາະຫ໌ ແຕ່ພວກເຂົາບໍ່ມີຄວາມສາມາດ.

ດັ່ງທີ່ *ອັລລໍຫ໌* ﷻ ພຣະອົງໄດ້ກ່າວໃນຕອນຫນຶ່ງຂອງ ອັລກຸຣອານ ວ່າ:

**"ແລະ ຖ້າຫາກພວກເຈົ້າມີຄວາມສົງໄສກ່ຽວກັບສິ່ງທີ່ເຮົາ ( ອັລລໍຫ໌ ) ໄດ້ໃຫ້ລົງມາແກ່ບ່າວຂອງເຮົາແລ້ວ ກໍ່ຈົ່ງນຳເອົາຈັກໜຶ່ງສູເຣາະຫ໌ ເປັນຄືແບບນີ້ ແລະ ຈົ່ງເຊື້ອເຊີນຜູ້ທີ່ຢູ່ໃນບັນດາພວກເຈົ້າອື່ນຈາກອັລລໍຫ໌ ຖ້າຫາກພວກເຈົ້າເປັນຜູ້ເວົ້າຄວາມຈິງ"**

**"ແຕ່ຖ້າຫາກວ່າພວກເຈົ້າຍັງບໍ່ໄດ້ເຮັດມັນເທື່ອ ແລະ ຈະບໍ່ສາມາດເຮັດໄດ້ຕະຫຼອດໄປ ກໍ່ຈົ່ງລະວັງໄຟຂອງນະລົກ ຊຶ່ງເຊື້ອໄຟຂອງມັນຄື ມະນຸດ ແລະ ຫີນ (ຮູບປັ້ນ) ດັ່ງທີ່ມັນໄດ້ຖືກຈັດຕຽມໄວ້ສຳລັບບັນດາຜູ້ປະຕິເສດສັດທາ"** (ອັລ-ບາກໍ່ເຣາະຫ໌ 2: 23–24)

---

1. ອັດນານ ມູຮຳມັດ ຊັຣຊູຣ ໜັງສື ອຸລູມມຸລກຸຣອານ ຫນ້າ 218

2. ໜັງສືທີ່ມີຊື່ວ່າ ອັລ-ມັສດັຣ ອັສຊາບິກ ໜ້າ 46.

3. ຊໍຮີຫ໌ ອັລບຸກໍຣີ 6 / 96 ໜັງສື ຟະດໍອີລູ້ລກຸຣອານ ບົດທີ່ກ່ຽວກັບການລົງມາຂອງວະຫ໌ຮີແນວໃດ ປື້ມສໍຮີຫ໌ ມຸສລິມ, ປື້ມ ອັລອີມານ, ບົດກ່ຽວກັບຄວາມຈຳເປັນທີ່ຈະເຊື່ອຕໍ່ການເປັນສາດສະດາຂອງທ່ານນະບີ ມຸຮຳມັດ ຊັລລັລລໍຮຸ ອະໄລຮີ ວະຊັລລຳ (ຊລ)

4. ທ່ານອິບນີ ກະຊີຣ ຣໍຮີມາຮຸລລໍຫ໌ ໄດ້ຂະຫຍາຍໄວ້ໃນໃນຫນັງສື ທະດີຊ ທີ່ເອີ້ນວ່າ ອັລ-ບິດາຍະຫ໌ ວັລນິຮາຍະຫ໌ 6/69.

ອັລລໍຫ໌ ﷻ ໄດ້ຊົງທ້າທາຍຊາວອາຣັບດ້ວຍອັລກຸຣອານ ຊຶ່ງມີຄວາມຄ້າຍຄືກັບປະຕິຮານຂອງບັນດາສາດສະດາໃນອະດີດ ໂດຍທີ່ພຣະອົງປະທານປະຕິຮານຕ່າງໆ ໃຫ້ເໝາະສົມກັບສະພາບເຫດການຂອງກຸ່ມຊົນຂອງພວກເຂົາເຈົ້າ ເຊັ່ງອັລລໍຫ໌ ﷻ ຊົງປະທານໄມ້ຄັນເທົ້າໃຫ້ແກ່ນະບີມູຊາ ອະໄລຮິສສະລາມໃນກຸ່ມຊົນນັ້ນ ມີຊື່ສຽງເລື່ອງລືໃນດ້ານໄສຍະສາດ ແລະ ໄດ້ຊົງໃຫ້ແກ່ນະບີອີຊາ ອະໄລຮິສສະລາມ ສາມາດເຮັດໃຫ້ຄົນຕາຍຟື້ນຄືນຊີບມາ ດ້ວຍການອະນຸຍາດຂອງອັລລໍຫ໌ ﷻ ແລະ ເຮັດໃຫ້ຄົນທີ່ເວົ້າບໍ່ອອກເປັນໃບ້ ກັບມາເວົ້າໄດ້ ແລະ ເຮັດໃຫ້ຄົນທີ່ເປັນພະຍາດຂີ້ທູດ ຫາຍດີຈາກໂລກນັ້ນ ເຊິ່ງ ທ່ານໄດ້ຢູ່ໃນກຸ່ມຄົນທີ່ມີຄວາມຊ່ຽວຊານດ້ານການແພດ[1]

**2. ອັລກຸຣອານ ເປັນສິ່ງມະຫັດສະຈັນ ເນື່ອງຈາກວ່າ ໄດ້ຖືກລວບລວມດ້ວຍຂໍ້ຕັດສິນທີ່ສຳຄັນໆ ຄຳສັ່ງໃຊ້ ແລະ ຂໍ້ຫ້າມ ຈັນຍາບັນມາລະຍາດ ແລະ ເລື່ອງຕ່າງໆ ທັງນີ້ອັລກຸຣອານໄດ້ເປັນລະບຽບຂັ້ນຕອນ ບໍ່ມີຂໍ້ຂັດແຍ່ງຫຍັງເລີຍ.**

ດັ່ງທີ່ ອັລລໍຫ໌ ﷻ ດຳລັດໄວ້ວ່າ:

ຄວາມວ່າ : **"ພວກເຈົ້າບໍ່ໄດ້ພິຈາລະນາອັລກຸຣອານແດຫວາ? ແລະ ຫາກວ່າອັລກຸຣອານມາຈາກຜູ້ອື່ນທີ່ບໍ່ແມ່ນອັລລໍຫ໌ແລ້ວ ແນ່ນອນວ່າພວກເຂົາກໍ່ຈະພົບເຫັນຄວາມຂັດແຍ່ງກັນຫຼາຍຢ່າງ."**

(ອັລ-ນິສາ 4 : 82)

**3. ສິ່ງທີ່ເຮັດໃຫ້ຄົນເຮົາຮູ້ສຶກເຖິງຄວາມຈິງ ສຳລັບຜູ້ທີ່ໄດ້ຟັງອັລກຸຣອານ ເຖິງແມ່ນວ່າຄົນນັ້ນຍັງບໍ່ເຊື່ອໃນອັລກຸຣອານກໍ່ຕາມ ແຕ່ມັນເຮັດໃຫ້ເກີດຄວາມປະທັບໃຈເມື່ອໄດ້ຍິນມັນ ເຖິງແມ່ນວ່າຈະຍັງບໍ່ສັດທາກໍ່ຕາມ ມີຫຼາຍສຳໃດແລ້ວຄົນທີ່ໄດ້ປ່ຽນໃຈມາເຫລື້ອມໃສໃນອິດສະລາມຫຼັງຈາກໄດ້ຟັງອາຍັດຈາກພຣະຄຳພີອັລກຸຣອານ ເຖິງແມ່ນວ່າມັນເປັນພຽງແຕ່ອາຍັດດຽວ.**

ດັ່ງນັ້ນ, ບັນດາມູຊຣິກີນໃນສະໄໝຂອງທ່ານນະບີມູຮຳມັດ ຈຶ່ງຮູ້ດີເຖິງຜົນສະທ້ອນຂອງເລື່ອງນີ້ ດ້ວຍເຫດຜົນນີ້ ພວກເຂົາ (ມູຊຣິກີນ) ຈຶ່ງໄດ້ສັ່ງຫ້າມຜູ້ຄົນຈາກການຟັງອັລກຸຣອານ ແລະ ເຮັດໃຫ້ສຽງລົບກວນຜູ້ທີ່ຕ້ອງການທີ່ຈະຮັບຟັງອັລກຸຣອານ ດັ່ງທີ່ອັລລໍຫ໌ ﷻ ດຳລັດໄວ້ເຖິ່ງພວກເຂົາໃນອັລກຸຣອານວ່າ:

**"ແລະພວກທີ່ບໍ່ເຊື່ອປະຕິເສດໄດ້ກ່າວວ່າ ພວກທ່ານຢ່າໄປຟັງອັລກຸຣອານ ນີ້ເລີຍ ແຕ່ຈົ່ງເຮັດໃຫ້ສຽງດັງອຶກທຶກໃນເວລານັ້ນ ເພື່ອເຈົ້າຈະໄດ້ຮັບໄຊຊະນະ"** (ສູເຣາະຫ໌ ຟູສສີລັດ 41:26)

1. ອັດນານ ມູຮຳມັດ ຊັຣຊູຣ ໜັງສື ອຸລູມມຸລກຸຣອານ ໜ້າ 219

ພວກມູຊຣິກີນມັກກະຫ໌ ໄດ້ຂົ່ມຂູ່ຜູ້ທີ່ເຂົ້າໄປໃນມັກກະຫ໌ ໂດຍກ່າວວ່າ ທ່ານນະບີມຸຮຳມັດ ﷺ ເປັນນັກໄສຍະສາດ ສາມາດທີ່ຈະແຍກລະຫວ່າງພໍ່ກັບລູກ, ອ້າຍເອື້ອຍນ້ອງ, ຜົວເມຍ ພວກເຂົາກ່າວຫາ ແລະ ເວົ້າວ່າບໍ່ຕ້ອງໄປເວົ້າ ແລະ ຟັງມູຮຳມັດ[1] ແຕ່ພວກມູຊຣິກີນເຫຼົ່ານັ້ນບໍ່ສາມາດເອົາຊະນະຫົວໃຈຂອງເຂົາເຈົ້າ ຍ້ອນວ່າເຂົາເຈົ້າມັກຟັງອັລກຸຣອານ ເມື່ອພວກເຂົາມີໂອກາດທີ່ຈະໄດ້ຍິນຄຳພີ ອັລກຸຣອານ

ດັ່ງນັ້ນ ຫຼັງຈາກການເກີດສົງຄາມບະດັຣ ທ່ານຈະບີຣ ບິນມຸດອິມ ໄດ້ໄປເມືອງມາດີນະຫ໌ ເພື່ອເຈລະຈາກ່ຽວກັບສະເລີຍເສິກ ກ່ອນທີ່ລາວຈະປ່ຽນມາເປັນອິດສະລາມ ລາວໄດ້ເວົ້າກັບຕົນເອງວ່າ *ຂະນະທີ່ຂ້ອຍເຂົ້າໄປໃນມັສຍິດນັ້ນ ທ່ານຣໍຊູລ ﷺ ກຳລັງລະຫມາດມັກຣິບ ທ່ານຣໍຊູລ ﷺ ໄດ້ອ່ານສູເຣາະຫ໌ຕູ໊ຣ ຂະນະທີ່ຂ້ອຍໄດ້ຟັງອັລກຸຣອານ ຫົວໃຈຂອງຂ້ອຍໄດ້ຮັບຮູ້ເຖິງສັດຈະທຳຄວາມຈິງ*[2]

**4. ອັລກຸຣອານ ບອກໃຫ້ທ່ານນະບີ ຮູ້ເຖິງເລື່ອງລາວໃນອະດີດ ກ່າວເຖິງປະຊາຊາດທີ່ຜ່ານມາ ແລະ ເລື່ອງລາວຂອງພວກເຂົາກັບບັນດາຣໍຊູລຂອງພວກເຂົາເຖິງເຫດການທີ່ເກີດຂຶ້ນ ທັ້ງໆທີ່ທ່ານນະບີ ﷺ ເປັນຄົນທີ່ອ່ານບໍ່ອອກ ຂຽນບໍ່ເປັນ ແລະ ທ່ານບໍ່ແມ່ນນັກເດີນທາງທີ່ຈະຮູ້ເຖິງເຫດການຕ່າງໆທີ່ເກີດຂຶ້ນໃນເວລານັ້ນ ເຊິ່ງອະທິບາຍປະຫວັດໂດຍຫຍໍ້ ຂອງທ່ານນາງມາຣີ ແລະ ລູກຊາຍຂອງນາງ ທ່ານສາດສະດາ ອີຊາ ອະໄລຮິສສະລາມ.**

ດັ່ງທີ່ອັລລໍຫ໌ ﷻ ດຳລັດໄວ້ໃນອັລກຸຣອານ ວ່າ:

**ຄວາມວ່າ: "ນັ້ນແມ່ນສ່ວນໜຶ່ງຂອງບັນດາຂ່າວຄ່າວເລັ້ນລັບ ເຊິ່ງເຮົາໄດ້ຊີ້ແຈງໃຫ້ເຈົ້າ (ມູຮຳມັດ) ໄດ້ຮູ້ ແລະ ເຈົ້າບໍ່ໄດ້ຢູ່ບ່ອນທີ່ເຂົາເຈົ້າຢູ່ ຂະນະພວກເຂົາໂຍນເຄື່ອງມືທຳນາຍຂອງພວກເຂົາ (ເພື່ອໃຫ້ຮູ້ວ່າ) ຜູ້ໃດໃນບັນດາພວກເຂົາຈະໄດ້ອຸປະກາລະລ້ຽງນາງມັຣຍຳ (ມາຣີ) ແລະ ເຈົ້າບໍ່ໄດ້ຢູ່ໃນບ່ອນທີ່ເຂົາເຈົ້າໂຕ້ຖຽງກັນ"** (ຊູເຣາະຫ໌ ອາລາອິມຣອນ 3:44)

ຖ້າຫາກອັລກຸຣອານ ບໍ່ໄດ້ບອກເລື່ອງລາວໃນອະດີດ ກໍ່ຈະບໍ່ມີໃຜໄດ້ຮູ້ເລີຍ ແລະ ເລື່ອງລາວບາງຢ່າງໃນຍຸກສະໄໝກ່ອນໆ ໄດ້ເລົ່າໄວ້ໃນພຣະຄຳພີກ່ອນໜ້າຜ່ານມາແລ້ວ ອັລກຸຣອານຈຶ່ງໄດ້ມາຢືນຢັນເລື່ອງດັ່ງກ່າວ ດັ່ງທີ່ໄດ້ກ່າວໄວ້ໃນອັລກຸຣອານ ວ່າ:

---

1. ອິບນຸ ອະຊີ້ຣ ປື້ມບັນທຶກຂອງ ອະຊະດູລຕໍບະຫ໌ 3/83

2. ມຸສນັດ ອັລອິມາມອະຫມັດ 4 / 83 ໃນຫນັງສືຊໍຮີ້ຫ໌ ອັລບຸກຄໍຣີ ໄດ້ກ່າວໄວ້ວ່າຫົວໃຈຂອງຂ້ອຍນັ້ນເກືອບຈະລອຍໄປ ປຶ້ມ ຕັຟຊີຣ ບົດອະທິບາຍ ຊູເຣາະຫ໌ ອັດຕູຣ

**ຄວາມວ່າ "ແທ້ຈິງແລ້ວ ໃນເລື່ອງຂອງພວກເຂົານັ້ນເປັນບົດຮຽນສຳລັບຜູ້ທີ່ມີສະຕິປັນຍາ ບໍ່ແມ່ນເລື່ອງທີ່ໄດ້ຖືກປະພັນຂຶ້ນມາ ແຕ່ມາຢືນຢັນຄວາມຈິງທີ່ຢູ່ຕໍ່ໜ້າເຂົາ ແລະ ເປັນການແຈກແຈງທັງໝົດ ແລະ ເປັນການຊີ້ທາງທີ່ຖືກຕ້ອງ ແລະ ເປັນຄວາມເມດຕາຕໍ່ໝູ່ຊົນຜູ້ສັດທາ"** (ຢູຊູຟ 12:111).

**5. ອັລກຸຣອານ ໄດ້ບອກໃຫ້ທ່ານນະບີ ﷺ ຮູ້ເຖິງອະນາຄົດ ສ່ວນໜຶ່ງຈາກສິ່ງທີ່ເປັນປະຕິຮານຂອງອັລກຸຣອານ ຄືອັລກຸຣອານ ບອກໃຫ້ຮູ້ເຖິງເລື່ອງທີ່ຈະເກີດຂຶ້ນໃນອະນາຄົດ ແລະ ມັນກໍ່ເກີດຂຶ້ນຈິງຕາມທີ່ໄດ້ບອກໄວ້ຢ່າງຫຼວງຫຼາຍ ດັ່ງເຊັ່ນທີ່ອັລລໍຫ໌ ﷻ ຕຣັດວ່າ:**

**ອະລິຟ ລາມ ມີມ (ບໍ່ມີໃຜສາມາດໃຫ້ຄວາມໝາຍກັບປະໂຫຍກນີ້ຍົກເວັ້ນ ອັລລໍຫ໌ ﷻ ເທົ່ານັ້ນ).**

**ພວກໂຣມັນໄດ້ຖືກພິຊິດແລ້ວ.**

**ໃນດິນແດນອັນໃກ້ນີ້ ແຕ່ຫຼັງຈາກການພ່າຍແພ້ຂອງພວກເຂົາແລ້ວພວກເຂົາເຈົ້າຈະໄດ້ຮັບໄຊຊະນະ.**

**ເວລາບໍ່ຫຼາຍປີຕໍ່ມາ ພຣະບັນຊານັ້ນເປັນກຳມະສິດຂອງອັລລໍຫ໌ ﷻ ທັ້ງກ່ອນ ແລະ ຫຼັງຈາກ (ໄຊຊະນະ) ແລະ ໃນມື້ນັ້ນຜູ້ທີ່ເຊື່ອສັດທາຈະປິຕິຍິນດີ.**

**ໃນດ້ວຍການຊ່ວຍເຫຼືອຂອງອັລລໍຫ໌ ພຣະອົງຈະຊົງຊ່ວຍເຫຼືອຜູ້ທີ່ພຣະອົງຊົງປະສົງ ແລະ ພຣະອົງຊົງເປັນຜູ້ຊົງອຳນາດ ຜູ້ຊົງເມດຕາສະເໝີ.**

(ສູເຣາະຫ໌ໂຣມ 30: 1-5)

ອາຍະຫ໌ນີ້ໄດ້ຖືກປະທານລົງມາ ໃນຂະນະທີ່ພວກເປີເຊຍໄດ້ຮັບໄຊຊະນະເໜືອພວກໂຣມັນ ການມີໄຊຊະນະຂອງພວກເປີເຊຍເຮັດໃຫ້ພວກກຸຟຟ໊າຣກູເຣຊມີຄວາມພູມໃຈ ເພາະວ່າເຂົາເຈົ້າເປັນພວກດຽວກັນ (ບູຊາຮູບປັ້ນ) ກັບພວກເປີເຊຍ ສ່ວນຊາວມຸດສະລິມທັ້ງຫຼາຍຫວັງວ່າກຸງໂຣມັນຈະໄດ້ຮັບໄຊຊະນະ ເນື່ອງຈາກວ່າຊາວໂຣມັນເປັນຊາວຄຳພີຄືກັນ ເມື່ອເວລາໄປຜ່ານໄປເຈັດປີເສດ ໃນທີ່ສຸດກຸງໂຣມັນກໍ່ໄດ້ຊະນະເໜືອພວກເປີເຊຍ ພວກກຸຟຟ໊າຣກໍ່ເສຍໃຈ ສ່ວນຊາວມຸດສະລິມທັ້ງຫຼາຍກໍ່ປິຕິຍິນດີໃນໄຊຊະນະ ແລະ ມີປະຊາຊົນເຂົ້າຮັບນັບຖືສາສະໜາອິສລາມ ດ້ວຍເຫດຜົນນີ້ດ້ວຍ[1]

1. ຈົ່ງເບິ່ງໃນໜັງສືຂອງ ອິບນຸ ກະຊີຣ 3.6 3.4

**6. ການປະມວນຂອງອັລກຸຣອານ ກ່ຽວກັບເລື່ອງເລັ້ນລັບທາງວິຊາການ ແລະ ລະບົບຈັກວານໂລກເຊິ່ງບໍ່ມີໃຜຮູ້ ນອກເຫນືອໄປຈາກສິ່ງທີ່ອັລກຸຣອານ ໄດ້ປະທານລົງມາກ່ອນແລ້ວ ດັ່ງທີ່ອັລລໍຫ໌ ﷻ ຊົງໄດ້ກ່າວໄວ້ໃນອັລກຸຣອານ ວ່າ:**

***ຄວາມວ່າ "ເຮົາຈະສະແດງໃຫ້ພວກເຂົາໄດ້ເຫັນເຄື່ອງໝາຍຂອງເຮົາໃນຂອບເຂດອັນໄກໂພ້ນ ແລະ ພາຍໃນຕົວຂອງພວກເຂົາເອງ ຈົນກະທັ້ງຈະເປັນທີ່ປະຈັກຈະແຈ້ງໃຫ້ແກ່ພວກເຂົາວ່າ ອັລກຸຣອານເປັນຄວາມຈິງ ມັນຍັງບໍ່ພຽງພໍອີກຫວາ ທີ່ພຣະຜູ້ເປັນເຈົ້າຂອງເຈົ້າຈະເປັນພະຍານຕໍ່ທຸກສິ່ງ"***

(ຟຸສສິລາດ 41: 53).

ນັກວິຊາການໄດ້ເປີດເຜີຍໃຫ້ພວກເຮົາຮູ້ເຖິງຄວາມເລັ້ນລັບເຖິງສິ່ງທີ່ເປັນປະຕິຣານ ທາງດ້ານວິຊາການຂອງອັລກຸຣອານ ທີ່ຢູ່ໃນວິທີການຂອງມະນຸດ ຫຼື ຢູ່ໃນວິທີການຂອງຈັກກະວານອັນຫ່າງໄກ ແລະ ສິ່ງຕ່າງໆທີ່ຈະເກີດຂຶ້ນກັບໂລກ ແລະ ສິ່ງທີ່ເກີດຂື້ນໃນຄວາມເລິກຂອງທະເລ ຫຼື ສິ່ງທີ່ຢູ່ໃນທ້ອງຟ້າ ຫຼື ທີ່ຢູ່ເທິງພື້ນດິນ ຫຼື ພາຍໃຕ້ແຜ່ນດິນໂລກ ເຊັ່ນນີ້ມີໃນຄຳເວົ້າຂອງ ອັລລໍຫ໌ ﷻ ຢ່າງຫຼວງຫຼາຍ ດັ່ງທີ່ພຣະອົງໄດ້ກ່າວ:

*ຄວາມວ່າ* ***"ຜູ້ໃດອັລລໍຫ໌ ຊົງຕ້ອງການແນະນຳພາລາວໄປສູ່ເສັ້ນທາງທີ່ຊື່ກົງ ກໍ່ຈະຊົງເຮັດໃຫ້ຫົວໃຈຂອງລາວມີຄວາມສຸກເບີກບານເພື່ອອິດສະລາມ ແລະ ຜູ້ໃດກໍຕາມທີ່ພຣະອົງຊົງປະສົງຈະປ່ອຍໃຫ້ເຂົາຫລົງທາງ ກໍ່ຈະຊົງໃຫ້ໜ້າເອິກຂອງພວກເຂົາຄັບແຄບອຶດອັດ ປຽບດັ່ງວ່າລາວກຳລັງຂຶ້ນສູ່ທ້ອງຟ້າ ໃນທຳນອງນັ້ນແຫລະ ອັລລໍຫ໌ ຈະຊົງໃຫ້ມີຄວາມໂສມົມບໍ່ສະອາດແກ່ບັນດາຜູ້ທີ່ບໍ່ສັດທາ"*** (ອັລ-ອັນລ໌ 6 :125)

ແລະ ຍັງບໍ່ເປັນທີ່ຮູ້ກັນມາກ່ອນວ່າ ເມື່ອມະນຸດຍິ່ງຂຶ້ນສູ່ທີ່ສູງຫຼາຍສຳໃດ ຍິ່ງອຶດອັດຫຼາຍເທົ່ານັ້ນຍ້ອນຂາດອາກາດຫາຍໃຈ ເນື່ອງຈາກການຂາດອົກຊີເຈນ ແລະ ພຶ່ງຈະມາຄົ້ນພົບໃນຍຸກປະຈຸບັນນີ້

**7. ອັລລໍຫ໌ ﷻ ຊົງປົກປ້ອງຮັກສາພຣະຄຳພີອັລກຸຣອານ ໃນທຸກຍຸກທຸກສະໄໝ ດັ່ງນັ້ນອັລກຸຣອານຈຶ່ງແມ່ນປື້ມດຽວແຫ່ງຟາກຟ້າທີ່ພຣະອົງຮັບປະກັນໃຫ້ການປົກປ້ອງຈາກການປ່ຽນແປງຕົວອັກສອນ ຫຼືການເພີ່ມເຕີມ ແລະ ການຂາດເກີນໃດໆ ສະນັ້ນອັລກຸຣອານຈະຍັງຄົງຢູ່ຖາວອນຈົນກວ່າເຖິງວັນຂອງການພິພາກສາ ດັ່ງທີ່ອັລລໍຫ໌ ﷻ ດຳລັດວ່າ:**

*ຄວາມໝາຍວ່າ "ແທ້ຈິງ ເຮົາ(**ອັລລໍຫ໌**) ໄດ້ໃຫ້ຂໍ້ຕັກເຕືອນ (ອັລກຸຣອານ) ແລະ ແທ້ຈິງ ເຮົາ (**ອັລລໍຫ໌**) ເປັນຜູ້ຮັກສາ ອັລກຸຣອານໄວ້ຢ່າງແນ່ນອນ" (ອັລ-ຮິຈຣ໌ 15: 9).*

## 21. ມຸອ໌ຈິຊາດ (ປະຕິຮານ) ຂອງທ່ານນະບີມຸຮຳມັດ ﷺ

ສິ່ງທີ່ ອັລລໍຫ໌ ﷻ ປະທານໃຫ້ທ່ານນະບີມຸຮຳມັດ ﷺ ນອກຈາກອັລກຸຣອານແລ້ວ ສ່ວນຫນຶ່ງຈາກປະຕິຮານທີ່ສຳຜັດຮູ້ສຶກໄດ້ຄືກັບສາດສະດາທ່ານອື່ນໆ ຈະກ່າວເຖິງໂດຍສະຫຼຸບຫຍໍ້ດັ່ງຕໍ່ໄປນີ້;

### 1. ອັລອິສຣໍ່ອ໌ ແລະ ອັລມຽະຣ໊ອຈ

ປະຫວັດສາດຂອງອັລອິສຣໍ່ອ໌ ແລະ ອັລມຽະຣ໊ອຈ ໄດ້ເກີດຂຶ້ນກັບທ່ານນະບີມຸຮຳມັດ ﷺ ຫຼັງຈາກລຸງຂອງທ່ານອາບີຕໍລິບ ແລະ ພັນລະຍາຂອງທ່ານນາງຄໍດີຍະຫ໌ ຣໍດີຍັລລໍຮຸອັນຮາ ໄດ້ເສຍຊີວິດແລ້ວຜົນສືບເນື່ອງຕໍ່ການເສຍຊີວິດຂອງລຸງ ແລະ ພັນລະຍາຂອງທ່ານນະບີ ﷺ ຄືບັນດາມຸຊຣິກີນໄດ້ເພີ່ມທະວີຄວາມຮຸນແຮງໃນການຕໍ່ຕ້ານທ່ານ ການອັລອິສຣໍ່ອ໌ ແລະ ອັລມຽະຣ໊ອຈ ຈຶ່ງເກີດຂຶ້ນເພື່ອໃຫ້ທ່ານນະບີມຸຮຳມັດ ﷺ ມີຄວາມເຂັ້ມແຂງ ແລະ ຄວາມອົດທົນໃນການປະເຊີນຫນ້າກັບເຫດການທີ່ເກີດຂຶ້ນ

ຂໍສະຫຼຸບສິ່ງທີ່ເປັນປະຕິຮານນີ້ວ່າ ແທ້ຈິງອັລລໍຫ໌ ຊຸບຮານະຮູ ວະຕະອາລາ ໄດ້ຊົງໃຫ້ນະບີຂອງພຣະອົງເດີນທາງໃນເວລາກາງຄືນ ຈາກມັສຍິດ ອັລຫາຣອມ ທີ່ນະຄອນມັກກະຫ໌ ໄປຍັງມັສຍິດ ອັລອັກຊໍ ທີ່ປະເທດປະເລສໄຕນ ໂດຍມີສັດເປັນພາຫະນະຊື່ວ່າ "ອັລ-ບຸຣອກ" ເຊິ່ງພຣະອົງໄດ້ກະກຽມໄວ້ໃຫ້ທ່ານນະບີ ﷺ ແລະ ຈາກ ມັສຍິດ ອັລອັກ ທ່ານໄດ້ຖືກນຳຂຶ້ນໄປເທິງຟາກຟ້າທັງເຈັດຊັ້ນ ແລະ ທ່ານນະບີ ﷺ ໄດ້ພົບກັບບັນດານະບີ ອະໄລຮິສສະລາມ ໃນຊັ້ນຟ້ານັ້ນໆດ້ວຍ ແລະ ໄດ້ເຫັນ "ສິດຣໍຕູ້ລມຸນ ຕະຮາ" (ຊື່ຂອງຕົ້ນໄມ້ຕົ້ນໜຶ່ງໃນສວນສະຫວັນ) ແລະ ໄດ້ເຫັນສະພາບຕ່າງໆ ທີ່ເປັນຄວາມສຸກໃນສວນສະຫວັນທີ່ ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ຊົງໄດ້ກະກຽມໄວ້ໃຫ້ແກ່ຊາວສະຫວັນ ແລະ ເຊັ່ນດຽວກັນທ່ານນະບີ ﷺ ໄດ້ເຫັນສະພາບການຕ່າງໆໃນນະລົກ ທີ່ມີຜູ້ຖືກທໍລະມານໃນນັ້ນອີກດ້ວຍ ແລະ ທີ່ນັ້ນການອະທິຖານລະຫມາດຫ້າ ເວລາໄດ້ຖືກກຳໜົດຂຶ້ນ, ຫຼັງຈາກນັ້ນ ທ່ານນະບີ ﷺ ໄດ້ລົງມາຍັງ “ໄບຕຸລມັກດິສ” ແລະ ທ່ານໄດ້ລະຫມາດທີ່ນັ້ນກັບບັນດາສາດສະດາ, ແລະ ທ່ານຈຶ່ງກັບໄປຍັງນະຄອນມັກກະຫ໌

ທຸກສິ່ງທີ່ເກີດຂຶ້ນນັ້ນພຽງຊົ່ວຂ້າມຄືນ ເມື່ອເວລາເຊົ້າທ່ານໄດ້ເລົ່າເລື່ອງການເດີນທາງຂອງທ່ານໃຫ້ພວກກູເຣໍຊທີ່ປະຕິເສດຟັງ ພວກເຂົາກັບຍິ່ງທະວີຄວາມກຽດຊັງຫຼາຍຂຶ້ນ ໂດຍອ້າງວ່າຕ້ອງການຫຼັກຖານທີ່ສຳພັດໄດ້ (ເບິ່ງເຫັນ), ທ່ານນະບີ ﷺ ຈຶ່ງໄດ້ເລົ່າລັກສະນະຂອງມັສຍິດອັລ ອັກຊໍ ໃຫ້ແກ່ພວກເຂົາຟັງ ພວກເຂົາຮູ້ດີວ່າທ່ານນະບີບໍ່ເຄີຍໄປທີ່ນັ້ນມາກ່ອນ ແລະ ໃນບັນດາພວກເຂົາມີຜູ້ທີ່ເຄີຍໄປ ມັສຍິດອັລອັກຊໍ ພວກນັ້ນຕ່າງຍອມຮັບວ່າທຸກຢ່າງເປັນຄວາມຈິງຕາມທ່ານນະບີ ﷺ ໄດ້ເລົ່າກ່ຽວກັບລັກສະນະຕ່າງໆໃຫ້ຟັງ

ໃນທຳນອງດຽວກັນ ທ່ານໄດ້ເລົ່າເຖິງສິ່ງທີ່ທ່ານໄດ້ພົບເຫັນຢູ່ຕາມຫົນທາງທີ່ກອງຄາລາວານສິນຄ້າທີ່ມຸ່ງມາຈາກປະເທດຊາມ (ຊີເຣຍ) ຂະນະທີ່ທ່ານເຫັນພວກເຂົາໃນລະຫວ່າງເດີນທາງ ແລະ ທ່ານກໍ່ ໄດ້ເລົ່າໃຫ້ຟັງເຖິງເຫດການທີ່ເກີດຂຶ້ນກັບກອງຄາລາວານນັ້ນ ເມື່ອກອງຄາລາວານສິນຄ້າມາຮອດພວກເຂົາໄດ້ຖາມຜູ້ຄົນທີ່ມາກັບກອງຄາລາວານນັ້ນ ພວກທີ່ເດີນທາງມາກໍ່ຕອບວ່າແມ່ນຄວາມຈິງ ແຕ່ຫາກວ່າບັນດາຜູ້ປະຕິເສດກໍ່ບໍ່ຍອມເຊື່ອໃນສິ່ງທີ່ທ່ານນະບີ ໄດ້ບອກກ່າວ.

## 2. ການແຍກຂອງດວງຈັນ (ເປັນສອງສ່ຽງ)

ບັນດາກຸຟຟາຣໄດ້ຖາມທ່ານນະບີ ﷺ ເຖິງສິ່ງທີ່ເປັນປະຕິຮານເພື່ອເປັນຫຼັກຖານຂອງການເປັນສາດສະດາທີ່ແທ້ຈິງ ແລະ ອັລລໍຫ໌ ﷻ ໄດ້ຊົງຕອບໂຕ້ພວກເຂົາວ່າເປັນປະຕິຮານນີ້ມັນບໍ່ໄດ້ເພີ່ມຫຍັງໃຫ້ແກ່ພວກເຂົາເຈົ້າ ນອກຈາກຄວາມດື້ດ້ານ ຄືກັນກັບສິ່ງທີ່ເຄີຍເກີດຂຶ້ນກັບສາດສະດາກ່ອນໆທີ່ຜ່ານມາ ແຕ່ໃນຊ່ວງເວລານັ້ນພວກເຂົາໄດ້ສ້າງຄວາມກົດດັນໃສ່ ທ່ານນະບີ ﷺ ໂດຍທີ່ພວກເຂົາຕ້ອງການໃຫ້ສະແດງສິ່ງທີ່ເປັນປະຕິຮານໃຫ້ໄດ້ເຫັນ ທ່ານຣໍຊູລຈຶ່ງໄດ້ກ່າວກັບເຂົາເຈົ້າວ່າ:

**ພວກທ່ານຈົ່ງເບິ່ງໄປຍັງດວງເດືອນແມ້**

ທັນໃດນັ້ນ ດວງເດືອນກໍແຍກອອກຈາກກັນເປັນສອງດວງ ໂດຍມີພູເຂົາ ຮີຣໍ ຢູ່ກາງ[1]

ດັ່ງທີ່ ອັລລໍຫ໌ ﷻ ຊົງດຳລັດວ່າ **ແລະ ຈະບໍ່ມີຫຍັງເພີ່ມແກ່ເຂົາເຈົ້າ ນອກຈາກຄວາມດື້ດ້ານ ເພາະສິ່ງທີ່ເຂົາເຈົ້າຕ້ອງການ ນັ້ນແມ່ນມີຈຸດປະສົງເພື່ອເຮັດໃຫ້ບໍ່ສາມາດທີ່ຈະຕອບໄດ້ ແລະ ບໍ່ແມ່ນເພື່ອຕ້ອງການຄວາມຈິງ**

## 3. ການບອກເລົ່າເລື່ອງຕ່າງໆ ທີ່ຈະເກີດຂຶ້ນໃນອະນາຄົດ

ທ່ານຣໍຊູລ ﷺ ໄດ້ບອກເລື່ອງເລົ່າຈຳນວນຫຼາຍຢ່າງທີ່ຈະເກີດຂຶ້ນໃນອະນາຄົດ ແລ້ວມັນກໍ່ໄດ້ເກີດຂຶ້ນຈິງຕາມທີ່ທ່ານຣໍຊູລ ﷺ ໄດ້ກ່າວໄວ້ ແຕ່ຈະກ່າວເຖິງບາງເລື່ອງດັ່ງຕໍ່ໄປນີ້;

3.1 ທ່ານຣໍຊູລ ﷺ ໄດ້ບອກເຖິງສິ່ງທີ່ຈະເກີດຂຶ້ນຈາກການພິຊິດ ຄອບຄອງຫົວເມືອງຕ່າງໆ ດ້ວຍຄວາມສາມາດຂອງຊາວມຸດສະລິມ ຫຼັງຈາກທີ່ທ່ານໄດ້ຈາກໂລກນີ້ໄປແລ້ວ ອະທິເຊັ່ນ: ການການພິຊິດຫົວເມືອງເປີເຊຍ ປະເທດຊີເຣຍ ປະເທດເອຢິບ ແລະ ປະເທດອື່ນໆ

---

1. ເບິ່ງປະຫວັດຂອງອັລອິສຣໍ່ ແລະ ອັລມຽະຣອດ ໃນຫນັງສື ຊໍຮີຫ໌ບຸກຄໍຣີ ປຶ້ມ ຕັຟຊີຣ ບົດທີ່ກ່າວກ່ຽວກັບການເດີນທາງບ່າວຂອງອັລລໍຫ໌ ໃນຕອນກາງຄືນ 4709, 4710 ແລະປຶ້ມ ອັສຊໍລະຫ໌ ບົດກ່ຽວກັບເລື່ອງລະໝາດ 5 ເວລາໄດ້ຖືກກຳນົດມາໄດ້ແນວໃດ 349. ໜັງສືຊໍຮີຫ໌ ມຸສລິມ 1 / 149, 156 . ຄອຍຣຸດດີນ ວາອິລີ ອັສຊໍຮີຫ໌ ຈາກສິ່ງທີ່ເປັນມຸອຊີຍາດຂອງທ່ານສາດສະດາ (ຊລ).... ຊໍຮີຫ໌ ອັລບຸກຄໍຣີ ໜັງສື ອັລອັມບີຍາ ບົດທີ່ວ່າການຖາມຂອງພວກມຸຊຣີກີນໃຫ້ທ່ານສາດສະດາ (ຊລ) ເຮັດໃຫ້ເຂົາເຈົ້າເຫັນເຄື່ອງໝາຍຕ່າງໆ 4/186. ຊໍຮີຫ໌ ມຸສລິມ ຫນັງສື ບົດທີ່ກ່ຽວກັບການເຮັດໃຫ້ດວງຈັນແຕກອອກເປັນສອງສ່ວນ 2802 ..... ໜັງສືຊໍຮີບກິຕາບ ອັສຊໍຮີຫ໌ ໄດ້ກ່າວໄວ້ເຖິງສິ່ງມຸອຊີຍາດຂອງທ່ານນະບີ (ຊລ) ໃນໄວ້ເລື່ອງນີ້ 126

ດັ່ງທີ່ທ່ານຣໍຊູລ ﷺ ໄດ້ເວົ້າວ່າ:

إِذَا هَلَكَ كِسْرَى فَلاَ كِسْرَى بَعْدَهُ وَإِذَا هَلَكَ قَيْصَرُ فَلاَ قَيْصَرَ بَعْدَهُ وَيْدَهُ وِيْدَهُ تُنْفَقَ نَ كُنُوزُهُمَا فِي سَبِيلِ اللهِ

**"ກະສັດ ກິສຣໍໄດ້ພິນາດແລ້ວ ແລະ ຈະບໍ່ມີກະສັດກິສຣໍ ອີກຫຼັງຈາກທີ່ເຂົາໄດ້ເສຍຊີວິດໄປແລ້ວ ແລະ ກະສັດກອຍສ໊ອຣຈະພິນາດ ແລະ ຈະບໍ່ມີກະສັດກອຍສ໊ອຣ ອີກຫຼັງຈາກທີ່ເຂົາໄດ້ເສຍຊີວິດໄປແລ້ວ ແລະ ຊັບສິນບັດຂອງເຂົາທັ້ງສອງຈະຖືກແບ່ງໄປໃນທົນທາງຂອງອັລລໍຫ໌ ຢ່າງແນ່ນອນ"**[1]

ທັງຫມົດຂ້າງເທິງນີ້ໄດ້ເກີດຂຶ້ນຈິງແລ້ວ

3.2 ຄຳເວົ້າຂອງ ທ່ານຣໍຊູລ ﷺ ແກ່ຮາສັນ ເຊິ່ງເປັນລູກຊາຍຂອງ ອາລີ ຣໍດິຢັລລໍອັນຮຸມາ ວ່າ:

ابْنِي هَذَا سَيِّدٌ وَلَعَلَّ اللهَ أَنْ يُصْلِحَ بِهِ بَيْنَ فِئَتَيْنِ مِنْ الْمُسْلِمِينَ

**"ແທ້ຈິງ ຫລານຊາຍຄົນນີ້ຂອງຂ້ອຍຕ້ອງເປັນນາຍ ແລະ ຂ້ອຍຫວັງວ່າພຣະອົງອັລລໍຫ໌ຈະເຮັດໃຫ້ລາວປະນີປະນອມກັບສອງກຸ່ມໃຫຍ່ຂອງຊາວມຸດສະລິມ."** [1]

ເຫດການນີ້ໄດ້ເກີດຂຶ້ນໃນປີ **"ຈະມາອະຫ໌"** ຮ.ສ.ທີ່, ຂະນະທີ່ ທ່ານຮາສັນ ຣໍດິຢັລລໍຮຸອັນຮູ ໄດ້ສະລະຕຳແຫນ່ງຂອງຕົນໃຫ້ ທ່ານມຸອາວິຍະຫ໌ ລູກຊາຍຂອງ ອາບີຊຸຟຢານ ຣໍດິຢັລລໍອັນຮຸມາ

3.3 ການງານທີ່ທ່ານຣໍຊູລ ﷺ ໄດ້ເວົ້າວ່າມັນຈະເກີດຂຶ້ນ ແຕ່ມັນຍັງບໍ່ທັນເກີດຂຶ້ນເທື່ອ ແລະ ມັນຈະຕ້ອງເກີດຂຶ້ນຢ່າງແນ່ນອນ ທ່ານຣໍຊູລ ﷺ ກ່າວວ່າ:

لاَ تَقُومُ السَّاعَةُ حَتَّى تُقَاتِلُوا الْيَهُودَ حَتَّى يَقُولَ الْحَجَرُ وَرَاءَهُ الْيَهُودِيُّ يَا مُسْلِمُ هَذَا يَهُودِيٌّ وَرَائِي فَاقْتُلْهُ

"ວັນແຫ່ງການຟື້ນຄືນຊີບ (ກິຢາມະຫ໌) ຍັງຈະບໍ່ທັນໄດ້ເກີດຂຶ້ນ ຈົນກ່ວາຊາວມຸດສະລິມຂ້າຊາວຢະຮູດີ ຈົນກະທັ່ງຊາວຢູດາຈະລີ້ຢູ່ຫລັງໂຂນຫີນ ໂຂນຫີນຈະເວົ້າວ່າ ໂອ້ຊາວມຸດສະລິມ ຊາວຢິວຢູ່ເບື້ອງຫລັງຂ້ອຍ ມາເຖີດ ຈົ່ງມາຂ້າພວກເຂົາເຖີດ" [2]

---

1. ໜັງສືຂອງອັລບຸກຄໍຣີ ອັລມະນາກິບ ບົດກຽວກັບເຄື່ອງໝາຍຂອງການເປັນນະບີ ຊັລລັລລໍຮຸ ອະໄລຮີ ວະຊັລລັມ, ມຸສລິມ ເລື່ອງຟິຕັນວ່າດ້ວຍວັນແຫ່ງການຟື້ນຄືນຊີບຈະບໍ່ເກີດຂຶ້ນຈົນກ່ວາວ່າຊາຍຄົນໜຶ່ງຈະຍາງຜ່ານກູໂບຣຂອງຊາຍຄົນໜຶ່ງ ດັ່ງນັ້ນເຂົາຈຶ່ງຫວັງວ່າສະຖານທີ່ທີ່ຄົນຕາຍຢູ່ນີ້ເປັນ 2918

2. ອັລບຸກຄໍຣີ ເລື່ອງຄວາມປະເສີດຂອງບັນດາຊໍຮາບະຫ໌ ຊີວະປະຫວັດຫຍໍ້ຂອງ ຮາສັນ ແລະ ຮຸເຊັນ ຣໍດິຢັລລໍຮຸ ອັນຮຸ ຫນັງສືສຸນັນອັລຕິຣມີຊີ

## 4. ການເພີ່ມຂຶ້ນຂອງອາຫານ ແລະ ເຄື່ອງດື່ມ

ໄດ້ເກີດປະຕິຮານຂຶ້ນຈາກອາຫານ ແລະ ເຄື່ອງດື່ມທີ່ເພີ່ມຂຶ້ນຫຼາຍຄັ້ງ ຂະນະທ່ານຣໍຊູລ ﷺ ໄດ້ໃຫ້ບັນດາຊໍຮາບະຫ໌ ມາຮັບປະທານອາຫານ ແຕ່ອາຫານມີບໍ່ພຽງພໍ ຈຳກັດປະມານພຽງແຕ່ສິບຄົນ ທ່ານຣໍຊູລ ﷺ ໄດ້ວາງມືຂອງທ່ານ ຫຼື ພົ່ນນ້ຳລາຍ (ເບົາໆ) ໃສ່ອາຫານນັ້ນ ຈາກນັ້ນທ່ານໄດ້ຂໍອະທິຖານດູອາຕໍ່ ອັລລໍຫ໌ ﷻ ເພື່ອໃຫ້ອາຫານນັ້ນມີບາຣໍກະຫ໌ ຄວາມສິລິມົງຄົນ ຈາກນັ້ນທະຫານທັ້ງກອງທັບໄດ້ກິນຢ່າງຖ້ວນໜ້າ ແລະ ອາຫານນັ້ນບໍ່ໄດ້ຫມົດຫຼືຫຼຸດລົງເລີຍ ເຫດການນີ້ເກີດຂຶ້ນໃນສົງຄາມ ຄອນດັກ ຂະນະທີ່ ຈາບີຣ ບິນອັບດິລລະຫ໌ ຣໍດີຍັລລໍຮຸອັນຮຸ ໄດ້ເຊີນທ່ານຣໍຊູລ ﷺ ໃຫ້ມາກິນເຂົ້າຢູ່ເຮືອນ[1] ແລະ ເຫດການເຊັ່ນນັ້ນໄດ້ເກີດຂຶ້ນອີກຄັ້ງ ເມື່ອທ່ານອາບູຕັລຮະຫ໌ ຣໍດີຍັລລໍຮຸອັນຮູ ໄດ້ເຊີນທ່ານຣໍຊູລ ﷺ ໃຫ້ໄປກິນເຂົ້າຢູ່ເຮືອນຂອງຕົນ ມີເຫດການເຊັ່ນດຽວກັນເກີດຂຶ້ນອີກ

ເຮັດໃຫ້ມີນ້ຳຫຼວງຫລາຍໃນສົງຄາມ ຂະນະທີ່ທ່ານຣໍຊູລ ﷺ ອອກຮົບ ແລະ ໃນລະຫວ່າງການເດີນທາງຂອງທ່ານຣໍຊູລ ﷺ ກັບບັນດາຊໍຮາບະຫ໌ຂອງທ່ານ ຂະນະເດີນທາງເຂົາເຈົ້າເກີດການກະຫາຍນ້ຳຢ່າງຮຸນແຮງ ແລະ ພວກເຂົາກໍ່ຂາດແຄນນ້ຳ ດັ່ງນັ້ນນ້ຳພຽງເລັກນ້ອຍໃນຖັງໄດ້ຖືກນຳມາໃຫ້ທ່ານ ທ່ານຣໍຊູລ ﷺ ໄດ້ອ້ອນວອນຕໍ່ອັລລໍຫ໌ﷻ ແລະ ໄດ້ອາບນ້ຳລະຫມາດຈາກນ້ຳເລັກນ້ອຍນັ້ນ ແລະ ຫຼັງຈາກນັ້ນບັນດາຊໍຮາບະຫ໌ ຈຶ່ງໄດ້ອາບນ້ຳລະຫມາດ ແລະ ດື່ມນ້ຳຕໍ່ຈາກທ່ານ ແລະ ນ້ຳກໍ່ຍັງຢູ່ໃນສະພາບເດີມ

## 5. ການເວົ້າຂອງສິ່ງທີ່ບໍ່ມີຊີວິດກັບ ທ່ານຣໍຊູລ ﷺ

ສ່ວນຫນຶ່ງຈາກສິ່ງປະຕິຮານກັບທ່ານຣໍຊູລ ﷺ ຄືຕົ້ນໄມ້ບາງຕົ້ນ ແລະ ຫີນຕ່າງໆ ແລະ ອື່ນໆ, ໄດ້ເວົ້າກັບທ່ານ ແລະ ເຫດການອື່ນໆຈຳນວນຫຼາຍ ທ່ານຣໍຊູລ ﷺ ກ່າວວ່າ:

**قال رسول الله صلى الله عليه وسلم إني لأعرف حجرا بمكة كان يسلم علي قبل أن أبعث إني لأعرفه الآن وجاء أعرابي إلى الرسول صلى الله عليه وسلم فقال له الرسول أتشهد أن لا إله إلا الله وحده لا شريك له وأن محمدا عبده ورسوله قال أعرابي من يشهد على ما تقول قال هده السلمة ... وهي نوع من الشجر... فدعاها الرسول صلى الله عليه وسلم فأقبلت حتى قامت بين يديه فاستشهدها ثلاثا فشهدت ثم رجعت إلى منبتها**

---

1. ອັລບຸກໍຄໍຣີ ປຶ້ມບັນທຶກ ອັລມະກໍຊີ ບົດທີ່ວ່າ ສົງຄາມຄອນດັກ, ມຸສລິມ ບົດວ່າດ້ວຍເລື່ອງເຄື່ອງດື່ມ, ບົດທີ່ວ່າ ອະນຸຍາດໃຫ້ຕິດຕາມຜູ້ອື່ນໄປບ້ານທີ່ໄວ້ວາງໃຈ...... ອັລບຸກໍຄໍຣີ ເລື່ອງກ່ຽວກັບການລ້ຽງອາຫານ ບົດທີ່ວ່າ ຜູ້ທີ່ມາເປັນແຂກຂອງສິບໆຄົນ, ໜັງສືມຸສລິມ ບົດທີ່ວ່າດ້ວຍຜູ້ທີ່ມາກ່ອນ.... ອັລບຸກໍຄໍຣີ, ເລື່ອງຂອງອັລອຳບີຍາ ບົດທີ່ວ່າເຄື່ອງໝາຍຂອງການເປັນນະບີ (ຊລ) ໜັງສືມຸສລິມ ເລື່ອງມັສຍິດຕ່າງໆ ບົດທີ່ວ່າດ້ວຍການຊົດໃຊ້ການລະຫມາດທີ່ຂາດໄປ, ໜັງສື ສຸນັນອາບີດາວູດ ປຶ້ມອັສຊໍລາດ, ບົດທີ່ວ່າກ່ຽວກັບຜູ້ທີ່ນອນຫຼັບຈົນເວລາລະຫມາດຜ່ານໄປ.

**"ແທ້ຈິງ ຂ້າພະເຈົ້າຈື່ໄດ້ວ່າ ກ້ອນຫີນໃນເມືອງມັກກະຫ໌ ເຄີຍໃຫ້ສະລາມແກ່ຂ້າພະເຈົ້າກ່ອນທີ່ຂ້າພະເຈົ້າຈະກາຍເປັນນະບີ ແລະ ດຽວນີ້ຂ້ອຍຈື່ໄດ້ວ່າກ້ອນໃດ"**[1]

ມີອາຣັບຊົນນະບົດໄດ້ມາຫາເບິ່ງ ທ່ານຣໍຊູລ ﷺ ທ່ານໄດ້ກ່າວກັບລາວວ່າ **"ທ່ານຈະປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ພຽງອົງດຽວ ແລະ ຈະບໍ່ຕັ້ງພາຄີຮ່ວມກັບພຣະອົງ ແລະ ແທ້ຈິງມຸຮຳມັດ ເປັນບ່າວຂອງພຣະອົງ ແລະ ເປັນສາສະນາທູດຂອງພຣະອົງ** ຊາວອາຣັບຊົນນະບົດຜູ້ນັ້ນເວົ້າວ່າ: **ຜູ້ໃດລະ ຈະປະຕິຍານຕົນຕາມໃນສິ່ງທີ່ທ່ານໄດ້ກ່າວນັ້ນ** ທ່ານຣໍຊູລ ﷺ ກ່າວວ່າ **"ອັສຊັລລະມະຫ໌" (ເປັນຕົ້ນໄມ້ຊະນິດໜຶ່ງ) ນີ້ແຫລະທີ່ຈະກ່າວ,** ທ່ານຣໍຊູລ ﷺ ຈຶ່ງເອີ້ນຕົ້ນໄມ້ນັ້ນມາ ຕົ້ນໄມ້ນັ້ນໄດ້ມາຢຸດຢູ່ຕໍ່ໜ້າທ່ານຣໍຊູລ ແລະ ຕົ້ນໄມ້ໄດ້ປະຕິຍານຕົນເຖິງສາມຄັ້ງ ຫຼັງຈາກນັ້ນມັນກັບຄືນໄປບ່ອນທີ່ມັນມາ"[2]

1. ປຶ້ມມຸສະລິມ ເລື່ອງຄວາມປະເສີດຕ່າງໆ, ບົດທີ່ວ່າ ຄວາມປະເສີດຂອງເຊື້ອສາຍຂອງທ່ານນະບີ ແລະກ້ອນຫີນໃຫ້ສະລາມແກ່ທ່ານ

2. ປຶ້ມ ສຸນະນຸອັດດາຣິມີ ຊໍຣີຫ໌ ອິບນິ ຮິບບານ 14/434 ສຸນັນ ອະບີ ຍະລາ 10/43

## 22. ບົດສະຫຼຸບຈາກການສຶກສາຊີວະປະຫວັດຂອງທ່ານນະບີມູຮຳມັດ ﷺ

ຫຼັງຈາກການໄດ້ຮຽນຮູ້ປະຫວັດສາດອັນຮຸ່ງໂລດຊີງກຽດຂອງສາດສະດາ ﷺ ທີ່ບໍລິສຸດ ຈຳເປັນທີ່ຊາວມຸດສະລິມຕ້ອງຖາມຕົວເອງວ່າໄດ້ຮັບຜົນປະໂຫຍດຫຍັງຈາກການສຶກສາປະຫວັດສາດຂອງສາດສະດາ ﷺ ແລະ ສິ່ງທີ່ຈຳເປັນຕ້ອງປະຖິ້ມ

ຕົວຢ່າງທີ່ດີນັ້ນພົບເຫັນຢູ່ໃນຕົວຂອງທ່ານສາດສະດາ ﷺ ແລະ ການກະທຳຂອງທ່ານ ເປັນສິ່ງທີ່ຄວນຄ່າແກ່ການປະຕິບັດ ສະຫຼຸບໄດ້ດັ່ງນີ້;

1. ຊາວມຸດສະລິມຮູ້ຈັກສະຖານະ ທີ່ພຣະອົງອັລລໍຫ໌ ﷻ ໄດ້ຊົງໃຫ້ກຽດແກ່ທ່ານຣໍຊູລ ລຸລລໍຫ໌ ﷺ ແລະ ໂດຍສະເພາະໄດ້ແຕ່ງຕັ້ງໃຫ້ທ່ານໄດ້ຮັບກຽດເໜືອກວ່າມະນຸດຊາດທັ້ງມວນ ເປັນຜູ້ນຳຂອງຜູ້ບັນດາຣໍຊູລ ແລະ ເປັນສາດສະດາທ່ານສຸດທ້າຍ, ສະນັ້ນຈຳເປັນທີ່ມຸສລິມຈະຕ້ອງໃຫ້ກຽດແກ່ທ່ານ ໃນຖານະທີ່ສູງສົ່ງ ບໍ່ທຽບຄຽງໄດ້ກັບມະນຸດຄົນໃດ ເປັນເລື່ອງທີ່ຈຳເປັນສຳລັບການສັດທາຂອງຊາວມຸດສະລິມ ຈະບໍ່ສົມບູນເວັ້ນເສຍແຕ່ວ່າຈະຕ້ອງໃຫ້ກຽດແກ່ທ່ານໃນສະຖານະທີ່ສູງສົ່ງ

ດັ່ງທີ່ ທ່ານຣໍຊູລ ລຸລລໍຫ໌ ﷺ ກ່າວວ່າ:

لايؤمن أحدكم حتى أكون أحب إليه من والده وولده والناس أجمعين

**"ຄົນໜຶ່ງຄົນໃດໃນພວກທ່ານຈະຍັງບໍ່ສັດທາ ຈົນກວ່າຂ້ອຍຈະເປັນທີ່ຮັກຂອງລາວຫລາຍຍິ່ງກວ່າພໍ່ແມ່ຂອງລາວ, ລູກໆຂອງລາວ ແລະ ມະນຸດທັງປວງ"**

*ການສະແດງອອກເຊິ່ງຄວາມຮັກຕໍ່ທ່ານຣໍຊູລ ລຸລລໍຫ໌ ﷺ;*

- ລຳລຶກເຖິງທ່ານຫຼາຍໆ ແລະ ສະດຸດີສັນລະເສີນທ່ານເປັນປະຈຳ ເພາະຖ້າໃຜກໍ່ຕາມຮັກສິ່ງຫນຶ່ງສິ່ງໃດແລ້ວ ລາວຈະຕ້ອງລຳລຶກເຖິງສິ່ງນັ້ນໃຫ້ຫຼາຍໆ.
- ປະຕິບັດຕາມແບບສະບັບຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ ປະຕິບັດດຳເນີນຕາມແນວທາງ ແລະ ໃຫ້ແບບຂອງ ສະບັບຂອງ ທ່ານຣໍຊູລ ລຸລລໍຫ໌ ﷺ ເຫນືອກວ່າອາລົມໃຝ່ຕ່ຳ ແລະ ຄວາມປາຖະຫນາຂອງກິເລສຕັນຫາ ຢ່ານຳເອົາຄຳເວົ້າຂອງຜູ້ອື່ນມາເໜືອຄຳເວົ້າຂອງທ່ານຣໍຊູລ ລຸລລໍຫ໌ ﷺ ຈະຕ້ອງນຳຄຳເວົ້າ ແລະ ແບບສະບັບຂອງທ່ານມາໃຊ້ເພື່ອຕັດສິນການຂໍ້ຂັດແຍ້ງໃນສິ່ງທີ່ຖືກຫ້າມ ແລະ ສິ່ງທີ່ຖືກອະນຸຍາດ.

*ດັ່ງທີ່ພຣະອົງ ອັລລໍຫ໌ ﷻ ໄດ້ກ່າວໄວ້ໃນ ອັລກຸຣອານວ່າ:*

**ແລະ ສິ່ງໃດກໍ່ຕາມທີ່ອັລລໍຫ໌ ຊົງໃຫ້ຣໍ່ຊູລຂອງພຣະອົງຍຶດມາໄດ້ຈາກຊາວເມືອງ (ພວກກຸຟຟາຣ) ເປັນສິດຂອງ ອັລລໍຫ໌ ແລະ ຣໍ່ຊູລ ແລະ ພີ່ນ້ອງໃກ້ຊິດ ແລະ ເດັກກຳພ້າ ແລະ ຄົນຂັດສົນ ແລະ ຜູ້ເດີນທາງເພື່ອວ່າມັນຈະບໍ່ໄດ້ໝູນວຽນຢູ່ໃນບັນດາຄົນຮັ່ງມີຂອງເຈົ້າເທົ່ານັ້ນ ແລະ ອັນໃດກໍຕາມທີ່ທ່ານໄດ້ຫ້າມ ພວກເຈົ້າກໍ່ຈົ່ງລະເວັ້ນຈາກມັນເສຍ ພວກເຈົ້າຈົ່ງຢ້ານອັລລໍຫ໌ເຖີດ ແທ້ຈິງ ອັລລໍຫ໌ ເປັນຜູ້ຊົງຮ້າຍແຮງໃນການລົງໂທດ** (ອັລ-ຮັຊ 59: 7)

ພຣະອົງອັລລໍຫ໌ ﷻ ຊົງດຳລັດວ່າ:

**ຈົ່ງກ່າວເຖີດ (ມຸຮຳມັດ) ວ່າ: ຖ້າຫາກພວກທ່ານຮັກ ອັລລໍຫ໌ ກໍ່ຈົ່ງປະຕິບັດຕາມຂ້ອຍ, ອັລລໍຫ໌ກໍ່ຈະຮັກພວກທ່ານ ແລະ ຊົງໃຫ້ອະໄພແກ່ພວກທ່ານ ຊຶ່ງບັນດາໂທດທັ້ງຫຼາຍຂອງພວກທ່ານ ແລະ ອັລລໍຫ໌ນັ້ນເປັນຜູ້ຊົງອະໄພໂທດ ເປັນຜູ້ຊົງມີຄວາມເມດຕາສະເໝີ** (ອັລ-ອິມຣອນ 3:31)

- ຢ່າສະແດງຄວາມເຄົາລົບ ແລະ ການສັນລະເສີນຍົກຍ່ອງຕໍ່ທ່ານນະບີ ﷺ ຫຼາຍເກີນໄປ ເກີນກວ່າຕຳແໜ່ງທີ່ແທ້ຈິງຂອງທ່ານ ຢ່າສັນລະເສີນໃນສິ່ງທີ່ບໍ່ແມ່ນຄຸນລັກສະນະທີ່ຄູ່ຄວນຂອງທ່ານ.

ມີຜູ້ທີ່ອ້າງວ່າສາດສະດາ ﷺ ນັ້ນຮູ້ກ່ຽວກັບຄວາມເລັ້ນລັບ ຫຼື ວ່າສາມາດໃຫ້ຄຸນ ແລະ ໂທດໄດ້. ຫຼືຂໍວິງວອນກັບທ່ານຣໍຊູລ ﷺ ຫລັງຈາກທີ່ທ່ານໄດ້ຈາກໂລກນີ້ໄປແລ້ວ ຕົວຢ່າງເຊັ່ນ ຂໍໃຫ້ຄວາມໂສກເສົ້າໃຫ້ຫາຍໝົດໄປ ສິ່ງເຫຼົ່ານີ້ກົງກັນຂ້າມກັບຄຳສອນຂອງທ່ານ ແລະ ມັນເປັນການກະທຳທີ່ລ່ວງລະເມີດຕໍ່ຄຸນລັກສະນະຂອງ ອັລລໍຫ໌ ﷻ

ດັ່ງທີ່ທ່ານຣໍຊູລ ﷺ ໄດ້ກ່າວໄວ້ໃນຫາດິຊຕອນໜຶ່ງວ່າ:

*“ພວກທ່ານທັ້ງຫລາຍຢ່າໄດ້ຍົກຍ່ອງເຊີດຊູຂ້ອຍຈົນເກີນຂອບເຂດ ປຽບສະເໝືອນດັ່ງທີ່ພວກນາຊໍຣໍ ໄດ້ຍົກຍ່ອງແກ່ສາດສະດາພຣະເຢຊູລູກຊາຍຂອງນາງມາຣີຈົນເກີນຂອບເຂດ, ແທ້ຈິງ ຂ້ອຍເປັນບ່າວຂອງ ອັລລໍຫ໌ ﷻ ແລະ ເປັນສາສະນະທູດຂອງພຣະອົງ ສະນັ້ນ ພວກທ່ານທັ້ງຫຼາຍຈົ່ງກ່າວເຖີດວ່າ: (ຂ້ອຍເປັນ) ຜູ້ຂ້ອຍເປັນບ່າວຂອງ ອັລລໍຫ໌ ﷻ ແລະ ເປັນນະບີຂອງພຣະອົງ"*

ໄດ້ມີລາຍງານຈາກ ອັບດຸລລໍຫ໌ ບິນ ອິບນຸຊະຄີ້ຣ ຈາກພໍ່ຂອງລາວວ່າ: ຂ້ອຍ (ຊະຄີ້ຣ) ໄດ້ມາຫາ ທ່ານຣໍຊູລ ﷺ ເຊິ່ງມີກຸ່ມຊົນໜຶ່ງຈາກບັນດາອາມີຣ, ສະນັ້ນ ຂ້ອຍ (ຊະຄີ້ຣ) ຈຶ່ງໄດ້ໃຫ້ສະລາມ ທັກທາຍທ່ານ ແລະ ຂ້ອຍໄດ້ກ່າວຕໍ່ທ່ານຣໍຊູລ ﷺ ວ່າ:

*ທ່ານເປັນບິດາຂອງພວກເຮົາ ທ່ານເປັນນາຍຂອງພວກເຮົາ ແລະ ທ່ານກໍ່ເປັນຜູ້ປະເສີດທີ່ເໜືອກວ່າພວກເຮົາຢ່າງແນ່ນອນ ແລະ ຜູ້ເປັນທີ່ມີກຽດສູງກວ່າພວກເຮົາ ແລະເປັນທີ່ຮັກແພງຂອງຄົນທົ່ວໄປ*

ທ່ານຣໍຊູລ ﷺ ຈຶ່ງເວົ້າວ່າ:

( قولوا بقولكم لا يستهوينكم الشيطان )

*"ພວກເຂົາ ເຫຼົ່ານັ້ນ (ມຸດສະລິມ) ໄດ້ເວົ້າເຫມືອນດັ່ງທີ່ພວກເຈົ້າເວົ້າ ພວກເຈົ້າທັງຫຼາຍຢ່າໃຫ້ມານຮ້າຍໄຊຕອນນັ້ນມາເຮັດໃຫ້ພວກເຈົ້າຫລົງໃຫລ."*

ພຣະອົງອັລລໍຫ໌ ﷻ ຊົງດໍາລັດວ່າ:

**"(ມູຮໍາມັດ) ຈົ່ງກ່າວເຖີດວ່າ: ຂ້ອຍບໍ່ມີອໍານາດທີ່ຈະຄອບຄອງໄດ້ປະໂຫຍດໃດໆ ແລະ ໂທດໃດໆ ໄວ້ເປັນກໍາມະສິດແກ່ຕົວຂອງຂ້ອຍໄດ້ ນອກຈາກສິ່ງທີ່ອັລລໍຫ໌ ຊົງປະສົງເທົ່ານັ້ນ ແລະ ຫາກວ່າຂ້ອຍເປັນຜູ້ທີ່ຮູ້ສິ່ງທີ່ເບິ່ງບໍ່ເຫັນເລັ້ນລັບແລ້ວ ແນ່ນອນຂ້ອຍກໍ່ຈະກອບໂກຍສິ່ງທີ່ດີນັ້ນໄວ້ໃຫ້ຫລວງຫຼາຍ ແລະ ຄວາມຊົ່ວຮ້າຍກໍ່ບໍ່ສາມາດເກີດຂຶ້ນກັບຂ້ອຍໄດ້ ຂ້ອຍບໍ່ແມ່ນຜູ້ໃດອື່ນ ນອກຈາກເປັນຜູ້ຕັກເຕືອນ ແລະ ເປັນຜູ້ແຈ້ງຂ່າວດີຕໍ່ກຸ່ມຊົນທີ່ເຊື່ອສັດທາເທົ່ານັ້ນ"**

(ອັລ-ອະຣອຟ 7:188)

ພຣະອົງອັລລໍຫ໌ ﷻ ຊົງດໍາລັດວ່າ:

**"ແທ້ຈິງໄພພິບັດຈະສິ້ນສຸດລົງ ກໍ່ເປັນເລື່ອງສະເພາະຂອງພຣະອົງອັລລໍຫ໌ເທົ່ານັ້ນ ມັນບໍ່ແມ່ນເລື່ອງຂອງນະບີຫຼືບຸກຄົນອື່ນໆ"**

ດັ່ງທີ່ ພຣະອົງອັລລໍຫ໌ ﷻ ຊົງດໍາລັດວ່າ:

**"ແລະ ຫາກວ່າພຣະອົງອັລລໍຫ໌ ຊົງເຮັດໃຫ້ເຈົ້າປະສົບບັນຫາຄວາມເດືອດຮ້ອນຢ່າງໜຶ່ງຢ່າງໃດກໍ່ບໍ່ມີໃຜສາມາດບັນເທົາມັນໄດ້ ຍົກເວັ້ນພຣະອົງເທົ່ານັ້ນ ແລະ ຖ້າຫາກພຣະອົງຊົງໃຫ້ຄວາມດີຢ່າງໜຶ່ງຢ່າງໃດປະສົບແກ່ເຈົ້າ ແທ້ຈິງ ພຣະອົງນັ້ນຊົງອິດທະຣິດເດຊານຸພາບເໜືອທຸກສິ່ງ."**

(ອັລ-ອັນອາມ 6:17).

2. ຖ້າເຮົາຮູ້ປະຫວັດສາດທ່ານຂອງສາດສະດາ ﷺ ຊຶ່ງເປັນການລວບລວມປະຫວັດສາດ ແລະ ຈະລິຍະທໍາຂອງທ່ານ ດັ່ງນັ້ນຈຶ່ງຈໍາເປັນແກ່ບັນດາມຸດສະລິມທັງຫລາຍທີ່ຈະປະຕິບັດຕາມຈະລິຍະທໍາ ແລະ ການປະພຶດປະຕິບັດຂອງທ່ານສາດສະດາ ﷺ ຕໍ່ພຣະອົງອັລລໍຫ໌ ﷻ ແລະ ກັບມະນຸດທັງຫລາຍໃນສະພາບການຕ່າງໆ.

3. ຖ້າເຮົາໄດ້ສຶກສາປະຫວັດສາດຂອງທ່ານສາດສະດາ ﷺ ກັບ ບັນດາຊໍຮາບະຫ໌ ອັງຊີງກຽດແລ້ວ ພິຈາລະນາໄດ້ວ່າບັນດາຊໍຮາບະຫ໌ ໄດ້ມີສະຖານະພາບອັນສູງສົ່ງ ນະທີ່ ອັລລໍຫ໌ ﷻ ແລະ ສາສະນະທູດຂອງພຣະອົງ ສິ່ງທີ່ເປັນປະໂຫຍດສູງສຸດຂອງພວກເຂົາຄື ການຊ່ວຍເຫຼືອສາດສະໜາຂອງ ອັລລໍຫ໌ ﷻ ແລະ ຜືນສະທ້ອນຕໍ່ພວກເຮົາໆ ແລະ ມະນຸດຊາດທັງຫລາຍ ຄືຄວາມປະເສີດຄຸນງາມຄວາມດີໃນການເຜີຍແຜ່ສາສະໜາອິດສະລາມ ແລະ ການຮຽກຮ້ອງໄປສູ່ ອັລລໍຫ໌ ﷻ ດັ່ງນັ້ນຈຳເປັນທີ່ຈະຕ້ອງຮັກບັນດາຊໍຮາບະຫ໌ ໃຫ້ກຽດພວກເຂົາ ຊື່ນຊົມໃນພວກເຂົາດັ່ງທີ່ພຣະອົງໄດ້ມີຊີງພຶງພຣະໄທໃນພວກເຂົາ.

ດັ່ງທີ່ ອັລລໍຫ໌ ﷻ ເວົ້າວ່າ:

**"ບັນດາບັນພະຊົນລຸ່ນທຳອິດຈາກບັນດາຜູ້ອົບພະຍົບ (ມູຮາຈິຣີນ ຈາກເມືອງມັກກະຫ໌) ແລະຈາກບັນດາຜູ້ໃຫ້ຄວາມຊ່ວຍເຫຼືອ (ຊາວອັນຊໍຮ ຈາກເມືອງມາດີນະຫ໌) ແລະ ບັນດາຜູ້ດຳເນີນຕາມພວກເຂົາດ້ວຍການກະທຳຄວາມດີນັ້ນ ອັລລໍຫ໌ຊົງພໍໃຈກັບພວກເຂົາແລ້ວ ແລະ ພວກເຂົາກໍ່ພໍໃຈໃນພຣະອົງດ້ວຍ ແລະ ພຣະອົງໄດ້ກະກຽມ ບັນດາສວນສະຫວັນທີ່ມີແມ່ນ້ຳໄຫລຜ່ານຢູ່ລຸ່ມໄວ້ໃຫ້ແກ່ພວກເຂົາ ພວກເຂົາຈະພຳນັກຢູ່ໃນນັ້ນຕະຫຼອດການ ນັ້ນຄືໄຊຊະນະອັນຍິ່ງໃຫຍ່"**

(ອັດ-ເຕົາບະຫ໌ 9:100)

ດັ່ງນັ້ນ ເຮົາຈະຕ້ອງໃຫ້ກຽດແກ່ບັນດາຊໍຮາບະຫ໌ ແລະ ຜູ້ໃດກໍ່ຕາມທີ່ດູໝິ່ນປະໝາດກຽດສັກສີຂອງບັນດາຊໍຮາບະຫ໌ ຖືວ່າບຸກຄົນນັ້ນເປັນຜູ້ທີ່ທຳລະຍົດຕໍ່ ອັລລໍຫ໌ ຊຸບຮານະຮຸ ວະຕາອາລາ ແລະຝ່າຝືນຄຳສັ່ງຂອງທ່ານຣໍຊູລ ລຸລລໍຫ໌ ﷺ

ທ່ານຣໍຊູລ ລຸລລໍຫ໌ ﷺ ກ່າວວ່າ:

لاتسبوا أصحابي فلو أن أحدكم أنفق مثل أحد ذهبا ما بلغ مد أحدهم ولا نصيفه

**"ພວກທ່ານຢ່າໄດ້ດູຖູກດ່າຊໍຮາບະຫ໌ຂອງຂ້ອຍ ຖ້າຫາກວ່າຜູ້ໜຶ່ງໃນພວກທ່ານໄດ້ບໍລິຈາກຄຳເທົ່າກັບພູອຸຮູດ ມັນກໍ່ບໍ່ເທົ່າກັບໜຶ່ງທານຫຼືເຄິ່ງທານຂອງການບໍລິຈາກຂອງເຂົາ (ຊໍຮາບະຫ໌)."**

ແລະ ຊາວມຸດສະລິມຕ້ອງປົກປ້ອງກຽດສັກສີຂອງບັນດາຊໍຮາບະຫ໌ ເຖິງແມ່ນວ່າພວກກຸຟຟ້າຣ (ຜູ້ບໍ່ເຊື່ອສັດທາ) ແລະ ພວກມຸນາຟິກີນ (ໜ້າຊື່ໃຈຄົດ) ຈະທຳລາຍກໍ່ຕາມ.

4. ຈາກການສຶກສາປະຫວັດສາດຂອງທ່ານສາດສະດາ ﷺ ເຮັດໃຫ້ຊາວມຸດສະລິມໄດ້ເຂົ້າໃຈວ່າອິດສະລາມນັ້ນບໍ່ໄດ້ແຜ່ຂະຫຍາຍໄປ ຍົກເວັ້ນດ້ວຍຄວາມພາກພຽນ ແລະ ການເສຍສະລະຂອງມະນຸດຊາດທີ່ຍິ່ງໃຫຍ່ ນີ້ແຫລະເປັນແນວທາງຂອງ ອັລລໍຫ໌ ﷻ

ຖ້າມະນຸດເຮົາບໍ່ດຸໝັ່ນ ແລະ ບໍ່ເສຍສະລະແລ້ວ ອັລລໍຫ໌ ﷻ ຍັງຄົງຄວາມສາມາດທີ່ຈະຍົກພຣະດຳລັດຂອງພຣະອົງໃຫ້ສູງສົ່ງ ແລະ ເຮັດໃຫ້ສາດສະໜາຂອງພຣະອົງປະກົດເປັນທີ່ປະຈັດຊັດແຈ້ງໄດ້ ແລະ ເຮັດໃຫ້ຜູ້ປະຕິເສດສັດທາ ແລະ ພວກພ້ອງຂອງເຂົາຕ້ອງຕົກຕໍ່າລົງ ດ້ວຍປະກາສິດທີ່ພຣະອົງຊົງກ່າວວ່າ: **ຈົ່ງເກີດຂຶ້ນ** ສິ່ງນັ້ນມັນກໍ່ເກີດຂຶ້ນໄດ້ ແຕ່ທີ່ອັລລໍຫ໌ ຊຸບຮານະຮຸ ວະຕາອາລາ ຊົງປະສົງປາດຖະໜາເຊັ່ນນີ້ ເພື່ອເປັນການທົດສອບບ່າວຂອງພຣະອົງ ສະນັ້ນພະອົງ ຈະຊົງຍົກລະດັບໃຫ້ແກ່ຜູ້ເຊື່ອສັດທາ ແລະ ໃຫ້ເປັນຫຼັກຖານຢືນຢັນແກ່ຜູ້ບໍ່ເຊື່ອສັດທາ ແລະ ຜູ້ບິດພິວ

ເພາະສະນັ້ນ ເປັນພາລະ ແລະ ໜ້າທີ່ຂອງຊາວມຸດສະລິມທີ່ຈະຕ້ອງເຮັດຕົວໃຫ້ເປັນທະຫານເພື່ອຊ່ວຍໃນສາດສະໜາຂອງອັລລໍຫ໌ ﷻ ແລະ ຈະຕ້ອງອຸທິດຕົນໃຫ້ເຕັມຄວາມສາມາດທີ່ຈະເປັນໄປໄດ້ ຢ່າປ່ອຍໃຫ້ຜູ້ຫລອກລວງ ຫຼືຜູ້ທີ່ເປັນສັດຕູຕໍ່ສາສະໜາຂອງພຣະອົງກາຍມາເປັນຜູ້ປົກຄອງຂອງສາສະໜານີ້

**ສຸດທ້າຍ ຂໍໃຫ້ອັລລໍຫ໌ ﷻ ພຣະອົງຊົງປະທານຄວາມສຳເລັດ ແລະ ຄວາມກ້າວໜ້າໃຫ້ແກ່ຜູ້ທີ່ເຊື່ອການສັນລະເສີນທັງໝົດແມ່ນຂອງພຣະອົງ ວ່າສິ່ງທີ່ດີຈະຖືກເຮັດໃຫ້ສົມບູນໂດຍພຣະຄຸນຂອງພຣະອົງ ແລະ ຂໍພອນຈາກ ອັລລໍຫ໌ ﷻ ອວຍພອນໃຫ້ທ່ານສາດສະດາ ﷺ ຂອງພວກເຮົາຄືກັນ**

الشيخ عبدالله بن عبدالرحمن الخرعان

**ເຊັກ ອັບດູລລໍຫ໌ ບິນ ອັບດຸຣເຣາະຫ໌ມານ ອັລ-ຄໍຣອານ**

## ແຫຼ່ງທີ່ມາຂໍ້ມູນ ແລະ ໜັງສືຕ່າງໆ

ນັກວິຊາການອິສລາມ ໄດ້ໃຫ້ຄວາມສຳຄັນກັບການລວບລວມລັກສະນະບຸກຄະລິກຕ່າງໆ ຂອງທ່ານຣໍຊູລ ﷺ ແລະບັນທຶກໄວ້ໃນໜັງສື ເຊິ່ງບໍ່ແມ່ນປຶ້ມໜັງສືປະຫວັດສາດທຳມະດາທົ່ວໄປ ທັ້ງນີ້ກໍເພື່ອທີ່ຈະໃຫ້ເປັນທີ່ແຈ່ມແຈ້ງແກ່ປະຊາຊາດຂອງທ່ານ ແລະຈະໄດ້ນຳມາປະຕິບັດຕາມ ປື້ມເຫຼົ່ານັ້ນໄດ້ແກ່;

• ປື້ມບັນທຶກຂອງ ອັສຊາມາອີ້ລ ຂອງອີມ່າມ ມຸຮຳມັດ ບິນອີຊາ ອັດຕິ້ລມີຊີ ເສຍຊີວິດໃນປີ 279 ຮ.ສ.

• ໜັງສືຈາລິຍະທຳ ແລະ ມາລະຍາດຂອງທ່ານນະບີ ໂດຍ ຣາຟິຊ (ອາບູໄຊຄ) ອັບດູລລໍຫ໌, ລູກຊາຍຂອງມຸຮຳມັດ ອັລອັສບາຮານີ ເສຍຊີວິດໃນປີ 369 ປີ ຮ.ສ.

•ຫນັງສືອັສຊາມາອີ້ລ ຂອງອາບີອັບບາສ ຍະຟັຣ ບິນ ມຸຮຳມັດ ອັລມຸສຕັກຟີຣີ ເສຍຊີວິດໃນ 432 ຮ.ສ.

•ຫນັງສືຂອງອັລອັນວາຣ ຟີຊະມາອີລີ້ລ ນະບີ ອັ້ລມຸກຕ້າຣ ໂດຍອາບີ ມຸຮຳມັດ ອັລຮາຊັນ ບິນມັສອູດ ບາກໍວີ ເສຍຊີວິດໃນປີ 516 ຮ.ສ. ທ່ານໄດ້ຂຽນກ່ຽວກັບບຸກຄະລິກຕ່າງໆ ຂອງທ່ານນະບີຢ່າງຫຼວງຫລາຍ ທ່ານໄດ້ລວບລວມຮະດີຊ ທີ່ຂຽນເຖິງບຸກຄະລິກກະພາບຂອງທ່ານນະບີເຖິງ 1257 ຮະດີຊ

• ປື້ມຫນັງສື ຊ້າດຸ້ລມະອາດ ຟີ ຮັດຍີຄອຍຮີນອີບາດ ໂດຍ ອີມ່າມອິບນຸກອຍຍິມ ອັລເຈົາຊີຍະຫ໌ ເສຍຊີວິດໃນປີ 751 ຮ.ສ. ຂໍໃຫ້ອັລລໍຫ໌ຊົງເມດຕາເຂົາເຫຼົ່ານັ້ນ

(ຈາກ ມະຊໍດິຣ ແລະ ກຸຕູບບິດຊ່າມາອີ້ລ ຂອງທ່ານນະບີ ﷺ ເບິ່ງ ຟາຣູຄ ຮຸມາດະຫ໌ ມະຊໍດິຣ ອັສຊີເຣາະຕຸ້ລນະບາວີຍະຫ໌ ວະຕັກວີມຸຮາ 42-43 ມະຫ໌ດີຣີສກຸລລໍຫ໌ ອັສຊີເຣາະຕຸ້ລນະບາວີຍະຫ໌ 735.)